# ພຣະທັມເອຊາຢາ


| | | | | | | |
|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 |
| 8 | 9 | 10 | 11 | 12 | 13 | 14 |
| 15 | 16 | 17 | 18 | 19 | 20 | 21 |
| 22 | 23 | 24 | 25 | 26 | 27 | 28 |
| 29 | 30 | 31 | 32 | 33 | 34 | 35 |
| 36 | 37 | 38 | 39 | 40 | 41 | 42 |
| 43 | 44 | 45 | 46 | 47 | 48 | 49 |
| 50 | 51 | 52 | 53 | 54 | 55 | 56 |
| 57 | 58 | 59 | 60 | 61 | 62 | 63 |
| 64 | 65 | 66 | | | | |


## ເອຊາຢາ

## Isaiah

### 1 ປະຊາຊາດທີ່ບາບຫນາ

1 ຫນັງສືພຣະທັມນີ້ ແມ່ນຖ້ອຍຄຳທີ່ເວົ້າເຖິງພວກຢູດາ ແລະເຢຣູຊາເລັມ ຊຶ່ງພຣະເຈົ້າໄດ້ຊົງສະແດງຕໍ່ເອຊາຢາ
ບຸດຂອງອາໂມສ, ໃນລະຫວ່າງເວລາອຸສຊີຢາ, ໂຢທາມ, ອາຮັສ, ແລະເຮເຊກີຢາ, ເປັນກະສັດຂອງຢູດາ.

**ພຣະເຈົ້າຊົງເຕືອນໄພ່ພົນຂອງພຣະອົງ**

The wickedness of Judah

2 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ໂລກແລະຟ້າສວັນເອີຍ, ຈົ່ງຟັງສິ່ງທີ່ເຮົາຄືພຣະຜູ້ເປັນເຈົ້າຈະກ່າວ: ພວກເດັກ
ນ້ອຍທີ່ເຮົາລ້ຽງໃຫຍ່ແລ້ວ, ໄດ້ເປັນກະບົດຕໍ່ສູ້ເຮົາ.
3 ງົວຄວາຍມັນຍັງຮູ້ຈັກເຈົ້າຂອງ ລໍກໍຮູ້ຈັກບ່ອນນາຍມັນເອົາໄປລ້ຽງ ແຕ່ອິສຣາເອນໄພ່ພົນຂອງເຮົາບໍ່ຮູ້ຈັກຫຍັງ
ເລີຍ
4 ຊົນຊາດບາບ ໃຈຊົ່ວແລະໂຫດຮ້າຍເອີຍ ພວກເຈົ້າຈະໄດ້ຮັບເຄາະກັມດອກ ບາບໄດ້ລາກຄໍພວກເຈົ້າແລ້ວ
ເພາະວ່າພວກ ເຈົ້າໄດ້ປະຖິ້ມແລະຫັນຫນີຈາກພຣະເຈົ້າອົງບໍຣິສຸດຂອງອິສຣາເອນ
5 ເປັນຫຍັງພວກເຈົ້າຈຶ່ງເປັນກະບົດຢູ່ຕໍ່ໄປ ຢາກຈະໃຫ້ເຮົາລົງໂທດຫນັກຂຶ້ນຊັ້ນບໍ ອິສຣາເອນເອີຍ ຫົວຂອງເຈົ້າ
ມີແຕ່ບາດ ຈິດໃຈກໍເຈັບຊໍ້າ
6 ຕັ້ງແຕ່ຕີນເຖິງຫົວທົ່ວຮ່າງກາຍຂອງເຈົ້າບໍ່ມີບ່ອນໃດປອດ ມັນມີແຕ່ບ່ອນຟົກຊໍ້າດຳຂຽວ ແລະເປັນແຜ ບາດ
ແຜກໍບໍ່ໄດ້ຫໍ່ພັນ ບໍ່ໄດ້ຮັກສາໃຫ້ສະອາດ ແລະໃສ່ຢາເລີຍ
7 ທົ່ວປະເທດຂອງເຈົ້າຮ້າງເປົ່າ ຫົວເມືອງທັງຫລາຍຖືກເຜົາໄຫມ້ຍັງແຕ່ດິນ ຊາວຕ່າງປະເທດໄດ້ເຂົ້າຍຶດຄອງ
ແລະທຳລາຍທຸກໆສິ່ງຖິ້ມຕໍ່ຫນ້າພວກເຈົ້າ

8 ນະຄອນເຢຣູຊາເລັມກໍປະຖິ້ມໄວ້ ເປັນນະຄອນຖືກເຂົາປິດລ້ອມແລະປາສຈາກແນວປ້ອງກັນເຫມືອນຕູບຄົນ
ເຝົ້າສວນອະງຸ່ນ ຫລືເຫມືອນຖຽງໄຮ່ຫມາກແຕງກວາ
9 ຖ້າພຣະຜູ້ເປັນເຈົ້າແຫ່ງຈັກກະວານບໍ່ໂຜດໃຫ້ບາງຄົນລອດຊີວິດຢູ່ແລ້ວ ນະຄອນເຢຣູຊາເລັມກໍຈະຖືກທຳ
ລາຍຢ່າງສິ້ນເຊີງ ມັນຈະເປັນຄືດັ່ງເມືອງໂຊໂດມ ແລະເມືອງໂກໂມຣາ
10 ເຢຣູຊາເລັມເອີຍ ພວກຜູ້ປົກຄອງແລະປະຊາຊົນຂອງເຈົ້າຈະເປັນເຫມືອນຊາວໂຊໂດມແລະໂກໂມຣາ ຈົ່ງຕັ້ງ
ໃຈຟັງສິ່ງທີ່  ພຣະຜູ້ເປັນເຈົ້າຈະບອກສອນເຈົ້າ
11 ພຣະອົງຊົງກ່າວວ່າ ເຈົ້າຄິດວ່າເຮົາຢາກໄດ້ສິ່ງຂອງທີ່ເຈົ້າເອົາເຜົາຖວາຍບູຊາໃຫ້ເຮົານັ້ນຊັ້ນບໍ ເຮົາອີ່ມພໍແລ້ວ
ສຳລັບແກະທີ່ເຈົ້າເຜົາບູຊາ ພ້ອມທັງນໍ້າມັນສັດໂຕອ້ວນພີຂອງເຈົ້າ ເຮົາເປີດຫນ່າຍເລືອດງົວ ເລືອດແກະແລະ
ເລືອດແບ້ແລ້ວ
12 ເມື່ອເຈົ້າມາຂາບໄຫວ້ເຮົາ ໃຜບອກໃຫ້ນຳເອົາສິ່ງເຫລົ່ານັ້ນມາໃຫ້ເຮົາ ໃຜບອກໃຫ້ເຂົ້າມາຢຽບຍ່ຳພຣະວິຫານ
ຂອງເຮົາ
13 ເຮົາບໍ່ຢາກໄດ້ອີກແລ້ວຂອງຖວາຍອັນຕາຍໆນັ້ນ ເຮົາກຽດຊັງກິ່ນທູບຄວັນທຽນຂອງເຈົ້າ ແລະທົນຕໍ່ງານສ
ລອງວັນເດືອນອອກໃຫມ່ ວັນສະບາໂຕ ແລະງານຊຸມນຸມທາງສາສນາຂອງເຈົ້າບໍ່ໄດ້ ງານທັງຫມົດນີ້ຊົ່ວຮ້າຍ
ລົງຍ້ອນບາບຂອງເຈົ້າ
14 ເຮົາກຽດຊັງງານສລອງວັນເດືອນອອກໃຫມ່ ແລະວັນບໍຣິສຸດຂອງເຈົ້າ ມັນເປັນພາຣະອັນຫນັກຫນ່ວງສຳລັບ
ເຮົາ
15 ເມື່ອເຈົ້າຍົກຍໍມືຂຶ້ນອ້ອນວອນຕໍ່ເຮົາ ເຮົາຈະບໍ່ຫລຽວເບິ່ງ ເຖິງແມ່ນວ່າເຈົ້າຈະອ້ອນວອນຍືດຍາວປານໃດກໍ
ຕາມ ເຮົາກໍຈະບໍ່ຟັງ ເພາະວ່າມືຂອງເຈົ້າເປິເປື້ອນດ້ວຍເລືອດ
16 ຈົ່ງຊຳຣະລ້າງຕົວເຈົ້າໃຫ້ສະອາດ ໃຫ້ຢຸດການກະທຳຊົ່ວຮ້າຍທີ່ເຮົາເຫັນຢູ່ນີ້ເສັຽ
17 ໃຫ້ຝຶກແອບກະທຳຄວາມດີ ສແວງຫາຄວາມຍຸດຕິທັມ ຊ່ອຍເຫລືອຜູ້ທີ່ຖືກກົດຂີ່ຂົ່ມເຫັງ ຄຸ້ມຄອງຮັກສາລູກກຳ
ພ້າ ແລະຊ່ອຍເບິ່ງແຍງພວກແມ່ຫມ້າຍ
18 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຂໍໃຫ້ພວກເຮົາມາເວົ້າກັນເທາະ ຄືເຖິງແມ່ນບາບຂອງເຈົ້າຈະເປັນສີແດງ ເຮົາກໍ
ຈະລ້າງໃຫ້ຂາວສະອາດເຫມືອນນວນຝ້າຍ ແລະເຖິງມັນຈະແດງເຂັ້ມ ເຮົາກໍຈະເຮັດໃຫ້ຂາວເຫມືອນຂົນແກະ
19 ຖ້າເຈົ້າເຊື່ອຟັງເຮົາ ເຈົ້າຈະໄດ້ກິນຂອງດີໃນແຜ່ນດິນ
20 ແຕ່ຖ້າປະຕິເສດແລະດື້ດຶງ ເຈົ້າຈະໄດ້ຮັບໂທດເຖິງຕາຍ ເຮົາຄືພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ”

## ເມືອງທີ່ເຕັມໄປດ້ວຍບາບ

The Degenerate City

21 ນະຄອນທີ່ເຄີຍສັດຊື່ໃນຄັ້ງນຶ່ງ ແຕ່ບັດນີ້ເປັນເຫມືອນແມ່ຈ້າງ ຄັ້ງນຶ່ງມີຄົນຊອບທັມອາໄສຢູ່ແຕ່ບັດນີ້ມີແຕ່ພວກ
ອາດຊະຍາກອນອາສັຍຢູ່
22 ເຢຣູຊາເລັມເອີຍ ຄັ້ງນຶ່ງເຈົ້າເປັນເຫມືອນເງິນ ແຕ່ບັດນີ້ເຈົ້າບໍ່ມີຄຸນຄ່າເລີຍ ເຈົ້າເຄີຍເປັນເຫມືອນເຫລົ້າອະງຸ່ນ
ຊັ້ນດີ ແຕ່ບັດນີ້ເປັນນໍ້າລ້າໆ
23 ພວກເຈົ້ານາຍຂອງເຈົ້າກໍເປັນກະບົດ ເປັນມິດກັບຄົນຂີ້ລັກ ຮັບສິນບົນແລະສິນຈ້າງຮາງວັນ ເຂົາບໍ່ເຄີຍຊ່ອຍ
ເຫລືອລູກກຳພ້າອານາຖາເພື່ອສູ້ຄະດີໃນສານ ຫລືບໍ່ຟັງຄຳໃຫ້ການໃດໆຂອງແມ່ຫມ້າຍເລີຍ
24 ດັ່ງນັ້ນ ຈົ່ງຟັງຖ້ອຍຄຳແຫ່ງພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ແຫ່ງຈັກກະວານຂອງອິສຣາເອນ ຊຶ່ງຊົງກ່າວວ່າ, “ເຮົາ
ຈະແກ້ແຄ້ນເຈົ້າຜູ້ເປັນສັດຕຣູຂອງເຮົາ ເພື່ອເຈົ້າຈະບໍ່ໄດ້ທຳໃຫ້ເຮົາຫຍຸ້ງຍາກອີກ
25 ເຮົາຈະຕໍ່ສູ້ຂັດຂວາງເຈົ້າ ຈະທຳໃຫ້ເຈົ້າສະອາດເຫມືອນທຳໃຫ້ເຫລັກຂີ້ຫມ້ຽງກ້ຽງສະອາດຄືເກົ່າ ແລະຈະເອົາ
ຂອງເປິເປື້ອນທັງຫມົດໃນຕົວເຈົ້າອອກຫນີໄປ

26 ເຮົາຈະໃຫ້ເຈົ້າມີຜູ້ນຳ ແລະມີທີ່ປຶກສາເຫມືອນເຄີຍມີມາແຕ່ກ່ອນແລ້ວ ເມື່ອນັ້ນເຢຣູຊາເລັມຈະຖືກເອີ້ນວ່າ
ນະຄອນທີ່ຊອບທັມແລະສັດຊື່"
27 ຍ້ອນພຣະຜູ້ເປັນເຈົ້າຊົງຊອບທັມນັ້ນແຫລະ ພຣະອົງຈຶ່ງຈະຊ່ອຍນະຄອນເຢຣູຊາເລັມແລະທຸກໆຄົນທີ່ກັບໃຈ
ໃຫມ່ ໃນທີ່ນັ້ນໃຫ້ໄດ້ຮັບຄວາມປອດພັຍ
28 ແຕ່ຈະຊົງທຳລາຍທຸກຄົນທີ່ທຳບາບແລະກະບົດຕໍ່ສູ້ພຣະອົງ ພ້ອມທັງຈະຊົງຂ້າທຸກຄົນທີ່ປະຖິ້ມພຣະອົງ
29 ເຈົ້າຈະເສັຽໃຈທີ່ໄດ້ຂາບໄຫວ້ກົກໄມ້ ແລະໄດ້ປຸກສ້າງບ່ອນຂາບໄຫວ້ໄວ້ໃນສວນ
30 ເຈົ້າຈະຫ່ຽວແຫ້ງເຫມືອນກົກລົມຕາຍ ແລະເຫມືອນຫນ້າດິນທີ່ຂາດນ້ຳ
31 ສະເກັດໄຟຍ່ອມໄຫມ້ໄມ້ແຫ້ງໄດ້ສັນໃດ ຄົນແຂງແຮງກໍຈະຖືກຄວາມຊົ່ວຂອງເຂົາເອງທຳລາຍໄດ້ສັນນັ້ນ
ແລະຈະບໍ່ມີໃຜສາມາດຢຸດຢັ້ງການທຳລາຍນັ້ນໄດ້

## 2 ສັນຕິສຸກຕລອດໄປເປັນນິດ

The Future House of God

(ມີກາ 4:1-5)

1 ຕໍ່ໄປນີ້ ແມ່ນເຣື່ອງທີ່ກ່ຽວກັບຢູດາແລະເຢຣູຊາເລັມ ຊຶ່ງພຣະຜູ້ເປັນເຈົ້າຊົງບອກເອຊາຢາ ບຸດຊາຍອາໂມສວ່າ,
2 "ໃນເວລາວັນນັ້ນມາເຖິງ ພູບ່ອນຕັ້ງພຣະວິຫານ ຈະສູງກວ່າພູທຸກໆຫນ່ວຍ ຫລາຍໆຊາດຈະຫລັ່ງໄຫລກັນມາ
ຍັງພູນັ້ນ
3 ແລະຊົນຊາດເຫລົ່ານັ້ນຈະເວົ້າວ່າ, "ໃຫ້ພວກເຮົາຂຶ້ນໄປເທິງພູຂອງພຣະຜູ້ເປັນເຈົ້າເທາະ ໄປຍັງວິຫານແຫ່ງພ
ຣະເຈົ້າຂອງຢາໂຄບ ເພື່ອພວກເຮົາຈະຮູ້ວ່າພຣະອົງຊົງປະສົງໃຫ້ເຮົາເຮັດຫຍັງ ແລ້ວເຮົາກໍຈະໄດ້ທຳຕາມພ
ຣະປະສົງນັ້ນ" ເພາະວ່າ
ພຣະທັມຈະອອກມາຈາກຊີໂອນ ແລະພຣະຄຳຂອງພຣະຜູ້ເປັນເຈົ້າຈະອອກມາຈາກເຢຣູຊາເລັມ
4 ພຣະອົງຈະຊົງຕັດສິນພິພາກສາຊົນຊາດໃຫຍ່ທັງຫລາຍ ພວກເຂົາຈະເອົາດາບຕີເປັນຫມາກສົບໄຖ ແລະຕີ
ຫອກເປັນກ່ຽວ ຊາດທັງຫລາຍຈະບໍ່ມີສົງຄາມອີກ ຈະບໍ່ຈັດຕຽມເພື່ອທຳສົງຄາມອີກ

**ການທີ່ພຣະເຈົ້າພິພາກສາຄົນຈອງຫອງ**

Judgment Pronounced on Arrogance

5 ໂອ ເຊື້ອສາຍຂອງຢາໂຄບເອີຍ ມາເຖີດໃຫ້ພວກເຮົາດຳເນີນໄປໃນຄວາມສວ່າງທີ່ພຣະຜູ້ເປັນເຈົ້າໄດ້ຊົງປະ
ທານໃຫ້ນັ້ນເທີນ
6 ເພາະພຣະອົງຊົງປະຖິ້ມຊົນຊາດຂອງພຣະອົງເສັຽ ຄືເຊື້ອສາຍຂອງຢາໂຄບ ເພາະວ່າເຂົາເຕັມດ້ວຍຜູ້ທຳນ
ວາຍຈາກຕາເວັນອອກ ແລະດ້ວຍຫມໍດູຢ່າງຄົນຟີລິສຕິນ ແລະເຂົາຕິສນິດກັບຄົນຕ່າງຊາດ
7 ແຜ່ນດິນຂອງເຂົາເຕັມດ້ວຍເງິນ ແລະທອງຄຳ ຊັບສົມບັດຂອງເຂົາບໍ່ມີສິ້ນສຸດ ແຜ່ນດິນຂອງເຂົາເຕັມໄປດ້ວຍ
ມ້າ ຣົດຮົບຂອງເຂົາບໍ່ມີສິ້ນສຸດ
8 ແຜ່ນດິນຂອງເຂົາເຕັມໄປດ້ວຍຮູບເຄົາຣົບ ເຂົາຂາບໄຫວ້ຜົນງານແຫ່ງມືຂອງເຂົາ ຕໍ່ສິ່ງຊຶ່ງນິ້ວມືຂອງເຂົາໄດ້
ກະທຳ
9 ມະນຸດຈຶ່ງຕົກຕໍ່າລົງ ແລະຄົນກໍດ້ອຍລົງ ຢ່າອະພັຍເຂົາເລີຍ
10 ຈົ່ງຫລົບເຂົ້າໄປໃນຫີນ ແລະລີ້ຊ່ອນຢູ່ໃນຝຸ່ນຂີ້ດິນ ໃຫ້ພົ້ນຈາກຄວາມຫນ້າຢ້ານຂອງພຣະຜູ້ເປັນເຈົ້າ ແລະ
ຈາກພຣະສງ່າຣາສີແຫ່ງຄວາມຍິ່ງໃຫຍ່ຂອງພຣະອົງ
11 ແລະທ່າອັນອວດອົ່ງຂອງມະນຸດຈະຕົກຕໍ່າລົງ ແລະຄວາມຈອງຫອງຂອງຄົນຈະຖືກປາບລົງ ພຣະຜູ້ເປັນເຈົ້າ
ອົງດຽວຈະເປັນຜູ້ເທີດທູນໃນວັນນັ້ນ

12 ເພາະວ່າພຣະເຈົ້າຈອມໂຍທາມີວັນນຶ່ງທີ່ສູ້ສາຣະພັດທີ່ເຍີ່ຍິ່ງແລະສູງສົ່ງ ທີ່ສູ້ສາຣະພັດທີ່ຖືກຍົກຂຶ້ນແລະສູງ
13 ທີ່ສູ້ຕົ້ນສົນສີດາທັງສິ້ນຂອງເລບານອນທີ່ສູງ ແລະທີ່ຖືກຍົກຂຶ້ນ ແລະທີ່ສູ້ຕົ້ນກໍ່ທັງສິ້ນຂອງບາຊານ
14 ທີ່ສູ້ພູສູງທັງສິ້ນ ແລະທີ່ສູ້ເນີນພູທັງປວງທີ່ຖືກຍົກຂຶ້ນ
15 ທີ່ສູ້ຫໍຄອຍສູງທຸກແຫ່ງ ທີ່ສູ້ກຳແພງທີ່ເຂັ້ມແຂງທຸກແຫ່ງ
16 ທີ່ສູ້ກຳປັ່ນທັງສິ້ນຂອງຕາຣ໌ຊິດ ແລະທີ່ສູ້ເຮືອງົດງາມທັງສິ້ນ
17 ແລະຄວາມອວດອົ່ງຂອງມະນຸດຈະຕ້ອງຖືກປາບລົງ ແລະຄວາມຈອງຫອງຂອງຄົນຈະຕົກຕ່ຳລົງ ໃນວັນນັ້ນພ
ຣະຜູ້ເປັນເຈົ້າອົງດຽວຈະເປັນທີ່ເທີດທູນ
18 ແລະຮູບເຄົາຣົບຈະດັບສູນສິ້ນ
19 ແລະຄົນຈະເຂົ້າໄປໃນຖ້ຳ ແລະຂຸດຮູຢູ່ໃນດິນ ໃຫ້ພົ້ນຈາກຄວາມໜ້າຢ້ານຂອງພຣະຜູ້ເປັນເຈົ້າ ແລະຈາກພ
ຣະສະງ່າຣາສີອັນຍິ່ງໃຫຍ່ຂອງພຣະອົງ ເມື່ອພຣະອົງຊົງລຸກຂຶ້ນກະທຳໃຫ້ໂລກສັ່ນສະເທືອນ
20 ໃນວັນນັ້ນຄົນຈະແກວ່ງຮູບເຄົາຣົບຂອງຕົນອອກໄປຊຶ່ງທຳດ້ວຍເງິນແລະຮູບເຄົາຣົບຂອງຕົນຊຶ່ງທຳດ້ວຍທອງ
ຄຳ ຊຶ່ງເຂົາທຳໄວ້ເພື່ອຕົນເອງຈະນະມັສການໄປຍັງໂຕໜູແລະໂຕເຈຍ
21 ເພື່ອເຂົາຈະເຂົ້າຖ້ຳຫີນ ແລະເຂົ້າໄປໃນໂງ່ນຫີນ ໃຫ້ພົ້ນຈາກຄວາມໜ້າຢ້ານຂອງພຣະຜູ້ເປັນເຈົ້າ ແລະຈາກ
ພຣະສະງ່າ ຣາສີອັນຍິ່ງໃຫຍ່ຂອງພຣະອົງ ເມື່ອພຣະອົງຊົງລຸກຂຶ້ນກະທຳໃຫ້ໂລກສັ່ນສະເທືອນ
22 ຢ່າເຊື່ອໝັ້ນຕາຍໃຈໃນມະນຸດທີ່ຕາຍເປັນ ຊຶ່ງໃນດັງຂອງເຂົາມີລົມຫາຍໃຈ ເພາະເຂົາບໍ່ມີຄຸນຄ່າຫຍັງ

## 3 ການທີ່ພຣະເຈົ້າພິພາກສາຢູດາແລະເຢຣູຊາເລັມ

Chaos in Jerusalem

1 ບັດນີ້ ອົງພຣະຜູ້ເປັນເຈົ້າພຣະເຈົ້າຈອມໂຍທາ ຊົງນຳອອກໄປເສັຽຈາກເຢຣູຊາເລັມແລະຈາກຢູດາ ຊຶ່ງເຄື່ອງ
ຄ້ຳແລະເຄື່ອງຈຸນ ເຄື່ອງຄ້ຳອັນເປັນອາຫານທັງໝົດ ແລະເຄື່ອງຄ້ຳອັນເປັນນ້ຳທັງໝົດ
2 ທະຫານເອກແລະພວກທະຫານ ຜູ້ປົກຄອງແລະຜູ້ປະກາດພຣະທັມ ຜູ້ທຳນວາຍ ແລະພວກເຖົ້າແກ່
3 ນາຍຫ້າສິບ ແລະຜູ້ມີຍົດ ທີ່ປຶກສາແລະຄົນຫລິ້ນກົນທີ່ມີຝີມື ແລະຄົນຊຳນານການທຳອາຄົມ
4 ແລະເຮົາຈະກະທຳໃຫ້ເດັກນ້ອຍເປັນເຈົ້ານາຍຂອງເຂົາ ແລະເດັກນ້ອຍຈະປົກຄອງເຂົາ
5 ແລະປະຊາຊົນຈະບີບບັງຄັບກັນແລະກັນ ທຸກຄົນບີບບັງຄັບເພື່ອນຂອງຕົນ ແລະທຸກຄົນບີບບັງຄັບເພື່ອນບ້ານ
ຂອງຕົນ ເດັກນ້ອຍຈະທະລຶ່ງຕໍ່ຜູ້ໃຫຍ່ ແລະຄົນຖ່ອຍບໍ່ໂຄຣົບຕໍ່ຄົນຜູ້ມີກຽດ
6 ເມື່ອຄົນຜູ້ນຶ່ງໄປຍຶດຕົວພີ່ນ້ອງຂອງເຂົາ ໃນເຮືອນຂອງບິດາຂອງເຂົາກ່າວວ່າ, "ເຈົ້າມີເສື້ອຄຸມຢູ່ແລ້ວ ເຈົ້າຈົ່ງ
ເປັນຜູ້ນຳຂອງເຮົາ ແລະຊາກທີ່ຢູ່ນີ້ຈະຢູ່ໃຕ້ກຳມືຂອງເຈົ້າ"
7 ໃນຄັ້ງນັ້ນເຂົາຈະຄັດຄ້ານວ່າ, "ຂ້າພະເຈົ້າບໍ່ຍອມເປັນຜູ້ຊ່ອຍ ໃນເຮືອນຂອງຂ້າພະເຈົ້າບໍ່ມີທັງອາຫານແລະ
ເສື້ອຄຸມ ທ່ານຈະຕັ້ງຂ້າພະເຈົ້າໃຫ້ເປັນຜູ້ນຳຂອງປະຊາຊົນບໍ່ໄດ້"
8 ເພາະເຢຣູຊາເລັມກໍສະດຸດ ແລະຢູດາກໍລົ້ມຄວ່ຳ ເພາະວ່າວາຈາຂອງເຂົາແລະການກະທຳຂອງເຂົາກໍຕໍ່ສູ້ພຣະ
ເຈົ້າ ກະບົດຕໍ່ພຣະພັກອັນຮຸ່ງເຮືອງຂອງພຣະອົງ
9 ຄວາມລຳອຽງຂອງເຂົາເປັນພຍານປັກປຳເຂົາທັງຫລາຍ ເຂົາປ່າວຮ້ອງຄວາມຜິດຂອງເຂົາຢ່າງໂຊໂດມ ເຂົາບໍ່
ໄດ້ປິດບັງໄວ້ ວິບັດແກ່ເຂົາເພາະວ່າເຂົາໄດ້ນຳຄວາມຊົ່ວຮ້າຍມາເໜືອຕົວເຂົາເອງ
10 ຈົ່ງບອກຄົນຊອບທັມວ່າເຂົາທັງຫລາຍຈະເປັນສຸກ ເພາະເຂົາຈະໄດ້ຮັບຜົນແຫ່ງການກະທຳຂອງເຂົາ
11 ວິບັດແກ່ຄົນອະທັມ ຄວາມຮ້າຍຈະຕົກແກ່ເຂົາ ເພາະວ່າສິ່ງໃດທີ່ມືເຂົາໄດ້ກະທຳ ເຂົາຈະຖືກກະທຳເຊັ່ນກັນ
12 ສ່ວນຊົນຊາດຂອງເຮົາ ເດັກນ້ອຍເປັນຜູ້ບີບບັງຄັບເຂົາ ແລະຜູ້ຍິງປົກຄອງເໜືອເຂົາ ໂອ ຊົນຊາດຂອງເຮົາ
ເອີຍ ຜູ້ນຳຂອງເຈົ້າທຳເຈົ້າໃຫ້ຜິດ ແລະກະທຳໃຫ້ແນວທາງຂອງເຈົ້າສັບສົນ

13 ພຣະເຈົ້າຊົງເຂົ້າປະທັບສູ້ຄວາມ ພຣະອົງປະທັບຢືນພິພາກສາຊົນຊາດຂອງພຣະອົງ
14 ພຣະເຈົ້າຊົງເຂົ້າພິພາກສາ ພວກຜູ້ໃຫຍ່ແລະເຈົ້ານາຍຊົນຊາດຂອງພຣະອົງ “ເຈົ້າທັງຫລາຍນີ້ແຫລະ ຊຶ່ງໄດ້
ກິນສວນອະງຸ່ນເສັຽ ຂອງທີ່ຍຶດມາຈາກຄົນຍາກຈົນກໍຢູ່ໃນເຮືອນຂອງເຈົ້າ
15 ຊຶ່ງເຈົ້າໄດ້ບີບຄັ້ນຊົນຊາດຂອງເຮົາ ແລະໄດ້ບົດບີ້ຫນ້າຂອງຄົນຈົນນັ້ນ ເຈົ້າຫມາຍຄວາມວ່າຢ່າງໃດ” ພຣະ
ເຈົ້າຈອມໂຍທາກ່າວໄວ້ດັ່ງນີ້ແຫລະ

**ການຊົງພິພາກສາບຸດຕຣີຂອງຊີໂອນ**

16 ພຣະເຈົ້າກ່າວວ່າ ເບິ່ງດູ ຜູ້ຍິງຊາວກຸງເຢຣູຊາເລັມອວດອົ່ງຈອງຫອງສໍ່າໃດ ເຂົາຍ່າງເບີດຈົນດັງຕັ້ງຊື່ ເຂົາມັກ
ຫຼ່ງວເລາະ ຫລິ້ນສເນ່ ໂດຍຍ່າງບາດກ້າວອັນຜ່າເຜີຍ ຈົນປອກຕີນດັງເປັນຈັງຫວະ
17 ພຣະເຈົ້າຈະຊົງລົງໂທດທີ່ຫົວຂອງບັນດາລູກສາວຂອງຊີໂອນ ແລະພຣະອົງຈະຊົງກະທໍາໃຫ້ຫນ້າຜາກຂອງ
ເຂົາທັງຫລາຍໂລ້ນໄປ
18 ໃນວັນນັ້ນພຣະເຈົ້າຈະຊົງນໍາເອົາເຄື່ອງວິຈິດງົດງາມໄປເສັຽ ຄືເຄື່ອງເອ້ທີ່ພວກເຂົາໃສ່ຕາມຂໍ້ຕີນ ຕາມເທິງຫົວ
ຕາມຄໍ
19 ຈີ້ ກໍາໄລມື ຜ້າປົກຫນ້າ
20 ຜ້າມາລາ ກໍາໄລຕົ້ນແຂນ ຜ້າຄາດແອວ ທີບເຄື່ອງນໍ້າຫອມ ແລະກະຕຸດທັງຫລາຍ
21 ແຫວນຕາ ແລະແຫວນໃສ່ດັງ
22 ເສື້ອງາມ ແລະເສື້ອຄຸມ ຜ້າຄຸມ ແລະກະເປົ໋າຖື
23 ເສື້ອໃຫຍ່ ເສື້ອຜ້າລີນິນ ຜ້າປົກຫົວ ແລະຜ້າຄຸມຕົວ
24 ແທນນໍ້າຫອມຈະມີແຕ່ຄວາມເນົ່າ ແທນຜ້າຄາດແອວຈະມີເຊືອກ ແທນຜົມດັດຈະມີແຕ່ຫົວ
ລ້ານ ແທນເສື້ອງາມລໍ້າຄ່າ ຈະຄາດແອວດ້ວຍຜ້າກະສອບ ແທນຄວາມງົດງາມຈະມີແຕ່ຄວາມຂາຍຫນ້າ
25 ພວກຜູ້ຊາຍຂອງເຈົ້າຈະລົ້ມລົງດ້ວຍດາບ ແລະທະຫານທີ່ເກັ່ງກ້າທະຫານຂອງເຈົ້າຈະລົ້ມໃນສົງຄາມ
26 ປະຕູຂອງນາງຈະຮ້ອງທຸກແລະໄວ້ທຸກ ນາງຈະຖືກເປືອຍແລ້ວນັ່ງຢູ່ເທິງດິນ

## 4

Chapter 4

1 ໃນວັນນັ້ນຍິງເຈັດຄົນຈະຍຶດຊາຍຄົນນຶ່ງໄວ້ ກ່າວວ່າ, “ເຮົາຈະຫາກິນຂອງເຮົາ ຫານຸ່ງຫາຫົ່ມຂອງເຮົາເອງ ຂໍ
ພຽງໃຫ້ເຂົາເອີ້ນເຮົາດ້ວຍຊື່ຂອງນາງ ຂໍຈົ່ງປົດຄວາມອັບອາຍຂອງເຮົາເສັຽ”

**ອານາຄົດອັນຮຸ່ງເຮືອງຂອງເຢຣູຊາເລັມ**

The Future Glory of the Survivors in zion

2 ໃນວັນນັ້ນບັນດາສິ່ງທີ່ງອກເພາະພຣະເຈົ້າຈະງົດງາມແລະຮຸ່ງເຮືອງ ແລະພືດຜົນຂອງແຜ່ນດິນນັ້ນຈະເປັນ
ຄວາມພູມໃຈ ແລະເປັນກຽດຂອງອິສຣາເອນຜູ້ລອດຕາຍມາ
3 ແລະຄົນທີ່ເຫລືອຢູ່ໃນຊີໂອນແລະຄ້າງຢູ່ໃນເຢຣູຊາເລັມ ເຂົາຈະເອີ້ນວ່າບໍຣິສຸດ ຄືທຸກຄົນຜູ້ມີຊື່ໃນທະບຽນຊີ
ວິດໃນເຢຣູຊາເລັມ
4 ໃນເມື່ອອົງພຣະຜູ້ເປັນເຈົ້າຈະຊົງລ້າງຄວາມເປິເປື້ອນຂອງທິດາທັງຫລາຍຂອງຊີໂອນ ແລະຊໍາຣະຮອຍເລືອດ
ຂອງເຢຣູຊາເລັມຈາກຖ້າມກາງເມືອງນັ້ນ ດ້ວຍອານຸພາບແຫ່ງການພິພາກສາແລະດ້ວຍອານຸພາບຂອງການ
ເຜົາ
5 ແລະພຣະເຈົ້າຈະຊົງສ້າງເມກເພື່ອກາງຄືນ ເຫນືອສະຖານທັງສິ້ນຂອງພູຊີໂອນ ແລະເຫນືອປະຊຸມຊົນເມືອງ
ນັ້ນ ເພາະຈະມີຫລັງຄາແລະກະໂຈມເຫນືອພຣະສະງ່າຣາສີທົ່ວທັງສິ້ນ

6 ຈະມີຮົ່ມກາງເວັນບັງແດດ ແລະເປັນທີ່ລີ້ພັຍ ແລະທີ່ກຳບັງພະຍຸແລະຝົນ

## 5 ຄຳອຸປມາເຣື່ອງສວນອະງຸ່ນ

The Song of the Unfruitful Vineyard

1 ຂໍໃຫ້ຂ້າພະເຈົ້າຮ້ອງເພງເຖິງຄົນຮັກຂອງຂ້າພະເຈົ້າ ເປັນເພງຂອງຄົນຮັກຂອງຂ້າພະເຈົ້າກ່ຽວກັບສວນອະງຸ່ນ ຂອງເຂົາ ຄົນຮັກຂອງຂ້າພະເຈົ້າມີສວນອະງຸ່ນຕອນນຶ່ງ ຢູ່ເທິງເນີນພູອັນອຸດົມສົມບູນ

2 ເຂົາຂຸດແລ້ວເກັບກ້ອນຫີນອອກຫມົດ ປູກເບັ້ງອະງຸ່ນພັນດີທີ່ສຸດໃສ່ ເຂົາປຸກຫໍຄອຍໄວ້ສຳລັບເຝົ້າສວນພ້ອມ ທັງສະກັດຫີນສຳລັບບີບຫມາກອະງຸ່ນ ເຂົາຄິດວ່າຈະໄດ້ຫມາກອະງຸ່ນດີ ແຕ່ໄດ້ຮັບຫມາກອະງຸ່ນສົ້ມຫມົດ

3 ຄົນຮັກຂອງຂ້າພະເຈົ້າເວົ້າວ່າ, “ຊາວເຢຣູຊາເລັມ ແລະຄົນຢູດາເອີຍ ຈົ່ງພິຈາຣະນາເບິ່ງດູວ່າ ລະຫວ່າງຂ້າພະ ເຈົ້າກັບສວນອະງຸ່ນ

4 ວ່າຍັງມີອັນໃດອີກແດ່ທີ່ຂ້າພະເຈົ້າບໍ່ໄດ້ທຳໃນສວນນີ້ ເປັນຫຍັງຫມາກຂອງມັນຈຶ່ງສົ້ມ ທັງໆທີ່ຂ້າພະເຈົ້າຄາດ ຫວັງວ່າຈະໄດ້ຫມາກຫວານດີ

5 ບັດນີ້ ສົມຄວນແລ້ວທີ່ຂ້າພະເຈົ້າຈະທຳກັບສວນອະງຸ່ນຂອງຂ້າພະເຈົ້າດັ່ງນີ້ ຄືຈະຮື້ຫນາມແລະຮົ້ວທີ່ລ້ອມມັນ ນັ້ນອອກ ເພື່ອໃຫ້ສັດປ່າມາກິນແລະຢຽບຢ່ຳຖິ້ມເສັຽ

6 ຈະປ່ອຍໃຫ້ຫຍ້າເກີດຂຶ້ນຈົນເຕັມ ຈະບໍ່ລິແຫນງຫລືພວນດິນ ແຕ່ຈະປ່ອຍໃຫ້ເຄືອແລະກົກຫນາມປົ່ງຂຶ້ນ ຂ້າ ພະເຈົ້າຈະບໍ່ໃຫ້ຝົນຕົກລົງມາຣຳສວນນີ້”

7 ອິສຣາເອນແມ່ນສວນອະງຸ່ນຂອງພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ ຄົນຢູດາແມ່ນເບັ້ງອະງຸ່ນທີ່ພຣະອົງຊົງປູກໄວ້ ພ ຣະອົງຊົງມຸ່ງຫວັງໃຫເຂົາເຮັດຊອບທັມ ແຕ່ຊົງໄດ້ຍິນຄົນຮ້ອງຂໍຄວາມຍຸດຕິທັມ

### ປະກາດວິບັດເຫນືອຄົນອະທັມ

Social Injustice Denounced

8 ວິບັດແກ່ຜູ້ເຫລົ່ານັ້ນທີ່ເພີ້ມເຮືອນຫລັງນຶ່ງເຂົ້າກັບອີກຫລັງນຶ່ງ ແລະເພີ້ມນາເຂົ້າກັບນາຈົນບໍ່ມີບ່ອນອີກແລ້ວ ແລະເຈົ້າທັງຫລາຍຕ້ອງຢູ່ລຳພັງໃນຖ້າມກາງແຜ່ນດິນນັ້ນ

9 ພຣະເຈົ້າຈອມໂຍທາຊົງກ່າວໃຫ້ຂ້າພະເຈົ້າໄດ້ຍິນ “ແນ່ນອນເຮືອນຫລາຍຫລັງຈະຕ້ອງຮ້າງເປົ່າ ເຮືອນໃຫຍ່ ເຮືອນງາມຈະບໍ່ມີຄົນອາສັຍ

10 ເພາະວ່າສວນອະງຸ່ນຊາວທ້າໄຮ່ຈະໄດ້ຜົນແຕ່ພຽງບັທ (Bath) ດຽວແລະເມັດພືດໂຮເມີຈະໃຫ້ຜົນແຕ່ເອຟາ ດຽວ”

11 ວິບັດແກ່ຄົນເຫລົ່ານັ້ນທີ່ລຸກຂຶ້ນແຕ່ເຊົ້າມືດ ເພື່ອຕັ້ງຕົ້ນດື່ມເຫລົ້າ ແລະພວກເຈົ້າກໍເມົາເຫລົ້າຕລອດຄືນ

12 ເຂົາມີພິນເຂົາຄູ່ແລະພິນໃຫຍ່ ລຳມະນາ ຂຸ່ຍ ແລະເຫລົ້າອະງຸ່ນໃນການລ້ຽງສັດຂອງເຂົາ ແຕ່ເຂົາທັງຫລາຍບໍ່ ໄດ້ເອົາໃຈໃສ່ໃນພຣະຣາຊກິຈຂອງພຣະຜູ້ເປັນເຈົ້າ ຫລືພິຈາຣະນາສິພຣະຫັດຂອງພຣະອົງ

13 ເພາະສະນັ້ນຊົນຊາດຂອງເຮົາຈຶ່ງຕົກໄປເປັນຊະເລີຍເພາະຂາດຄວາມຮູ້ ຜູ້ມີກຽດຂອງເຂົາກໍຫິວ ແລະສາມັນ ທຳມະດາຂອງເຂົາກໍຈະຕາຍຍ້ອນຫິວນ້ຳ

14 ເຫດສະນັ້ນພິພົບຄົນຕາຍກໍຂຍາຍຄໍຂອງມັນອອກ ແລະອ້າປາກອອກເກີນຂນາດ ແລະພວກເຈົ້ານາຍຂອງເຢ ຣູຊາເລັມ ແລະສາມັນຊົນຂອງເມືອງນັ້ນກໍລົງໄປ ທັງຄົນຂອງເມືອງນັ້ນແລະເຂົາຜູ້ຮ້ອງສຽງດັງຢ່າງອຶກກະ ທຶກຢູ່ໃນນັ້ນ

15 ມະນຸດຕ້ອງຂາບລົງແລະຄົນກໍຕົກຕ່ຳ ແລະຕາຂອງຜູ້ຈອງຫອງກໍຖືກລົດຕ່ຳ

16 ແຕ່ພຣະເຈົ້າຈອມໂຍທາໄດ້ຮັບການເທີດທູນໄວ້ໂດຍຄວາມຍຸດຕິທັມ ແລະພຣະເຈົ້າອົງບໍຣິສຸດໄດ້ຊົງສຳແດງ ຄວາມບໍຣິສຸດສັກສິດໂດຍຄວາມຊອບທັມ

17 ແລ້ວລູກແກະຈະທ່ຽວຫາກິນທີ່ນັ້ນເຫມືອນເປັນລານຫຍ້າຂອງມັນ ສັດທີ່ອ້ວນແລະລູກແບ້ຈະຫາກິນຢູ່ໃນທີ່
ຮົກຮ້າງເພພັງ
18 ວິບັດຕົກແກ່ພວກເຈົ້າແລ້ວ ພວກເຈົ້າເປັນອິສລະໂດຍຫລຸດພົ້ນຈາກບາບບໍ່ໄດ້ດອກ
19 ຜູ້ກ່າວວ່າ, “ໃຫ້ພຣະອົງຮີບຮ້ອນ ໃຫ້ພຣະອົງເລັ່ງງານຂອງພຣະອົງ ເພື່ອເຮົາຈະໄດ້ເຫັນ ໃຫ້ພຣະປະສົງຂອງ
ອົງຜູ້ບໍຣິສຸດແຫ່ງອິສຣາເອນສະເດັດມາໃກ້ ຂໍໃຫ້ມາ ເພື່ອເຮົາຈະໄດ້ຮູ້”
20 ວິບັດແກ່ຄົນເຫລົ່ານັ້ນທີ່ຮຽກຄວາມຊົ່ວຮ້າຍວ່າຄວາມດີ ແລະຄວາມດີວ່າຄວາມຊົ່ວຮ້າຍ ຜູ້ຖືເອົາວ່າຄວາມ
ມືດເປັນຄວາມສະວ່າງ ແລະຄວາມສະວ່າງເປັນຄວາມມືດ ຜູ້ຖືເອົາວ່າຄວາມຂົມເປັນຄວາມຫວານແລະ
ຄວາມຫວານເປັນຄວາມຂົມ
21 ວິບັດແກ່ຄົນເຫລົ່ານັ້ນທີ່ສລາດໃນສາຍຕາຂອງຕົນເອງ ແລະສຽບແຫລມໃນສາຍຕາຂອງຕົນ
22 ວິບັດແກ່ຄົນເຫລົ່ານັ້ນທີ່ເປັນວິຣະຊົນໃນການດື່ມເຫລົ້າອະງຸ່ນ ແລະເປັນຄົນເກັ່ງໃນການດື່ມເຫລົ້າ
23 ຜູ້ປ່ອຍຕົວຄົນທຳຜິດເພາະເຂົາຮັບສິນບົນ ແລະເອົາຄວາມຍຸດຕິທັມໄປຈາກຜູ້ປາສຈາກຄວາມຜິດ

Foreign Invasion Predicted

24 ດັ່ງນັ້ນ ແປວໄຟກືນຕໍເຂົ້າສັນໃດ ແລະຫຍ້າແຫ້ງຍຸບລົງສັນໃດ ຮາກຂອງເຂົາກໍຈະເປັນເຫມືອນຄວາມເນົ່າ
ເປື່ອຍ ແລະດອກບານຂອງເຂົາຈະປິວໄປເຫມືອນຝຸ່ນຂີ້ດິນສັນນັ້ນ ເພາະເຂົາທັງຫລາຍປະຕິເສດບໍ່ຮັບພຣະ
ທັມຂອງພຣະເຈົ້າຈອມໂຍທາ ແລະໄດ້ດູຫມິ່ນພຣະຄຳຂອງອົງບໍຣິສຸດແຫ່ງອິສຣາເອນ
25 ເຫດສັນນັ້ນ ພຣະພິໂຣດຂອງພຣະຜູ້ເປັນເຈົ້າຈຶ່ງພຸ່ງຂຶ້ນຕໍ່ຊົນຊາດຂອງພຣະອົງ ແລະພຣະອົງຊົງຢຽດພຣະຫັດ
ຂອງພຣະອົງອອກສູ້ເຂົາແລະຕີເຂົາ ແລະພູທັງຫລາຍກໍສັ່ນສະເທືອນ ແລະຊາກສົບຂອງເຂົາທັງຫລາຍກໍ
ເຫມືອນຂີ້ເຫຍື້ອໃນກາງທາງ ເຖິງປານນັ້ນພຣະພິໂຣດຂອງພຣະອົງກໍຍັງເຊົາໂກດຮ້າຍ ແລະພຣະຫັດຂອງພ
ຣະອົງກໍຍັງຢຽດອອກຢູ່
26 ພຣະອົງຈະຊົງທຳສັນຍາໃຫ້ແກ່ປະຊາຊາດທີ່ຫ່າງໄກ ແລະຊົງຜິວພຣະໂອດຮຽກເຂົາມາຈາກທີ່ສຸດປາຍແຜ່ນ
ດິນໂລກ ແລະເຂົາມາຢ່າງໄວໂດຍບໍ່ຊັກຊ້າ
27 ບໍ່ມີຜູ້ໃດໃນພວກເຂົາອ່ອນເພັຽ ບໍ່ມີຜູ້ໃດສະດຸດ ບໍ່ມີຜູ້ໃດຫລັບສນິດຫລືງ້ວງນອນ ຜ້າຄາດແອວຈັກຜືນນຶ່ງກໍບໍ່
ຫລຸດອອກ ສາຍຮັດເກີບກໍບໍ່ຂາດຈັກສາຍນຶ່ງ
28 ລູກທະນູຂອງເຂົາກໍແຫລມ ຄັນທະນູຂອງເຂົາກໍກົ່ງໄວ້ ກີບຕີນມ້າທັງຫລາຍຂອງເຂົາເຫມືອນກັບຫີນເຫລັກໄຟ
ແລະລໍ້ຂອງເຂົາທັງຫລາຍເຫມືອນລົມບ້າຫມູ
29 ສຽງຄຳຣາມຂອງເຂົາເຫມືອນສິງ ເຫມືອນສິງຫນຸ່ມ ເຂົາເຫລົ່ານັ້ນຄຳຣາມ ແລະຄຸບເຫຍື່ອຂອງເຂົາ ແລະເຂົາ
ຈະຂົນເອົາໄປເສັຽ ແລະບໍ່ມີຜູ້ໃດຊ່ອຍເຂົາ
30 ໃນວັນນັ້ນເຂົາທັງຫລາຍຈະໂຮ່ຮ້ອງ ເຫມືອນສຽງຄື້ນອຶກກະທຶກຂອງທະເລ ແລະຖ້າມີຜູ້ນຶ່ງຜູ້ໃດມອງເບິ່ງທີ່
ແຜ່ນດິນ ເບິ່ງແມ, ຄວາມມືດແລະຄວາມທຸກໃຈ ແລະສະວ່າງກໍຖືກເມກຂອງແຜ່ນດິນປິດບັງເສັຽ

## 6 ນິມິດແລະການທີ່ເອຊາຢາຖືກຊົງເອີ້ນ

A Vision of God in the Temple

(ອຊກ 1:4-28)

1 ໃນປີທີ່ກະສັດອຸສຊີຢາສິ້ນພຣະຊົນນັ້ນ ຂ້າພະເຈົ້າໄດ້ເຫັນພຣະຜູ້ເປັນເຈົ້າຊົງປະທັບເທິງບັນລັງສູງແລະສະງ່າ
ຣາສີ ແລະເຄື່ອງສລອງຂອງພຣະອົງໄດ້ເຕັມພຣະວິຫານ
2 ຢູ່ເຫນືອພຣະອົງມີເຊຣາພິມຫລາຍຕົນຢືນຢູ່ ແຕ່ລະຕົນມີປີກຫົກປີກ ໃຊ້ສອງປີກປົກຫນ້າ ແລະສອງປີກປົກ
ຕີນ ແລະອີກສອງປີກບິນໄປ

3 ຕ່າງກໍຮ້ອງຕໍ່ກັນແລະກັນວ່າ, “ບໍຣິສຸດ ບໍຣິສຸດ ບໍຣິສຸດ ພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງບໍຣິສຸດ ພຣະຣັສມີ
ຂອງພຣະອົງແຜ່ກະຈາຍໄປທົ່ວໂລກ”
4 ແລະສຽງຮ້ອງຂອງພວກທ່ານໄດ້ທຳໃຫ້ຮາກຖານພຣະວິຫານສັ່ນສະເທືອນ ແລະກໍມີຄວັນເຕັມໄປຫມົດ
5 ແລະຂ້າພະເຈົ້າໄດ້ເວົ້າວ່າ, “ຂ້າພະເຈົ້າໄດ້ຮັບເຄາະກັມແລະຫມົດຫວັງແລ້ວ ຄຳເວົ້າທຸກໆຄຳທີ່ອອກຈາກ
ປາກຂ້າພະເຈົ້າລ້ວນແຕ່ເປັນບາບ ແລະຂ້າພະເຈົ້າຢູ່ນຳຊົນຊາດທີ່ເວົ້າແຕ່ບາບຫຍາບຊ້າ ບັດນີ້ຕາຂອງຂ້າພະ
ເຈົ້າໄດ້ເຫັນກະສັດ ຄືພຣະຜູ້ເປັນເຈົ້າແຫ່ງຈັກກະວານກັບຕາຕົນເອງແລ້ວ”
6 ຕໍ່ມາ ຕົນນຶ່ງໃນເຊຣາພິມບິນມາຫາຂ້າພະເຈົ້າ ເທວະດາຕົນນີ້ໄດ້ຄີບຖ່ານໄຟແດງມາຈາກແທ່ນບູຊາ
7 ແລະເອົາຖ່ານນັ້ນແປະໃສ່ປາກຂອງຂ້າພະເຈົ້າພ້ອມກັບເວົ້າວ່າ, “ສິ່ງນີ້ໄດ້ຖືກຕ້ອງປາກຂອງເຈົ້າແລ້ວ ຄວາມ
ຜິດຂອງເຈົ້າກໍຖືກຍົກເລີກ ແລະບາບກໍໄດ້ຮັບອະພັຍ”
8 ແລະຂ້າພະເຈົ້າໄດ້ຍິນພຣະສຸຣະສຽງຂອງອົງພຣະຜູ້ເປັນເຈົ້າຊົງຖາມວ່າ, “ເຮົາຈະໃຊ້ຜູ້ໃດໄປ ແລະໃຜຈະ
ເປັນຜູ້ສົ່ງຂ່າວຕາງເຮົາ” ແລ້ວຂ້າພະເຈົ້າທູນຕອບວ່າ, “ຂ້າພຣະອົງນີ້ຈະໄປດອກ ໂຜດໃຊ້ຂ້າພຣະອົງທ້ອນ”
9 ດ້ວຍເຫດນີ້ ພຣະອົງຊົງສັ່ງຂ້າພະເຈົ້າໄປບອກປະຊາຊົນວ່າ, “ເຖິງພວກເຈົ້າຈະຟັງຫລາຍປານໃດ ພວກເຈົ້າກໍ
ຈະບໍ່ເຂົ້າໃຈ ຈະເບິ່ງຄັກປານໃດ ກໍຈະບໍ່ຮູ້ວ່າແມ່ນຫຍັງຈະເກີດຂຶ້ນ”
10 ແລ້ວພຣະອົງຊົງບອກຂ້າພະເຈົ້າວ່າ, “ຈົ່ງທຳໃຫ້ຈິດໃຈຂອງຊົນຊາດນີ້ເປັນມືດມົນ ຫູຫນວກ ຕາບອດ ເພື່ອບໍ່
ໃຫ້ພວກເຂົາເຫັນຮຸ່ງ ຫລືໄດ້ຍິນ ແລະເຂົ້າໃຈໄດ້ ແລ້ວພວກເຂົາຈະບໍ່ກັບຄືນມາຫາເຮົາ ແລະຖືກຮັກສາໃຫ້ດີ
11 ແລ້ວຂ້າພະເຈົ້າທູນຖາມວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຈະໃຫ້ເປັນຢູ່ຢ່າງນີ້ດົນປານໃດ” ແລະພຣະອົງຊົງຕອບ
ວ່າ, “ຈົນເທົ່າທົ່ວເມືອງທັງຫລາຍຖືກທຳລາຍຮ້າງເປົ່າ ຫມູ່ບ້ານທັງຫລາຍບໍ່ມີຄົນອາສັຍຢູ່ ແລະຜືນແຜ່ນດິນ
ງຽບເຫງົາເປົ່າປ່ຽວ
12 ເຮົາຈະກວາດຕ້ອນຝູງຄົນອອກຫນີໄປໄກໆ ໃຫ້ດິນດອນຕອນຫຍ້າໂສກເສົ້າເຫງົາຫງອຍ
13 ເຖິງແມ່ນວ່າຍັງເຫລືອຄົນຢູ່ໃນນັ້ນພຽງນຶ່ງໃນສິບກໍຈະຖືກທຳລາຍເຫມືອນກັນ ຊຶ່ງຈະເປັນເຫມືອນຕົ້ນສົນທີ່ຖືກ
ຕັດເຫລືອແຕ່ຕໍ” ຕໍນັ້ນຫມາຍເຖິງ ການຮື້ຟື້ນການເປັນໄພ່ພົນຂອງພຣະເຈົ້າຂຶ້ນໃຫມ່

## 7 ຂ່າວແຣກຂອງເອຊາຢາທີ່ມີເຖິງອາຮັສ

Isaiah Reassures King Ahaz

(2 ກສດ 16:5; 2 ຂຄວ 28:5-15)

1 ໃນຣັຊການຂອງອາຮັສໂອຣົດຂອງໂຢທາມ ໂອຣົດຂອງອຸສຊີຢາ ກະສັດຂອງຢູດາ ເຣຊີນກະສັດແຫ່ງຊີເຣັຽ
(ອາຣາມ) ແລະເປກາໂອຣົດຂອງເຣມາລີຢາ ກະສັດແຫ່ງອິສຣາເອນໄດ້ເຂົ້າໂຈມຕີນະຄອນເຢຣູຊາເລັມ ແຕ່
ພວກທ່ານບໍ່ສາມາດຍຶດເອົາເມືອງນີ້ໄດ້
2 ເມື່ອເຂົາໄປບອກທີ່ຣາຊສຳນັກຂອງດາວິດວ່າ, “ຊີເຣັຽໄປຕັ້ງຄ້າຍຢູ່ໃນເຂດເອຟຣາອິມແລ້ວ” ພຣະອົງພ້ອມ
ທັງປະຊາຊົນກໍຢ້ານ ແລະໃຈສັ່ນແທບຈະຂາດໃຈຕາຍ
3 ແລະພຣະຜູ້ເປັນເຈົ້າຊົງບອກເອຊາຢາວ່າ, “ເຈົ້າແລະເຊອາຣ໌ຢາຊຸບ ບຸດຊາຍຂອງເຈົ້າ ຈົ່ງໄປເຝົ້າກະສັດອາຮັ
ສ ຢູ່ບ່ອນຮ່ອງນ້ຳສະໄຫລມາສຸດເທິງຖນົນບ່ອນທຳແຜ່ນຜ້າ
4 ເພື່ອບອກໃຫ້ພຣະອົງສງົບຈິດສງົບໃຈ ຢ່າຢ້ານຫລືເປັນທຸກໃຈເລີຍ ຢ່າໃຫ້ພຣະທັຍຂອງພຣະອົງຢ້ານດ້ວຍ
ເຫດພວກເຂົາທັງສອງເປັນເຫມືອນດົ້ນໄຟມອດຊຶ່ງຍັງແຕ່ຄວັນ ເພາະຄວາມຄຽດແຄ້ນຂອງກະສັດເຣຊີນ
ແລະຊີເຣັຽ ແລະໂອຣົດຂອງເຣມາລີຢາ
5 ເພາະວ່າຊີເຣັຽພ້ອມກັບເອຟຣາອິມ ແລະໂອຣົດຂອງເຣມາລີຢາໄດ້ຄິດການຊົ່ວຮ້າຍຕໍ່ພຣະອົງກ່າວວ່າ,

6 “ໃຫ້ເຮົາທັງຫລາຍຂຶ້ນໄປຕໍ່ສູ້ກັບຢູດາ ແລະເພື່ອໃຫ້ເຂົາຢ້ານແລະຍຶດເອົາເປັນເມືອງຂຶ້ນ ແລະຕັ້ງບຸດຊາຍຂອງ
ຕາເບເອນເປັນກະສັດປົກຄອງປະເທດນີ້”
7 ແຕ່ເຮົາຄືພຣະຜູ້ເປັນເຈົ້າຂໍປະກາດວ່າ, “ເຣື່ອງນີ້ຈະບໍ່ເກີດຂຶ້ນດອກ
8 ເພາະສຽນຂອງຊີເຣັຽຄືດາມັສກັສ ແລະສຽນຂອງດາມັສກັສຄືກະສັດເຣຊີນ (ພາຍໃນຫົກສິບຫ້າປີ ເອຟຣາອິມ
ກໍຈະສິ້ນສຸດຄວາມເປັນຊາດ)
9 ເພາະສຽນຂອງເອຟຣາອິມຄືຊາມາເຣັຽ ແລະສຽນຂອງຊາມາເຣັຽຄືໂອຣົດຂອງເຣມາລີຢາ ແນ່ນອນ ຖ້າຄວາມ
ເຊື່ອຂອງເຈົ້າບໍ່ຫລາຍ ເຈົ້າກໍຈະຕັ້ງຢູ່ບໍ່ໄດ້

### ໝາຍສຳຄັນກ່ຽວກັບເອມານູເອນ

Isaiah Gives Ahaz the Sign of Immanuel

10 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ອາຮັສອີກວ່າ,
11 “ຈົ່ງຂໍໃຫ້ພຣະຜູ້ເປັນເຈົ້າຂອງເຈົ້າສະແດງໝາຍສຳຄັນຈາກພິພົບຄົນຕາຍ ຫລືຈາກຟ້າສວັນໃຫ້ເຈົ້າເຫັນ
12 ອາຮັສໄດ້ທູນຕອບວ່າ, “ຂ້າພຣະອົງຈະບໍ່ຂໍໃຫ້ສະແດງໝາຍສຳຄັນ ແລະຈະບໍ່ທົດລອງພຣະຜູ້ເປັນເຈົ້າ
13 ເອຊາຢາຈຶ່ງເວົ້າວ່າ, “ຣາຊວົງດາວິດເອີຍ ຈົ່ງຟັງເທີນ ແຕ່ກີ້ທ່ານໄດ້ທຳໃຫ້ຄົນທັງຫລາຍບໍ່ພໍໃຈຈົນເຂົາອົດທົນ
ບໍ່ໄດ້ ບັດນີ້ ທ່ານໄດ້ທຳໃຫ້ພຣະເຈົ້າຊົງອົດທົນບໍ່ໄດ້ອີກ
14 ດ້ວຍເຫດນັ້ນ ພຣະຜູ້ເປັນເຈົ້າຈຶ່ງຈະຊົງສະແດງໝາຍສຳຄັນໃຫ້ເຈົ້າເຫັນດັ່ງນີ້ ຄືຍິງສາວຜູ້ນຶ່ງຈະຖືພາ ແລະ
ອອກບຸດມາເປັນຊາຍ ນາງຈະຕັ້ງຊື່ໃຫ້ບຸດນີ້ວ່າ “ເອມານູເອນ”
15 ເມື່ອເວລາທ່ານໃຫຍ່ພໍຮູ້ຈັກຜິດຈັກຖືກໄດ້ແລ້ວ ທ່ານຈະຮັບປະທານນໍ້ານົມແລະນໍ້າເຜິ້ງເປັນອາຫານ
16 ກ່ອນເວລາທ່ານຮູ້ຈັກຄວາມນັ້ນ ແຜ່ນດິນຂອງກະສັດສອງອົງທີ່ເຈົ້າຢ້ານຈະເພພັງຮ້າງເປົ່າ
17 ພຣະຜູ້ເປັນເຈົ້າຈະຊົງບັນດານໃຫ້ວັນໂຫດຮ້າຍມາຖືກພຣະອົງ ຖືກປະຊາຊົນແລະຖືກເຊື້ອສາຍແຫ່ງບິດາຂອງ
ພຣະອົງ ວັນນັ້ນຈະໂຫດຮ້າຍກວ່າທຸກໆວັນທີ່ເຄີຍມີມາ ຕັ້ງແຕ່ວັນທີ່ເອຟຣາອິມແຍກອອກຈາກຢູດາ ຄືກະສັດ
ອັສຊີເຣັຽ”
18 ເມື່ອເວລານັ້ນມາເຖິງ ພຣະຜູ້ເປັນເຈົ້າຈະຊົງຜິວພຣະໂອດເອົາຄົນເອຢິບມາຈາກຕົ້ນກຳເນີດແມ່ນໍ້ານິນ
ເໝືອນຝູງເຫລືອກມາ ແລະເອີ້ນເຜິ້ງຊຶ່ງຢູ່ໃນແຜ່ນດິນອັສຊີເຣັຽ
19 ແລະມັນຈະມາເຕັມຢູ່ໃນຮ່ອມພູ ໃນຖໍ້າ ໃນໂງ່ນຫີນ ໃນພຸ່ມໄມ້ແລະເດີ່ນຫຍ້າ
20 ເມື່ອເວລານັ້ນມາເຖິງ ພຣະຜູ້ເປັນເຈົ້າຈະຊົງຈ້າງເອົາຊ່າງຕັດຜົມຈາກຟາກຕາເວັນອອກຂອງແມ່ນໍ້າເອີຟຣາດ
ຄືກະສັດອັສຊີເຣັຽ ທ່ານຈະແຖໜວດ ແຖຜົມ ແລະແຖຂົນໃນຕົນຕົວຂອງເຈົ້ານັ້ນ
21 ເມື່ອເວລານັ້ນມາເຖິງ ແມ່ນແຕ່ຊາວນາທີ່ມີງົວນ້ອຍພຽງໂຕດຽວ ແລະມີແບ້ພຽງສອງໂຕ
22 ກໍຈະມີນໍ້ານົມກິນພຽງພໍກັບຄວາມຕ້ອງການ ແລະຄົນທັງປວງທີ່ລອດຊີວິດເຫລືອຢູ່ໃນປະເທດ ຈະໄດ້ກິນນໍ້າ
ນົມແລະນໍ້າເຜິ້ງເປັນອາຫານ
23 ເມື່ອເວລານັ້ນມາເຖິງ ສວນດີທີ່ມີກົກອະງຸ່ນພັນກົກ ແລະມີຣາຄາພຽງນຶ່ງພັນເຊເກລກໍຈະເຕັມໄປດ້ວຍໜາມ
ແລະໄມ້
24 ທັງຈະບໍ່ມີໃຜກ້າໄປໃນສວນນັ້ນ ເວັ້ນໄວ້ແຕ່ຜູ້ທີ່ມີໜ້າທະນູເປັນອາວຸດຈຶ່ງຈະໄປໄດ້ ທີ່ວທັງປະເທດຈະເຕັມ
ໄປດ້ວຍໄມ້ແລະກົກໜາມ
25 ພູທຸກໜ່ວຍທີ່ເຄີຍປູກຢູ່ກະທຳກິນຈະມີແຕ່ໜາມ ຈະບໍ່ມີໃຜຂຶ້ນໄປທີ່ນັ້ນ ມັນຈະເປັນບ່ອນງົວຄວາຍ ແລະ
ແກະກິນຫຍ້າ

## 8 ຊື່ບຸດຂອງຜູ້ປະກາດພຣະທັມ

Isaiah’s Son a Sign of the Assyrian Invasion

1 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຂ້າພະເຈົ້າວ່າ, “ຈົ່ງເອົາປ້າຍແຜ່ນໃຫຍ່ມາແຜ່ນນຶ່ງ ແລ້ວຂຽນຫນັງສືໂຕໃຫຍ່ໆລົງໃສ່
ວ່າ “ມາເຮີຊັນລັນຮັສບັສ”
2 ແລ້ວໃຫ້ເອົາຄົນທີ່ໄວ້ໃຈໄດ້ສອງຄົນຄື ປະໂຣຫິດອູຣີຢາ ແລະເຊຄາຣີຢາບຸດຂອງໂຢເບເຣຄີຢາມາເປັນພຍານ
ເພື່ອຂ້າພະເຈົ້າ
3 ແລະຂ້າພະເຈົ້າໄດ້ເຂົ້າໄປຫາຍິງຜູ້ປະກາດພຣະທັມ ແລະນາງກໍຕັ້ງຄັນ ແລະຄອດບຸດຊາຍຄົນນຶ່ງ ແລະພຣະ
ຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ, “ຈົ່ງເອີ້ນຊື່ບຸດນັ້ນວ່າ ບາເຮີຊັນລັນຮັສບັສ
4 ເພາະກ່ອນເດັກນ້ອຍຜູ້ນີ້ໃຫຍ່ຂຶ້ນມາພໍຮູ້ຈັກເອີ້ນພໍ່ ແມ່ໄດ້ ຊັບສິນບັດຂອງດາມັສກັສ ແລະຂອງທີ່ຍາດຊິງມາ
ໄດ້ຈາກຊາມາເຣັຽຈະຖືກພຣະຣາຊາອັສຊີເຣັຽຍຶດເອົາໄປຫມົດ”
5 ພຣະຜູ້ເປັນເຈົ້າຊົງກ່າວກັບຂ້າພະເຈົ້າອີກວ່າ,
6 “ເພາະວ່າຊົນຊາດນີ້ໄດ້ປະຕິເສດນໍ້າແຫ່ງຊີໂລອາອາທີ່ງຽບສງັດ ແລະຢ້ານກົວຕໍ່ກະສັດເຣຊີນ ແລະໂອຣົດ
ຂອງເຣມາລີຢາ
7 ເຮົາຄືພຣະຜູ້ເປັນເຈົ້າຈຶ່ງຈະໃຫ້ກະສັດອັສຊີເຣັຽ ພ້ອມກອງທັບທັງຫມົດຂອງພຣະອົງມາໂຈມຕີຢູດາ ກອງທັບ
ນີ້ຈະບຸກຮຸກໄປເຫມືອນນໍ້າເອີຟຣາດໄຫລນອງລົ້ນຕາຝັ່ງ
8 ຄົນຢູດາຈະຖືກກວາດເອົາໄປເຫມືອນຖືກກະແສນໍ້າພັດ ກອງທັບນີ້ຈະຂຍາຍໄປທົ່ວເຂດແດນ ແລະຄອບຄຸມ
ທຸກໆສິ່ງ” ແຕ່ວ່າພຣະເຈົ້າຊົງຢູ່ກັບເຮົາ ປີກຂອງພຣະອົງຊົງປົກຄຸມແຜ່ນດິນນັ້ນ
9 ຊົນຊາດທັງຫລາຍເອີຍ ພວກເຈົ້າຈົ່ງພາກັນຢ້ານ ບັນດາປະເທດໄກທັງຫມົດຈົ່ງຟັງເຖີດ ຈົ່ງຕຽມຕົວສູ້ແຕ່ຈົ່ງ
ຢ້ານ
10 ຈົ່ງວາງແຜນໄວ້ແຕ່ຈະບໍ່ສໍາເຣັດ ຈົ່ງປຶກສາຫາລືກັນ ແຕ່ມັນຈະບໍ່ມີປໂຍດ ເພາະວ່າພຣະຜູ້ເປັນເຈົ້າຊົງຢູ່ກັບ
ເຮົາ

**ພຣະຜູ້ເປັນເຈົ້າຊົງເຕືອນຜູ້ປະກາດພຣະທັມ**

11 ພຣະຜູ້ເປັນເຈົ້າຊົງເຕືອນຂ້າພະເຈົ້າດ້ວຍຣິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງ ວ່າບໍ່ໃຫ້ທໍາຕາມທາງທີ່ຊົນ
ຊາດນີ້ທໍາກັນ ພຣະອົງຊົງບອກວ່າ,
12 “ຢ່າຮ່ວມແຜນການກະບົດນໍາປະຊາຊົນນີ້ ແລະຢ່າຢ້ານສິ່ງທີ່ເຂົາຢ້ານ
13 ຈົ່ງລະນຶກວ່າ ເຮົາພຣະຜູ້ເປັນເຈົ້ແຫ່ງຈັກກະວານຊົງບໍຣິສຸດ ເຮົາຜູ້ດຽວທີ່ເຈົ້າຈະຕ້ອງຢ້ານ
14 ຍ້ອນຄວາມບໍຣິສຸດອັນເຕັມຂນາດຂອງເຮົານັ້ນ ເຮົາຈຶ່ງເປັນເຫມືອນຫີນທີ່ຕໍາຕີນປະຊາຊົນ ແລະເປັນເຫມືອນ
ແຮ້ວທີ່ຫ້າງໃສ່ປະຊາຊົນຢູດາ ໃສ່ອິສຣາເອນ ແລະເຢຣູຊາເລັມ
15 ມີຫລາຍຄົນຈະຕໍາສະດຸດລົ້ມ ພວກເຂົາຈະຖືກບ້ວງແຮ້ວແລະລົ້ມລົງເປັນບາດແຜ”

**ເຕືອນບໍ່ໃຫ້ຖາມເອົາຄວາມນໍາຜີ**

Disciples of Isaiah

16 ພວກສາວົກທັງຫລາຍເອີຍ ຈົ່ງປະພຶດປະຕິບັດພຣະທັມທີ່ພຣະເຈົ້າຊົງປະທານໃຫ້ຂ້າພະເຈົ້ານັ້ນ
17 ພຣະຜູ້ເປັນເຈົ້າຊົງລີ້ບໍ່ໃຫ້ໄພ່ພົນຂອງພຣະອົງເຫັນ ແຕ່ຂ້າພະເຈົ້າກໍເຊື່ອໄວ້ວາງໃຈໃນພຣະອົງ
18 ຂ້າພະເຈົ້າຢູ່ທີ່ນີ້ກັບພວກລູກທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ ພຣະຜູ້ເປັນເຈົ້າແຫ່ງຈັກກະວານຊົງປະທັບຢູ່ບັນ
ລັງເທິງພູຊີໂອນ ຂ້າພະເຈົ້າກັບພວກລູກເປັນເຫມືອນພຣະທັມທີ່ເປັນຫມາຍສໍາຄັນຕໍ່ຊາວອິສຣາເອນ
19 ປະຊາຊົນຈະບອກໃຫ້ພວກທ່ານ ຖາມເອົາຄວາມຈາກພວກຫມໍດູ ແລະຫມໍຜີຊຶ່ງເວົ້າອອດໆແອດໆຢູ່ໃນລໍາຄໍ
ພວກເຂົາຈະບອກວ່າ, “ກ່ອນອື່ນຫມົດ ປະຊາຊົນຄວນຈະຖາມເອົາຄວາມນໍາຜີ ແລະປຶກສານໍາຄົນຕາຍແທນ
ຄົນເປັນ”

20 ພວກທ່ານຈົ່ງຕອບເຂົາວ່າ, “ຈົ່ງຟັງພຣະທັມທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ ຢ່າຟັງຄວາມຜີ ເພາະວ່າສິ່ງທີ່
ເຂົາບອກໃຫ້ເຈົ້າເຮັດນັ້ນມັນບໍ່ດີ”
21 ປະຊາຊົນຈະຊັດເຊພະເນຈອນໄປທົ່ວທັງປະເທດດ້ວຍຄວາມຫມົດຫວັງ ແລະອຶດຢາກ ເມື່ອເຂົາຫິວຢາກເຂົ້າ
ເຂົາຈະຄຽດແຄ້ນ ແລະປ້ອຍດ່າກະສັດກັບພຣະເຈົ້າຂອງຕົນ ເຂົາອາດຈະເງີຍຫນ້າຂຶ້ນຟ້າ
22 ຫລືກົ້ມລົງດິນ ແຕ່ຈະບໍ່ທັນເຫັນຫຍັງ ຈະມີແຕ່ຄວາມທຸກໃຈ ແລະຄວາມມືດ ເຂົາຈະຖືກຂັບໄລ່ເຂົ້າໄປໃນ
ຄວາມມືດອັນຫນ້າຢ້ານນັ້ນ ຈະຫນີໄປໃຫ້ພົ້ນຈາກເວລາຍາກລຳບາກນີ້ບໍ່ໄດ້

## 9 ກະສັດໃນອະນາຄົດ

The Righteous Reign of the Coming King

(ອຊຢ 11:1-9)

1 ແຜ່ນດິນຂອງຕະກູນເຊບູລູນ ແລະເນັຟທາລີເຄີຍເສື່ອມເສັຽສັກສີມາເທື່ອນຶ່ງແລ້ວ ແຕ່ໃນພາຍຄັ້ງຫນ້າແຜ່ນ
ດິນນີ້ຕັ້ງແຕ່ທະເລເມດີເຕຣາເນເບື້ອງຕາເວັນອອກເຖິງຟາກແມ່ນ້ຳຈໍແດນເບື້ອງນັ້ນ ແລະເຖິງຄາລີເລບ່ອນ
ຊາວຕ່າງປະເທດອາສັຍຢູ່ຈະໄດ້ຮັບຄວາມຈະເຣີນຮຸ່ງເຮືອງ
2 ປະຊາຊົນຜູ້ດຳເນີນຢູ່ໃນຄວາມມືດກໍໄດ້ຮັບແສງສະວ່າງຢ່າງຫລວງຫລາຍ ພວກເຂົາຢູ່ໃນແຜ່ນດິນມືດ ແຕ່
ບັດນີ້ແສງສະວ່າງໄດ້ສ່ອງເຖິງເຂົາແລ້ວ
3 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງໃຫ້ເຂົາມີຄວາມມ່ວນຊື່ນຫລາຍ ຊົງໃຫ້ເຂົາໄດ້ຮັບຄວາມສຸກ ພວກເຂົາຍິນ
ດີໃນສິ່ງທີ່ພຣະອົງຊົງກະທຳເຫມືອນຄົນຍິນດີເມື່ອຍາມເກັບກ່ຽວ ຫລືເຫມືອນຄາວທີ່ພວກເຂົາແບ່ງປັນຂອງທີ່
ຍຶດມາໄດ້
4 ເພາະວ່າພຣະອົງຊົງຫັກແອກທີ່ເຮັດໃຫ້ເຂົາຫນັກຫນ່ວງກັບໄມ້ແສ້ທີ່ຟາດບ່າເຂົານັ້ນ ຂ້າແດ່ພຣະຜູ້ເປັນເຈົ້າ
ພຣະອົງຊົງທຳລາຍຊົນຊາດທີ່ກົດຂີ່ຂົ່ມເຫັງໄພ່ພົນຂອງພຣະອົງ ຢ່າງດຽວກັນກັບຊົງທຳລາຍກອງທັບຂອງມາ
ດີອານແຕ່ດົນນານມາແລ້ວ
5 ເກີບທຸກຄູ່ຂອງທະຫານທີ່ຮຸກຮານ ພ້ອມທັງເສື້ອທຸກຕົວທີ່ເປື້ອນດ້ວຍເລືອດຈະຖືກເຜົາໄຟທຳລາຍຖິ້ມຫມົດ
6 ເດັກນ້ອຍຜູ້ນຶ່ງໄດ້ເກີດມາໃຫ້ເຮົາແລ້ວ ຊົງປະທານບຸດຊາຍຜູ້ນຶ່ງໃຫ້ເຮົາ ແລະພຣະອົງຈະຊົງເປັນຜູ້ປົກຄອງ
ຂອງເຮົາ ພຣະນາມຂອງພຣະອົງ ຄື “ຜູ້ປຶກສາທີ່ສລາດສ້ຽມແຫລມ” ພຣະເຈົ້າຜູ້ຊົງຣິດ” ອົງເປັນພຣະບິດາ
ຕລອດໄປ “ອົງສັນຕິຣາດ”
7 ພຣະຣາຊອຳນາດຂອງພຣະອົງຈະເພີ້ມພູນຂຶ້ນເລື້ອຍໆ ຣາຊອານາຈັກຂອງພຣະອົງຈະມີຄວາມສງົບສຸກ
ຕລອດໄປ ພຣະອົງຈະປົກຄອງສືບຕໍ່ກະສັດດາວິດ ຈະຊົງໃຫ້ອຳນາດຢ່າງຖືກຕ້ອງແລະຍຸດຕິທັມ ເລີ້ມແຕ່ບັດ
ນີ້ຈົນເຖິງເທົ່າອາວະສານ ພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ຈະຊົງກະທຳການນີ້ທັງຫມົດດ້ວຍຄວາມຫວງແຫນ

**ພຣະຜູ້ເປັນເຈົ້າຊົງລົງໂທດອິສຣາເອນ**

Judgment on Arrogance and Oppression

8 ພຣະຜູ້ເປັນເຈົ້າໄດ້ຊົງພິພາກສາໂທດຣາຊອານາຈັກອິສຣາເອນ ຄືເຊື້ອສາຍຂອງຢາໂຄບແລ້ວ
9 ຄົນອິສຣາເອນທັງຫມົດຮ່ວມທັງທຸກໆຄົນທີ່ອາສັຍຢູ່ໃນເມືອງຊາມາເຣັຽ ຈະຮູ້ວ່າພຣະອົງໄດ້ຊົງກະທຳການນີ້
ແລ້ວ ຄືພວກເຂົາໄດ້ກ່າວດ້ວຍຄວາມເຍີ້ຍິ່ງຈອງຫອງວ່າ
10 “ຕຶກທີ່ສ້າງດ້ວຍດິນຈີ່ໄດ້ເພພັງລົງແລ້ວ ແຕ່ເຮົາຈະສ້າງໃຫມ່ດ້ວຍຫີນ ກົກເດື່ອຖືກຕັດລົງແລ້ວ ແຕ່ເຮົາຈະເອົາ
ກົກສົນໃສ່ແທນໄວ້”
11 ພຣະຜູ້ເປັນເຈົ້າໄດ້ຊົງປຸກປັ່ນພວກສັດຕຣູອິສຣາເອນໃຫ້ຕໍ່ສູ້ພວກເຂົາ

12 ຄືພວກຊີເຣັຽ (ອາຣາມ) ຢູ່ທາງທິດຕາເວັນອອກ ແລະພວກຟີລິສຕິນຢູ່ທາງທິດຕາເວັນຕົກຈະອ້າປາກກືນກິນອິ
ສຣາເອນ ເຖິງປານນັ້ນພຣະພິໂຣດຂອງພຣະອົງກໍຈະຍັງບໍ່ສິ້ນສຸດ ແລະພຣະຫັດກໍຈະຍັງຢຽດອອກລົງໂທດ
ພວກເຂົາຢູ່
13 ເຖິງແມ່ນວ່າ ພຣະຜູ້ເປັນເຈົ້າແຫ່ງຈັກກະວານໄດ້ລົງໂທດ ອິສຣາເອນແລ້ວກໍຕາມ ພວກເຂົາກໍບໍ່ປ່ຽນໃຈກັບ
ຄືນມາຫາພຣະອົງເລີຍ
14 ພຣະຜູ້ເປັນເຈົ້າຊົງລົງໂທດພວກຜູ້ນຳອິສຣາເອນ ກັບປະຊາຊົນໃຫ້ຫມົດໄປໃນວັນດຽວ ຄືຈະຊົງຕັດຫົວຕັດຕີນ
ພວກເຂົາຖິ້ມ
15 ຫົວນັ້ນແມ່ນອະວຸໂສແລະຄົນມີກຽດ ຕີນແມ່ນຜູ້ປະກາດພຣະທັມທີ່ສອນເທັດ
16 ພວກເຂົາໄດ້ນຳປະຊາຊົນເຫລົ່ານີ້ໄປໃນທາງຜິດ ແລະສັບສົນວຸ້ນວາຍ
17 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຈະບໍ່ຊົງໃຫ້ຄົນຫນຸ່ມຄົນໃດຫນີພົ້ນໄປໄດ້ ທັງຈະບໍ່ຊົງເມດຕາສົງສານແມ່ຫມ້າຍ
ແລະລູກກຳພ້າຄົນໃດເລີຍ ເພາະວ່າທຸກໆຄົນບໍ່ມີພຣະເຈົ້າ ເຂົາທຳແລະເວົ້າທຸກຢ່າງຊົ່ວຮ້າຍ ດ້ວຍເຫດນັ້ນ ພ
ຣະຜູ້ເປັນເຈົ້າຈຶ່ງບໍ່ເຊົາພິໂຣດ ແຕ່ຈະຍັງຢຽດພຣະຫັດອອກມາລົງໂທດເຂົາຢູ່
18 ຄວາມຊົ່ວຮ້າຍຂອງປະຊາຊົນນີ້ໄດ້ລຸກລາມຂຶ້ນເປັນແປວເຫມືອນໄຟໄຫມ້ປ່າ ຍ້ອນວ່າພຣະຜູ້ເປັນເຈົ້າແຫ່ງ
ຈັກກະວານຊົງພິໂຣດ
19 ພຣະອົງຊົງລົງໂທດແຜ່ນດິນ ແລະປະຊາຊົນນັ້ນເຫມືອນໄຟເຜົາຜານ ໂດຍບໍ່ມີໃຜຢາກຊ່ອຍເຫລືອເລີຍ
20 ປະຊາຊົນທົ່ວທັງປະເທດໄດ້ເກັບເລັມເອົາອາຫານມາກິນບ່ອນລະນ້ອຍຕາມທີ່ຫາໄດ້ ແຕ່ພວກເຂົາກໍບໍ່
ອີ່ມພວກເຂົາຈຶ່ງກິນຮອດອ້າຍນ້ອງຂອງຕົນເອງ
21 ປະຊາຊົນມານັສເຊໄດ້ສູ້ຮົບກັບເອຟຣາອີມ ແລະທັງສອງຍັງຮ່ວມກັນຕໍ່ສູ້ຢູດາອີກ ເຖິງປານນັ້ນ ພຣະຜູ້ເປັນ
ເຈົ້າກໍຍັງບໍ່ເຊົາພິໂຣດ ແຕ່ຍັງຢຽດພຣະຫັດມາລົງໂທດເຂົາຢູ່

## 10

Chapter 10

1 ວິບັດແກ່ຄົນເຫລົ່ານັ້ນທີ່ອອກກົດຫມາຍອະທັມ ແລະແກ່ຜູ້ຂຽນທີ່ຂຽນແຕ່ການບີບຄັ້ນເລື້ອຍໄປ
2 ເພື່ອຫັນຄົນຂັດສົນໄປຈາກຄວາມຍຸດຕິທັມ ແລະປຸ້ນສິດຂອງຄົນທຸກຍາກແຫ່ງຊົນຊາດຂອງເຮົາເສັຽ ເພື່ອວ່າ
ຍິງຫມ້າຍຈະເປັນຂອງຍຶດຂອງເຂົາ ແລະເພື່ອເຂົາຈະກະທຳໃຫ້ຄົນກຳພ້າເປັນເຫຍື່ອຂອງເຂົາ
3 ພວກເຈົ້າຈະກະທຳຢ່າງໃດໃນວັນລົງໂທດທັນ ໃນວັນພັຍວິບັດຊຶ່ງມາຈາກທີ່ໄກ ເຈົ້າຈະຫນີໄປເພິ່ງໃຜ ແລະ
ເຈົ້າຈະຝາກ ຊັບສົມບັດຂອງເຈົ້າໄວ້ທີ່ໃດ
4 ບໍ່ມີສິ່ງໃດເຫລືອນອກຈາກຈະໄປຫລັງຄິດຫລັງງໍຢູ່ກັບນັກໂທດ ຫລືລົ້ມລົງໃນຫມູ່ພວກຄົນທີ່ຖືກຂ້າ ເຖິງປານ
ນັ້ນກໍດີ ພຣະພິໂຣດຂອງພຣະອົງກໍຍັງບໍ່ໄດ້ຫັນກັບ ແລະພຣະຫັດຂອງພຣະອົງຍັງຢຽດອອກຢູ່

### ພຣະເຈົ້າຊົງໃຊ້ອັສຊີເຣັຽ

Arrogant Assyria Also Judgment

5 ວິບັດແກ່ອັສຊີເຣັຽ ຜູ້ເປັນໄມ້ຄ້ອນແຫ່ງຄວາມກິ້ວຂອງເຮົາ ແລະເປັນໄມ້ຄ້ອນແຫ່ງຄວາມໂກດຮ້າຍຂອງເຮົາ
6 ເຮົາຈະໃຊ້ເຂົາໄປສູ້ປະຊາຊາດທີ່ປະຕິເສດພຣະເຈົ້າ ເຮົາຈະບັນຊາເຂົາໃຫ້ໄປສູ້ຊົນຊາດທີ່ເຮົາກິ້ວ ໄປເອົາ
ຂອງທີ່ຍຶດແລະເອົາຂອງທີ່ປຸ້ນ ແລະໃຫ້ຢຽບຢ່ຳເຫມືອນຢຽບຂີ້ຝຸ່ນໃນຖນົນ
7 ແຕ່ເຂົາບໍ່ໄດ້ຕັ້ງໃຈຢ່າງນັ້ນ ແລະຈິດໃຈຂອງເຂົາກໍບໍ່ໄດ້ຄິດຢ່າງນັ້ນ ແຕ່ໃນໃຈຂອງເຂົາຄິດຈະທຳລາຍ ແລະ
ຕັດປະຊາຊາດເສັຽບໍ່ແມ່ນຫນ້ອຍ
8 ເພາະເຂົາເວົ້າວ່າ, "ຜູ້ບັງຄັບບັນຊາຂອງເຮົາເປັນພຣະຣາຊາຫມົດບໍ່ແມ່ນຫລື

9 ເມືອງຄານໂນກໍເຫມືອນເມືອງກາຣ໌ເຄມິສບໍ່ແມ່ນຫລື ເມືອງຮາມັທກໍເຫມືອນເມືອງອາຣ໌ປັດບໍ່ແມ່ນຫລື ເມືອງ
ຊາມາເຣັຽກໍເຫມືອນເມືອງດາມັສກັສບໍ່ແມ່ນຫລື
10 ເຫມືອນຢ່າງມືຂອງເຮົາໄປເຖິງບັນດາຣາຊອານາຈັກຂອງຮູບໂຄຣົບ ຊຶ່ງຮູບໂຄຣົບແກະສລັກຂອງເຂົານັ້ນ
ໃຫຍ່ກວ່າຂອງເຢຣູຊາເລັມ ແລະຊາມາເຣັຽ
11 ເຮົາກໍຈະບໍ່ທຳແກ່ເຢຣູຊາເລັມກັບຮູບໂຄຣົບຂອງເຂົາດອກຫລື ດັ່ງທີ່ເຮົາໄດ້ທຳແກ່ຊາມາເຣັຽແລະຮູບໂຄຣົບ
ຂອງເຂົາ”
12 ເມື່ອອົງພຣະຜູ້ເປັນເຈົ້າຊົງສຳເຣັດພຣະຣາຊກິດທັງສິ້ນຂອງພຣະອົງທີ່ພູຊີໂອນແລະທີ່ເຢຣູຊາເລັມແລ້ວ ພຣະ
ອົງຈະຊົງລົງທັນແກ່ຄວາມໂອ້ອວດອັນຈອງຫອງຂອງພຣະຣາຊາແຫ່ງອັສຊີເຣັຽ ແລະຄວາມເຍີ້ຍິ່ງຢ່າງຍະໂສ
ຂອງເຂົາ
13 ເພາະເຂົາວ່າ, “ເຮົາໄດ້ກະທຳການນີ້ດ້ວຍກຳລັງມືຂອງເຮົາ ແລະດ້ວຍສະຕິປັນຍາຂອງເຮົາ ເພາະເຮົາມີ
ຄວາມເຂົ້າໃຈ ເຮົາຈະຮື້ເຂດແດນຂອງຊົນຊາດທັງຫລາຍແລະໄດ້ປຸ້ນຊັບສົມບັດຂອງເຂົາ ເຮົາໄດ້ຂວິດ ຄົນ
ເຫລົ່ານັ້ນທີ່ນັ່ງເທິງພຣະທີ່ນັ່ງລົງມາເຫມືອນງົວເຖິກ
14 ຊົນຊາດຕ່າງໆ ໃນໂລກນີ້ເປັນດັ່ງຮັງນົກ ແລະເຮົາໄດ້ກວາດເອົາຊັບສົມບັດຂອງພວກເຂົາງ່າຍເທົ່າກັບກວາດ
ເອົາໄຂ່. ບໍ່ມີໃຜອາດພືປີກມາພັດເຮົາໃຫ້ຢ້ານກົວໄດ້; ບໍ່ມີໃຜກ້າອ້າປາກຮ້ອງໃສ່ເຮົາໄດ້!
15 ເຫລັກສະກັດຈະຄຸຍຂິ່ມຄົນທີ່ໃຊ້ມັນສະກັດນັ້ນຫລື ຫລືເລື່ອຍຈະທະນົງຕົວເຫນືອຜູ້ທີ່ໃຊ້ມັນເລື່ອຍນັ້ນຫລື
ເຫມືອນກັບວ່າກະບອງຈະຍົກຜູ້ຊຶ່ງຖືມັນຂຶ້ນຕີ ຫລືຢ່າງໄມ້ຄ້ອນບໍ່ໄດ້ຍົກຄົນຂຶ້ນແຕ່ຄົນໄດ້ຍົກໄມ້ຄ້ອນຂຶ້ນ
16 ສະນັ້ນ ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຈອມໂຍທາ ຈະຊົງໃຫ້ໂຣກຜອມແຫ້ງມາໃນຫມູ່ພວກຄົນອ້ວນພີຂອງເຂົາ
ພາຍໃຕ້ກຽດຂອງເຂົາຈະມີການໄຫມ້ໃຫຍ່ໂຕເຫມືອນຢ່າງໄຟໄຫມ້
17 ຄວາມສະວ່າງແຫ່ງອິສຣາເອນຈະເປັນໄຟ ແລະອົງບໍຣິສຸດຂອງທ່ານຈະກາຍເປັນແປວໄຟ ແລະຈະເຜົາແລະ
ກິນເສັຽໃນວັນດຽວ ແມ່ນແຕ່ຕົ້ນຫນາມກັບພຸ່ມຫນາມກໍດີ
18 ພຣະອົງຈະຊົງທຳລາຍສັກສີຂອງປ່າຂອງເຂົາແລະແຫ່ງສວນຫມາກໄມ້ຂອງເຂົາ ທັງວິນຍານຈິດແລະ
ຮ່າງກາຍ ແລະຈະເປັນເຫມືອນເວລາຄົນເຈັບຊູບຊີດລົງໄປ
19 ຕົ້ນໄມ້ແຫ່ງປ່າຂອງເຂົາຈະເຫລືອຫນ້ອຍເຕັມທີ ຈົນເດັກນ້ອຍຈະຊຽນລົງໄດ້

**ຄົນອິສຣາເອນທີ່ເຫລືອຢູ່**

The Repentant Remnant of Israel

20 ໃນວັນນັ້ນ ຄົນອິສຣາເອນທີ່ເຫລືອຢູ່ ແລະຄົນລອດຕາຍແຫ່ງເຊື້ອສາຍຂອງຢາໂຄບ ຈະບໍ່ເພິ່ງຜູ້ທີ່ຕີເຂົາອີກ
ແຕ່ຈະພັກພິງທີ່ພຣະເຈົ້າ ອົງບໍຣິສຸດແຫ່ງອິສຣາເອນໂດຍຄວາມສັດຈິງ
21 ສ່ວນຄົນທີ່ເຫລືອຢູ່ຈະກັບມາຍັງພຣະເຈົ້າຜູ້ຊົງຍິ່ງໃຫຍ່ ຄືຄົນທີ່ເຫລືອຢູ່ຂອງຢາໂຄບ
22 ອິສຣາເອນເອີຍ, ເຖິງແມ່ນວ່າຊົນຊາດຂອງເຈົ້າຈະເປັນດັ່ງດິນຊາຍໃນທະເລ ຄົນທີ່ເຫລືອຢູ່ເທົ່ານັ້ນຈະກັບມາ
ການທຳລາຍນັ້ນກຳນົດໄວ້ແລ້ວ ເຕັມລົ້ນໄປດ້ວຍຄວາມຊອບທັມ
23 ເພາະວ່າອົງພຣະຜູ້ເປັນເຈົ້າ ພຣະເຈົ້າຈອມໂຍທາຈະຊົງກະທຳໃຫ້ສິ້ນສຸດລົງຕາມທີ່ກຳນົດໄວ້ແລ້ວໃນຖ້າມ
ກາງແຜ່ນດິນໂລກທັງສິ້ນ
24 ສັນນັ້ນ ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຈອມໂຍທາ ຊົງກ່າວດັ່ງນີ້ວ່າ, “ຊົນຊາດຂອງເຮົາເອີຍ, ຜູ້ຢູ່ໃນຊີໂອນ ຢ່າ
ຢ້ານຄົນອັສຊີເຣັຽ ເມື່ອເຂົາຕີດ້ວຍໄມ້ຄ້ອນ ແລະຍົກໄມ້ຄ້ອນຂອງເຂົາຂຶ້ນສູ້ເຈົ້າຢ່າງທີ່ໃນເອຢິບ
25 ເພາະອີກບໍ່ດົນຄວາມກິ້ວຂອງເຈົ້າຈະສິ້ນສຸດ ແລະຄວາມໂກດຂອງເຮົາຈະມຸ່ງຕົງທີ່ການທຳລາຍເຂົາ
26 ແລະພຣະເຈົ້າຈອມໂຍທາຈະຊົງໃຊ້ໄມ້ແສ້ມາສູ້ເຂົາ ດັ່ງທີ່ພຣະອົງຊົງໂຈມຕີຄົນມີດີອານໃນສີລາໂອເຣັບ ແລະ
ໄມ້ຄ້ອນຂອງພຣະອົງທີ່ເຄີຍຢູ່ເຫນືອທະເລ ພຣະອົງຈະຍົກຂຶ້ນຢ່າງທີ່ໃນເອຢິບ

27 ແລະໃນວັນນັ້ນພາຣະຂອງເຂົາຈະພາກໄປຈາກບ່າຂອງເຈົ້າ ແລະແອກຂອງເຂົາຈະຖືກທຳລາຍເສັງຈາກຄໍ
ຂອງເຈົ້າ”

**ຄົນອັສຊີເຣັຽເຄື່ອນທັບ**

ເຂົາຂຶ້ນໄປຈາກຊາມາເຣັຽແລ້ວ

28 ເຂົາໄດ້ມາເຖິງອັຍອາທແລ້ວ ເຂົາໄດ້ຂ້າມມິກໂຣນ ເຂົາເກັບສັມພາຣະຂອງເຂົາໄວ້ທີ່ມິກມັສ

29 ເຂົາເຫລົ່ານັ້ນຜ່ານຊ່ອງຫວ້າງເຂົ້າມາແລ້ວ ເກບາເປັນທີ່ເຂົາຄ້າງຄືນ ຣາມາສະທົກສະທ້ານ ກິເບອາຂອງຊາ
ອູນຫນີໄປແລ້ວ

30 ທິດາຂອງກັນລິມເອີຍ ສົ່ງສຽງຮ້ອງເດີ ລາອີຊາເອີຍ ຟັງເດີ ອານາໂທດເອີຍ ຫນ້າສົງສານແທ້

31 ມັດເມນາກຳລັງຫນີຢູ່ ຄົນເກບິມຫນີໃຫ້ພົ້ນພັຍ

32 ໃນວັນນີ້ ເຂົາຈະຢຸດຢູ່ທີ່ເມືອງໂນບ ເຂົາຈະສັ່ນກຳປັ້ນຂອງເຂົາ ເຂົ້າໃສ່ພູແຫ່ງທິດາຊີໂອນ ເນີນພູຂອງເຢຣູຊາ
ເລັມ

33 ເບິ່ງແມ, ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຈອມໂຍທາ ຈະຊົງຕັດກິ່ງໄມ້ດ້ວຍກຳລັງອັນຫນ້າຢ້ານກົວ ຕົ້ນທີ່ສູງຍິ່ງ
ຈະຖືກໂຄ່ນລົງມາ ແລະຕົ້ນທີ່ສູງຈະຕ້ອງຖືກທຳລາຍລົງ

34 ພຣະອົງຈະຊົງໃຊ້ຂວານຟັນປ່າທຶບ ແລະເລບານອນຊຶ່ງມີຕົ້ນໄມ້ສູງທີ່ງາມທີ່ສຸດຈະລົ້ມລົງ

## 11 ຣາຊອານາຈັກສັນຕິສຸກ

The Peaceful Kingdom

(ອຊຢ 9:1-7)

1 ຣາຊວົງດາວິດເປັນເຫມືອນກົກໄມ້ທີ່ບັກລົງແລ້ວ ແຕ່ຕໍໄມ້ນັ້ນກໍຈະຍັງມີຮຸ່ນເກີດຂຶ້ນມາອີກ ດັ່ງນັ້ນ ຈະມີກະ
ສັດອົງໃຫມ່ ເກີດຂຶ້ນຈາກເຊື້ອສາຍດາວິດ

2 ພຣະວິນຍານບໍຣິສຸດຈະສະຖິດຢູ່ນຳພຣະອົງ ຣິດທານຸພາບຂອງພຣະຜູ້ເປັນເຈົ້າຈະປະທານປັນຍາໃຫ້ພຣະອົງ
ຄືຄວາມຮູ້ ແລະຄວາມຊຳນິຊຳນານໃນການປົກຄອງ ພຣະອົງຈະຮູ້ຈັກນ້ຳພຣະທັຍພຣະຜູ້ເປັນເຈົ້າ ແລະຢຳ
ເກງພຣະອົງ

3 ທັງມີຄວາມສຸກໃນຣາຊການນັ້ນ ພຣະອົງຈະບໍ່ຕັດສິນຕາມທີ່ເຫັນ ຫລືໄດ້ຍິນ

4 ຈະຕັດສິນໃຫ້ຄົນຍາກຈົນດ້ວຍຄວາມຍຸດຕິທັມ ແລະປ້ອງກັນສິດຂອງຜູ້ຕ່ຳຕ້ອຍ ແຜ່ນດິນຈະຖືກລົງໂທດຕາມ
ຄຳສັ່ງຂອງພຣະອົງ ແລະພວກຄົນຊົ່ວຈະຕາຍດ້ວຍຄຳຕັດສິນຂອງພຣະອົງ

5 ພຣະອົງຈະປົກຄອງພົລເມືອງດ້ວຍຄວາມຍຸດຕິທັມ ແລະຊື່ສັດ

6 ຫມາໄນກັບແກະຈະຢູ່ນຳກັນດ້ວຍຄວາມສງົບສຸກ ເສືອດາວກໍຈະນອນນຳແບ້ ລູກງົວກັບລູກສິງຈະຫາກິນຢູ່ນຳ
ກັນ ແລະເດັກນ້ອຍຈະເປັນຜູ້ລ້ຽງມັນ

7 ງົວແມ່ກັບຫມີຈະກິນນຳກັນ ລູກຂອງພວກມັນກໍຈະນອນຢູ່ນຳກັນ ສິງຈະກິນເຟືອງເຫມືອນງົວ

8 ເຖິງແມ່ນເດັກອ່ອນຈະຫລິ້ນຢູ່ໃກ້ໆງູເຫົ່າ ກໍຈະບໍ່ເປັນອັນຕະລາຍ

9 ຈະບໍ່ມີອັນຕະລາຍຫລືສິ່ງຮ້າຍໃດໆ ຢູ່ເທິງພູສັກສິດຂອງເຮົາ ແຜ່ນດິນຈະເຕັມໄປດ້ວຍຄົນທີ່ຮູ້ຈັກພຣະຜູ້ເປັນ
ເຈົ້າເຫມືອນທະເລທີ່ເຕັມດ້ວຍນ້ຳ

Return of the Remnant of Israel and Judah

10 ເມື່ອເຖິງວັນນັ້ນ ກະສັດອົງໃຫມ່ຈາກຣາຊວົງດາວິດຈະເປັນສັນຍາລັກຂອງຊົນຊາດທັງຫລາຍ ພວກເຂົາຈະໄປ
ຮ່ວມກັນຢູ່ໃນຣາຊທານີຂອງພຣະອົງ ເພື່ອເປັນກຽດຕິຍົດແກ່ພຣະອົງ

**ຄົນທີ່ເຫລືອຢູ່ກັບຢ່າງມີຊັຍ**

11 ໃນວັນນັ້ນ ອົງພຣະຜູ້ເປັນເຈົ້າຈະຊົງຍື່ນພຣະຫັດຂອງພຣະອົງອອກໄປເປັນຄັ້ງທີສອງ ເພື່ອຈະໄດ້ຊ່ວຍຊົນ
ຊາດຂອງພຣະອົງທີ່ເຫລືອຢູ່ຄືນມາ ເປັນຄົນເຫລືອຈາກອັສຊີເຣັຽ ຈາກເອຢິບຈາກປັທໂຣສ ຈາກເອທິໂອເປັຽ
ຈາກເອລາມ ຈາກຊີນາຣ໌ ຈາກຮາມັທ ແລະແຜ່ນດິນຊາຍທະເລ
12 ພຣະອົງຈະຊົງຍົກເຄື່ອງຫມາຍນັ້ນຂຶ້ນໃຫ້ແກ່ບັນດາປະຊາຊາດ ແລະຈະຊຸມນຸມອິສຣາເອນທີ່ພັດພາກ ແລະ
ຮວບຮວມຢູດາທີ່ກະຈັດກະຈາຍຈາກສີ່ມຸມແຫ່ງແຜ່ນດິນໂລກ
13 ຄວາມອິດສາຂອງເອຟຣາອິມຈະພາກໄປ ແລະບັນດາຜູ້ທີ່ຮົບກວນຢູດາຈະຖືກຕັດອອກໄປ ເອຟຣາອິມຈະບໍ່
ອິດສາຢູດາ  ແລະຢູດາຈະບໍ່ຮົບກວນເອຟຣາອິມ
14 ແຕ່ເຂົາທັງຫລາຍຈະໂຈມຕີຊາວຟີລິສຕິນທາງຕາເວັນຕົກ ແລະເຂົາຈະຮ່ວມກັນປຸ້ນປະຊາຊົນທາງທິດຕາເວັນ
ອອກ ເຂົາຈະຍື່ນມືອອກຕໍ່ສູ້ເອໂດມ ແລະໂມອາບ ແລະຄົນອັມໂມນຈະເຊື່ອຟັງເຂົາທັງຫລາຍ
15 ພຣະຜູ້ເປັນເຈົ້າຈະຊົງທຳລາຍລີ້ນຂອງທະເລແຫ່ງເອຢິບເສັຽ ແລະຈະຊົງໂບກພຣະຫັດເຫນືອແມ່ນ້ຳນັ້ນ ດ້ວຍ
ລົມລວກຂອງພຣະອົງ ແລະຈະໂຈມຕີມັນໃຫ້ເປັນຮ່ອງນ້ຳເຈັດສາຍ ແລະຄົນໃສ່ເກີບຈະເດີນຂ້າມໄປໄດ້
16 ແລະຈະມີຖນົນຫລວງຈາກອັສຊີເຣັຽ ສຳລັບຄົນທີ່ເຫລືອຢູ່ຈາກຊົນຊາດຂອງພຣະອົງ ດັ່ງທີ່ມີຢູ່ສຳລັບອິສຣາ
ເອນ ຄັ້ງເມື່ອເຂົາຂຶ້ນມາຈາກແຜ່ນດິນເອຢິບ

## 12 ບົດເພງໂມທະນາ

Thanksgiving and Praise

1 ໃນວັນນັ້ນ ທ່ານຈະກ່າວວ່າ, "ຂ້າແຕ່ພຣະເຈົ້າ ຂ້າພຣະອົງຈະໂມທະນາພຣະຄຸນພຣະອົງ ເພາະແມ້ພຣະອົງ
ຊົງພຣະພິໂຣດຕໍ່ຂ້າພຣະອົງ ຄວາມກິ້ວຂອງພຣະອົງກໍຫັນກັບໄປ ແລະພຣະອົງຊົງເລົ້າໂລມຂ້າພຣະອົງ
2 ເບິ່ງແມ, ພຣະເຈົ້າເປັນຄວາມລອດຂອງຂ້າພະເຈົ້າ ຂ້າພະເຈົ້າຈະວາງໃຈແລະບໍ່ຢ້ານ ເພາະພຣະເຈົ້າຊົງເປັນ
ກຳລັງແລະບົດເພງຂອງຂ້າພະເຈົ້າ ແລະພຣະອົງຊົງເປັນຄວາມລອດຂອງຂ້າພະເຈົ້າແລ້ວ"
3 ເຈົ້າຈະຕັກນ້ຳດ້ວຍຄວາມຊື່ນບານຈາກບໍ່ແຫ່ງຄວາມລອດພົ້ນ
4 ແລະໃນວັນນັ້ນເຈົ້າຈະກ່າວວ່າ, "ຈົ່ງໂມທະນາພຣະຄຸນພຣະຜູ້ເປັນເຈົ້າ ຈົ່ງຮ້ອງທູນອອກພຣະນາມຂອງພຣະ
ອົງ ຈົ່ງປະກາດບັນດາພຣະຣາຊກິດຂອງພຣະອົງຖ້າມກາງຊົນຊາດທັງຫລາຍ ຈົ່ງປ່າວຮ້ອງວ່າພຣະນາມຂອງ
ພຣະອົງເປັນທີ່ເຊີດຊູ
5 "ຈົ່ງຮ້ອງເພງສັຣເສີນພຣະຜູ້ເປັນເຈົ້າ ເພາະພຣະອົງຊົງກະທຳກິດອັນດີເລີດ ໃຫ້ເຣື່ອງນີ້ຮູ້ກັນທົ່ວໄປໃນແຜ່ນ
ດິນໂລກ
6 ຊາວຊີໂອນເອີຍ, ຈົ່ງໂຮ່ຮ້ອງ ແລະຮ້ອງດ້ວຍຄວາມຊື່ນບານ ເພາະອົງບໍຣິສຸດແຫ່ງອິສຣາເອນນັ້ນກໍໃຫຍ່ຍິ່ງຢູ່
ໃນຫມູ່ພວກເຈົ້າ

## 13 ພຣະເຈົ້າລົງໂທດກຸງບາບີໂລນ

Proclamation against Babylon

1 ຕໍ່ໄປນີ້ແມ່ນຖ້ອຍຄຳກ່ຽວກັບບາບີໂລນ ຕາມຊຶ່ງເອຊາຢາບຸດຊາຍຂອງອາໂມສໄດ້ເຫັນ
2 ຈົ່ງຊູທຸງສູ້ຮົບຂຶ້ນເທິງພູຫົວໂລ້ນ ຈົ່ງຮ້ອງເອີ້ນເຂົາທັງຫລາຍ ຈົ່ງໂບກມືໃຫ້ເຂົາເຂົ້າໄປໃນປະຕູເມືອງຂອງເຈົ້າ
ນາຍ
3 ຕົວເຮົາເອງໄດ້ບັນຊາແກ່ຜູ້ທີ່ເລືອກສັນຂອງເຮົາໄດ້ເກນຊາຍສະກັນຂອງເຮົາ ໃຫ້ຈັດການຕາມຄວາມໂກດ
ຂອງເຮົາ ຄືຜູ້ທີ່ໂດດເຕັ້ນຢ່າງພູມໃຈຂອງເຮົາ

4 ຟັງເດີ ສຽງອຶງອິນເທິງພູ ດັ່ງສຽງມວນຊົນມະຫຶມມາ ຟັງເດີ ສຽງອຶງຄະນຶງຂອງຣາຊອານາຈັກທັງຫລາຍ ຂອງ
ບັນດາປະຊາຊາດທີ່ຮວມເຂົ້າດ້ວຍກັນ ພຣະເຈົ້າຈອມໂຍທາກຳລັງຣະດົມພົນເພື່ອສົງຄາມ
5 ເຂົາທັງຫລາຍມາຈາກແຜ່ນດິນອັນໄກຈາກສຸດປາຍຟ້າສວັນ ພຣະຜູ້ເປັນເຈົ້າແລະອາວຸດແຫ່ງ
ພຣະພິໂຣດຂອງພຣະອົງ ເພື່ອຈະທຳລາຍແຜ່ນດິນໂລກທັງສິ້ນ
6 ຮ້ອງຄວນຄາງດ້ວຍຄວາມເຈັບປວດສາເຖີດ ເພາະວັນແຫ່ງພຣະຜູ້ເປັນເຈົ້າມາໃກ້ແລ້ວ ວັນນັ້ນຈະມາເປັນ
ການທຳລາຍຈາກອົງຜູ້ຊົງຣິດອຳນາດຍິ່ງໃຫຍ່
7 ເພາະສັນນັ້ນທຸກໆວັນກໍຈະອ່ອນເປັ້ຍ ແລະຈິດໃຈຂອງທຸກຄົນກໍຈະລະລາຍໄປ
8 ແລະເຂົາທັງຫລາຍຈະຕົກໃຈຢ້ານກົວຄວາມເຈັບແລະຄວາມປວດຈະເກາະເຂົາ ເຂົາຈະທຸຣົນທຸຣາຍ ດັ່ງຍິງ
ກຳລັງເກີດລູກ ເຂົາຈະເບິ່ງຕາກັນຢ່າງຕົກຕະລຶງ ຫນ້າຂອງເຂົາແດງເປັນແສງໄຟ
9 ເບິ່ງແມ, ວັນຂອງພຣະຜູ້ເປັນເຈົ້າຈະມາ ດຸຮ້າຍ ດ້ວຍຄວາມພິໂຣດແລະຄວາມໂກດອັນກ້ຽວກາດທີ່ຈະກະທຳ
ໃຫ້ແຜ່ນດິນໂລກເປັນທີ່ຮ້າງເປົ່າ ແລະເພື່ອຈະທຳລາຍຄົນບາບຂອງໂລກເສັຽຈາກໂລກ
10 ເພາະດວງດາວແຫ່ງຟ້າສວັນ ແລະຫມູ່ດາວໃນນັ້ນຈະບໍ່ສ່ອງແສງຂອງມັນ ດວງອາທິດກໍຈະມືດເມື່ອເວລາຂຶ້ນ
ແລະດວງຈັນຈະບໍ່ສ່ອງແສງຂອງມັນ
11 ເຮົາຈະລົງໂທດໂລກເພາະຄວາມຊົ່ວຮ້າຍ ແລະຄົນອະທັມເພາະຄວາມບາບຜິດຂອງເຂົາ ເຮົາຈະກະທຳໃຫ້
ຄວາມເຍີ່ຍິ່ງຂອງຄົນຈອງຫອງສິ້ນສຸດ ແລະປາບຄວາມຍະໂສຂອງຄົນໂຫດຮ້າຍ
12 ເຮົາຈະກະທຳໃຫ້ຫາຄົນຍາກ ເສັຽຍິ່ງກວ່າຫາທອງຄຳ ແລະຫາມະນຸດໄດ້ຍາກຍິ່ງກວ່າຫາທອງຄຳແຫ່ງໂອຟີຣ໌
13 ເພາະສັນນັ້ນ ເຮົາຈະກະທຳໃຫ້ຟ້າສວັນສັ່ນສະເທືອນ ແລະແຜ່ນດິນໂລກຈະສະທ້ານພັດຈາກທີ່ຂອງມັນ ໂດຍ
ພຣະພິໂຣດຂອງພຣະເຈົ້າຈອມໂຍທາ ໃນວັນແຫ່ງຄວາມໂກດອັນກ້ຽວກາດຂອງພຣະອົງ
14 ຄົນທຸກຄົນຈະຫັນເຂົ້າສູ່ຊົນຊາດຂອງຕົນເອງ ແລະຄົນທຸກຄົນຈະຫນີໄປຍັງແຜ່ນດິນຂອງຕົນເອງ ດັ່ງກວາງທີ່ຖື
ກຕາມລ້າ ຫລືເຫມືອນແກະທີ່ບໍ່ມີຜູ້ຮວມຝູງ
15 ຖ້າເຂົາພົບຜູ້ໃດເຂົ້າກໍຈະຖືກແທງຊອດ ແລະຖ້າໃຜຖືກຕັບກໍຈະລົ້ມລົງດ້ວຍດາບ
16 ລູກຂອງເຂົາຈະຖືກຟາດລົງຢ່າງຍັບເຍີນຕໍ່ຫນ້າຕໍ່ຕາ ເຮືອນຂອງເຂົາຈະຖືກປຸ້ນ ແລະເມັຽຂອງເຂົາຈະຖືກຂືນ
ໃຈ
17 ເບິ່ງແມ, ເຮົາກຳລັງຣົບເຮົ້າຊາວເມເດສມາສູ້ເຂົາ ຜູ້ຊຶ່ງບໍ່ເອົາໃຈໃສ່ໃນເຣື່ອງເງິນ ແລະບໍ່ສົນໃຈໃນເຣື່ອງທອງ
ຄຳ
18 ພວກເຂົາຈະໃຊ້ຫນ້າແລະລູກທະນູຂ້າຊາຍຫນຸ່ມ ແລະຈະບໍ່ເມດຕາພວກເດັກນ້ອຍອ່ອນແລະອີດູພວກ
ເດັກນ້ອຍ
19 ແລະບາບີໂລນ ຊຶ່ງໂອ່ອ່າໃນບັນດາຣາຊອານາຈັກ ເມືອງທີ່ສະງ່າແລະເປັນທີ່ພູມໃຈຂອງຊາວເຄນເດອານ ຈະ
ເປັນດັ່ງເມືອງໂຊໂດມ ແລະເມືອງໂກໂມຣາ ເມື່ອພຣະຜູ້ເປັນເຈົ້າຊົງຄວ່ຳມັນເສັຽນັ້ນ
20 ຈະບໍ່ມີໃຜເຂົ້າຢູ່ໃນບາບີໂລນ ຫລືອາສັຍຢູ່ຕລອດທຸກຊົ່ວຊາດເຊື້ອສາຍ ຄົນອາຣັບຈະບໍ່ກາງເຕັນຂອງເຂົາທີ່
ນັ້ນ ບໍ່ມີຜູ້ລ້ຽງແກະທີ່ຈະໃຫ້ແກະຂອງເຂົານອນລົງທີ່ນັ້ນ
21 ແຕ່ສັດປ່າຈະນອນລົງທີ່ນັ້ນ ແລະບ້ານເຮືອນໃນນັ້ນຈະເຕັມໄປດ້ວຍໂຕເຈັຽ ນົກກະຈອກເທດຈະອາສັຍຢູ່ທີ່ນັ້ນ
ແບ້ປ່າຈະເຕັ້ນຣຳຢູ່ທີ່ນັ້ນ
22 ຫມາໄນຈະເຫົ່າຫອນຢູ່ໃນປ້ອມປາສາດຂອງເມືອງນັ້ນ ແລະຫມາປ່າຈະຢູ່ໃນວັງແສນສຸກ ເວລາຂອງເມືອງນັ້ນ
ກໍໃກ້ເຂົ້າມາແລ້ວ ແລະວັນເວລາຂອງມັນຈະບໍ່ຍືດໃຫ້ຍາວໄປ

## 14 ການເຍີ້ຍຫຍັນພຣະຣາຊາບາບີໂລນ

Restoration of Judah

1 ພຣະຜູ້ເປັນເຈົ້າຈະຊົງມີເມດຕາຕໍ່ຢາໂຄບ ແລະຈະຊົງເລືອກອິສຣາເອນອີກ ແລະຈະຕັ້ງເຂົາທັງຫລາຍໄວ້ໃນແຜ່ນດິນຂອງເຂົາ ຄົນຕ່າງດ້າວຈະສົມທົບກັບເຂົາແລະຕິດພັນຢູ່ກັບເຊື້ອສາຍຂອງຢາໂຄບ

2 ແລະຊົນຊາດທັງຫລາຍຈະຮັບເຂົາ ແລະນຳເຂົາທັງຫລາຍມາຍັງທີ່ຂອງເຂົາ ແລະເຊື້ອສາຍຂອງອິສຣາເອນຈະມີກັມມະສິດໃນເຂົາ ເປັນທາດຊາຍຍິງໃນແຜ່ນດິນຂອງພຣະຜູ້ເປັນເຈົ້າ ຜູ້ທີ່ຈັບເຂົາເປັນຊະເລີຍຈະຖືກເຂົາຈັບເປັນຊະເລີຍ ແລະຈະປົກຄອງຜູ້ທີ່ເຄີຍບີບບັງຄັບເຂົາ

3 ເມື່ອພຣະຜູ້ເປັນເຈົ້າປະທານໃຫ້ເຈົ້າໄດ້ຢຸດພັກຈາກຄວາມເຈັບປວດຂອງເຈົ້າ ແລະຈາກຄວາມວຸ້ນວາຍແລະຈາກງານຫນັກຊຶ່ງເຈົ້າຖືກບັງຄັບໃຫ້ກະທຳ

4 ເມື່ອພຣະອົງກະທຳການນັ້ນ ເຂົາຈະເວົ້າເຍະເຍີ້ຍກະສັດແຫ່ງບາບີໂລນວ່າ, "ກະສັດຜູ້ຮ້າຍກາດໄດ້ລົ້ມລົງແລ້ວ! ເພິ່ນຈະບໍ່ກົດຂີ່ຜູ້ໃດຜູ້ນຶ່ງອີກຕໍ່ໄປ.

5 ພຣະຜູ້ເປັນເຈົ້າຊົງຫັກໄມ້ພອງຂອງຄົນອະທັມ ຄະທາຂອງຜູ້ປົກຄອງ

6 ຊຶ່ງຕີຊົນຊາດທັງຫລາຍດ້ວຍຄວາມພິໂຣດ ດ້ວຍການຕີຢ່າງບໍ່ຢຸດຢັ້ງ ຊຶ່ງໄດ້ປົກຄອງປະຊາຊາດດ້ວຍຄວາມໂກດ ດ້ວຍການຂົ່ມເຫັງຢ່າງທີ່ບໍ່ອ່ອນຂໍ້

7 ໂລກທັງສິ້ນກໍພັກແລະສງົບຢູ່ ເຂົາທັງຫລາຍຮ້ອງເພງອອກມາ

8 ຕົ້ນໄມ້ແປກຊົມຊື່ນຍິນດີເພາະເຈົ້າ ຕົ້ນສົນແຫ່ງເລບານອນດ້ວຍ ແລະກ່າວວ່າ, “ຕັ້ງແຕ່ເຈົ້າຕົກຕ່ຳ ກໍບໍ່ມີຜູ້ໂຄ່ນຂຶ້ນມາຕໍ່ສູ້ເຮົາແລ້ວ”

9 ແດນຄົນຕາຍເບື້ອງລຸ່ມກໍຕື່ນເຕັ້ນ ເພື່ອຕ້ອນຮັບເຈົ້າເມື່ອເຈົ້າມາ ມັນປຸກໃຫ້ຊາວແດນມາຕ້ອນຮັບເຈົ້າ ຄືຜູ້ຊຶ່ງເຄີຍເປັນຜູ້ນຳຂອງໂລກ ມັນທຳໃຫ້ບັນດາຜູ້ທີ່ເຄີຍເປັນພຣະຣາຊາແຫ່ງປະຊາຊາດທັງຫລາຍລຸກຂຶ້ນມາຈາກພຣະທີ່ນັ່ງຂອງເຂົາ

10 ທຸກຄົນຈະເວົ້າ ແລະກ່າວແກ່ເຈົ້າວ່າ “ເຈົ້າກໍອ່ອນເພັຽເໝືອນກັບເຮົາ ເຈົ້າກາຍເປັນເໝືອນພວກເຮົາ”

11 ຄວາມໂອ່ອ່າຂອງເຈົ້າຖືກນຳລົງມາເຖິງແດນຄົນຕາຍ ແລະສຽງພິນຂອງເຈົ້າ ຕົວຫນອນຈະເປັນທີ່ນອນຢູ່ໃຕ້ຕົວເຈົ້າ ແລະຕົວຫນອນຈະເປັນຜ້າຫົ່ມຂອງເຈົ້າ

12 “ໂອ ດາວປະຈຳກາງເວັນເອີຍ, ພໍ່ໂອຣົດແຫ່ງພຣະອະຣຸນ ເຈົ້າລົ່ນລົງມາຈາກຟ້າສວັນແລ້ວ ເຈົ້າຖືກຕັດລົງມາຍັງພື້ນດິນຢ່າງໃດຫນໍ ເຈົ້າຜູ້ກະທຳໃຫ້ບັນດາປະຊາຊາດຕົກຕ່ຳ

13 ເຈົ້າຮຳເພິງໃນໃຈຂອງເຈົ້າວ່າ “ຂ້າຈະຂຶ້ນໄປຍັງຟ້າສວັນ ເຫນືອດວງດາວທັງຫລາຍຂອງພຣະເຈົ້າ ຂ້າຈະຕັ້ງພຣະທີ່ນັ່ງຂອງຂ້າໃນທີ່ສູງນັ້ນ ຂ້າຈະນັ່ງເທິງພູເຂົາຊຸມນຸມສະຖານໃນທາງທິດເໜືອ

14 ຂ້າຈະຂຶ້ນໄປເຫນືອຄວາມສູງຂອງເມກ ຂ້າຈະກະທຳຕົວຂອງຂ້າເຫມືອນອົງຜູ້ສູງສຸດ”

15 ແຕ່ເຈົ້າຖືກນຳລົງມາສູ່ແດນຄົນຕາຍ ຍັງທີ່ເລິກຂອງປາກແດນ

16 ບັນດາຜູ້ທີ່ເຫັນເຈົ້າຈະຈ້ອງເບິ່ງເຈົ້າ ແລະຈະພິຈາຣະນາເຈົ້າວ່າ “ຊາຍຄົນນີ້ຫລືທີ່ທຳໃຫ້ໂລກສັ່ນສະເທືອນ ຜູ້ສັ່ນຄອນຣາຊອານາຈັກທັງຫລາຍ

17 ຜູ້ທີ່ໄດ້ກະທຳໃຫ້ໂລກເປັນເຫມືອນຖິ່ນກັນດານ ແລະຄວ່ຳຫົວເມືອງຂອງໂລກເສັຽ ຜູ້ບໍ່ຍອມໃຫ້ຊະເລີຍກັບໄປບ້ານຂອງເຂົາ”

18 ພຣະຣາຊາທັງສິ້ນຂອງບັນດາປະຊາຊາດນອນຢູ່ຢ່າງມີກຽດ ຕ່າງກໍຢູ່ໃນອຸບໂມງຂອງຕົນ

19 ແຕ່ເຈົ້າຖືກແກວ່ງອອກໄປ ຫ່າງຈາກຫລຸມສົບຂອງເຈົ້າ ເປັນສົບທີ່ຫນ້າລັງກຽດ ສວມເສື້ອຂອງຜູ້ທີ່ຖືກຂ້າ ຄືທີ່ຖືກແທງດ້ວຍດາບ ຊຶ່ງລົງໄປຍັງສີລາຂອງຫລຸມສົບ ເປັນສົບທີ່ຖືກຢຽບຍ່ຳ

20 ເຈົ້າຈະບໍ່ໄດ້ຮັບການຝັງສົບຮ່ວມກັບເຂົາ ເພາະເຈົ້າໄດ້ທຳລາຍແຜ່ນດິນຂອງເຈົ້າ ເຈົ້າໄດ້ສັງຫານປະຊາຊົນ
ຂອງເຈົ້າ "ຂໍຢ່າໃຫ້ຜູ້ໃດເອີ່ຍເຖິງຊື່ຂອງເຊື້ອວົງແຫ່ງຜູ້ກະທຳຄວາມຊົ່ວອີກເລີຍ
21 ຈົ່ງຕຽມສັງຫານລູກໆຂອງເຂົາເຖີດ ເພາະກັມຊົ່ວແຫ່ງບິດາຂອງເຂົາ ຢ້ານວ່າເຂົາທັງຫລາຍຈະລຸກຂຶ້ນເປັນເຈົ້າ
ຂອງໂລກ ແລະກະທຳໃຫ້ພື້ນໂລກເຕັມໄປດ້ວຍຫົວເມືອງ"
22 ພຣະຜູ້ເປັນເຈົ້າຈອມໂຍທາກ່າວວ່າ, "ເຮົາຈະລຸກຂຶ້ນສູ້ກັບເຂົາ ແລະຈະຕັດຊື່ກັບຄົນທີ່ເຫລືອຢູ່ເສັຽຈາກບາບີ
ໂລນ ແລະຕັດລູກຫລານແລະເຊື້ອສາຍເສັຽ" ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
23 "ແລະເຮົາຈະກະທຳໃຫ້ເປັນກຳມະສິດຂອງນົກເຄົ້າບ້ານ ແລະເປັນສະນ້ຳ ແລະຈະກວາດດ້ວຍໄມ້ກວາດແຫ່ງ
ການທຳລາຍ" ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ແຫລະ

**ອັສຊີເຣັຽຕ້ອງຖືກທຳລາຍ**

24 ພຣະຜູ້ເປັນເຈົ້າຈອມໂຍທາໄດ້ຊົງປະຕິຍານວ່າ, "ເຮົາກະແຜນງານໄວ້ຢ່າງໃດ ກໍຈະເປັນໄປຢ່າງນັ້ນ ແລະເຮົາ
ໄດ້ມຸ່ງຫມາຍໄວ້ຢ່າງໃດກໍຈະເກີດຂຶ້ນຢ່າງນັ້ນ
25 ຄືວ່າເຮົາຈະຕີຄົນອັສຊີເຣັຽໃນແຜ່ນດິນຂອງເຮົາໃຫ້ພິນາດໄປ ແລະເທິງພູຂອງເຮົາຢຽບຢ່ຳເຂົາໄວ້ ແລະແອກ
ຂອງເຂົານັ້ນຈະພາກໄປຈາກເຂົາທັງຫລາຍ ແລະພາຣະຂອງເຂົານັ້ນຈາກບ່າຂອງເຂົາທັງຫລາຍ"
26 ນີ້ເປັນຄວາມມຸ່ງຫມາຍທີ່ມຸ່ງຫມາຍໄວ້ກ່ຽວກັບແຜ່ນດິນໂລກທັງສິ້ນ ແລະນີ້ເປັນພຣະຫັດຊຶ່ງຢຽດອອກເຫນືອບັ
ນດາປະຊາຊາດທັງສິ້ນ
27 ເພາະພຣະຜູ້ເປັນເຈົ້າຈອມໂຍທາຊົງມຸ່ງໄວ້ແລ້ວ ຜູ້ໃດຫນໍຈະລົບລ້າງເສັຽໄດ້ ພຣະຫັດຂອງພຣະຜູ້ເປັນເຈົ້າຊົງ
ຢຽດອອກແລະຜູ້ໃດຈະຫັນໃຫ້ກັບໄດ້

**ຖ້ອຍຄຳກ່ຽວກັບຟີລິສຕິນ**

28 ໃນປີທີ່ກະສັດອາຮັສສິ້ນພຣະຊົນ ຖ້ອຍຄຳນີ້ມີມາວ່າ,
29 "ປະເທດຟີລິສຕິນເອີຍ, ເຈົ້າທຸກຄົນຢ່າຊົມຊື່ນຍິນດີໄປເລີຍ ວ່າໄມ້ຄ້ອນຊຶ່ງຕີເຈົ້ານັ້ນຫັກເສັຽແລ້ວ ເພາະງູ
ໂຕນຶ່ງຕາຍໄປ ງູໂຕໂຫດຮ້າຍທີ່ສຸດກໍຂຶ້ນມາແທນ ໄຂ່ງູຟັກອອກເປັນໂຕມັງກອນ
30 ແລະລູກຫົວປີຂອງຄົນຍາກຈົນຈະມີອາຫານກິນ ແລະຄົນຂັດສົນຈະນອນລົງຢ່າງປອດພັຍ ແຕ່ເຮົາຈະຂ້າຮາກ
ເຫງົ້າຂອງເຈົ້າດ້ວຍການອຶດອາຫານ ແລະຄົນທີ່ເຫລືອຢູ່ຂອງເຈົ້າຈະຖືກສັງຫານເສັຽ
31 ສຽງຄວນຄາງກັບສຽງຮ້ອງຂໍໃຫ້ຊ່ອຍເຫລືອຈະມີຢູ່ໃນທຸກເມືອງຂອງຟີລິສຕີ! ພວກເຈົ້າທັງໝົດຢ້ານຫລາຍບໍ!
ຂີ້ຝຸ່ນດຸດດັ່ງເມກກຳລັງມາຈາກທາງທິດເຫນືອ ແມ່ນກອງທັບນຶ່ງທີ່ມີແຕ່ຜູ້ກ້າຫານທັງນັ້ນແລະບໍ່ມີຊັ້ນມີນາຍ
ກຳລັງເດີນທາງມາ.
32 ຈະຕອບທູດຂອງປະຊາຊາດນັ້ນວ່າຢ່າງໃດ ກໍວ່າ "ພຣະຜູ້ເປັນເຈົ້າໄດ້ຊົງສະຖາປະນາຊີໂອນ ແລະຜູ້ຖືກຂົ່ມ
ໃຈໃນຊົນຊາດຂອງພຣະອົງໄດ້ພົບບ່ອນລີ້ພັຍໃນທີ່ນັ້ນ"

## 15 ຖ້ອຍຄຳກ່ຽວກັບໂມອາບ

An Oracle concerning Moab

1 ຖ້ອຍຄຳກ່ຽວກັບໂມອາບ ເພາະນະຄອນອາຣ໌ຖືກທຳລາຍຮ້າງໃນຄືນດຽວ ໂມອາບໄດ້ເຖິງຄວາມພິນາດ ເພາະ
ນະຄອນ ກີຣ໌ຖືກທຳລາຍຮ້າງໃນຄືນດຽວ ໂມອາບໄດ້ເຖິງຄວາມພິນາດ
2 ດີໂບນໄດ້ຂຶ້ນໄປຍັງສະຖານທີ່ນະມັສການທີ່ສູງເພື່ອຈະຮ້ອງໄຫ້ ໂມອາບຄ່ຳຄວນເຖິງເນໂບແລະເຖິງເມເດບາ
ຫົວທຸກຫົວກໍໂລ້ນ ແລະຫນວດທຸກຄົນກໍຖືກແຖ
3 ເຂົານຸ່ງຜ້າກະສອບຢູ່ໃນຖນົນຫົນທາງ ທຸກຄົນຮ້ອງໄຫ້ເປັນຫນັກຫນາທີ່ເທິງຫລັງຄາເຮືອນແລະຕາມເດີ່ນ
ເມືອງ

4 ເມືອງເຮສໂບນແລະເອເລອາເລສົ່ງສຽງຮ້ອງ ສຽງຂອງເຂົາໄດ້ຍິນໄປເຖິງເມືອງຢາຮັສ ເຫດສັນນັ້ນ ຊາຍທີ່ຖື
ອາວຸດຂອງໂມອາບຈຶ່ງຮ້ອງສຽງດັງ ຈິດໃຈຂອງເຂົາສັ່ນສະເທືອນ
5 ຈິດໃຈຂອງຂ້າພະເຈົ້າຮ້ອງອອກມາເພື່ອໂມອາບ ຜູ້ຫລົບໄພຂອງໂມອາບນັ້ນຫນີໄປຍັງໂຊອາຣ໌ ໄປຍັງເອກລັ
ທເຊລີຊີຢາ ເພາະຕາມທາງຂຶ້ນໄປເມືອງລູຮີທເຂົາຂຶ້ນໄປຄໍ່າຄວນ ຕາມຖນົນສູ່ເມືອງໂຮໂຣນາອີມ ເຂົາເປັ່ງ
ສຽງຮ້ອງເຖິງການທໍາລາຍ
6 ຫ້ວຍນໍ້ານິມຣິມກໍແຫ້ງແລ້ງ ຫຍ້າກໍຫ່ຽວແຫ້ງ ແລະຫຍ້າອ່ອນກໍບໍ່ງອກ ຜັກສົດບໍ່ມີເລີຍ
7 ເຫດສັນນັ້ນສ່ວນທີ່ເຫລືອຊຶ່ງເຂົາເກັບໄດ້ ແລະທີ່ເຂົາສະສົມໄວ້ເຂົາຂົນເອົາໄປຂ້າມລໍາຫ້ວຍຕົ້ນໄຄ້
8 ເພາະສຽງຮ້ອງໄດ້ກະຈາຍໄປທົ່ວແຜ່ນດິນໂມອາບ ສຽງຄໍ່າຄວນໄປເຖິງເບເອີເອລີມ
9 ເພາະນໍ້າຂອງເມືອງດີໂບນມີເລືອດເຕັມໄປຫມົດ ເຖິງປານນັ້ນເຮົາຍັງຈະເພີ້ມພັຍແກ່ດີໂມນອີກ ຄືໃຫ້ສິງສໍາ
ລັບຊາວໂມອາບທີ່ຫນີໄປ ແລະສໍາລັບຄົນທີ່ເຫລືອຢູ່ໃນແຜ່ນດິນ

## 16

Chapter 16

1 ເຂົາໄດ້ສົ່ງລູກແກະໄປຍັງຜູ້ປົກຄອງແຜ່ນດິນ ຈາກເຊລາຕາມທາງຖິ່ນກັນດານໄປຍັງພູແຫ່ງລູກສາວຂອງຊີ
ໂອນ
2 ເຫມືອນນົກທີ່ກໍາລັງບິນຫນີ ຢ່າງລູກນົກທີ່ພັດຈາກຮັງ ລູກສາວຂອງໂມອາບເປັນຢ່າງນັ້ນ ຢູ່ຕະຝັ່ງແມ່ນໍ້າອາຣ໌
ໂນນ
3 “ຈົ່ງໃຫ້ຄໍາປຶກສາ ຈົ່ງອໍານວຍຄວາມຍຸດຕິທັມ ຈົ່ງທໍາຮົ່ມເງົາຂອງທ່ານເຫມືອນກາງຄືນໃນເວລາທ່ຽງວັນ ຈົ່ງ
ຊ່ອຍເຊື່ອງຜູ້ຖືກຂັບໄລ່ ຢ່າໄດ້ທັກທາຍຜູ້ລີ້ພັຍ
4 ໃຫ້ຜູ້ຖືກຂັບໄລ່ຂອງໂມອາບອາສັຍຢູ່ຖ້າມກາງທ່ານ ຈົ່ງເປັນທີ່ກໍາບັງພັຍແກ່ເຂົາໃຫ້ພົ້ນຈາກຜູ້ທໍາລາຍ ເມື່ອບໍ່
ມີຜູ້ບີບບັງຄັບແລ້ວ ແລະການທໍາລາຍໄດ້ຢຸດແລ້ວ ແລະເມື່ອຜູ້ຢຽບຢໍ່າໄວ້ໄດ້ຫາຍຕົວໄປຈາກແຜ່ນດິນແລ້ວ
5 ພຣະທີ່ນັ່ງກໍໄດ້ຮັບການສະຖາປະນາດ້ວຍຄວາມຮັກຫມັ້ນຄົງ ເທິງນັ້ນຈະມີຜູ້ນຶ່ງນັ່ງຢູ່ດ້ວຍຄວາມຊື່ສັດສຸຈຣິດ
ໃນເຕັນຂອງດາວິດ ຄືທ່ານຜູ້ພິພາກສາແລະສແວງຄວາມຍຸດຕິທັມ ແລະໄວໃນການກະທໍາຄວາມຊອບທັມ”
6 ເຮົາໄດ້ຍິນເຖິງຄວາມຈອງຫອງຂອງໂມອາບ ວ່າເຂົາຈອງຫອງອີຫລີ ເຖິງຄວາມຈອງຫອງຂອງເຂົາ ຄວາມທະ
ລຶ່ງຂອງເຂົາ ການໂອ້ອວດຂອງເຂົາເປັນການເທັດ
7 ເຫດສັນນັ້ນ ໂມອາບຈະຄໍ່າຄວນເພື່ອໂມອາບ ທຸກຄົນຈະຄໍ່າຄວນ ເຈົ້າທັງຫລາຍຈະໂອ່ຍຄາງດ້ວຍຄວາມທຸກ
ເນື່ອງດ້ວຍຂະຫນົມອະງຸ່ນແຫ້ງຂອງເມືອງກີຣ໌ຮາເຣເຊທ
8 ເພາະທົ່ງນາແຫ່ງເມືອງເຮສໂບນອ່ອນແອ ທັງເຄືອອະງຸ່ນຂອງຊິບມາ ເຈົ້ານາຍທັງຫລາຍແຫ່ງບັນດາປະຊາ
ຊາດໄດ້ຕີກິ່ງຂອງມັນລົງ ຊຶ່ງໄປເຖິງເມືອງຢາເຊີ ແລະຈົນໄປເຖິງຖິ່ນກັນດານ ຫນໍ່ຂອງມັນກໍແຕກກວ້າງອອກ
ໄປແລະຜ່ານຂ້າມທະເລໄປ
9 ເພາະສະນັ້ນ ຂ້າພະເຈົ້າຈຶ່ງຮ້ອງໄຫ້ກັບຄົນຮ້ອງໄຫ້ຂອງເມືອງຢາເຊີ ເນື່ອງດ້ວຍເຄືອອະງຸ່ນຂອງຊິບມາ ເຮສ
ໂບນ ແລະເອເລອາເລເອີຍ, ຂ້າພະເຈົ້າຈະທົດເຈົ້າດ້ວຍນໍ້າຕາຂອງຂ້າພະເຈົ້າ ເພາະສຽງໂຮ່ຮ້ອງຂອງສົງ
ຄາມໄດ້ມາເຖິງ ຜົນຣະດູຮ້ອນຂອງເຈົ້າແລະເຖິງເຂົ້າທີ່ກ່ຽວເກັບຂອງເຈົ້າແລ້ວ
10 ເຂົາເອົາຄວາມຊື່ນບານແລະຄວາມມຍິນດີໄປເສັຽ ຈາກທີ່ສວນຫມາກໄມ້ ເຂົາບໍ່ຮ້ອງເພງກັນຕາມສວນອະງຸ່ນ
ບໍ່ມີໃຜໂຮ່ຮ້ອງຕາມ ບໍ່ຢໍ່າອະງຸ່ນ ບໍ່ມີຄົນຢໍ່າໃຫ້ເຫລົ້າອະງຸ່ນອອກ ສຽງໂຮ່ຢໍ່າອະງຸ່ນງຽບເສັຽແລ້ວ
11 ສະນັ້ນ ຈິດຂອງຂ້າພະເຈົ້າຈຶ່ງຮ້ອງໄຫ້ເຫມືອນພິນເຂົາຄູ່ເພື່ອໂມອາບ ແລະໃຈຂອງຂ້າພະເຈົ້າຮ້ອງເພື່ອກີຣ໌ເຮ
ເຣສ

12 ແລະເມື່ອໂມອາບໄປເຝົ້າ ເມື່ອເຂົາອິດເມື່ອຍຢູ່ທີ່ບ່ອນນະມັສການທີ່ສູງນັ້ນ ແລະເມື່ອເຂົາເຂົ້າມາໃນສະຖານ
ສັກສິດຂອງເຂົາເພື່ອຈະອ້ອນວອນ ເຂົາກໍຈະບໍ່ໄດ້ຮັບຜົນ
13 ນີ້ເປັນພຣະຄໍາຊຶ່ງພຣະຜູ້ເປັນເຈົ້າຕຣັດກ່ຽວກັບໂມອາບໃນອະດີດ
14 ແຕ່ບັດນີ້ ພຣະຜູ້ເປັນເຈົ້າກ່າວວ່າ "ພາຍໃນສາມປີ ຕາມປີຈ້າງລູກຈ້າງ ສັກສີຂອງໂມອາບຈະຖືກຢຽດຫຍາ
ມເຖິງມວນຊົນທີ່ຫລວງຫລາຍຂອງເຂົາທັງສິ້ນກໍດີ ແລະຄົນທີ່ເຫລືອຢູ່ນັ້ນກໍຈະນ້ອຍແລະຕ່າງກໍອ່ອນເພຽກັນ
ທັງນັ້ນ"

## 17 ຖ້ອຍຄໍາກ່ຽວກັບເມືອງດາມັສກັສ

An Oracle concerning Damascus

1 ຖ້ອຍຄໍາກ່ຽວກັບເມືອງດາມັສກັສ ເບິ່ງແມ, ດາມັສກັສຈະຢຸດບໍ່ເປັນເມືອງຫລວງ ແລະຈະກາຍເປັນກອງສິ່ງສະ
ລັກຫັກພັງ
2 ຫົວເມືອງຂອງດາມັສກັສຈະຮົກຮ້າງເປັນນິດ ຈະເປັນບ່ອນສໍາລັບຝູງແບ້ແກະ ຊຶ່ງມັນຈະນອນລົງແລະບໍ່ມີຜູ້ໃດ
ຈະໃຫ້ມັນຢ້ານ
3 ປ້ອມປຣາການຈະສູນຫາຍໄປຈາກເອຟຣາອິມ ແລະຣາຊອານາຈັກຈະສູນຫາຍໄປຈາກດາມັສກັສ ແລະຄົນທີ່
ເຫລືອຢູ່ຂອງຊີເຣັຽຈະເປັນເຫມືອນສັກສີຂອງຄົນອິສຣາເອນ ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ແຫລະ
4 ແລະໃນວັນນັ້ນ ສັກສີຂອງຢາໂຄບຈະຕົກຕໍ່າ ແລະຄວາມອ້ວນທີ່ເນື້ອຂອງເຂົາຈະຈ່ອຍຜອມລົງ
5 ແລະຈະເປັນເຫມືອນເມື່ອຄົນກ່ຽວເຂົ້າ ເກັບກ່ຽວພືດເຂົ້າທີ່ຕັ້ງຢູ່ ແລະແຂນຂອງເຂົາຈະກ່ຽວຮວງເຂົ້າແລະ
ເຫມືອນເມື່ອຄົນນຶ່ງເກັບຮວງເຂົ້າໃນທີ່ລຸ່ມເຣຟາອິມ
6 ຈະມີເຫລືອຢູ່ແດ່ໃນນັ້ນເຫມືອນຢ່າງເມື່ອຕີກົກຫມາກກອກເທດໃຫ້ຫມາກຫລົ່ນ ຈະມີເຫລືອຢູ່ທີ່ຍອດສູງທີ່ສຸດ
ສອງສາມຫນ່ວຍ ຫລືທີ່ເຫລືອເທິງກິ່ງໄມ້ ຫມາກສີ່ຫ້າຫນ່ວຍ ພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນກ່າວ
ດັ່ງນີ້ແຫລະ
7 ໃນວັນນັ້ນຄົນຈະເອົາໃຈໃສ່ໃນພຣະຜູ້ສ້າງຕົນ ແລະຕາເຂົາຈະເບິ່ງເຫັນອົງບໍຣິສຸດຂອງອິສຣາເອນ
8 ເຂົາຈະບໍ່ເອົາໃຈໃສ່ແທ່ນບູຊາ ຜົນງານແຫ່ງມືຂອງເຂົາ ແລະເຂົາຈະບໍ່ເບິ່ງສິ່ງທີ່ມືຂອງເຂົາເອງໄດ້ກະທໍາຂຶ້ນ
ບໍ່ວ່າຈະເປັນອາເຊຣິມ ຫລືແທ່ນເຜົາເຄື່ອງຫອມ
9 ໃນວັນນັ້ນເມືອງເຂັ້ມແຂງຂອງເຂົາຈະເປັນເຫມືອນບ່ອນຮົກຮ້າງຂອງຄົນຮີວີ ແລະຄົນອາໂມຣິດ ຊຶ່ງເຂົາໄດ້
ປະໃຫ້ຮົກຮ້າງເພາະຄົນອິສຣາເອນ ແລະຈະເປັນບ່ອນຮົກຮ້າງ
10 ເພາະເຈົ້າໄດ້ຫລົງລືມພຣະຜູ້ເປັນເຈົ້າແຫ່ງຄວາມລອດຂອງເຈົ້າເສັຽ ແລະບໍ່ໄດ້ຈົດຈໍາອົງພຣະສີລາລີ້ພັຍຂອງ
ເຈົ້າ ແມ້ວ່າເຈົ້າປູກຕົ້ນອະພິຣົມ ແລະປັກກິ່ງແຫ່ງພຣະຕ່າງດ້າວໄວ້
11 ແມ້ວ່າເຈົ້າທໍາໃຫ້ມັນງອກໃນວັນທີ່ເຈົ້າປູກມັນ ແລະທໍາໃຫ້ມັນອອກດອກໃນເຊົ້າຂອງວັນທີ່ເຈົ້າຫວ່ານ ເຖິງ
ປານນັ້ນຜົນການເກັບກ່ຽວກໍຈະຫນີໄປ ໃນວັນແຫ່ງຄວາມທຸກໃຈແລະຄວາມເຈັບຢ່າງຮັກສາບໍ່ໄດ້
12 ສຽງກຶກກ້ອງຂອງຊົນຊາດທັງຫລາຍເປັນອັນມາກພາກັນອຶລທຶນວຸ້ນວາຍ ຄ້າຍສຽງອຶກກະທຶກຂອງທ້ອງທະເລ
ຄ້າຍສຽງຄື້ນອັນໃຫຍ່ໂຕມາກະທົບກັນ
13 ຊົນຊາດທັງຫລາຍອຶກກະທຶກເຫມືອນສຽງຄື້ນຂອງນໍ້າເປັນອັນມາກ ແຕ່ພຣະອົງຈະຊົງຄວບຄຸມໄວ້ ແລະມັນ
ຈະຫນີໄປໄກເສັຽ ຖືກໄລ່ໄປເຫມືອນແກບຕ້ອງລົມເທິງພູ ເຫມືອນພືດແຫ້ງປິວໄປຕໍ່ຫນ້າພະຍຸ
14 ເບິ່ງແມ່, ພໍເວລາຄໍ່າ ກໍນໍາເອົາຄວາມສຍົດສຍອງ ກ່ອນຮຸ່ງເຊົ້າກໍບໍ່ມີເຂົາທັງຫລາຍແລ້ວ ນີ້ເປັນສ່ວນຂອງບັນ
ດາຜູ້ທີ່ຍຶດເອົາຂອງເຮົາ ແລະເປັນສ່ວນຂອງຜູ້ທີ່ປຸ້ນເຮົາ

## 18 ຖ້ອຍຄໍາກ່ຽວກັບເອທິໂອເປັຽ

An Oracle concerning Ethiopia

1 ແຜ່ນດິນແຫ່ງສຽງປີກທີ່ພືພັບ ຊຶ່ງຢູ່ເລີຍແມ່ນໍ້າແຫ່ງເອທິໂອເປັຽ
2 ຊຶ່ງສົ່ງທູດໄປໂດຍທາງທະເລ ໂດຍເຮືອກົກອໍ້ເທິງນໍ້າ ເຈົ້າຜູ້ສົ່ງຂ່າວທີ່ໄວໆເອີຍ, ຈົ່ງໄປຍັງປະຊາຊາດທີ່ຄົນ
ຮ່າງສູງແລະກ້ຽງ ຍັງປະຊົນຊາດທີ່ເຂົາຢ້ານທັງໃກ້ແລະໄກ ຍັງປະຊາຊາດທີ່ເຂັ້ມແຂງແລະມັກຊະນະ ຊຶ່ງແຜ່ນ
ດິນຂອງເຂົາມີແມ່ນໍ້າແບ່ງ
3 ທ່ານທັງປວງຜູ້ເປັນຊາວພິພົບ ທ່ານອາສັຍຢູ່ເທິງແຜ່ນດິນໂລກ ເມື່ອມີອາຍັດສັນຍາຍົກຂຶ້ນເທິງພູ ຈົ່ງມອງເບິ່ງ
ເມື່ອມີສຽງເຂົາສັດປ່າ ຈົ່ງຟັງ
4 ເພາະພຣະຜູ້ເປັນເຈົ້າກ່າວແກ່ຂ້າພະເຈົ້າດັ່ງນີ້ວ່າ "ເຮົາຈະຄ່ອຍໆເບິ່ງຈາກທີ່ອາສັຍຂອງເຮົາ ເຫມືອນຄວາມ
ຮ້ອນທີ່ກະຈາຍຢູ່ໃນແສງແດດ ເຫມືອນຢ່າງເມກແຫ່ງນໍ້າຄ້າງໃນຄວາມຮ້ອນຂອງຣະດູກ່ຽວ"
5 ເພາະກ່ອນເຖິງຣະດູກ່ຽວ ເມື່ອດອກບານພົ້ນໄປແລ້ວ ແລະດອກກາຍເປັນຫມາກອະງຸ່ນກໍາລັງສຸກ ພຣະອົງຈະ
ເອົາເຫລັກກ່ຽວຕັດຍອດທັງຫລາຍແລະຕັດກິ່ງທັງຫລາຍໄປ
6 ແລະເຂົາທັງຫລາຍຈະຖືກຖິ້ມໄວ້ທັງຫມົດ ໃຫ້ແກ່ແຮ້ງທີ່ຢູ່ເທິງພູ ແລະແກ່ສັດແຫ່ງແຜ່ນດິນໂລກ ແລະນົກກິນ
ເຫຍື່ອຈະກິນເສັຽໃນຣະດູຮ້ອນ ແລະບັນດາສັດທັງສິ້ນແຫ່ງແຜ່ນດິນໂລກຈະກິນເສັຽໃນຣະດູຫນາວ
7 ໃນຄັ້ງນັ້ນ ເຂົາຈະນໍາຂອງກໍານັນມາຖວາຍແດ່ພຣະຜູ້ເປັນເຈົ້າຈອມໂຍທາ ຈາກຊົນຊາດທີ່ຄົນຮ່າງສູງແລະ
ກ້ຽງ ຈາກຊົນຊາດທີ່ເຂົາຢ້ານທັງໃກ້ແລໄກ ຈາກປະຊາຊາດທີ່ເຂັ້ມແຂງແລະມັກຊະນະ ຊຶ່ງແຜ່ນດິນຂອງເຂົາ
ມີແມ່ນໍ້າແບ່ງ ຍັງສະຖານທີ່ແຫ່ງພຣະນາມຂອງພຣະຜູ້ເປັນເຈົ້າຈອມໂຍທາ ຄືພູຊີໂອນ

## 19 ຖ້ອຍຄໍາກ່ຽວກັບເອຢິບ

An Oracle concerning Egypt

1 ຖ້ອຍຄໍາກ່ຽວກັບເອຢິບ ເບິ່ງແມ, ພຣະຜູ້ເປັນເຈົ້າຊົງມາກັບເມກຢ່າງໄວ ແລະສະເດັດມາຍັງເອຢິບ ຕໍ່ພຣະພັກ
ພຣະອົງ ຮູບໂຄຣົບແຫ່ງເອຢິບຈະສັ່ນສະເທືອນ ແລະໃຈຂອງຄົນເອຢິບຈະລະລາຍໄປພາຍໃນຕົວເຂົາ
2 ແລະເຮົາຈະກວນໃຫ້ຄົນເອຢິບຕໍ່ສູ້ກັບຄົນເອຢິບ ແລະເຂົາຈະສູ້ຮົບກັນ ທຸກຄົນຮົບພີ່ນ້ອງຂອງຕົນ ແລະທຸກ
ຄົນຮົບເພື່ອນບ້ານຂອງຕົນ ເມືອງຮົບກັບເມືອງ ຣາຊອານາຈັກຮົບກັບຣາຊອານາຈັກ
3 ແລະຄົນເອຢິບກໍຈະຈົນໃຈ ແລະເຮົາຈະກະທໍາໃຫ້ແຜນງານຂອງເຂົາຫຍຸ້ງ ແລະເຂົາຈະປຶກສາຮູບໂຄຣົບແລະ
ພວກຫມໍດູ ແລະຄົນຊົງ ແລະພໍ່ມົດແມ່ມົດ
4 ແລະເຮົາຈະມອບຄົນເອຢິບໄວ້ໃນມືຂອງນາຍທີ່ແຂງກະດ້າງ ແລະພຣະຣາຊາໂຫດຮ້າຍຄົນນຶ່ງຈະປົກຄອງ
ເຫນືອເຂົາ ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຈອມໂຍທາກ່າວດັ່ງນີ້ແຫລະ
5 ແລະນໍ້າຈະແຫ້ງໄປຈາກທະເລ ແລະແມ່ນໍ້າແຫ້ງລົງເລື້ອຍໆ
6 ຄອງຂອງຫ້ວຍນໍ້າທັງຫລາຍຈະເນົ່າເຫມັນ ແລະນ□ໍາໃນແມ່ນໍ້ານິນແຫ່ງເອຢິບຈະລົດລົງແລະແຫ້ງໄປ ກົກອໍ້
ແລະກົກຫຍ້າຈະຫ່ຽວແຫ້ງໄປ
7 ພືດຜົນທີ່ແມ່ນໍ້ານິນ ທີ່ແຄມຝັ່ງແມ່ນໍ້າ ແລະທັງສິ້ນທີ່ຫວ່ານລົງຂ້າງແມ່ນໍ້ານັ້ນຈະແຫ້ງໄປ ຈະຖືກໄລ່ໄປເສັຽ
ແລະບໍ່ມີອີກ
8 ຊາວປະມົງຈະຮ້ອງທຸກ ຄືບັນດາຜູ້ທີ່ຕຶກເບັດໃນແມ່ນໍ້ານິນຈະໄວ້ທຸກ ແລະຜູ້ທີ່ຫວ່ານແຫໃນນໍ້າຈະອ່ອນ
ເພັຽໄປ
9 ຄົນງານທີ່ເຮັດຜ້າປ່ານຈະຫມົດຫວັງ ທັງຄົນທີ່ຕໍ່າຝ້າຍຂາວດ້ວຍ
10 ບັນດາຜູ້ທີ່ເປັນຫລັກຂອງແຜ່ນດິນຕ້ອງຖືກບີບຄັ້ນ ແລະບັນດາຜູ້ທີ່ທໍາງານຮັບຈ້າງຈະເສົ້າໃຈ

11 ພວກເຈົ້ານາຍແຫ່ງໂຊອານ ປ່ວງບ້າ ທີ່ປຶກສາທີ່ສລາດຂອງຟາຣາໂອໃຫ້ຄຳປຶກສາຢ່າງໂງ່ຈ້າ ພວກເຈົ້າຈະ
ເວົ້າກັບຟາຣາໂອໄດ້ຢ່າງໃດວ່າ "ຂ້ານ້ອຍເປັນບຸດຂອງນັກປາດ ເປັນເຊື້ອສາຍຂອງກະສັດບູຮານ"
12 ນັກປາດຂອງທ່ານຢູ່ທີ່ໃດ ໃຫ້ເຂົາບອກທ່ານແລະໃຫ້ເຂົາເຮັດໃຫ້ແຈ້ງເບິ່ງ ວ່າພຣະຜູ້ເປັນເຈົ້າຈອມໂຍທາມີພ
ຣະປະສົງສິ່ງໃດກັບເອຢິບ
13 ເຈົ້ານາຍແຫ່ງໂຊອານກາຍເປັນຄົນໂງ່ ແລະເຈົ້ານາຍແຫ່ງເມມຟີສຖືກຫລອກລວງແລ້ວ ບັນດາຜູ້ທີ່ເປັນສີລາ
ມຸມເອກຂອງເຜົ່າຂອງເອຢິບໄດ້ນຳເອຢິບໃຫ້ຫລົງໄປ
14 ພຣະຜູ້ເປັນເຈົ້າປົນດວງຈິດແຫ່ງຄວາມຫຍຸ້ງໄວ້ໃນເອຢິບ ແລະເຂົາທັງຫລາຍໄດ້ກະທຳໃຫ້ເອຢິບໃຫ້ຫລົງຜິດ
ໃນການກະທຳທັງສິ້ນຂອງມັນ ດັ່ງຄົນເມົາໄຊເຊຢູ່ເທິງສິ່ງທີ່ເຂົາຮາກອອກມາ
15 ບໍ່ມີຫຍັງທີ່ຈະກະທຳໄດ້ເພື່ອຊ່ວຍເອຢິບ ຊຶ່ງຫົວກໍດີຫາງກໍດີ ຫລືໃບຕານກໍດີ ກົກອໍ້ນ້ອຍກໍດີ ອາດຈະທຳໄດ້
16 ວັນນັ້ນຄົນເອຢິບຈະເປັນເຫມືອນຜູ້ຍິງ ສັ່ນສະເທືອນແລະຢ້ານຕໍ່ພຣະຫັດຊຶ່ງພຣະຜູ້ເປັນເຈົ້າຈອມໂຍທາຊົງ
ປັດແກວ່ງເຫນືອເຂົາ
17 ແລະແຜ່ນດິນຢູດາຈະເປັນທີ່ຢ້ານກົວແກ່ຄົນເອຢິບ ເມື່ອກ່າວຊື່ໃຫ້ຄົນນຶ່ງຄົນໃດເຂົາກໍຢ້ານ ເພາະພຣະປະສົງ
ຂອງພຣະຜູ້ເປັນເຈົ້າຈອມໂຍທາ ຊຶ່ງຊົງປະສົງຕໍ່ເຂົາທັງຫລາຍ

Egypt, Assyria, and Israel Blessed

18 ໃນວັນນັ້ນ ຈະມີຫ້າຫົວເມືອງໃນແຜ່ນດິນເອຢິບຊຶ່ງເວົ້າພາກສາຂອງຄົນການາອານ ແລະສາບານຕໍ່ພຣະຜູ້
ເປັນເຈົ້າຈອມໂຍທາເມືອງນຶ່ງເຂົາຈະເອີ້ນວ່າ ເມືອງຕາເວັນ
19 ໃນວັນນັ້ນຈະມີແທ່ນບູຊາແທ່ນນຶ່ງແດ່ພຣະຜູ້ເປັນເຈົ້າໃນຖ້າມກາງແຜ່ນດິນເອຢິບ ແລະມີເສົາສັກສິດແດ່ພຣະ
ຜູ້ເປັນເຈົ້າທີ່ເຂດແດນ
20 ຈະເປັນຫມາຍສຳຄັນແລະເປັນພຍານໃນແຜ່ນດິນເອຢິບເຖິງພຣະຜູ້ເປັນເຈົ້າຈອມໂຍທາ ເມື່ອເຂົາທັງ
ຫລາຍຮ້ອງທູນຕໍ່ພຣະຜູ້ເປັນເຈົ້າເຫດດ້ວຍຜູ້ບີບບັງຄັບເຂົາ ພຣະອົງຈະຊົງສົ່ງຜູ້ຊ່ວຍແລະຜູ້ປ້ອງກັນຜູ້ນຶ່ງມາ
ໃຫ້ເຂົາຜູ້ຈະຊ່ວຍກູ້ເຂົາໄວ້
21 ພຣະຜູ້ເປັນເຈົ້າຈະສຳແດງພຣະອົງໃຫ້ເປັນທີ່ຮູ້ຈັກແກ່ຄົນເອຢິບ ແລະຄົນເອຢິບຈະຮູ້ຈັກພຣະຜູ້ເປັນເຈົ້າໃນ
ວັນນັ້ນແລະນະມັສການດ້ວຍຖວາຍເຄື່ອງສັກກາຣະບູຊາແລະເຄື່ອງຖວາຍແລະເຂົາທັງຫລາຍຈະບົນບານ
ແລະແກ້ບົນຕໍ່ພຣະຜູ້ເປັນເຈົ້າ
22 ພຣະຜູ້ເປັນເຈົ້າຈະໂຈມຕີເອຢິບ ຊົງໂຈມຕີໄປຊົງຮັກສາໄປ ແລະເຂົາທັງຫລາຍຈະຫັນກັບມາຫາພຣະຜູ້ເປັນ
ເຈົ້າ ແລະພຣະອົງຈະຊົງຟັງຄຳວິງວອນຂອງເຂົາແລະຊົງຮັກສາເຂົາ
23 ໃນວັນນັ້ນຈະມີທາງຫລວງຈາກເອຢິບເຖິງອັສຊີເຣັຽ ແລະຄົນອັສຊີເຣັຽຈະເຂົ້າມາຍັງເອຢິບ ແລະຄົນເອຢິບໄປ
ຍັງອັສຊີເຣັຽ
24 ໃນວັນນັ້ນອິສຣາເອນຈະເປັນທີສາມກັບເອຢິບແລະກັບອັສຊີເຣັຽ ເປັນພອນຖ້າມກາງແຜ່ນດິນໂລກ
25 ເປັນຜູ້ທີ່ພຣະຜູ້ເປັນເຈົ້າຈອມໂຍທາຊົງອວຍພຣະພອນວ່າ "ເອຢິບຊົນຊາດຂອງເຮົາຈົ່ງໄດ້ຮັບພອນ ແລະອັສຊີ
ເຣັຽຜົນງານແຫ່ງມືຂອງເຮົາ ແລະອິສຣາເອນມໍຣະດົກຂອງເຮົາ"

## 20 ອັສຊີເຣັຽຈະຊະນະເອຢິບແລະເອທິໂອເປັຽ

Isaiah Dramatizes the Conquest of Egypt and Ethiopia

1 ໃນປີທີ່ຜູ້ບັງຄັບບັນຊາໃຫຍ່ຜູ້ຊຶ່ງຊາຣ໌ໂກນ ເຈົ້າຊີວິດແຫ່ງອັສຊີເຣັຽຊົງໃຊ້ມານັ້ນ ໄດ້ມາເຖິງອັສໂດດ ແລະໄດ້
ຕໍ່ສູ້ຍຶດເມືອງນັ້ນໄດ້

2 ໃນຄັ້ງນັ້ນພຣະຜູ້ເປັນເຈົ້າກ່າວໂດຍເອຊາຢາບຸດອາໂມສວ່າ, "ຈົ່ງໄປ ແກ້ຜ້າກະສອບອອກຈາກບັ້ນແອວຂອງ
ເຈົ້າແລະເອົາເກີບອອກຈາກຕີນຂອງເຈົ້າ" ແລະທ່ານກໍກະທຳຕາມເດີນເປືອຍກາຍແລະຕີນເປົ່າ
3 ພຣະຜູ້ເປັນເຈົ້າກ່າວວ່າ, "ເອຊາຢາຜູ້ຮັບໃຊ້ຂອງເຮົາເດີນເປືອຍກາຍແລະຕີນເປົ່າສາມປີ ເປັນຫມາຍສຳຄັນ
ແລະເປັນລາງແກ່ເອຢິບ ແລະແກ່ເອທິໂອເປັຽສັນໃດ
4 ເຈົ້າຊີວິດແຫ່ງອັສຊີເຣັຽຈະນຳຄົນເອຢິບໄປເປັນຊະເລີຍແລະຈະກວາດຄົນເອທິໂອເປັຽໄປ ທັງຄົນຫນຸ່ມສາວ
ແລະຄົນແກ່ ເປືອຍກາຍແລະຕີນເປົ່າ ເປີດກົ້ນ ເປັນທີ່ອັບອາຍແກ່ເອຢິບ
5 ແລ້ວເຂົາທັງຫລາຍຈະທໍ້ຖອຍແລະອັບອາຍດ້ວຍເຫດເອທິໂອເປັຽຄວາມຫວັງຂອງເຂົາ ແລະເອຢິບຄວາມ
ໂອ້ອວດຂອງເຂົາ
6 ແລະຊາວແຜ່ນດິນຊາຍທະເລນີ້ຈະກ່າວໃນວັນນັ້ນວ່າ "ເບິ່ງແມ່, ນີ້ແຫລະຜູ້ຊຶ່ງເຮົາຫວັງໃຈແລະຜູ້ຊຶ່ງເຮົາຫນີ
ໄປຫາຄວາມຊ່ອຍກູ້ໃຫ້ພົ້ນຈາກເຈົ້າຊີວິດອັສຊີເຣັຽ ແລະເຮົາ ເຮົາເດ່ຈະຫນີໃຫ້ພົ້ນໄດ້ຢ່າງໃດ"

## 21 ຖ້ອຍຄຳກ່ຽວກັບຖິ່ນກັນດານຂອງທະເລ

Oracles concerning Babylon, Edom, and Arabia

1 ຖ້ອຍຄຳກ່ຽວກັບຖິ່ນກັນດານຂອງທະເລ ເຫມືອນລົມຫົວກຸດໃນເນເກັບພັດກ້ຽງໄປ ມັນຈາກຖິ່ນກັນດານຈາກ
ແຜ່ນດິນອັນຫນ້າຢ້ານກົວ
2 ເຂົາບອກນິມິດທີ່ຂຶງຂັງແກ່ຂ້າພະເຈົ້າ ວ່າຜູ້ປຸ້ນເຂົ້າປຸ້ນ ຜູ້ທຳລາຍເຂົ້າທຳລາຍ ເອລາມເອີຍ, ຈົ່ງເຂົ້າລ້ອມ ຊຶ່ງ
ມັນໃຫ້ເກີດການຖອນຫາຍໃຈທັງສິ້ນ ເຮົາໄດ້ກະທຳໃຫ້ສິ້ນໄປແລ້ວ
3 ເພາະສະນັ້ນ ບັ້ນແອວຂອງຂ້າພະເຈົ້າຈຶ່ງເຕັມດ້ວຍຄວາມແສນຣະທົມ ຄວາມເຈັບປວດທີ່ຍິງກຳລັງເກີດລູກ
ຂ້າພະເຈົ້າຈົນໃຈເພາະສິ່ງທີ່ໄດ້ຍິນ ຂ້າພະເຈົ້າທໍ້ຖອຍເພາະສິ່ງທີ່ໄດ້ເຫັນ
4 ຈິດໃຈຂອງຂ້າພະເຈົ້າລ່ອງລອຍໄປຄວາມຫວາດສຽວກະທຳໃຫ້ຂ້າພະເຈົ້າຢ້ານກົວ ແສງໂພ້ເພ້ຊຶ່ງຂ້າພະເຈົ້າ
ຫວັງກັບທຳໃຫ້ຂ້າພະເຈົ້າສັ່ນສະເທືອນ
5 ເຂົາຕຽມອາຫານໄວ້ ເຂົາປູພົມ ເຂົາກິນ ເຂົາດື່ມ ເຈົ້ານາຍທັງຫລາຍເອີຍ, ຈົ່ງລຸກຂຶ້ນ ຕຽມໂລ້ໄວ້ດ້ວຍນໍ້າມັນ
6 ເພາະອົງພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າດັ່ງນີ້ວ່າ "ຈົ່ງໄປ ຕັ້ງຍາມ ໃຫ້ເຂົາໄປຮ້ອງປະກາດສິ່ງທີ່ເຂົາເຫັນ
7 ເມື່ອເຂົາເຫັນຄົນຂີ່ມ້າ ຄືພົນມ້າເປັນຄູ່ໆ ຄົນຂີ່ລໍ ຄົນຂີ່ອູດ ໃຫ້ເຂົາຟັງຢ່າງເອົາໃຈໃສ່ພິຈາຣະນາ ເບິ່ງຢ່າງລະ
ມັດລະວັງ"
8 ແລ້ວຜູ້ເຫັນໄດ້ຮ້ອງວ່າ "ຂ້າແຕ່ອົງພຣະຜູ້ເປັນເຈົ້າ ຂ້າພຣະອົງຢືນຢູ່ເທິງຫໍຄອຍຕລອດໄປໃນກາງເວັນ ຂ້າພ
ຣະອົງປະຈຳຢູ່ທີ່ຕຳແຫນ່ງຂອງຂ້າພຣະອົງຕລອດຫລາຍຄືນ
9 ແລະເບິ່ງແມ, ມີຄົນຂີ່ມາ ຄືພົນມ້າເປັນຄູ່ໆ" ແລະເຂົາຕອບວ່າ, "ບາບີໂລນຫລົ້ມແລ້ວ ຫລົ້ມແລ້ວ" ບັນດາຮູບ
ໂຄຣົບທັງສິ້ນແຫ່ງພຣະຂອງເຂົາ ພຣະອົງຊົງທຳລາຍລົງເຖິງພື້ນດິນ"
10 ທ່ານຜູ້ຖືກນວດແລະຜູ້ຖືກຝັດຂອງຂ້າເອີຍ ຂ້າໄດ້ຍິນຫຍັງຈາກພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສ
ຣາເອນ ຂ້າ ພະເຈົ້າກໍຮ້ອງປະກາດແກ່ທ່ານຢ່າງນັ້ນ

**ຖ້ອຍຄຳກ່ຽວກັບດູມາ**

11 ຖ້ອຍຄຳກ່ຽວກັບດູມາ ມີຄົນນຶ່ງເອີ້ນຂ້າພະເຈົ້າຈາກເຊອີຣ໌ວ່າ "ຄົນຍາມເອີຍ, ເດິກປານໃດແລ້ວ ຄົນຍາມເອີຍ
ເດິກປານໃດແລ້ວ"
12 ຄົນຍາມຕອບວ່າ, "ເຊົ້າມາເຖິງ ກາງຄືນມານຳ ຖ້າຈະຖາມ ກໍຖາມເຖີດ ຈົ່ງກັບມາອີກ"

**ຖ້ອຍຄຳກ່ຽວກັບອາຣະເບັຽ**

13 ຖ້ອຍຄຳກ່ຽວກັບອາຣະເບັຽ ໂອຂະບວນພໍ່ຄ້າຂອງຄົນເດດານເອີຍ ເຈົ້າຈະພັກຢູ່ໃນດົງຕຶບໃນອາຣະເບັຽ

14 ຊາວແຜ່ນດິນເຕມາເອີຍ, ຈົ່ງເອົານໍ້າມາໃຫ້ຄົນຫິວນໍ້າ ເອົາເຂົ້າຫນົມມາຕ້ອນຮັບຄົນລີ້ພັຍ
15 ເພາະເຂົາໄດ້ຫນີຈາກດາບ ຈາກດາບທີ່ຊັກອອກ ຈາກທະນູທີ່ໂກ່ງຢູ່ ແລະຈາກສົງຄາມທີ່ໃກ້ຊິດເຂົ້າມາ
16 ເພາະອົງພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າດັ່ງນີ້ວ່າ "ສັກສີທັງສິ້ນຂອງເກດາຣ໌ຈະເຖິງທີ່ສຸດພາຍໃນປີດຽວ
ຕາມປີຈ້າງລູກຈ້າງ
17 ແລະນັກທະນູທີ່ເຫລືອຢູ່ຂອງທະຫານຜູ້ເກັ່ງທີ່ສຸດແຫ່ງຊາວເກດາຈະເຫລືອນ້ອຍ ເພາະພຣະຜູ້ເປັນເຈົ້າ ພຣະ
ເຈົ້າຂອງອິສຣາເອນໄດ້ກ່າວແລ້ວ"

## 22 ຖ້ອຍຄຳກ່ຽວກັບທີ່ລຸ່ມແຫ່ງນິມິດ

A Warning of Destruction of Jerusalem

1 ຖ້ອຍຄຳກ່ຽວກັບທີ່ລຸ່ມແຫ່ງນິມິດທີ່ເຈົ້າໄດ້ຂຶ້ນໄປ ເຈົ້າທຸກຄົນທີ່ເທິງຫລັງຄາເຮືອນນັ້ນ ເປັນເຣື່ອງຫຍັງກັນ?
2 ເຈົ້າຜູ້ເປັນເມືອງທີ່ເຕັມດ້ວຍການໂຮ່ຮ້ອງ ເມືອງທີ່ອຶກກະທຶກຄຶກໂຄມ ນະຄອນທີ່ໂດດເຕັ້ນ ຜູ້ທີ່ຖືກຂ້າຂອງ
ເຈົ້າບໍ່ໄດ້ຖືກຂ້າດ້ວຍດາບ ຫລືຕາຍໃນສົງຄາມ
3 ຜູ້ຄອງເມືອງຂອງເຈົ້າທັງຫມົດຫນີກັນໄປແລ້ວ ເຂົາຖືກຈັບໄດ້ໂດຍບໍ່ມີຄັນທະນູ ຊາຍສະກັນຂອງເຈົ້າທຸກຄົນ
ຖືກຈັບ ແມ່ນວ່າເຂົາໄດ້ຫນີໄປໄກແລ້ວ
4 ເຫດສັນນັ້ນ ຂ້າພະເຈົ້າຈຶ່ງວ່າ "ຢ່າເບິ່ງຂ້າພະເຈົ້າໃຫ້ຂ້າພະເຈົ້າຫລັ່ງນໍ້າຕາຢ່າງຂົມຂື່ນ ຢ່າພຍາຍາມເລົ້າໂລມ
ຂ້າພະເຈົ້າເລີຍ ເຫດດ້ວຍການທຳລາຍຊົນຊາດຂອງຂ້າພະເຈົ້າ"
5 ເພາະພຣະຜູ້ເປັນເຈົ້າຈອມໂຍທາຊົງມີວັນນຶ່ງ ເປັນວາຣະແຫ່ງຄວາມວຸ້ນວາຍ ວາຣະຢຽບຢ່ຳ ແລະວາຣະຫຍຸ້ງ
ຍາດໃນທີ່ລຸ່ມແຫ່ງນິມິດ ຄືການພັງກຳແພງລົງ ແລະໂຮ່ຮ້ອງໃຫ້ແກ່ພູ
6 ເອລາມຫຍິບເອົາຫນ້າແລະລູກທະນູຄົບມື ກັບຣົດຮົບແລະພົນແລະພົນມ້າ ແລະກີຣ໌ກໍມີໂລ້ຕຽມໄວ້ພ້ອມ
7 ທີ່ລຸ່ມທີ່ດີທີ່ສຸດຂອງທ່ານເຕັມໄປດ້ວຍຣົດຮົບ ແລະພົນມ້າກໍເຂົ້າປະຈຳທີ່ປະຕູເມືອງໆ
8 ພຣະອົງຊົງເອົາສິ່ງປິດບັງຢູດາໄປເສັຽແລ້ວ ໃນວັນນັ້ນທ່ານໄດ້ນຳອາວຸດອອກຈາກສາງ
9 ໄດ້ເຫັນປ່ອງແຫ່ງນະຄອນດາວິດວ່າມີຫລາຍແຫ່ງໄຂໄວ້ ແລ້ວທ່ານທັງຫລາຍກໍເກັບນໍ້າໃນບໍ່ລຸ່ມ
10 ແລະທ່ານກໍນັບເຮືອນຂອງເຢຣູຊາເລັມ ແລະທ່ານກໍພັງເຮືອນມາເສີມກຳແພງເມືອງ
11 ທ່ານທຳບ່ອນຂັງນໍ້າໄວ້ລະຫວ່າງກຳແພງທັງສອງເພື່ອຮັບນໍ້າຂອງສະເກົ່າ ແຕ່ທ່ານບໍ່ໄດ້ຫລຽວເບິ່ງຜູ້ທີ່ໄດ້ຊົງ
ບັນດານເຫດ ແລະບໍ່ໄດ້ເອົາໃຈໃສ່ຜູ້ຊົງວາງແຜນງານນີ້ໄວ້ດົນມາແລ້ວ
12 ໃນວັນນັ້ນ ພຣະຜູ້ເປັນເຈົ້າຈອມໂຍທາຊົງເອີ້ນໃຫ້ຮ້ອງໄຫ້ແລະຄ່ຳຄວນ ໃຫ້ມີຫົວໂລ້ນແລະໃຫ້ຄາດຕົວດ້ວຍ
ຜ້າກະສອບ
13 ເບິ່ງແມ, ມີຄວາມຊື່ນບານແລະຄວາມຍິນດີ ມີການຂ້າງົວແລະຂ້າແກະ ມີການກິນເນື້ອແລະດື່ມເຫລົ້າອະງຸ່ນ
"ໃຫ້ເຮົາກິນແລະດື່ມເຖີດ ເພາະວ່າມື້ອື່ນເຮົາຈະຕາຍ"
14 ພຣະຜູ້ເປັນເຈົ້າຈອມໂຍທາໄດ້ຊົງສຳແດງພຣະອົງ ໃນຫູຂອງຂ້າພະເຈົ້າວ່າ ແນ່ນອນທີ່ຈະບໍ່ລົບມົນທິນບາບ
ອັນນີ້ໃຫ້ເຈົ້າຈົນກວ່າເຈົ້າຈະຕາຍ" ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້
15 ພຣະຜູ້ເປັນເຈົ້າຈອມໂຍທາກ່າວດັ່ງນີ້ວ່າ, "ໄປເຖີດ ໄປຫາພະນັກງານຄົນນີ້ ໄປຍັງເຊັບນາຜູ້ດູແລຣາຊສຳນັກ
ແລະຈົ່ງເວົ້າກັບເຂົາວ່າ
16 "ເຈົ້າມີສິດຫຍັງທີ່ນີ້ ແລະເຈົ້າມີໃຜຢູ່ທີ່ນີ້ ເຈົ້າຈຶ່ງສະກັດອຸບໂມງທີ່ນີ້ເພື່ອຕົວເຈົ້າເອງ ສະກັດໃນທີ່ສູງ ແລະສລັກ
ທີ່ຢູ່ສຳລັບຕົນເອງໃນສີລາ
17 ເບິ່ງແມ, ເຈົ້າຄົນແຂງແຮງເອີຍ ພຣະຜູ້ເປັນເຈົ້າຈະຊົງແກວ່ງເຈົ້າອອກໄປຢ່າງແຮງ ພຣະອົງຈະຈັບໃຫ້ແຫນ້ນ

18 ແລະມ້ວນເຈົ້າ ແລະແກວ່ງເຈົ້າໄປຢ່າງຫນາກບານຍັງແຜ່ນດິນກວ້າງ ເຈົ້າຈະຕາຍທີ່ນັ້ນ ແລະທີ່ນັ້ນຈະມີຣົດ
ຣົບອັນຕະການຂອງເຈົ້າ ເຈົ້າຜູ້ເປັນທີ່ອັດສູແກ່ເຮືອນນາຍຂອງເຈົ້າ
19 ເຮົາຈະຊຸກຍູ້ເຈົ້າອອກໄປຈາກຕຳແຫນ່ງຂອງເຈົ້າ ແລະເຈົ້າຈະຖືກດຶງລົງມາຈາກຫນ້າທີ່ຂອງເຈົ້າ
20 ໃນວັນນັ້ນ ເຮົາຈະເອີ້ນຜູ້ຮັບໃຊ້ຂອງເຮົາ ຄືເອລີອາກີມ ບຸດຊາຍຮີນກີຢາ
21 ເຮົາຈະເອົາເສື້ອຍົດຂອງເຈົ້າມາສວມໃຫ້ເຂົາ ແລະຈະເອົາຜ້າຄາດຂອງເຈົ້າຄາດເຂົາໄວ້ ແລະຈະມອບອຳ
ນາດປົກຄອງຂອງເຈົ້າໄວ້ໃນມືຂອງເຂົາ ແລະເຂົາຈະເປັນດັ່ງບິດາແກ່ຊາວເຢຣູຊາເລັມ ແລະແກ່ເຊື້ອວົງຢູດາ
22 ແລະເຮົາຈະວາງລູກກະແຈຂອງວັງດາວິດໄວ້ເທິງບ່າຂອງເຂົາ ເຂົາຈະໄຂແລະບໍ່ມີຜູ້ໃດອັດ ເຂົາຈະອັດແລະບໍ່
ມີຜູ້ໃດໄຂ
23 ແລະເຮົາຈະຕອກເຂົາໄວ້ເຫມືອນຕອກຫລັກໃນທີ່ຫມັ້ນຄົງ ແລະເຂົາຈະເປັນທີ່ນັ່ງມີກຽດແກ່ເຊື້ອວົງບິດາຂອງ
ເຂົາ
24 ແລະເຂົາທັງຫລາຍຈະແຂວນໄວ້ເທິງຕົວເຂົາຊຶ່ງນ້ຳຫນັກທັງສິ້ນຂອງເຊື້ອວົງບິດາຂອງເຂົາ ລູກຫລານຜູ້ສືບ
ສາຍພາຊນະນ້ອຍໆທຸກອັນ ຕັ້ງແຕ່ຖ້ວຍຈົນເຖິງຫມໍ້ທັງສິ້ນ
25 ພຣະຜູ້ເປັນເຈົ້າຈອມໂຍທາກ່າວວ່າໃນວັນນັ້ນຫລັກທີ່ປັກແຫນ້ນຢູ່ໃນທີ່ຫມັ້ນຄົງຈະຫລຸດ ມັນຈະຖືກໂຄ່ນລົງ
ແລະຕົກລົງມາ ແລະພາຣະທີ່ຢູ່ເທິງນັ້ນຈະຖືກຕັດອອກ ເພາະພຣະຜູ້ເປັນເຈົ້າໄດ້ກ່າວໄວ້ແລ້ວ

## 23 ຖ້ອຍຄຳກ່ຽວກັບເມືອງຕີເຣແລະຊີໂດນ

An Oracle concerning tyre

1 ຖ້ອຍຄຳກ່ຽວກັບເມືອງຕີເຣ ໂອບັນດາກຳປັ່ນແຫ່ງຕາຣ໌ຊິດ ຈົ່ງຄ່ຳຄວນ ເພາະວ່າເມືອງນັ້ນຖືກທຳລາຍຮ້າງເສັຽ
ແລ້ວ ບໍ່ມີເຮືອນຫລືທ່າຈອດເຮືອ ເຜີຍໃຫ້ເຂົາທັງຫລາຍປະຈັກໃນແຜ່ນດິນໄຊປຣັສ
2 ໂອ ຊາວທະເລເອີຍ ຈົ່ງງຽບເສັຽ ເຈົ້າ ຊຶ່ງເປັນພໍ່ຄ້າແຫ່ງເມືອງຊີໂດນ ທີ່ຜູ້ຜ່ານຂ້າມທະເລໄປ ໄດ້ທຳໃຫ້ເຈົ້າເຕ
ັມບໍຣິບູນ
3 ແລະຂ້າມແມ່ນ້ຳມາກຫລາຍ ລາຍໄດ້ຂອງເມືອງນັ້ນຄືເຂົ້າເມືອງຊີໂຮຣ໌ ເປັນຜົນເກັບກ່ຽວຂອງແມ່ນ້ຳນິນ
ເມືອງນັ້ນເປັນພໍ່ຄ້າຂອງບັນດາປະຊາຊາດ
4 ໂອ ຊີໂດນເອີຍ ຈົ່ງອັບອາຍເຖີດ ເພາະທະເລໄດ້ເວົ້າແລ້ວ ທີ່ກຳລັງເຂັ້ມແຂງຂອງທະເລເວົ້າວ່າ "ຂ້ອຍບໍ່ໄດ້
ເຈັບທ້ອງຫລືຂ້ອຍບໍ່ໄດ້ເກີດລູກ ຂ້ອຍບໍ່ໄດ້ລ້ຽງດູຄົນຫນຸ່ມ ຫລືບຳຣຸງລ້ຽງຍິງພົມມະຈາຣີ"
5 ເມື່ອເຣື່ອງຣາວມາເຖິງເອຢິບ ເຂົາທັງຫລາຍຈະແສນຣະທົມຢູ່ດ້ວຍເຣື່ອງຣາວເມືອງຕີເຣ
6 ຈົ່ງຂ້າມໄປຍັງຕາຣ໌ຊິດເຖີດ ໂອ ຊາວທະເລເອີຍ ຈົ່ງຄ່ຳຄວນ
7 ນີ້ເປັນເມືອງທີ່ສນຸກມ່ວນຊື່ນຂອງເຈົ້າທັງຫລາຍຫລື ຊຶ່ງກຳເນີດມາແຕ່ສມັຍບູຮານ ຊຶ່ງຕີນໄດ້ພາມັນໄປ ຕັ້ງ
ຢູ່ໄກ
8 ຜູ້ໃດໄດ້ມຸ່ງຫມາຍໄວ້ເຊັ່ນນີ້ ຕໍ່ເມືອງຕີເຣ ຜູ້ໃຫ້ມົງກຸດ ຊຶ່ງບັນດາພໍ່ຄ້າຂອງມັນເປັນເຈົ້ານາຍ ຊຶ່ງພວກ
ຫົວຫນ້າຂອງມັນເປັນຄົນມີກຽດຂອງໂລກ
9 ພຣະຜູ້ເປັນເຈົ້າຈອມໂຍທາມຸ່ງຫມາຍໄວ້ ເພື່ອຈະລົດກຽດຂອງຜູ້ມີກຽດທັງສິ້ນໃນແຜ່ນດິນໂລກ
10 ໂອ ທິດາແຫ່ງຕາຣ໌ຊິດເອີຍ ຈົ່ງຖ້ວມແຜ່ນດິນຂອງເຈົ້າເຫມືອນແມ່ນ້ຳນິນ ບໍ່ມີສິ່ງຂັດຂວາງໃດໆອີກແລ້ວ
11 ພຣະອົງຊົງຢຽດພຣະຫັດຂອງພຣະອົງເຫນືອທະເລ ພຣະອົງຊົງສັ່ນບັນດາຣາຊອານາຈັກ ພຣະຜູ້ເປັນເຈົ້າຊົງ
ບັນຊາກ່ຽວກັບເຣື່ອງການາອານ ເພື່ອຈະທຳລາຍທີ່ກຳບັງເຂັ້ມແຂງຂອງມັນເສັຽ
12 ແລະພຣະອົງກ່າວວ່າ "ໂອ ທິດາພົມມະຈາຣີຜູ້ຖືກບີບບັງຄັບແຫ່ງຊີໂດນເອີຍ ເຈົ້າຈະບໍ່ມີຄວາມສຸດຕໍ່ໄປອີກ
ຈົ່ງລຸກຂຶ້ນຂ້າມໄປໄຊປຣັສເຖີດ ເຖິງວ່າທີ່ນັ້ນເຈົ້າກໍຈະບໍ່ມີຄວາມສງົບ"

13 ຈົ່ງເບິ່ງແຜ່ນດິນແຫ່ງຄົນຄັນເດອານເຖີດ ເປັນຊົນຊາດນີ້ ບໍ່ແມ່ນອັສຊີເຣັຽ ເຂົາລີຂິດໃຫ້ຕີເຣເປັນບ່ອນສັດປ່າຢູ່
ເຂົາໄດ້ກໍ່ຫໍຄອຍຂອງເຂົາຂຶ້ນ ເຂົາທະລາຍວັງທັງຫລາຍຂອງມັນລົງ ເຂົາກະທຳໃຫ້ມັນເປັນບ່ອນຮົກຮ້າງເພພັງ
14 ໂອ ບັນດາກຳປັ່ນແຫ່ງຕາຣ໌ຊິດເອີຍ ຈົ່ງຄໍ່າຄວນເຖີດ ເພາະວ່າທີ່ກຳບັງເຂັ້ມແຂງຂອງເຈົ້າຖືກຮົກຮ້າງເສັຽແລ້ວ
15 ໃນເວລານັ້ນ ເຂົາຈະລືມເມືອງຕີເຣເຈັດສິບປີ ຢ່າງກັບອາຍຸຂອງພຣະຣາຊາອົງດຽວ ພໍຄົບເຈັດສິບປີ ກໍຈະບັງ
ເກີດແກ່ຕີເຣຢ່າງເພງຂອງຍິງແພດສະຍາວ່າ,
16 “ໂອ ຍິງແພດສະຍາທີ່ເຂົາລືມແລ້ວເອີຍ ຈົ່ງຈັບພິນເດີນໄປທົ່ວເມືອງ ຈົ່ງບັນເລງເພງອັນມ່ວນ ຮ້ອງເພງ
ຫລາຍໆບົດເພື່ອເຂົາຈະລະນຶກເຖິງເຈົ້າໄດ້”
17 ເມື່ອເຈັດສິບປີນັ້ນຫມົດໄປແລ້ວ ພຣະຜູ້ເປັນເຈົ້າຈະຊົງຢ້ຽມເຍືອນເມືອງຕີເຣ ແລະເມືອງນັ້ນຈະກັບໄປຮັບຈ້າງ
ໃຫມ່ ແລະຈະຫລິ້ນຊູ້ກັບບັນດາຣາຊອານາຈັກທັງສິ້ນເທິງພື້ນໂລກ
18 ສິນຄ້າຂອງມັນແລະສິນຈ້າງຂອງມັນຈະເປັນຂອງຖວາຍແດ່ພຣະຜູ້ເປັນເຈົ້າ ຈະບໍ່ສະສົມໄວ້ຫລືເກັບໄວ້ຊື່ໆ
ແຕ່ສິນຄ້າ   ຂອງມັນຈະອຳນວຍອາຫານອຸດົມແລະເຄື່ອງນຸ່ງງາມແກ່ບັນດາຜູ້ທີ່ຢູ່ຕໍ່ພຣະພັກພຣະຜູ້ເປັນເຈົ້າ

## 24 ພຣະຜູ້ເປັນເຈົ້າຊົງພິພາກສາເຫນືອໂລກ

Impending Judgment on the Earth

1 ເບິ່ງແມ, ພຣະຜູ້ເປັນເຈົ້າຈະຊົງປະໂລກນີ້ໃຫ້ເປົ່າປ່ຽວ ແລະຊົງກະທຳໃຫ້ຮ້າງເປົ່າ ແລະພຣະອົງຈະຊົງບິດພື້ນ
ໂລກແລະກະຈາຍຜູ້ອາສັຍຂອງມັນ
2 ແລະຈະເປັນຢ່າງນັ້ນຕໍ່ປະໂຣຫິດຢ່າງເປັນກັບປະຊາຊົນ ຕໍ່ນາຍຂອງເຂົາຢ່າງເປັນກັບທາດ ຕໍ່ນາຍຜູ້ຍິງຂອງ
ເຂົາຢ່າງເປັນກັບສາວໃຊ້ ຕໍ່ຜູ້ຊາຍຢ່າງເປັນກັບຜູ້ຊື້ ຕໍ່ຜູ້ຢືມຢ່າງເປັນກັບຜູ້ໃຫ້ຢືມ ຕໍ່ລູກຫນີ້ຢ່າງເປັນກັບເຈົ້າ
ຫນີ້
3 ໂລກຈະຖືກປະຮ້າງຢ່າງສິ້ນເຊີງ ແລະຖືກປຸ້ນຫມົດສິ້ນ ເພາະພຣະຜູ້ເປັນເຈົ້າໄດ້ຊົງກ່າວຄວາມນີ້ແລ້ວ
4 ໂລກກໍໄວ້ທຸກແລະຫ່ຽວແຫ້ງໄປ ພິພົບກໍອ່ອນລົງແລະຫ່ຽວແຫ້ງ ຄົນສູງສັກຂອງໂລກກໍອ່ອນເພັຽໄປ
5 ໂລກນີ້ມີຣາຄີເພາະຜູ້ອາສັຍໃນນັ້ນ ເພາະເຂົາທັງຫລາຍລະເມີດຕໍ່ບົດບັນຍັດ ໄດ້ຝ່າຝືນກົດເກນ ໄດ້ຫັກຄຳ
ຫມັ້ນສັນຍານິຣັນດອນນັ້ນ
6 ເຫດສັນນັ້ນ ຄຳສາບກໍກືນໂລກ ແລະຜູ້ທີ່ອາສັຍໃນນັ້ນກໍມີກັມຊົ່ວ ເຫດສັນນັ້ນ ຜູ້ອາສັຍຂອງໂລກຈຶ່ງຖືກເຜົາ
ຜານ ມີຄົນເຫລືອຫນ້ອຍ
7 ເຫລົ້າອະງຸ່ນກໍໄວ້ທຸກ ເຄືອອະງຸ່ນກໍອ່ອນບລົງ ຈິດໃຈທີ່ເບີກບານທັງປວງກໍເສົ້າໝອງໃຈ
8 ສຽງສນຸກສນານຂອງຣຳມະນາກໍງຽບ ສຽງຂອງຜູ້ເບີກບານກໍຢຸດເສັຽ ສຽງສນຸກສນານຂອງພິນເຂົາຄູ່ກໍງຽບ
9 ເຂົາບໍ່ດື່ມເຫລົ້າອະງຸ່ນພ້ອມກັບການຮ້ອງເພງອີກ ສຸຣາກໍເປັນຂອງຂົມແກ່ຜູ້ທີ່ດື່ມ
10 ເມືອງທີ່ສັບສົນວຸ້ນວາຍແຕກຫັກເສັຽແລ້ວ ບ້ານທຸກຫລັງກໍປິດຫມົດບໍ່ໃຫ້ໃຜເຂົ້າໄປ
11 ມີສຽງຮ້ອງທີ່ກາງຖນົນດ້ວຍເຣື່ອງເຫລົ້າອະງຸ່ນ ຄວາມຊື່ນບານທັງສິ້ນກໍເຍືອກເຢັນລົງແລ້ວ ຄວາມຍິນດີຂອງ
ແຜ່ນດິນກໍຫາຍສູນໄປ
12 ເຫລືອຄວາມວ່າງເປົ່າຢູ່ໃນເມືອງ ປະຕູເມືອງກໍຖືກທຸບທຳລາຍ
13 ເພາະຈະເປັນເຊັ່ນນີ້ຢູ່ຖ້າມກາງໂລກ ຖ້າມກາງຊົນຊາດທັງຫລາຍ ຢ່າງກັບເມື່ອກົກຫມາກກອກເທດຖືກຊຸກ
ສັ່ນ ຢ່າງເມື່ອການເກັບເລັມຕາມເຄືອອະງຸ່ນສິ້ນສຸດລົງ
14 ເຂົາທັງຫລາຍເປັ່ງສຽງຂອງເຂົາຂຶ້ນ ເຂົາຮ້ອງເພງດ້ວຍຄວາມຊື່ນບານ ເຂົາໂຮ່ຮ້ອງຈາກຕາເວັນຕົກສລອງ
ຄວາມໂອ່ອ່າຕະການຂອງພຣະຜູ້ເປັນເຈົ້າ

15 ເພາະສະນັ້ນໃນທາງຕາເວັນອອກຈຶ່ງຖວາຍພຣະສະງ່າຣາສີແກ່ພຣະຜູ້ເປັນເຈົ້າ ໃນແຜ່ນດິນຊາຍທະເລ
ຖວາຍແດ່ພຣະນາມແຫ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນ
16 ຕັ້ງແຕ່ທີ່ສຸດປາຍໂລກເຮົາໄດ້ຍິນສຽງເພງສັຣເສີນ ວ່າສັກສີຈົ່ງມີແກ່ຜູ້ຊອບທັມ ແຕ່ຂ້າພະເຈົ້າວ່າ "ຂ້າພະເຈົ້າ
ກໍຜ່າຍຜອມ ຂ້າພະເຈົ້າຜ່າຍຜອມ ວິບັດແກ່ຂ້າພະເຈົ້າ ເພາະຄົນທໍຣະຍົດປະພຶດຢ່າງທໍຣະຍົດ ຄົນທໍຣະຍົດ
ແຮງປະພຶດຢ່າງຊົ່ວຮ້າຍຫລາຍຂຶ້ນ"
17 ໂອ ຊາວແຜ່ນດິນໂລກເອີຍ ຄວາມພ້າຍ້ານກົວແລະຫລຸມພາງແລະກັບກໍມາທັນເຈົ້າແລ້ວ
18 ຜູ້ໃດຫນີເມື່ອໄດ້ຍິນສຽງຄວາມພ້າຍ້ານນັ້ນຈະຕົກໃນຫລຸມພາງ ແລະຜູ້ທີ່ປີນອອກມາຈາກຫລຸມພາງກໍຈະ
ຕິດກັບ ເພາະວ່າຫນ້າຕ່າງຂອງຟ້າສວັນກໍຖືກເປີດ ແລະຮາກຖານຂອງແຜ່ນດິນໂລກກໍຫວັ່ນໄຫວ
19 ໂລກແຕກສລາຍສິ້ນເຊີງແລ້ວ ໂລກແຕກເປັນປ່ຽງໆ ໂລກຖືກສັ່ນຢ່າງຮຸນແຮງ
20 ໂລກກໍຊວນເຊໄປຢ່າງຄົນເມົາເຫລົ້າ ຫລືແກວ່ງກວາຍດັ່ງຕູບໄມ້ໃນຖ້ຳມກາງພະຍຸຮ້າຍ ການທໍຣະຍົດຂອງ
ໂລກຫນັກຢູ່ເທິງມັນ ແລະມັນລົ້ມແລະຈະບໍ່ລຸກອີກ
21 ໃນວັນນັ້ນ ພຣະຜູ້ເປັນເຈົ້າຈະຊົງລົງໂທດບໍຣິວານຂອງຟ້າສວັນ ໃນຟ້າສວັນ ແລະບັນດາພຣະຣາຊາຂອງແຜ່ນ
ດິນໂລກ ໃນແຜ່ນດິນໂລກ
22 ເຂົາທັງຫລາຍຈະຖືກຮວບຮວມໄວ້ດ້ວຍກັນ ດັ່ງນັກໂທດໃນຄຸກມືດ ເຂົາທັງຫລາຍຈະຖືກກັກຂັງໄວ້ໃນຄຸກ
ແລະຕໍ່ມາຫລາຍວັນເຂົາຈຶ່ງຈະຖືກລົງໂທດ
23 ແລ້ວດວງຈັນຈະອິດສູ ແລະດວງຕາເວັນຈະອັບອາຍ ເພາະວ່າພຣະຜູ້ເປັນເຈົ້າຈອມໂຍທາຈະຊົງປະທັບເທິງພູ
ຊີໂອນແລະໃນເຢຣູຊາເລັມ ແລະພຣະສະງ່າຣາສີຈະປາກົດຕໍ່ຫນ້າພວກຜູ້ໃຫຍ່ຂອງພຣະອົງ

## 25 ບົດເພງແຫ່ງການສັຣເສີນ

Praise for Deliverance from Oppression

1 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງເປັນພຣະເຈົ້າຂອງຂ້າພຣະອົງ ຂ້າພຣະອົງຈະຍໍພຣະກຽດພຣະອົງ ຂ້າພຣະ
ອົງຈະສັຣເສີນພຣະນາມຂອງພຣະອົງ ເພາະພຣະອົງໄດ້ຊົງກະທຳການອັດສະຈັນ ຕາມແຜນງານທີ່ຊົງດຳຣິໄວ້
ດົນນານມາແລ້ວ ອັນຫມັ້ນຄົງແລະແນ່ນອນ
2 ເພາະພຣະອົງໄດ້ຊົງກະທຳໃຫ້ເມືອງເປັນກອງຂີ້ເຫຍື້ອ ເມືອງມີປ້ອມເປັນບ່ອນສລັກຫັກພັງ ວັງຂອງຊົນຕ່າງ
ດ້າວບໍ່ເປັນເມືອງຕໍ່ໄປອີກ ຈະບໍ່ກໍ່ສ້າງຂຶ້ນອີກເລີຍ
3 ເພາະສະນັ້ນ ປະຊາຊາດທີ່ແຂງແຮງຈະສັຣເສີນພຣະອົງ ຫົວເມືອງຂອງບັນດາປະຊາຊາດທີ່ທາຣຸນຈະຢ້ານ
ກົວພຣະອົງ
4 ເພາະພຣະອົງໄດ້ຊົງເປັນທີ່ກຳບັງເຂັ້ມແຂງຂອງຄົນຍາກຈົນ ຊົງເປັນທີ່ກຳບັງເຂັ້ມແຂງຂອງຄົນຂັດສົນເມື່ອ
ເຂົາທຸກໃຈ ຊົງເປັນທີ່ກຳບັງຈາກພະຍຸແລະເປັນຮົ່ມກັນຄວາມຮ້ອນ ເພາະລົມຂອງຜູ້ທີ່ທາຣຸນກໍເຫມືອນພະຍຸ
ພັດກຳແພງ
5 ເຫມືອນຄວາມຮ້ອນໃນທີ່ແຫ້ງ ພຣະອົງຊົງລະງັບສຽງຂອງຄົນຕ່າງດ້າວ ຮົ່ມເມກລະງັບຄວາມຮ້ອນສັນໃດ
ສຽງເພງຂອງຜູ້ທາຣຸນກໍງຽບໄປສັນນັ້ນ
6 ເທິງພູນີ້ ພຣະຜູ້ເປັນເຈົ້າຈອມໂຍທາຈະຊົງຈັດງານລ້ຽງສຳລັບບັນດາປະຊາຊາດທັງຫລາຍ ຄືການກິນລ້ຽງ
ໃຫຍ່ທີ່ມີອາຫານບໍຣິບູນທີ່ສຸດແລະມີເຫລົ້າອະງຸ່ນທີ່ດີເລີດ
7 ແລະເທິງພູນີ້ ພຣະອົງຈະຊົງທຳລາຍຜ້າຄຸມຫນ້າຊຶ່ງຄຸມຫນ້າບັນດາຊົນຊາດທັງຫລາຍ ແລະຜ້າກັ້ງຊຶ່ງກາງຢູ່
ເຫນືອບັນດາປະຊາຊາດ

8 ພຣະອົງຈະຊົງກືນຄວາມຕາຍເສັຽເປັນນິດ ແລະພຣະຜູ້ເປັນເຈົ້າຈະຊົງເຊັດນ້ຳຕາຈາກຫນ້າທັງປວງ ແລະພຣະອົງຈະຊົງເອົາການຫລົບລູ່ຊົນຊາດຂອງພຣະອົງໄປເສັຽຈາກທົ່ວແຜ່ນດິນໂລກ ເພາະພຣະຜູ້ເປັນເຈົ້າໄດ້ກ່າວແລ້ວ (6/10/10)
9 ໃນວັນນັ້ນ ເຂົາຈະກ່າວກັນວ່າ "ນີ້ຄືພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ ເຮົາໄດ້ລໍຄອຍພຣະອົງ ເພື່ອວ່າພຣະອົງຈະຊົງຊ່ອຍເຮົາໃຫ້ລອດ ນີ້ຄືພຣະຜູ້ເປັນເຈົ້າ ເຮົາໄດ້ລໍຄອຍພຣະອົງໃຫ້ເຮົາຍິນດີແລະຊົມຊື່ນຍິນດີໃນຄວາມລອດຂອງພຣະອົງ"
10 ເພາະພຣະຫັດຂອງພຣະຜູ້ເປັນເຈົ້າຈະພັກຢູ່ເທິງພູນີ້ ແລະໂມອາບຈະຖືກຢຽບຢ່ຳລົງໃນບ່ອນຂອງເຂົາເຫມືອນຢຽບຢ່ຳເຟືອງລົງໃນຫລຸມມູນສັດ
11 ແລະເຖິງເຂົາຈະກາງມືຂອງເຂົາຖ້າມກາງຫລຸມນັ້ນ ເຫມືອນຄົນລອຍນ້ຳກາງແຂນລອຍນ້ຳ ແຕ່ພຣະອົງຈະຊົງໃຫ້ຄວາມເຍີ່ຍິ່ງຂອງເຂົາຕ່ຳລົງພ້ອມກັບຝີມືຊຳນານຂອງເຂົາ
12 ປ້ອມສູງຂອງກຳແພງເມືອງຂອງເຈົ້ານັ້ນ ພຣະອົງຈະຊົງໃຫ້ຕ່ຳລົງ ຊົງຢຽດລົງ ແລະແກວ່ງລົງເຖິງດິນຈົນກະທັ່ງເຖິງຂີ້ດິນ

## 26 ພຣະເຈົ້າຈະໃຫ້ປະຊາຊົນຂອງພຣະອົງມີຊັຍ

Judah's Song of Victory

1 ໃນວັນນັ້ນ ເຂົາຈະຮ້ອງເພງນີ້ໃນແຜ່ນດິນຢູດາ "ເຮົາມີເມືອງເຂັ້ມແຂງເມືອງນຶ່ງ ພຣະອົງຊົງຕັ້ງຄວາມລອດໄວ້ເປັນຝາແລະກຳແພງ
2 ຈົ່ງເປີດປະຕູເມືອງເຖີດ ເພື່ອປະຊາຊາດທີ່ຊອບທັມຊຶ່ງຮັກສາຄວາມຊື່ສັດໄວ້ຈະໄດ້ເຂົ້າມາ
3 ໃຈແນ່ວແນ່ນັ້ນ ພຣະອົງຊົງຮັກສາໄວ້ໃນສັນຕິພາບອັນສົມບູນ ເພາະເຂົາວາງໃຈໃນພຣະອົງ
4 ຈົ່ງວາງໃຈໃນພຣະຜູ້ເປັນເຈົ້າເປັນນິດ ເພາະພຣະຜູ້ເປັນເຈົ້າຊົງເປັນສີລານິຣັນ
5 ເພາະພຣະອົງຊົງໃຫ້ຊາວເມືອງທີ່ສູງສົ່ງນັ້ນ ຄືເມືອງທີ່ສູງສົ່ງນັ້ນຕ່ຳລົງ ພຣະອົງຊົງໃຫ້ມັນຕ່ຳລົງ ຕ່ຳລົງເຖິງດິນໃຫ້ມັນລົງທີ່ຂີ້ດິນ
6 ຕີນຢຽບມັນ ຄືຕີນຂອງຄົນຍາກຈົນ ຄືບາດກ້າວຂອງຄົນຂັດສົນ"
7 ທົນທາງຂອງຄົນຊອບທັມກໍລາບລື້ນ ພຣະອົງຜູ້ທ່ຽງທັມຊົງກະທຳໃຫ້ວິຖີຂອງຄົນຊອບທັມລາບລື້ນ
8 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງລໍຄອຍພຣະອົງຢູ່ ໃນວິຖີແຫ່ງການພິພາກສາຂອງພຣະອົງ ພຣະນາມອັນເປັນທີ່ລະນຶກຂອງພຣະອົງ ເປັນທີ່ຈິດວິນຍານຂອງຂ້າພຣະອົງປາຖນາ
9 ວິນຍານຂອງຂ້າພຣະອົງຢາກໄດ້ພຣະອົງໃນກາງຄືນ ຈິດໃຈພາຍໃນຂ້າພຣະອົງສແວງຫາພຣະອົງຢ່າງຮ້ອນຮົນ ເພາະເມື່ອການພິພາກສາຂອງພຣະອົງຢູ່ໃນແຜ່ນດິນໂລກ ຊາວພິພົບໄດ້ຮຽນຮູ້ເຖິງຄວາມຊອບທັມ
10 ຖ້າສຳແດງພຣະຄຸນແກ່ຄົນອະທັມ ເຂົາກໍບໍ່ຮຽນຮູ້ຄວາມຊອບທັມ ເຂົາປະພຶດຊົ່ວໃນແຜ່ນດິນທີ່ທ່ຽງທັມ ແລະມອງບໍ່ເຫັນຄວາມໂອ່ອ່າຕະການຂອງພຣະອົງ
11 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະຫັດຂອງພຣະອົງຊູຂຶ້ນ ແຕ່ເຂົາກໍມອງບໍ່ເຫັນ ຂໍໃຫ້ເຂົາມອງເຫັນຄວາມຮ້ອນພຣະທັຍເພື່ອຊົນຊາດຂອງພຣະອົງ ແລະໄດ້ອັບອາຍ ສ່ວນສັດຕຣູຂອງພຣະອົງ ຂໍໃຫ້ໄຟເຜົາຜານເຂົາ
12 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຈະສະຖາປະນາສັນຕິພາບເພື່ອຂ້າພຣະອົງທັງຫລາຍ ພຣະອົງໄດ້ຊົງກະທຳບັນດາກິຈການຂອງພຣະອົງເພື່ອຂ້າພຣະອົງ
13 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຂ້າພຣະອົງ ເຈົ້ານາຍອື່ນນອກເຫນືອພຣະອົງໄດ້ປົກຄອງພວກຂ້າພຣະອົງ ແຕ່ຂ້າພຣະອົງຮັບຮູ້ແຕ່ພຣະນາມຂອງພຣະອົງເທົ່ານັ້ນ

14 ເຂົາທັງຫລາຍຕາຍແລ້ວ ເຂົາຈະບໍ່ມີຊີວິດອີກ ເຂົາເປັນຊາວແດນຄົນຕາຍ ເຂົາຈະບໍ່ເປັນຂຶ້ນອີກ ເພື່ອເປັນ
ເຊັ່ນນັ້ນພຣະອົງໄດ້ຊົງຢ້ຽມຢາມແລະຊົງທຳລາຍເຂົາ ແລະຊົງກວາດອະນຸສອນທັງສິ້ນຂອງເຂົາເສັຽ
15 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ພຣະອົງຊົງເພີ້ມປະຊາຊົນຂຶ້ນ ພຣະອົງຊົງເພີ້ມປະຊາຊົນຂຶ້ນ ພຣະອົງໄດ້ຊົງຮັບ
ພຣະກຽດ ພຣະອົງຊົງຂຍາຍເຂດແດນທັງສິ້ນຂອງແຜ່ນດິນໃຫ້ກວ້າງໃຫຍ່
16 ຂ້າແດ່ພຣະຜູ້ເປັນເຈົ້າ ໃນຍາມທຸກໃຈ ເຂົາໄດ້ສແວງຫາພຣະອົງ ເຂົາທັງຫລາຍຫລັ່ງຄຳອ້ອນວອນອອກມາ
ໃນເມື່ອການຕີສອນຢູ່ເຫນືອເຂົາທັງຫລາຍ
17 ດັ່ງຜູ້ຍິງຖືພາ ຜູ້ບິດຕົວແລະຮ້ອງດ້ວຍຄວາມເຈັບປວດ ເມື່ອງນາງໃກ້ເຖິງກຳນົດເວລາເກີດລູກ ຂ້າແດ່ພຣະຜູ້
ເປັນເຈົ້າ ຂ້າພຣະອົງທັງຫລາຍກໍເປັນເຊັ່ນນັ້ນ ຕໍ່ເບື້ອງພຣະພັກພຣະອົງ
18 ຂ້າພຣະອົງຖືພາ ຂ້າພຣະອົງບິດຕົວ ເປັນເຫມືອນຂ້າພຣະອົງໃຫ້ກຳເນີດລົມ ຂ້າພຣະອົງບໍ່ໄດ້ທຳການຊ່ອຍກູ້
ໃນແຜ່ນດິນໂລກ ແລະຊາວພິພົບບໍ່ໄດ້ເກີດ
19 ຄົນຕາຍຂອງພຣະອົງຈະມີຊີວິດ ສົບຂອງເຂົາທັງຫລາຍຈະລຸກຂຶ້ນ ໂອ ຜູ້ອາສັຍຢູ່ໃນຂີ້ດິນ ຈົ່ງຕື່ນເຖີດ ແລະ
ຮ້ອງເພງເພາະຄວາມຊື່ນບານ ເພາະນ້ຳຄ້າງຂອງເຈົ້າເປັນນ້ຳຄ້າງຂອງຄວາມສວ່າງ ແລະແຜ່ນດິນໂລກຈະໃຫ້
ຊາວແດນຄົນຕາຍເປັນຂຶ້ນ
20 ມາເຖີດ ຊົນຊາດຂອງຂ້າພະເຈົ້າເອີຍ ຈົ່ງເຂົ້າໃນຫ້ອງຂອງເຈົ້າ ແລະອັດປະຕູເສັຽ ຈົ່ງເຊື່ອງຕົວເຈົ້າຢູ່ຈັກພັກ
ນຶ່ງ ຈົນກວ່າພຣະພິໂຣດຈະຜ່ານໄປ
21 ເພາະ ເບິ່ງແມ, ພຣະຜູ້ເປັນເຈົ້າກຳລັງສະເດັດອອກມາຈາກສະຖານທີ່ຂອງພຣະອົງ ເພື່ອລົງໂທດຊາວແຜ່ນ
ດິນໂລກ ເພາະຄວາມບາບຜິດຂອງເຂົາທັງຫລາຍ ແລະແຜ່ນດິນໂລກຈະເປີດເຜີຍໂລຫິດຊຶ່ງຫລັ່ງຢູ່ເທິງມັນ
ແລະຈະບໍ່ປິດບັງຜູ້ຖືກຂ້າຂອງມັນໄວ້ອີກ

## 27 ການຊ່ອຍກູ້ແລະການເກັບກ່ຽວອິສຣາເອນເຂົ້າມາໄວ້

Israel’s Redemption

1 ໃນວັນນັ້ນ ພຣະຜູ້ເປັນເຈົ້າຈະຊົງລົງໂທດດ້ວຍພຣະແສງອັນແຂງກະດ້າງອັນໃຫຍ່ ແລະອັນແຮງກ້າຂອງພຣະ
ອົງຕໍ່ເລືອາທານ ຄືພຍານາກທີ່ຫນີໄປນັ້ນ ເລວີອາທານ ພຍານາກທີ່ຂົດ ແລະພຣະອົງຈະຊົງປະຫານມັງກອນ
ທີ່ຢູ່ໃນທະເລ
2 ໃນວັນນັ້ນ “ສວນອະງຸ່ນອັນແສນສຸກ ຈົ່ງຮ້ອງເພງເຖິງສວນນັ້ນ
3 ເຮົາຄືພຣະຜູ້ເປັນເຈົ້າ ເປັນຜູ້ຮັກສາດູແລມັນ ເຮົາຫົດນ້ຳມັນຢູ່ທຸກຂນະ ຢ້ານວ່າຜູ້ນຶ່ງຜູ້ໃດຈະທຳອັນຕະລາຍ
ມັນ ເຮົາຈຶ່ງເຝົ້າມັນໄວ້ທັງກາງຄືນກາງເວັນ
4 ເຮົາບໍ່ມີຄວາມພິໂຣດ ເຮົາຢາກໃຫ້ມີຫນາມໃຫຍ່ນ້ອຍຂຶ້ນມາສູ້ເຮົາ ເຮົາຈະອອກຮົບກັບມັນ ເຮົາຈະເຜົາມັນ
ເສັຽດ້ວຍກັນ
5 ຫລືໃຫ້ເຂົາເກາະຢູ່ກັບການປ້ອງກັນຂອງເຮົາ ໃຫ້ເຂົາທຳສັນຕິພາບກັບເຮົາ ໃຫ້ເຂົາທຳສັນຕິພາບກັບເຮົາ”
6 ໃນວັນຂ້າງຫນ້າ ຢາໂຄບຈະຢັ່ງຮາກ ອິສຣາເອນຈະອອກດອກແລະແຕກຫນໍ່ ກະທຳໃຫ້ພິພົບທັງສິ້ນມີຫມາກ
ເຕັມ
7 ພຣະອົງຊົງຕີສອນເຂົາຢ່າງທີ່ພຣະອົງຕີສອນຜູ້ທີ່ຕີສອນເຂົາທັງຫລາຍຫລື ຫລືເຂົາຖືກຂ້າເຫມືອນຢ່າງຜູ້ຂ້າ
ເຂົາຖືກຂ້າ
8 ດ້ວຍການຂັບໄລ່ ດ້ວຍການກວາດໄປເປັນຊະເລີຍ ພຣະອົງຊົງຕໍ່ສູ້ແຍ້ງກັບເຂົາ ພຣະອົງຊົງກວາດເຂົາໄປ
ດ້ວຍລົມດຸເດືອດຂອງພຣະອົງໃນວັນແຫ່ງລົມຕາເວັນອອກ

9 ເຫດສັນນັ້ນຈະລຶບມົນທິນກັມຊົ່ວຂອງຢາໂຄບຢ່າງນີ້ແຫລະ ແລະນີ້ຈະເປັນຜົນເຕັມຂນາດໃນການປົດບາບ
ຂອງເຂົາ ຄືເມື່ອເຂົາທຳສີລາທັງສິ້ນຂອງແທ່ນບູຊາ ໃຫ້ເປັນເຫມືອນຫີນດິນທີ່ຖືກບົດໃຫ້ຫມຸ່ນ ຈະບໍ່ມີອາເຊຣາ
ຫລືແທ່ນເຄື່ອງຫອມຕັ້ງຢູ່ໃດ
10 ເພາະເມືອງມີປ້ອມກໍມີຢູ່ໂດດດ່ຽວ ທີ່ອາສັຍກໍຣົກຮ້າງຖືກປະຖິ້ມຢ່າງກັບຖິ່ນກັນດານ ລູກງົວຫາກິນຢູ່ບ່ອນນັ້ນ
ມັນນອນລົງບ່ອນນັ້ນ ແລະຖິ້ມງ່າໄມ້
11 ເມື່ອງ່ານັ້ນແຫ້ງ ມັນກໍຫັກ ພວກຜູ້ຍິງກໍມາເອົາມັນໄປກໍ່ໄຟ ເພາະທີ່ນັ້ນເປັນຊົນຊາດທີ່ບໍ່ມີຄວາມເຂົ້າໃຈ ເຫດ
ສັນນັ້ນ ຜູ້ທີ່ຊົງສ້າງເຂົາກໍຈະບໍ່ສົງສານເຂົາ ຜູ້ທີ່ຊົງປັ້ນເຂົາຈະບໍ່ຊົງສຳແດງພຣະຄຸນແກ່ເຂົາ
12 ໃນວັນນັ້ນ ຕັ້ງແຕ່ແມ່ນ້ຳເອີຟຣາດໄປຈົນເຖິງຫ້ວຍນ້ຳເອຢິບ ພຣະຜູ້ເປັນເຈົ້າຈະຊົງນວດເອົາເຂົ້າ ໂອ ປະຊາ
ຊົນອິສຣາເອນເອີຍ ເຈົ້າຈະຖືກເກັບຮວມເຂົ້າມາເທື່ອລະຄົນໆ
13 ໃນວັນນັ້ນເຂົາຈະເປົ່າເຂົາສັດໃຫຍ່ ແລະບັນດາຜູ້ທີ່ກຳລັງພິນາດຢູ່ໃນແຜ່ນດິນອັສຊີເຣັຽ ແລະບັນດາຜູ້ຖືກຂັບ
ໄລ່ອອກໄປຍັງແຜ່ນດິນເອຢິບຈະມານະມັສການພຣະຜູ້ເປັນເຈົ້າ ເທິງພູເຂົາບໍຣິສຸດທີ່ເຢຣູຊາເລັມ

## 28 ຕັກເຕືອນເອຟຣາອິມ

Judgment on Corrupt Rulers, Priests, and Prophets

1 ວິບັດແກ່ມົງກຸດອັນໂອ່ອ່າຂອງຄົນຂີ້ເມົາແຫ່ງເອຟຣາອິມ ແລະແກ່ດອກໄມ້ທີ່ກຳລັງຣ່ວງໂຣຍແຫ່ງຄວາມງາມ
ອັນຮຸ່ງເຮືອງຂອງເຂົາ ຊຶ່ງຢູ່ເທິງຍອດພູໃນທີ່ລຸ່ມອັນອຸດົມຂອງບັນດາຜູ້ທີ່ເຫລົ້າອະງຸ່ນມືຊັຍ
2 ເບິ່ງແມ, ອົງພຣະຜູ້ເປັນເຈົ້າຊົງມີຜູ້ນຶ່ງທີ່ມີກຳລັງ ແລະແຂງແຮງເຫມືອນພະຍຸໝາກເຫັບອັນເປັນພະຍຸທຳລາຍ
ເຫມືອນພະຍຸນ້ຳທີ່ກຳລັງໄຫລຖ້ວມຊຶ່ງຈະແກ່ວງລົງເຖິງດິນດ້ວຍຄວາມຮຸນແຮງ
3 ມົງກຸດອັນໂອ່ອ່າຂອງຄົນຂີ້ເມົາແຫ່ງເອຟຣາອິມ ຈະຖືກຢຽບຢູ່ໃຕ້ຕີນ
4 ແລະດອກໄມ້ທີ່ກຳລັງຣ່ວງໂຣຍແຫ່ງຄວາມງາມຮຸ່ງເຮື່ອງຂອງເຂົາ ຊຶ່ງຢູ່ເທິງຍອດພູໃນທີ່ລຸ່ມອັນອຸດົມ ຈະເປັນ
ເຫມືອນຫມາກເດື່ອທີ່ເລີ້ມສຸກກ່ອນຣະດູຮ້ອນ ເມື່ອຄົນເຫັນເຂົ້າກໍກິນມັນເສັຽ ພໍເຖິງມືເຂົາເທົ່ານັ້ນ
5 ໃນວັນນັ້ນ ພຣະເຈົ້າຈອມໂຍທາຈະເປັນມົງກຸດສັກສີ ແລະເປັນມົງກຸດແຫ່ງຄວາມງາມແກ່ຄົນທີ່ເຫລືອຢູ່ແຫ່ງ
ຊົນຊາດຂອງພຣະອົງ
6 ແລະເປັນອະນຸພາບແຫ່ງຄວາມຍຸດຕິທັມແກ່ເຂົາຜູ້ນັ່ງພິພາກສາ ແລະເປັນກຳລັງຂອງຜູ້ຄົນເຫລົ່ານັ້ນ ຜູ້ຫັນ
ການສົງຄາມກັບເສັຽທີ່ປະຕູເມືອງ
7 ເຂົາເຫລົ່ານີ້ລີເລືອໄປດ້ວຍເຫລົ້າອະງຸ່ນເຫມືອນກັນ ແລະໂຊເຊໄປດ້ວຍເຫລົ້າ ປະໂຣຫິດແລະຜູ້ປະກາດພຣະ
ທັມກໍດື່ມເຫລົ້າຈົນເມົາໂຊເຊ ເຂົາເຫັນຜິດໄປ ເຂົາສະດຸດໃນການໃຫ້ຄຳພິພາກສາ
8 ໂຕະຕັ່ງບ່ອນເຂົານັ່ງທຳງານໄດ້ເປີເປື້ອນໄປດ້ວຍຮາກ ບໍ່ມີບ່ອນສະອາດເຫລືອຢູ່ໃຫ້ເຫັນເລີຍ
9 ພວກເຂົາໄດ້ເວົ້າກ່ຽວກັບຂ້າພະເຈົ້າວ່າ, “ຄົນນີ້ຄິດວ່າຈະສອນໃຜ ໃຜຕ້ອງການຄຳສອນຂອງເຂົາ ມັນດີສຳລັບ
ເດັກນ້ອຍທີ່ພວມກິນນົມເທົ່ານັ້ນ
10 ເຂົາພຍາຍາມສອນພວກເຮົາເປັນຄຳໆ ເປັນແຖວໆ ແລະເປັນຂໍ້ໆ”
11 ພຣະອົງຈະຊົງກ່າວກັບຊົນຊາດນີ້ ໂດຍຕ່າງພາສາ ແລະດ້ວຍປາກຂອງຄົນຕ່າງດ້າວ
12 ພຣະອົງຊົງໃຫ້ພວກທ່ານທັງຫມົດພັກຜ່ອນ ແລະຊົງເລົ້າໂລມໃຈ ແຕ່ພວກທ່ານກໍຍັງບໍ່ຍອມເຊື່ອຟັງພຣະອົງ
13 ດ້ວຍເຫດນີ້ ພຣະຄຳຂອງພຣະຜູ້ເປັນເຈົ້າຈຶ່ງເປັນຢ່າງນີ້ແກ່ເຂົາ ເປັນຄຳໆ ເປັນແຖວໆ ເປັນຂໍ້ໆ ເພື່ອເຂົາຈະ
ໄປແລະຖອຍຫລັງ ແລະຈະແຕກ ແລະຈະຖືກບ້ວງແຮ້ວ ແລະຈະຖືກຈັບໄປ

**ຫີນຮາກແກ້ວເທິງພູຊີໂອນ**

14 ເພາະສະນັ້ນ ພວກເຈົ້າທັງຫລາຍຜູ້ມັກເຍາະເຍີ້ຍເອີຍ ຈົ່ງຟັງພຣະທັມຂອງພຣະຜູ້ເປັນເຈົ້າ ຄືເຈົ້າຜູ້ປົກຄອງ
ຊົນຊາດນີ້ໃນເຢຣູຊາເລັມ
15 ເພາະເຈົ້າທັງຫລາຍໄດ້ກ່າວແລ້ວວ່າ "ເຮົາໄດ້ທຳສັນຍາໄວ້ກັບຄວາມຕາຍ ແລະໄດ້ຕົກລົງໄວ້ກັບພິພົບຄົນ
ຕາຍແລ້ວ ໂດຍແນ່ໃຈວ່າ ເມື່ອໄພວິບັດມາເຖິງມັນຈະບໍ່ທຳລາຍພວກເຈົ້າ ເພາະພວກເຈົ້າອາສັຍພວກຂີ້ຕົວະ
ຄວາມຫລອກລວງເປັນເຄື່ອງຊ່ອຍ
16 ດັ່ງນັ້ນແຫລະ ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວວ່າ,"ເຮົາຈະຕັ້ງຮາກຖານອັນໜັ້ນຄົງແຂງແຮງໃສ່ພູຊີໂອນ ຈະຝັງ
ຫີນຮາກແກ້ວໃສ່ໄວ້ ໃນຫີນນັ້ນຈະມີຄຳຂຽນໃສ່ວ່າ ຄົນທີ່ເຊື່ອຄືຜູ້ໝັ້ນຄົງ ແລະອົດທົນ
17 ຄວາມຍຸດຕິທັມຈະເປັນສາຍແທກຮາກຖານ ແລະຄວາມສັດຊື່ເປັນສາຍຢັ່ງລົງໄປ ແຕ່ພະຍຸຫມາກເຫັບຈະ
ກວາດເອົາຄວາມຕົວະທີ່ເຈົ້າອາສັຍ ແລະນ້ຳຈະຖ້ວມທຳລາຍແນວປ້ອງກັນຂອງເຈົ້າ"
18 ແລ້ວຄຳສັນຍາຂອງເຈົ້າກັບຄວາມຕາຍເປັນໂມຄະ ແລະຂໍ້ຕົກລົງຂອງເຈົ້າກັບພິພົບຄົນຕາຍຈະບໍ່ດຳຣົງ ເມື່ອ
ພັຍວິບັດອັນຖ້ວມທົ້ນຜ່ານໄປ ເຈົ້າຈະຖືກຢຽບຢ່ຳລົງດ້ວຍໂທດນັ້ນ
19 ມັນຜ່ານໄປຫລາຍເທົ່າໃດມັນກໍຈະເອົາຕົວເຈົ້າ ເພາະມັນຈະຜ່ານໄປເຊົ້າແລ້ວເຊົ້າອີກ ທັງກາງເວັນແລະກາງ
ຄືນ ເມື່ອເຂົ້າໃຈຂ່າວກໍຈະເກີດແຕ່ຄວາມຢ້ານສັ່ນສາຍເທົ່ານັ້ນ
20 ເພາະບ່ອນນອນນັ້ນສັ້ນເກີນທີ່ຄົນນຶ່ງຄົນໃດຈະຢຽດຕົວຢູ່ເທິງນັ້ນ ແລະຜ້າຫົ່ມກໍແຄບບໍ່ພໍຄຸມຕົວ
21 ເພາະວ່າພຣະຜູ້ເປັນເຈົ້າຈະຊົງລຸກຂຶ້ນເຫມືອນທີ່ເທິງພູເປຣາຊິມ ພຣະອົງຈະພິໂຣດຢ່າງທີ່ໃນຮ່ອມພູກິເບໂອນ
ເພື່ອກະທຳ ພຣະຣາຊກິດຂອງພຣະອົງ ພຣະຣາຊກິດຂອງພຣະອົງນັ້ນແປກປລາດ ແລະເພື່ອກະທຳງານຂອງ
ພຣະອົງ ງານຂອງພຣະອົງກໍເລິກລັບ
22 ເພາະສະນັ້ນ ຢ່າເປັນຄົນເຍາະເຍີ້ຍ ຢ້ານວັນພັນທະຂອງເຈົ້າຈະເຂັ້ມງວດຂຶ້ນ ເພາະຂ້າພະເຈົ້າໄດ້ຍິນຄຳຕັດ
ສິນໃຈກຳນົດການທຳລາຍເຫນືອແຜ່ນດິນທັງສິ້ນແລ້ວຈາກພຣະຜູ້ເປັນເຈົ້າຈອມໂຍທາ
23 ງ່ຽງຫູລົງ ແລະຟັງສຽງຂ້າພະເຈົ້າ ຈົ່ງເອົາໃຈໃສ່ແລະຟັງຄຳເວົ້າຂອງຂ້າພະເຈົ້າ
24 ເຂົາຜູ້ໄຖ່ນາເພື່ອຫວ່ານ ໄຖຢູ່ສເມີຫລື ເຂົາເບີກດິນແລະຄາດຢູ່ເປັນນິດຫລື
25 ເມື່ອເຂົາຕຽມດິນແລ້ວ ເຂົາບໍ່ຫວ່ານຂີ້ຫມີ້ນແລະຜັກຊີ ເຂົາບໍ່ໃສ່ເຂົ້າເດືອຍເປັນແຖວ ແລະເຂົ້າບເລໃນທີ່ອັນ
ເຫມາະສົມຂອງມັນ ແລະຫວ່ານພືດເປັນເມັດແນວອື່ນຕາມແຄມນາຫລື
26 ເພາະພຣະອົງຊົງສັ່ງສອນເຂົາຖືກຕ້ອງ ພຣະຜູ້ເປັນເຈົ້າຂອງເຂົາໄດ້ສອນເຂົາ
27 ເຂົາບໍ່ນວດຂີ້ຫມີ້ນດ້ວຍໄມ້ນວດເຂົ້າ ແລະເຂົາບໍ່ເອົາລໍ້ກວຽນກິ້ງທັບເມັດຜັກຊີ ແຕ່ເຂົາເອົາໄມ້ຂນາດພໍດີຕີຂີ້
ຫມີ້ນແລະຜັກຊີໃຫ້ຫລຸດອອກ
28 ຄົນໃດບົດເຂົ້າທີ່ເຮັດເຂົ້າຈີ່ຫລື ບໍ່ເລີຍ ເຂົາບໍ່ນວດມັນເປັນນິດ ເມື່ອເຂົາຂັບລໍ້ກວຽນທຽມມ້າທັບມັນແລ້ວ ເຂົາ
ບໍ່ໄດ້ບົດມັນ
29 ເຣື່ອງນີ້ມາຈາກພຣະຜູ້ເປັນເຈົ້າຈອມໂຍທາດ້ວຍ ພຣະອົງອັດສະຈັນໃນການປຶກສາ ແລະວິເສດໃນເຣື່ອງສະຕິ
ປັນຍາ

## 29 ຊາຕາກັມຂອງກຸງເຢຣູຊາເລັມ

The Siege of Jerusalem

1 ໂອ ອາຣີເອນ ອາຣີເອນ ນະຄອນຊຶ່ງດາວິດຊົງຕັ້ງຄ້າຍ ຈົ່ງເພີ້ມປີເຂົ້າກັບປີ ຈົ່ງໃຫ້ມີເທສການຕາມຮອບຂອງ
ມັນ
2 ເຮົາຍັງຈະໃຫ້ອາຣີເອນທຸກໃຈ ຈະມີການຮ້ອງຄ່ຳຄວນແລະຮ້ອງທຸກ ແລະທົ່ວທັງນະຄອນກໍຈະເປັນດັ່ງແທ່ນບູ
ຊາ

3 ເຮົາຈະຕັ້ງຄ້າຍຢູ່ຮອບເຈົ້າ ແລະເຮົາຈະລ້ອມເຈົ້າກັບບັນດາທຳຮົບ ແລະເຮົາຈະໂຈມຕີເຈົ້າ

4 ເຈົ້າຈະເວົ້າມາຈາກທີ່ເລິກຂອງແຜ່ນດິນໂລກ ຄຳຂອງເຈົ້າຈະມາຈາກທີ່ຕ່ຳລົງໃນຂີ້ຝຸ່ນດິນ ສຽງຂອງເຈົ້າຈະມາຈາກພື້ນດິນເຫມືອນສຽງຜີ ແລະຄຳເວົ້າຂອງເຈົ້າຈະກະຊິບອອກມາຈາກຂີ້ຝຸ່ນດິນ

5 ແຕ່ມວນສັດຕຣູຂອງເຈົ້າຈະເຫມືອນຂີ້ຝຸ່ນດິນລະອຽດ ແລະຜູ້ຫນ້າຢ້ານທັງມວນຈະເຫມືອນແກບທີ່ຟົ້ງຫາຍໄປ ຊົ່ວບຸດດຽວແລະໃນທັນທີທັນໃດ

6 ພຣະຜູ້ເປັນເຈົ້າຈອມໂຍທາຈະຢ້ຽມຢາມເຈົ້າ ດ້ວຍຟ້າຮ້ອງຟ້າແມບແລະດ້ວຍແຜ່ນດິນໄຫວ ແລະດ້ວຍລົມຫົວກຸດແລະພະຍຸ ດ້ວຍແປວແຫ່ງໄຟເຜົາຜານ

7 ມວນປະຊາຊາດທັງສິ້ນທີ່ຕໍ່ສູ້ກັບອາຣີເອນທັງຫມົດທີ່ຕໍ່ສູ້ກັບເຂົາແລະກັບທີ່ກຳບັງເຂັ້ມແຂງຂອງເຂົາ ແລະທຳໃຫ້ເຂົາທຸກໃຈຈະເປັນເຫມືອນຄວາມຝັນ ຄືນິມິດໃນກາງຄືນ

8 ເຫມືອນຢ່າງເມື່ອຄົນຫິວຝັນວ່າເຂົາກຳລັງກິນຢູ່ ແລະຕື່ນຂຶ້ນກໍຍັງຫິວຢູ່ບໍ່ອີ່ມ ຫລືເຫມືອນຢ່າງເມື່ອຄົນຫິວນ້ຳຝັນວ່າເຂົາກຳລັງດື່ມຢູ່ ແລ້ວຕື່ນຂຶ້ນມາອ່ອນເພັຽ ຄໍຂອງເຂົາຍັງເຫືອດແຫ້ງ ມວນປະຊາຊາດທັງສິ້ນທີ່ຕໍ່ສູ້ກັບພູຊີໂອນກໍຈະເປັນເຊັ່ນນັ້ນ

9 ຈົ່ງກະທຳຕົວໃຫ້ງົງງວຍແລະຢູ່ໃນສະພາບງວຍງົງ ຈົ່ງກະທຳຕົວໃຫ້ບອດແລະເປັນຄົນຕາບອດ ເຂົາມຶນເມົາແຕ່ບໍ່ແມ່ນດ້ວຍເຫລົ້າອະງຸ່ນ ເຂົາໂຊເຊ ແຕ່ບໍ່ແມ່ນດ້ວຍຣົດເຫລົ້າ

10 ເພາະວ່າພຣະຜູ້ເປັນເຈົ້າຊົງຖອກເທອານຸພາບແຫ່ງຄວາມຫລັບສນິດລົງເຫນືອເຈົ້າ ແລະປິດຕາຄືທ່ານຜູ້ປະກາດພຣະທັມຂອງເຈົ້າແລ້ວ ແລະຄຸມຫົວ ຄືທ່ານຜູ້ເລັງຍານຂອງເຈົ້າໄວ້ແລ້ວ

11 ແລະແກ່ທ່ານທັງຫລາຍ ນິມິດນີ້ທັງສິ້ນໄດ້ກາຍເປັນເຫມືອນຖ້ອຍຄຳໃນຫນັງສືທີ່ປະທັບຕາ ເມື່ອຄົນໃຫ້ແກ່ຄົນນຶ່ງທີ່ອ່ານໄດ້ກ່າວວ່າ “ອ່ານນີ້ເບິ່ງ” ເຂົາວ່າ “ຂ້ອຍອ່ານບໍ່ໄດ້ເພາະມີຕາປະທັບ”

12 ເມື່ອເຂົາໃຫ້ຫນັງສືແກ່ຄົນນຶ່ງທີ່ອ່ານບໍ່ໄດ້ກ່າວວ່າ “ອ່ານນີ້ເບິ່ງ” ເຂົາວ່າ “ຂ້ອຍບໍ່ຮູ້ຫນັງສື”

13 ແລະອົງພຣະຜູ້ເປັນເຈົ້າກ່າວວ່າ, “ເພາະຊົນຊາດນີ້ເຂົ້າມາໃກ້ດ້ວຍປາກຂອງເຂົາ ແລະໃຫ້ກຽດເຮົາດ້ວຍຮີມຝີປາກຂອງເຂົາ ແຕ່ເຂົາໃຫ້ຈິດໃຈຂອງເຂົາຫ່າງໄກຈາກເຮົາ ເຂົາຢຳເກງເຮົາພຽງແຕ່ເຫມືອນເປັນບັນຍັດຂອງມະນຸດທີ່ທ່ອງຈຳກັນມາ

14 ເຫດສັນນັ້ນ ເບິ່ງແມ, ເຮົາຈະກະທຳສິ່ງມະຫັສຈັນກັບຊົນຊາດນີ້ອີກ ປລາດແລະອັດສະຈັນ ສະຕິປັນຍາຂອງຄົນມີປັນຍາຂອງເຂົາຈະພິນາດໄປ ແລະຄວາມເຂົ້າໃຈຂອງຄົນທີ່ເຂົ້າໃຈຈະຖືກປິດບັງໄວ້

15 ວິບັດແກ່ຜູ້ທີ່ພຍາຍາມເຊື່ອງແຜນການຂອງເຂົາໄວ້ເລິກຈາກພຣະຜູ້ເປັນເຈົ້າ ຊຶ່ງການກະທຳຂອງເຂົາຢູ່ໃນຄວາມມືດ ຜູ້ຊຶ່ງກ່າວວ່າ “ໃຜເຫັນເຮົາ ໃຜຈື່ເຮົາໄດ້”

16 ເຈົ້າກັບປິ້ນທຸກສິ່ງຈາກຫນ້າມືເປັນຫລັງມື ຈະຖືວ່າຊ່າງປັ້ນຫມໍ້ເທົ່າກັບດິນຫນຽວ ແລະສິ່ງທີ່ຖືກສ້າງຈະເວົ້າເຣື່ອງຜູ້ ສ້າງມັນວ່າ “ເຂົາບໍ່ໄດ້ສ້າງຂ້ອຍ” ຫລືສິ່ງທີ່ຖືກປັ້ນຂຶ້ນຈະເວົ້າເຣື່ອງຜູ້ປັ້ນມັນວ່າ “ເຂົາບໍ່ມີຄວາມເຂົ້າໃຈຫຍັງເລີຍ” ຢ່າງນີ້ຫລື”

**ຄວາມຫວັງສຳລັບອະນາຄົດ**

Hope for the Future

17 ບໍ່ແມ່ນອີກຫນ້ອຍນຶ່ງເທົ່ານັ້ນຫລື ທີ່ເລບານອນຈະຖືກປ່ຽນໃຫ້ເປັນສວນຫມາກໄມ້ ແລະສວນຫມາກໄມ້ຈະຖືກວ່າເປັນປ່າ

18 ໃນວັນນັ້ນ ຄົນຫູຫນວກຈະໄດ້ຍິນຖ້ອຍຄຳຂອງຫນັງສື ແລະຕາຂອງຄົນຕາບອດຈະເຫັນອອກມາຈາກຄວາມມືດຂອງເຂົາ

19 ຄົນໃຈອ່ອນສຸພາບຈະໄດ້ຄວາມຊື່ນບານສົດໃສໃນພຣະຜູ້ເປັນເຈົ້າ ແລະຄົນຍາກຈົນຖ່ອມກາງມະນຸດຈະເລີງໂລດໃນອົງບໍຣິສຸດແຫ່ງອິສຣາເອນ

20 ເພາະວ່າຜູ້ຫນ້າຢ້ານກົວຈະສູນໄປ ແລະຄົນມັກເຍາະເຍີ້ຍຈະຫມົດໄປ ແລະຄົນທັງປວງທີ່ຫາໂອກາດກະທຳ
ຊົ່ວຈະຖືກຕັດຂາດ
21 ຄືຜູ້ທີ່ໃສ່ຄວາມຄົນອື່ນດ້ວຍຖ້ອຍຄຳຂອງເຂົາ ແລະວ່າງບ້ວງໄວ້ດັກເຂົາຜູ້ກ່າວຄຳຂນາບທີ່ປະຕູເມືອງ ແລະ
ດ້ວຍຖ້ອຍຄຳທີ່ບໍ່ເປັນແກ່ນສານ ເຂົາຂັດຂວາງຄົນທີ່ຢູ່ຝ່າຍຖືກເສັຽ
22 ເພາະສະນັ້ນພຣະຜູ້ເປັນເຈົ້າຊົງໄຖ່ອັບຣາຮາມກ່າວດັ່ງນີ້ກ່ຽວກັບເຊື້ອສາຍຂອງຢາໂຄບວ່າ “ຢາໂຄບຈະບໍ່
ຕ້ອງອັບອາຍອີກ ຫນ້າຂອງເຂົາຈະບໍ່ຊີດລົງອີກຕໍ່ໄປ
23 ເພາະເມື່ອເຂົາເຫັນລູກຫລານຂອງເຂົາຊຶ່ງເປັນຜົນງານແຫ່ງມືຂອງເຮົາໃນຫມູ່ພວກເຂົາ ເຂົາທັງຫລາຍຈະຖື
ວ່ານາມຂອງເຮົາສັກສິດ ເຂົາທັງຫລາຍຈະຖືວ່າອົງບໍຣິສຸດຂອງຢາໂຄບສັກສິດ ແລະຈະຢ້ານກົວພຣະຜູ້ເປັນ
ເຈົ້າແຫ່ງອິສຣາເອນ
24 ບັນດາຜູ້ທີ່ຜິດຝ່າຍຈິດໃຈຈະມາເຖິງຄວາມເຂົ້າໃຈ ແລະບັນດາຜູ້ທີ່ຈົ່ມພຶມພຳຈະຍອມຮັບຄວາມຮອບຮູ້”

## 30 ຂໍ້ສັນຍາກັບເອຢິບບໍ່ມີປໂຍດ

The Futility of Reliance on Egypt

1 ພຣະຜູ້ເປັນເຈົ້າກ່າວວ່າ, “ວິບັດແກ່ລູກຫລານທີ່ດື້ດຶງ ຜູ້ກະທຳແຜນການ ແຕ່ບໍ່ແມ່ນຂອງເຮົາ ຜູ້ກະທຳສົນທິ
ສັນຍາ ແຕ່ບໍ່ແມ່ນຕາມນ້ຳໃຈເຮົາ ເຂົາຈະເພີ້ມບາບຊ້ອນບາບ
2 ຜູ້ອອກເດີນໄປຍັງເອຢິບ ໂດຍບໍ່ຂໍຄຳປຶກສາຂອງເຮົາ ເພື່ອຈະໄປລີ້ພັຍໃນຄວາມອາຣັກຂາຂອງຟາຣາໂອ
ເພື່ອຈະຫາທີ່ກຳບັງໃນຮົ່ມເງົາຂອງເອຢິບ
3 ເຫດສັນນັ້ນ ການອາຣັກຂາຂອງຟາຣາໂອ ຈະກັບເປັນຄວາມອັບອາຍຂອງເຈົ້າ ແລະທີ່ກຳບັງໃນຮົ່ມເງົາຂອງ
ເອຢິບກັບເປັນທີ່ຂາຍຫນ້າຂອງເຈົ້າ
4 ເພາະເຖິງແມ່ນວ່າຂ້າຣາຊການຂອງເຂົາຢູ່ທີ່ໂຊອານ ແລະທູດຂອງເຂົາໄປເຖິງຮາເນສ
5 ທຸກຄົນໄດ້ຮັບຄວາມອັບອາຍ ໂດຍຊົນຊາດນຶ່ງຊຶ່ງຊ່ອຍເຂົາບໍ່ໄດ້ ຊຶ່ງບໍ່ໄດ້ນຳຄວາມຊ່ອຍເຫລືອຫລືປໂຍດມາ
ໃຫ້ ໄດ້ແຕ່ຄວາມອັບອາຍແລະຄວາມຂາຍຫນ້າ
6 ຖ້ອຍຄຳເຣື່ອງສັດປ່າແຫ່ງເນເກັບ ເຂົາທັງຫລາຍບັນທຸກຊັບສົນຂອງເຂົາເທິງຫລັງອູດໄປຕລອດແຜ່ນດິນແຫ່ງ
ຄວາມຍາກລຳບາກແສນຣະທົມ ບ່ອນຊຶ່ງສິງໂມແມ່ແລະສິງໂຕຜູ້ ງູພິດແລະມັງກອນເຫາະໄດ້ ໄປຍັງຊົນຊາດ
ນຶ່ງຊຶ່ງຈະຊ່ອຍເຂົາບໍ່ໄດ້
7 ເພາະຄວາມຊ່ອຍເຫລືອຂອງເອຢິບນັ້ນໄຮ້ຄ່າແລະບໍ່ມີປໂຍດ ເຫດສັນນັ້ນ ເຮົາຈຶ່ງເອີ້ນເຂົາວ່າ “ຣາຮັບຜູ້ນັ່ງ
ເສີຍ”
8 ບັດນີ້ ໄປເຖີດ ຂຽນລົງໄວ້ເທິງແຜ່ນຈາລຶກຕໍ່ຫນ້າເຂົາແລະຈົດໄວ້ໃນຫນັງສື ເພື່ອໃນເວລາທີ່ຈະມາເຖິງຈະເປັນ
ສັກຂີພິຍານເປັນນິດ
9 ເພາະວ່າເຂົາທັງຫລາຍເປັນຊົນຊາດດື້ດຶງ ເປັນລູກທີ່ຕົວະ ເປັນຫລານທີ່ບໍ່ຍອມຟັງພຣະທັມຂອງພຣະຜູ້ເປັນ
ເຈົ້າ
10 ຜູ້ກ່າວແກ່ຜູ້ເລັງຍານວ່າ “ຢ່າເຫັນເລີຍ” ແລະແກ່ປະກາດພຣະຄຳວ່າ “ຢ່າພຍາກອນສິ່ງທີ່ຖືກຕ້ອງແກ່ເຮົາເລີຍ
ຈົ່ງເວົ້າສິ່ງທີ່ພວກເຮົາຢາກຟັງ ໃຫ້ພວກເຮົາຍຶດຖືສິ່ງທີ່ລວງຕາລວງໃຈໄວ້
11 ອອກຈາກທາງເສັຽ ຫັນເສັຽຈາກທາງ ໃຫ້ອົງບໍຣິສຸດຂອງອິສຣາເອນພົ້ນຫນ້າພົ້ນຕາຂອງເຮົາເສັຽ”
12 ເຫດສັນນັ້ນ ອົງບໍຣິສຸດຂອງອິສຣາເອນກ່າວດັ່ງນີ້ວ່າ “ເພາະເຈົ້າດູຫມິ່ນຖ້ອຍຄຳນີ້ ແລະວາງໃຈໃນການບີບບັງ
ຄັບແລະການທຸຈຣິດ ແລະເພິ່ງອາສັຍສິ່ງເຫລົ່ານັ້ນ

13 ເພາະສະນັ້ນ ຄວາມບາບຜິດນີ້ຈະເປັນແກ່ເຈົ້າ ເຫມືອນກຳແພງສູງແຍກອອກໂຜ່ອອກໄປ ກຳລັງຈະພັງ ຊຶ່ງຈະ
ພັງຢ່າງປັດຈຸບັນທັນດ່ວນໃນພິບຕາດຽວ
14 ພຣະອົງຈະຊົງກະທຳໃຫ້ແຕກເຫມືອນພາຊນະຂອງຊ່າງຫມໍ້ແຕກ ຊຶ່ງແຕກແຍກຢ່າງບໍ່ປານີ ປ່ຽງທີ່ແຕກນັ້ນບໍ່
ພົບປ່ຽງດີ ພໍທີ່ຈະຕັກໄຟອອກຈາກເຕົາ ຫລືໃຊ້ຕັກນ້ຳອອກຈາກບໍ່ເກັບນ້ຳ"
15 ເພາະພຣະຜູ້ເປັນເຈົ້າອົງບໍຣິສຸດແຫ່ງອິສຣາເອນກ່າວດັ່ງນີ້ວ່າ "ໃນການກັບແລະຢຸດພັກ ເຈົ້າທັງຫລາຍຈະ
ລອດ ກຳລັງຂອງເຈົ້າຈະຢູ່ໃນຄວາມສງົບແລະຄວາມໄວ້ວາງໃຈ ແລະເຈົ້າກໍບໍ່ຍອມທຳຕາມ"
16 ແຕ່ເຈົ້າທັງຫລາຍວ່າ "ຢ່າເລີຍ ເຮົາຈະຂີ່ມ້າຫນີໄປ" ເຫດສັນນັ້ນ ເຈົ້າກໍຈະຫນີໄປ ແລະ ເຮົາຈະຂີ່ມ້າໄວທີ່ສຸດ"
ເພາະສະນັ້ນ ຜູ້ໄລ່ຕາມເຈົ້າທັງຫລາຍຈະໄວທີ່ສຸດ
17 ຄົນພັນນຶ່ງຈະຫນີເພາະຄຳຂູ່ເຂັນຂອງຄົນໆດຽວ ເຈົ້າທັງຫລາຍຈະຫນີເພາະຄຳຂູ່ເຂັນຂອງຄົນຫ້າຄົນ ຈົນຈະ
ເຫລືອແຕ່ເຈົ້າເຫມືອນເສົາທຸງເທິງຍອດພູ ເຫມືອນຫລັກທຸງທີ່ຈ້າຍພູເທົ່ານັ້ນ

**ພຣະຄຸນຂອງພຣະເຈົ້າທີ່ຊົງສັນຍາປະທານແກ່**
**ອິສຣາເອນ**

God's Promise to Zion

18 ເຫດສັນນັ້ນ ພຣະຜູ້ເປັນເຈົ້າຊົງຄອຍທີ່ຈະຊົງພຣະກະຣຸນາເຈົ້າທັງຫລາຍ ເພາະສະນັ້ນ ພຣະອົງຈຶ່ງຊົງລຸກຂຶ້ນ
ເພື່ອເມດຕາເຈົ້າ ເພາະພຣະຜູ້ເປັນເຈົ້າເປັນພຣະເຈົ້າແຫ່ງຄວາມຍຸດຕິທັມ ຜູ້ທີ່ຄອຍຖ້າພຣະອົງຈະໄດ້ຮັບ
ພຣະພອນ
19 ປະຊາຊົນຜູ້ອາສັຍໃນຊີໂອນ ຢູ່ໃນເຢຣູຊາເລັມເອີຍ ເຈົ້າຈະບໍ່ຮ້ອງໄຫ້ອີກຕໍ່ໄປ ເມື່ອໄດ້ຍິນສຽງເຈົ້າຮ້ອງທູນ
ພຣະອົງຈະຊົງເມດຕາຕໍ່ເຈົ້າ ເມື່ອພຣະອົງຊົງໄດ້ຍິນ ພຣະອົງຈະຕອບເຈົ້າ
20 ເຖິງແມ່ນອົງພຣະຜູ້ເປັນເຈົ້າປະທານອາຫານແຫ່ງຄວາມຍາກລຳບາກແລະນ້ຳແຫ່ງຄວາມທຸກໃຈໃຫ້ແກ່ເຈົ້າ
ເຖິງປານນັ້ນພຣະຄຣູຂອງເຈົ້າຈະບໍ່ລີ້ຊ່ອນຕົວອີກເລີຍ ແຕ່ຕາຂອງເຈົ້າຈະເຫັນພຣະຄຣູຂອງເຈົ້າ
21 ເມື່ອເຈົ້າຫັນໄປທາງຂວາຫລືຫັນໄປທາງຊ້າຍ ຫູຂອງເຈົ້າຈະໄດ້ຍິນສຽງເວົ້າຕາມຫລັງເຈົ້າວ່າ "ນີ້ເປັນຫົນທາງ
ຈົ່ງຍ່າງໃນທາງນີ້"
22 ແລ້ວເຈົ້າຈະທຳລາຍຮູບໂຄຣົບຫລໍ່ໂອບດ້ວຍທອງຄຳຂອງເຈົ້າ ເຈົ້າຈະກະຈາຍມັນໄປຢ່າງຂອງບໍ່ສະອາດ
ແລະເຈົ້າຈະກ່າວແກ່ມັນວ່າ"ຫນີໄປໃຫ້ພົ້ນ"
23 ພຣະອົງຈະປະທານຝົນໃຫ້ແກ່ເມັດພືດຊຶ່ງເຈົ້າຫວ່ານລົງທີ່ດິນແລະປະທານເຂົ້າ ຊຶ່ງເປັນຜລິດຜົນຂອງດິນ
ແລະເຂົ້າຈະອຸດົມແລະສົມບູນ ໃນວັນນັ້ນງົວຂອງເຈົ້າຈະກິນຢູ່ໃນເດີ່ນຫຍ້າກວ້າງ
24 ງົວກັບລໍທີ່ໃຊ້ທຳນາຈະມີຫຍ້າແຫ້ງຢ່າງດີກິນ
25 ເທິງພູສູງທຸກແຫ່ງ ແລະເທິງເນີນສູງທຸກແຫ່ງຈະມີລຳທານມີນ້ຳໄຫລ ໃນວັນທີ່ມີການຂ້າກັນໃຫຍ່ ເມື່ອຫໍຄອຍ
ພັງລົງ
26 ນອກຈາກນີ້ ແສງສວ່າງຂອງດວງຈັນຈະເຫມືອນແສງສວ່າງຂອງດວງຕາເວັນຈະເປັນເຈັດເທົ່າ ແລະເປັນຢ່າງ
ແສງສວ່າງຂອງເຈັດວັນ ໃນວັນທີ່ພຣະຜູ້ເປັນເຈົ້າຊົງພັນຮອຍບາດເຈັບແຫ່ງຊົນຊາດຂອງພຣະອົງ ແລະຮັກສາ
ບາດແຜຊຶ່ງເຂົາຖືກພຣະອົງຊົງຕີນັ້ນ

Judgment on Assyria

27 ເບິ່ງແມ, ພຣະນາມຂອງພຣະຜູ້ເປັນເຈົ້າມາຈາກທີ່ໄກ ຮ້ອນດ້ວຍຄວາມກົ້ວຂອງພຣະອົງ ໃນຄວັນຕຶບຫນາທີ່
ລອຍສູງຂຶ້ນໄປ ຮີມພຣະໂອດຂອງພຣະອົງເຕັມດ້ວຍຄວາມກົ້ວ ແລະພຣະອົງກ່າວຈາແລະຖ້ອຍຄຳຂອງພຣະ
ອົງເຫມືອນໄຟເຜົາຜານ

28 ພຣະອົງທຳໃຫ້ລົມພັດຢູ່ເບື້ອງຫນ້າຂອງພຣະອົງເຫມືອນລຳທານຖ້ວມລົ້ນ ທີ່ຖ້ວມເຖິງຄໍ ເພື່ອຈະຮ່ອນບັນດາ
ປະຊາຊາດໄປສູ່ຄວາມຈິບຫາຍ ແລະຈະມີບັງຫຽນຊຶ່ງພາໃຫ້ເຈີ່ນທີ່ຂາມິດຕັດຂອງຊົນຊາດທັງຫລາຍ
29 ເຈົ້າຈະມີບົດເພງຢ່າງຄືນທີ່ມີເທສການສັກສິດ ແລະມີໃຈຍິນດີຢ່າງຄົນທີ່ອອກເດີນຕາມສຽງປີ່ ເພື່ອໄປຍັງພູ
ຂອງພຣະຜູ້ເປັນເຈົ້າ ເຖິງພຣະສີລາແຫ່ງອິສຣາເອນ
30 ພຣະຜູ້ເປັນເຈົ້າຈະຊົງກະທຳໃຫ້ພຣະສຸຣະສຽງອັນຊົງຣິດອຳນາດຂອງພຣະອົງເປັນທີ່ໄດ້ຍິນ ແລະຈະຊົງໃຫ້
ເປັນພຣະກອນຟາດລົງຂອງພຣະອົງດ້ວຍຄວາມກິ້ວຢ່າງກຸ້ງອກາດ ແລະແປວແຫ່ງໄຟເຜົາຜານພ້ອມກັບຝົນ
ກະຫນ່ຳແລະພະຍຸແລະຫມາກເຫັບ
31 ຄົນອັສຊີເຣັຽຈະຢ້ານສັ່ນສາຍດ້ວຍພຣະສຸຣະສຽງຂອງພຣະອົງ ພຣະອົງຊົງຕີສອນດ້ວຍພຣະຄະທາຂອງພຣະ
ອົງ
32 ແລະຈັງຫວະໄມ້ແສ້ລົງໂທດທຸກຈັງຫວະຊຶ່ງພຣະຜູ້ເປັນເຈົ້າຕີລົງເຫນືອເຂົາຈະເຂົ້າກັບສຽງລຳມະນາແລະພິນ
ເຂົາຄູ່ ພຣະອົງຈະຊົງຕໍ່ສູ້ເຂົາດ້ວຍສົງຄາມຟາດຟັນ
33 ເພາະບ່ອນສຳລັບເຜົາກໍຈັດໄວ້ດົນນານແລ້ວ ຕຽມໄວ້ສຳລັບພຣະຣາຊາ ບ່ອນນັ້ນທັງເລິກທັງກວ້າງແລະທັງມີ
ກອງຟືນສູງ ຄືພຣະຜູ້ເປັນເຈົ້າຈະຫາຍໃຈເປັນແປວໄຟເພື່ອເຜົາໄຫມ້ບ່ອນນັ້ນ

## 31 ຄົນເອຢິບຄືມະນຸດ ບໍ່ແມ່ນພຣະເຈົ້າ

Alliance with Egypt Is Futile

1 ວິບັດແກ່ຄົນເຫລົ່ານັ້ນຜູ້ລົງໄປທີ່ເອຢິບເພື່ອຂໍຄວາມຊ່ອຍເຫລືອ ແລະຫມາຍເພິ່ງມ້າ ຜູ້ທີ່ວາງໃຈໃນຣົດຮົບ
ເພາະມີຫລາຍ ແລະວາງໃຈໃນພົນມ້າ ເພາະເຂົາທັງຫລາຍແຂງແຮງ ແຕ່ບໍ່ໄດ້ຫມາຍເຖິງອົງບໍຣິສຸດຂອງອິສ
ຣາເອນ ຫລືປຶກສາກັບພຣະຜູ້ເປັນເຈົ້າ
2 ແຕ່ເຖິງປານນັ້ນ ພຣະອົງຍັງຊົງສລຽວສລາດແລະນຳພັຍວິບັດມາໃຫ້ ພຣະອົງບໍ່ໄດ້ຊົງເອີ້ນພຣະຄຳຂອງພຣະ
ອົງຄືນມາ ແຕ່ຈະຊົງລຸກຂຶ້ນຕໍ່ສູ້ກັບວົງຜູ້ກະທຳຄວາມຜິດ ແລະຕໍ່ສູ້ກັບຜູ້ຊ່ອຍເຫລືອຂອງຄົນເຫລົ່ານັ້ນທີ່ກະ
ທຳບາບຜິດ
3 ຄົນເອຢິບເປັນຄົນ ແລະບໍ່ແມ່ນພຣະເຈົ້າ ແລະມ້າທັງຫລາຍຂອງເຂົາເປັນເນື້ອຫນັງ ແລະບໍ່ແມ່ນວິນຍານ
ເມື່ອພຣະຜູ້ເປັນເຈົ້າຊົງຢຽດພຣະຫັດຂອງພຣະອົງອອກ ຜູ້ຊ່ອຍເຫລືອກໍຈະສະດຸດ ແລະຜູ້ທີ່ຮັບການຊ່ອຍ
ເຫລືອກໍຈະລົ້ມ ແລະເຂົາທັງຫລາຍຈະພິນາດເສັຽດ້ວຍກັນ
4 ເພາະພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າດັ່ງນີ້ວ່າ ດັ່ງສິງຫລືສິງຫນຸ່ມຄຳຣາມຢູ່ເຫນືອເຫຍື່ອຂອງມັນ ແລະ
ເມື່ອເຂົາເອີ້ນຜູ້ລ້ຽງແກະຫມູ່ນຶ່ງມາສູ້ມັນ ມັນບໍ່ຢ້ານກົວຕໍ່ສຽງໂຮ່ຮ້ອງຂອງເຂົາທັງຫລາຍ ຫລືແລ່ນຫນີຕໍ່ສຽງ
ອຶກກະທຶກຂອງເຂົາ ດັ່ງນັ້ນແຫລະ ພຣະຜູ້ເປັນເຈົ້າຈອມໂຍທາຈະສະເດັດລົງມາເພື່ອສູ້ຮົບເທິງພູຊີໂອນແລະ
ເທິງເນີນພູຂອງມັນ
5 ເຫມືອນນົກບິນຢູ່ ດັ່ງນັ້ນແຫລະພຣະຜູ້ເປັນເຈົ້າຈອມໂຍທາຈະຊົງອາຣັກຂາເຢຣູຊາເລັມ ພຣະອົງຈະຊົງອາຣັກ
ຂາແລະ ຊ່ອຍກູ້ພຣະອົງ ຈະຊົງເວັ້ນເສັຽ ແລະຊ່ອຍຊີວິດ
6 ໂອ ປະຊາຊົນອິສຣາເອນເອີຍ ຈົ່ງກັບມາຫາພຣະອົງຜູ້ທີ່ພວກເຈົ້າໄດ້ກະບົດຢ່າງຮ້າຍ
7 ເພາະໃນວັນນັ້ນ ທຸກຄົນຈະຖິ້ມຮູບໂຄຣົບຂອງຕົນທີ່ທຳດ້ວຍເງິນແລະຮູບໂຄຣົບຂອງຕົນທີ່ທຳດ້ວຍທອງຄຳ
ຊຶ່ງມືຂອງເຈົ້າໄດ້ທຳຂຶ້ນຢ່າງບາບຫນາສຳລັບຕົວເຈົ້າ
8 "ແລະຄົນອັສຊີເຣັຽຈະລົ້ມລົງດ້ວຍດາບ ຊຶ່ງບໍ່ແມ່ນຂອງມະນຸດຈະກິນເຂົາເສັຽ ແລະເຂົາຈະຫນີຈາກດາບ ແລະ
ຊາຍສະກັນຂອງເຂົາຈະຖືກບັງຄັບໃຫ້ທຳງານໂຍທາ

9 ສີລາຂອງເຂົາຈະສິ້ນໄປດ້ວຍຄວາມໜ້າຢ້ານ ແລະນາຍໆຂອງເຂົາຈະຖິ້ມທຸງໄປດ້ວຍອາການອົກສັ່ນຂວັນ
ຫາຍ ພຣະຜູ້ເປັນເຈົ້າຜູ້ທີ່ໄຟຂອງພຣະອົງຢູ່ໃນຊີໂອນ ແລະຜູ້ທີ່ເຕົາຂອງພຣະອົງຢູ່ໃນເຢຣູຊາເລັມ ກ່າວດັ່ງນີ້
ແຫລະ

## 32 ກະສັດທີ່ຊອບທັມ

Government with Justice Predicted

1 ວັນນຶ່ງຈະມີກະສັດທີ່ຊອບທັມອົງນຶ່ງ ແລະຈະມີເຈົ້ານາຍທີ່ປົກຄອງດ້ວຍຄວາມຍຸດຕິທັມ

2 ເຈົ້ານາຍແຕ່ລະຄົນຈະເປັນເຫມືອນເຄື່ອງບັງລົມ ເຫມືອນບ່ອນຫລົກພະຍຸ ເຫມືອນສາຍນ້ຳໄຫລໃນຖິ່ນກັນດານ ແລະເຫມືອນຮົ່ມເງົາຈາກໂງ່ນຫີນໃຫຍ່ໃນແຜ່ນດິນທີ່ແຫ້ງແລ້ງ

3 ພວກທ່ານຈະເບິ່ງແຍງແລະຮັບຟັງຄວາມຕ້ອງການຂອງປະຊາຊົນ

4 ຈະບໍ່ໃຈຮ້ອນອີກຕໍ່ໄປ ແຕ່ຈະທຳໂດຍໃຊ້ຄວາມຮູ້ແລະເວົ້າແຕ່ສິ່ງທີ່ມີປໂຍດ

5 ຈະບໍ່ມີໃຜຄິດວ່າຄົນໂງ່ເປັນຄົນມີກຽດຫລືເວົ້າວ່າຄົນໂກງເປັນຄົນທີ່ສັດຊື່

6 ຄົນໂງ່ກໍເວົ້າແຕ່ເຣື່ອງໂງ່ໆ ແລະຄິດກະທຳແຕ່ສິ່ງທີ່ບໍ່ດີ ສິ່ງທີ່ເຂົາເຮັດແລະເວົ້າລ້ວນແຕ່ຫມິ່ນປມາດພຣະເຈົ້າ ຈະບໍ່ໃຫ້ເຂົ້ານ້ຳແກ່ຜູ້ທີ່ຫິວ

7 ສ່ວນຄົນຂີ້ໂກງເຂົາເປັນຄົນຊົ່ວແລະທຳແຕ່ໃນສິ່ງທີ່ຊົ່ວຮ້າຍ ວາງແຜນທຳຮ້າຍຄົນທຸກຍາກຈົນດ້ວຍການຕົວະ ແລະກີດກັ້ນສິດຂອງພວກເຂົາ

8 ແຕ່ຄົນທີ່ສັດຊື່ກໍທຳແຕ່ຄວາມສັດຊື່ ແລະຕັ້ງຫມັ້ນຢູ່ໃນສິ່ງທີ່ຖືກຕ້ອງເທົ່ານັ້ນ

**ພິພາກສາໂທດແລະທຳໃຫ້ດີຄືເກົ່າ**

Complacent Women Warned of Disaster

9 ພວກຜູ້ຍິງທີ່ມີຊີວິດເປັນຢູ່ຢ່າງງ່າຍໆ ແລະບໍ່ເຄີຍຫົວຊານຳຫຍັງ

10 ຈົ່ງຟັງຂ້າພະເຈົ້າ ດຽວນີ້ພວກເຈົ້າອີ່ມຫນຳສຳຣານດີ ແຕ່ໃນປີຕໍ່ໄປນີ້ພວກເຈົ້າຈະຫມົດຫວັງເພາະວ່າຈະບໍ່ມີຫມາກອະງຸ່ນກິນ

11 ພວກຜູ້ຍິງທີ່ມີຊີວິດເປັນຢ່າງງ່າຍໆແລະບໍ່ເຄີຍຫົວຊານຳຫຍັງ ລະວັງເດີ ພວກເຈົ້າຈະຢ້ານກົວຕົວສັ່ນ ຈົ່ງແກ້ເຄື່ອງນຸ່ງອອກ ແລ້ວເອົາຜ້າຂາດມັດແອວໄວ້

12 ຈົ່ງຕີຕາງຮ້ອງໄຫ້ຂຶ້ນ ເພາະວ່ານາດີແລະສວນອະງຸ່ນຈະຖືກທຳລາຍແລ້ວຫຍ້າແລະໄມ້ມີຫນາມໄດ້ເກີດຂຶ້ນ ເທິງທີ່ດິນໄພ່ພົນຂອງເຮົາ

13 ຈົ່ງຮ້ອງໄຫ້ເທີ່ນ ເພາະວ່າເຮືອນທຸກຫລັງທີ່ປະຊາຊົນອາສັຍຢູ່ຢ່າງມີຄວາມສຸກ ແລະເມືອງທີ່ເຕັມໄປດ້ວຍຄວາມມ່ວນຊື່ນຍິນດີ

14 ຕລອດທັງພຣະຣາຊວັງ ແລະເມືອງຫລວງນັ້ນ ຖືກປະຖິ້ມເພພັງຮ້າງເປົ່າຫມົດ ຫມູ່ບ້ານແລະປ້ອມຍາມຮັກສາການຈະເສັຽຫາຍຕລອດໄປ ລໍປ່າຈະໄປທີ່ນັ້ນ ແລະມັນຈະເປັນທົ່ງຫຍ້າຂອງຫມູ່ແກະ

15 ຈົນກວ່າພຣະວິນຍານຈະເຫລົ່ງມາເທິງເຮົາຈາກເບື້ອງເທິງ ແລະແຜ່ນດິນທີ່ເປົ່າແປນຈະກາຍເປັນແຜ່ນດິນອັນອຸດົມສົມບູນ ແລະໄຮ່ນາຈະເກີດດອກອອກຜົນຢ່າງຫລວງຫລາຍ

16 ຄວາມຊອບທັມແລະຄວາມຍຸດຕິທັມຈະມີທົ່ວໄປໃນປະເທດ

17 ເພາະວ່າທຸກໆຄົນຈະເຮັດຖືກຕ້ອງຈຶ່ງຈະມີຄວາມສງົບສຸກເກີດຂຶ້ນມາ ແລະຫມັ້ນຄົງຕລອດໄປ

18 ບ້ານເຮືອນແຫ່ງໄພ່ພົນຂອງພຣະເຈົ້າຈະມີຄວາມສງົບສຸກ ແລະປອດພັຍ ພວກເຂົາຈະບໍ່ຖືກຣົບກວນ

19 ເມື່ອປ່າພັງທະລາຍ ຫມາກເຫັບຈະຕົກລົງມາຕາມປ່າ ແລະເມືອງຈະເຈື່ອນເພພັງ

20 ທ່ານທີ່ຫວ່ານຢູ່ຂ້າງຫ້ວຍນ້ຳທັງປວງກໍເປັນສຸກ ຜູ້ທີ່ປ່ອຍໃຫ້ງົວ ແລະລາທ່ຽວຢູ່ຢ່າງອິສຣະ

## 33 ການອ້ອນວອນຂໍຄວາມຊ່ອຍເຫລືອ

A Prophecy of Deliverance from Foes

1 ພວກສັດຕຣູຂອງເຮົາຈະປະສົບພັຍວິບັດ ພວກເຂົາເປັນພວກປຸ້ນ ແລະຄົນທໍຣະຍົດ ເຖິງແມ່ນບໍ່ມີໃຜປຸ້ນ ແລະ
ທໍຣະຍົດພວກເຂົາ ແຕ່ວັນເວລາແຫ່ງການຖືກປຸ້ນຖືກທໍຣະຍົດຈະມາເຖິງເຂົາ ຄືພວກເຂົາຈະຕົກເປັນເຫຍື່ອ
ຂອງການຖືກປຸ້ນຖືກທໍຣະຍົດ
2 ໂອ ພຣະຜູ້ເປັນເຈົ້າ ຂໍຊົງເມດຕາພວກຂ້າພຣະອົງແດ່ທ້ອນ ພວກຂ້າພຣະອົງຫວັງເພິ່ງພຣະອົງ ຂໍຊົງຄຸ້ມຄອງ
ຮັກສາພວກຂ້າພຣະອົງທຸກໆວັນ ແລະຂໍຊົງຊ່ອຍພວກຂ້າພຣະອົງໃນເວລາຖືກຍາກ
3 ເມື່ອພຣະອົງຊົງຊ່ອຍຮົບແລະມີສຽງຟ້າຮ້ອງ ຊົນຊາດທັງຫລາຍກໍປົບຫນີໄປຈາກສນາມຮົບ
4 ແລະສິ່ງຂອງທີ່ພວກເຂົາມີຢູ່ຈະຖືກຍຶດເອົາໄປຈົນຫມົດ
5 ພຣະຜູ້ເປັນເຈົ້າຊົງຍິ່ງໃຫຍ່ແທ້ ພຣະອົງຊົງຄອບຄອງເຫນືອສັພສິ່ງທັງປວງ ຈະຊົງເຮັດໃຫ້ກຸງເຢຣູຊາເລັມຍຸດ
ຕິທັມແລະຊອບທັມ
6 ແລະຊົງເຮັດໃຫ້ຊາດມີຄວາມຫມັ້ນຄົງ ພ້ອມທັງຊົງເປັນຄວາມລອດພົ້ນ ໃຫ້ສະຕິປັນຍາຄວາມຮູ້ແກ່ໄພ່ພົນ
ຂອງພຣະອົງ ຊັບສົມບັດອັນປະເສີດຂອງພວກເຂົາຄືຄວາມຢໍາເກງພຣະຜູ້ເປັນເຈົ້າ
7 ຄົນກ້າຫານຈະຮ້ອງຂໍໃຫ້ຊ່ອຍ ຄນະທູດສັນຕິພາບຈະຮ້ອງໄຫ້ດ້ວຍຄວາມຂົມຂື່ນ
8 ຕາມຖນົນຫົນທາງຈະເຕັມໄປດ້ວຍອັນຕະລາຍແລະບໍ່ມີຄົນທ່ຽວ ສັນຍາແລະຂໍ້ຕົກລົງຕ່າງໆຈະຖືກລ່ວງລະ
ເມີດ ຈະບໍ່ມີການໂຕຣົບນັບຖືຊຶ່ງກັນແລະກັນ
9 ແຜ່ນດິນຖືກປະຮ້າງວ່າງເປົ່າ ກົກໄມ້ໃນພູເລບານອນໄດ້ຫ່ຽວແຫ້ງຕາຍໄປ ຮ່ອມພູຊາໂຣນທີ່ອຸດົມສົມບູນກໍ
ເປັນຄືຖິ່ນກັນດານ ໃບໄມ້ໃນບາຊານແລະເທິງພູກາຣ໌ເມນກໍຫລົ່ນລົງຫມົດ
10 ພຣະຜູ້ເປັນເຈົ້າຊົງບອກຊົນຊາດທັງຫລາຍວ່າ, “ເຮົາຈະລົງມືດຽວນີ້ລະ ເຮົາຈະສະແດງໃຫ້ເຫັນວ່າ ເຮົາມີອໍາ
ນາດພຽງໃດ
11 ເຈົ້າອຸ້ມທ້ອງແຕ່ແກບ ເຈົ້າຄອດແຕ່ຕໍ ລົມຫາຍໃຈຂອງເຈົ້າເປັນໄຟທີ່ຈະເຜົາຜານເຈົ້າ
12 ແລະຊົນຊາດທັງຫລາຍກໍຈະເຫມືອນຖືກເຜົາເປັນປູນ ເຫມືອນຫນາມໃຫຍ່ທີ່ຖືກຕັດລົງທີ່ເຜົາໃນໄຟ”
13 ໃຫ້ທຸກຄົນທັງຢູ່ໃກ້ແລະຢູ່ໄກຟັງວ່າ “ເຮົາໄດ້ກະທໍາຫຍັງແດ່ ແລະຈົ່ງຮັບຮູ້ກໍາລັງຂອງເຮົາ”
14 ພວກຄົນບາບໃນຊີໂອນຈະສັ່ນສະທ້ານຢ້ານກົວ ພວກເຂົາເວົ້າວ່າ, “ການພິພາກສາໂທດຂອງພຣະເຈົ້າເປັນ
ເຫມືອນໄຟເຜົາຕລອດໄປ ຈະບໍ່ມີໃຜໃນພວກເຮົາຫນີຈາກໄຟຢ່າງນັ້ນໄດ້”
15 ຖ້າພວກເຈົ້າເວົ້າແລະເຮັດແຕ່ຄວາມຊອບທັມ ພວກເຈົ້າກໍຈະລອດພົ້ນ ຢ່າໃຊ້ອໍານາດຂົ່ມຂູ່ຄົນທຸກຍາກ ຢ່າ
ຮັບສິນບົນ ຢ່າຮ່ວມມືກັບຜູ້ວາງແຜນຂ້າຄົນ ຫລືຜູ້ເຮັດຊົ່ວຮ້າຍອື່ນໆ
16 ແລ້ວເຈົ້າຈະສໍາເຣັດຜົນ ຈະມີຊີວິດຫມັ້ນຄົງເຫມືອນປ້ອມອັນແຂງແກ່ງ ຈະມີອາຫານແລະນໍ້າກິນພຽງພໍ

**ອານາຄົດທີ່ຮຸ່ງເຮືອງ**

17 ເຈົ້າຈະເຫັນກະສັດອົງມີກຽດຂຶ້ນປົກຄອງອີກເທື່ອນຶ່ງ ແຜ່ນດິນນີ້ຈະຂະຫຍາຍກວ້າງອອກໄປທຸກດ້ານ
18 ຄົນເກັບພາສີຊາວຕ່າງປະເທດທີ່ເຈົ້າເຄີຍຢ້ານກົວມາຕັ້ງແຕ່ກ່ອນ ກັບພວກນັກສືບສອດແນມຈະເປັນພຽງອະນຸ
ສອນເຕືອນໃຈເທົ່ານັ້ນ
19 ເຈົ້າຈະບໍ່ໄດ້ເຫັນຊາວຕ່າງປະເທດຜູ້ໂອ້ອວດແລະເວົ້າພາສາທີ່ເຈົ້າບໍ່ເຂົ້າໃຈອີກຕໍ່ໄປ
20 ຈົ່ງເບິ່ງຊີໂອນເມືອງທີ່ເຮົາສະເຫລີມສລອງພິທີທາງສາສນາ ຈົ່ງເບິ່ງເຢຣູຊາເລັມດູ ມັນຈະເປັນບ່ອນຢູ່ອາສັຍທີ່
ປອດພັຍ ຈະເປັນເຫມືອນຕູບຜ້າເຕັນທີ່ບໍ່ຍ້າຍຈັກເທື່ອ ຄືຫລັກເຕັນຈະບໍ່ຖອນແລະເຊືອກຜູກກໍຈະບໍ່ຂາດຈັກ
ເທື່ອ

21 ພຣະຜູ້ເປັນເຈົ້າຈະຊົງສະແດງໃຫ້ເຮົາເຫັນພຣະຣັສມີຄວາມຍິ່ງໃຫຍ່ຂອງພຣະອົງ ພວກເຮົາຈະໄດ້ອາສັຍຢູ່
ຕາມແຄມແມ່ນ້ຳແລະລຳຫ້ວຍທີ່ກວ້າງໃຫຍ່ ຈະບໍ່ມີເຮືອແພຂອງສັດຕຣູແລ່ນໄປມາໃນແມ່ນ້ຳນີ້
22 ສາຍໂຍງໃບເຮືອທຸກໆສາຍກໍໃຊ້ການບໍ່ໄດ້ ເປັນເຫດໃຫ້ໃບຂອງມັນບໍ່ກາງອອກ
23 ສິ່ງຂອງທັງໝົດທີ່ຖືກຍຶດເອົາມາຈາກກອງທັບສັດຕຣູແມ່ນແຕ່ຄົນພິການກໍມີສ່ວນໄດ້ຮັບສິ່ງຂອງອັນຫລວງ
ຫລາຍນັ້ນ  ພຣະຜູ້ເປັນເຈົ້າເອງຈະຊົງເປັນກະສັດຂອງເຮົາ
24 ຈະຊົງປົກຄອງແລະຄຸ້ມກັນພວກເຮົາ ຈະບໍ່ມີໃຜໃນປະເທດຂອງເຮົາຮ້ອງວ່າເຈັບໃຂ້ອີກ ທຸກໆຄົນຈະໄດ້ຮັບ
ອະພັຍບາບ

## 34 ພຣະພິໂຣດຂອງພຣະຜູ້ເປັນເຈົ້າຕໍ່ປະຊາຊາດ

Judgment on the Nation

1 ໂອ ບັນດາປະຊາຊາດເອີຍ ຈົ່ງເຂົ້າມາໃກ້ຈະໄດ້ຟັງ ແລະໂອ ຊົນຊາດທັງຫລາຍເອີຍ ຟັງເດີ ຂໍໃຫ້ແຜ່ນດິນ
ໂລກ ແລະສັພສິ່ງໃນນັ້ນຟັງ ທັງພິພົບແລະບັນດາສິ່ງທີ່ມາຈາກພິພົບ
2 ເພາະພຣະຜູ້ເປັນເຈົ້າຊົງພິໂຣດຕໍ່ປະຊາຊາດທັງສິ້ນ ແລະດຸເດືອດຕໍ່ພົນໂຍທາທັງສິ້ນຂອງເຂົາ ພຣະອົງຊົງ
ຕາດໂທດເຂົາ ແລະມອບເຂົາໄວ້ແກ່ການຂ້າ
3 ຈະບໍ່ມີໃຜຝັງຊາກສົບຂອງພວກເຂົາ ແຕ່ຈະຖືກປະໃຫ້ເປື່ອຍແລະເນົ່າເໝັນ ຈົນພູທັງຫລາຍຈະນອງໄປດ້ວຍ
ເລືອດ
4 ບໍຣິວານທັງສິ້ນຂອງຟ້າສວັນຈະເນົ່າໄປ ແລະທ້ອງຟ້າກໍຈະມ້ວນເຫມືອນຫນັງສືມ້ວນ ບໍຣິວານທັງສິ້ນຂອງມັນ
ຈະຮ່ວງຫລົ່ນເຫມືອນໃບໄມ້ຫລົ່ນຈາກເຄືອອະງຸ່ນ ຢ່າງໃບໄມ້ຫລົ່ນຈາກຕົ້ນຫມາກເດື່ອ
5 ເພາະວ່າດາບຂອງເຮົາໄດ້ດື່ມຈົນອີ່ມໃນຟ້າສວັນ ເບິ່ງແມ, ມັນລົງມາເພື່ອການພິພາກສາເອໂດມ ເຮົາໄດ້ຕາດ
ໂທດຊົນຊາດນີ້ແລ້ວ
6 ພຣະຜູ້ເປັນເຈົ້າມີພຣະແສງດາບອາບເລືອດທີ່ເຕັມໄປດ້ວຍໄຂມັນ ກັບເລືອດຂອງລູກແກະແລະແບ້ກັບໄຂມັນ
ຂອງໂຕແກະເຖິກ ເພາະພຣະຜູ້ເປັນເຈົ້າມີການຂ້າບູຊາໃນເມືອງໂບສຣາ ການຂ້າຂນາດໃຫຍ່ໃນແຜ່ນດິນເອ
ໂດມ
7 ງົວກະທິງລົ້ມລົງພ້ອມກັບເຂົາດ້ວຍ ແລະງົວຫນຸ່ມລົ້ມຢູ່ກັບງົວສະກັນ ແຜ່ນດິນຂອງເຂົາຈະນອງໄປດ້ວຍ
ເລືອດ ແລະດິນຈະໄດ້ອຸດົມດ້ວຍໄຂມັນ
8 ເພາະພຣະຜູ້ເປັນເຈົ້າມີວັນເພື່ອການແກ້ແຄ້ນ ມີປີແຫ່ງການຕອບແທນເພື່ອເຫດຂອງຊີໂອນ
9 ແລະລຳທານແຫ່ງເອໂດມຈະກາຍເປັນນ້ຳມັນດິນ ແລະດິນຂອງເມືອງນີ້ຈະກາຍເປັນມາດທີ່ໄຫມ້ເຜົາຜານທົ່ວ
ປະເທດ
10 ທັງກາງຄືນແລະກາງເວັນຈະບໍ່ດັບ ຄວັນຂອງມັນຈະຂຶ້ນຢູ່ສເມີເປັນນິດ ມັນຈະຖືກປະຮ້າງຢູ່ຊົ່ວຊາດພັນ ບໍ່ມີ
ໃຜຜ່ານໄປເນື່ອງນິດ
11 ແຕ່ນົກກາເວົາແລະນົກເຄົ້າຈະຍຶດມັນເປັນກຳມະສິດ ນົກທຶດທືແລະກາຈະອາສັຍຢູ່ບ່ອນນັ້ນ ພຣະອົງຈະຊົງ
ຄຶງສາຍແຫ່ງຄວາມແຫ້ງແລ້ງຫນືອມັນ ແລະປ່ອຍຫມາກກະດິ່ງແຫ່ງຄວາມວ່າງເປົ່າ
12 ຝ່າຍເຈົ້ານາຍຂອງມັນເຂົາຈະໃຫ້ຊື່ວ່າ ບໍ່ມີຣາຊອານາຈັກທີ່ນັ້ນ ແລະເຈົ້ານາຍຂອງມັນຈະບໍ່ມີຄ່າເລີຍ
13 ກົກຫນາມໃຫຍ່ນ້ອຍຈະງອກເຫນືອຣາຊວັງແລະກຳແພງເມືອງ ຈະເປັນບ່ອນທີ່ຫມາປ່າຢູ່ແລະເປັນເດີ່ນຂອງ
ນົກກະຈອກເທດ
14 ແລະສັດປ່າຈະພົບກັບຫມາໄນ ຜີປີສາດຈະຮ້ອງຫາເພື່ອນບ້ານຂອງມັນ ເອີ ຜີລົງມາທີ່ນັ້ນແລະຫາບ່ອນຕົວ
ພັກ

15 ນົກເຄົ້າຈະເຮັດຮັງຟັກໄຂ່ແລະໂຮມລູກອ່ອນໄວ້ໃນເງົາຂອງມັນ ແຮ້ງຈະບິນມາເທື່ອລະໂຕເພື່ອໂຮມກັນຢູ່ໃນບ່ອນນັ້ນ

16 ຈົ່ງຊອກຫາແລະອ່ານຈາກຫນັງສືຂອງພຣະຜູ້ເປັນເຈົ້າ ສັດເຫລົ່ານີ້ຈະບໍ່ຂາດໄປຈັກຢ່າງ ບໍ່ມີໂຕໃດທີ່ຈະບໍ່ມີຄູ່ ເພາະພຣະໂອດຂອງພຣະຜູ້ເປັນເຈົ້າໄດ້ບັນຊາໄວ້ແລ້ວ ແລະພຣະວິນຍານຂອງພຣະອົງໄດ້ຮວບຮວມໄວ້

17 ພຣະອົງຊົງຈັບສລາກໃຫ້ມັນແລ້ວ ພຣະຫັດຂອງພຣະອົງໄດ້ປັນສ່ວນໃຫ້ມັນດ້ວຍເຊືອກວັດ ມັນທັງຫລາຍຈະໄດ້ກຳມະສິດເປັນນິດ ມັນຈະອາສັຍຢູ່ໃນບ່ອນນັ້ນທຸກຊົ່ວຊາດພັນ

## 35 ທາງບໍຣິສຸດ

The Return of the Redeemed to zion

1 ຖິ່ນກັນດານ ແລະທີ່ແຫ້ງແລ້ງຈະຍິນດີ ທະເລຊາຍຈະຊົມຊື່ນຍິນດີ ແລະເກີດດອກຢ່າງຕົ້ນດອກໂກຣກັສ

2 ມັນຈະອອກດອກອຸດົມ ແລະຊົມຊື່ນຍິນດີດ້ວຍຄວາມຊື່ນບານ ແລະການຮ້ອງເພງ ສັກສີຂອງເລບານອນກໍຈະປະທານໃຫ້ມັນ ທັງຄວາມໂອ່ອ່າຕະການຂອງກາຣ໌ເມນ ແລະຊາໂຣນ ບ່ອນເຫລົ່ານີ້ຈະເຫັນສະງ່າຣາສີຂອງພຣະເຈົ້າ ຄວາມໂອ່ອ່າຕະການຂອງພຣະເຈົ້າຂອງພວກເຮົາ

3 ຈົ່ງໃຫ້ແຮງແກ່ມືທີ່ເມື່ອຍ ແລະແກ່ຫົວເຂົ່າທີ່ສັ່ນດ້ວຍຄວາມອ່ອນແຮງ

4 ຈົ່ງຊູໃຈຄົນຢ້ານ ໃຫ້ມີໃຈເຂັ້ມແຂງ ແລະຢ່າຢ້ານ ພຣະເຈົ້າຈະສະເດັດມາຊ່ອຍ ຈະມາແກ້ແຄ້ນສັດຕຣູຂອງເຂົາ

5 ຄົນຕາບອດຈະເຫັນຮຸ່ງ ຄົນຫູຫນວກຈະໄດ້ຍິນ

6 ຄົນພິການກໍຈະເຕັ້ນ ແລະຟ້ອນຄືຟານ ຄົນປາກກືກຈະໂຮ່ຮ້ອງດ້ວຍຄວາມຍິນດີ ສາຍນ້ຳຈະໄຫລຜ່ານຖິ່ນກັນດານ

7 ດິນຊາຍທີ່ຮ້ອນຈະກາຍເປັນຫນອງນ້ຳ ແລະດິນທີ່ແຫ້ງແລ້ງຈະມີນ້ຳອອກບໍ່ ໃນບ່ອນທີ່ຫມາຈອກເຄີຍນອນຈະມີຫຍ້າແລະຕົ້ນອໍ້ເກີດຂຶ້ນ

8 ແລະຈະມີທາງຫລວງຢູ່ທີ່ນັ້ນ ແລະເຂົາຈະເອີ້ນທາງນັ້ນວ່າ "ທາງບໍຣິສຸດ"  ຄົນບາບແລະຄົນໂງ່ຈະເດີນທາງນັ້ນບໍ່ໄດ້

9 ຈະບໍ່ມີສິງທີ່ນັ້ນ ຫລືຈະບໍ່ມີສັດຮ້າຍມາທາງນັ້ນ ຄົນຜູ້ທີ່ພຣະຜູ້ເປັນເຈົ້າໄດ້ຊົງກອບກູ້ແລ້ວ ຈະເດີນໄປຕາມທາງນັ້ນໄດ້ຢ່າງສະບາຍ

10 ຜູ້ທີ່ຮັບການໄຖ່ແລ້ວຂອງພຣະເຈົ້າຈະກັບ ແລະຈະມາຍັງຊີໂອນດ້ວຍຮ້ອງເພງ ມີຄວາມຊື່ນບານເປັນນິດເທິງຫົວຂອງເຂົາທັງຫລາຍ ເຂົາຈະໄດ້ຮັບຄວາມຊື່ນບານແລະຄວາມຍິນດີ ຄວາມໂສກເສົ້າແລະການຖອນຫາຍໃຈຈະຫນີໄປເສັຽ

## 36 ເຊນນາເຄຣິບບຸກຢູດາ

Sennacherib Threatens Jerusalem

(2 ກສດ 18:13-37; 2 ຂຄວ 32:1-19)

1 ໃນປີທີສິບສີ່ແຫ່ງຣັຊການກະສັດເຮເຊກີຢາ ເຊນນາເຄຣິບພຣະຣາຊາແຫ່ງອັສຊີເຣັຽໄດ້ຍົກຂຶ້ນມາຕໍ່ສູ້ບັນດານະຄອນທີ່ມີປ້ອມຂອງຢູດາແລະຍຶດໄດ້

2 ແລະພຣະຣາຊາແຫ່ງອັສຊີເຣັຽໄດ້ຮັບສັ່ງໃຫ້ຣັບຊາເກໄປຈາກເມືອງລາຄິສເຖິງກຸງເຢຣູຊາເລັມເຂົ້າເຝົ້າກະສັດເຮເຊກີຢາ ພ້ອມກັບກອງທັບອັນໃຫຍ່ ແລະທ່ານມາຢືນຢູ່ທາງຮາງສະ ລະບາຍນ້ຳເທິງທີ່ຖນົນເດີ່ນຊັກຜ້າ

3 ເອລີອາກິມບຸດຮີນກີຢາກໍອອກມາຫາທ່ານ ເອລີອາກິມເປັນຜູ້ບັນຊາການຣາຊສຳນັກ ພ້ອມກັບເຊບນາຣາຊເລ
ຂາແລະໂຢອາບຸດຊາຍອາສາຟເຈົ້າກົມສາຣະບັນ
4 ຣັບຊາເກເວົ້າກັບເຂົາວ່າ, “ຈົ່ງທູນເຮເຊກີຢາວ່າ “ພຣະມະຫາຣາຊາ ຄືພຣະຣາຊາແຫ່ງອັສຊີເຣັຽກ່າວດັ່ງນີ້ວ່າ
ທ່ານວາງໃຈໃນຫຍັງ
5 ທ່ານຄິດວ່າພຽງແຕ່ຖ້ອຍຄຳກໍເປັນຍຸທສາດແລະແສນຍານຸພາບຫລື ດຽວນີ້ທ່ານເພິ່ງຜູ້ໃດ ທ່ານຈຶ່ງໄດ້ກະບົດຕໍ່
ເຮົາ
6 ເບິ່ງແມ, ດຽວນີ້ທ່ານເພິ່ງໄມ້ເທົ້າອໍ້ທີ່ເດາະ ຄືເອຢິບ ຊຶ່ງຈະຕຳມືຂອງຄົນໃດໆທີ່ໃຊ້ໄມ້ເທົ້ານັ້ນຢັນຟາຣາໂອກະ
ສັດແຫ່ງເອຢິບເປັນເຊັ່ນນັ້ນຕໍ່ຜູ້ທີ່ຫວັງເພິ່ງເຂົາ
7 ແຕ່ຖ້າທ່ານຈະບອກເຮົາວ່າ “ເຮົາວາງໃຈໃນພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ” ກໍບ່ອນນະມັສການສະຖານທີ່
ສູງແລະແທ່ນບູຊາຂອງພຣະນັ້ນບໍ່ແມ່ນຫລືທີ່ເຮເຊກີຢາຮື້ຖິ້ມເສັຽແລ້ວ ແລະກ່າວແກ່ຢູດາແລະເຢຣູຊາເລັມວ່າ
“ທ່ານທັງຫລາຍຈົ່ງນະມັສການທີ່ຫນ້າແທ່ນບູຊານີ້”
8 ມາເຖີດມາທຳສັນຍາກັນກັບເຈົ້າຊີວິດແຫ່ງອັສຊີເຣັຽນາຍຂອງຂ້າ ເຮົາຈະໃຫ້ມ້າສອງພັນໂຕແກ່ເຈົ້າ ຖ້າຝ່າຍ
ເຈົ້າຫາຄົນທີ່ຂີ່ມ້າເຫລົ່ານັ້ນໄດ້
9 ແລ້ວຢ່າງນັ້ນເຈົ້າຈະຂັບໄລ່ນາຍກອງແຕ່ພຽງຄົນດຽວໃນຫມູ່ຂ້າຣາຊການຜູ້ນ້ອຍທີ່ສຸດຂອງນາຍຂອງເຮົາຢ່າງ
ໃດໄດ້ ແຕ່ເຈົ້າຍັງວາງໃຈເພິ່ງເອຢິບເພື່ອຣົດຮົບແລະເພື່ອພົນມ້າ
10 ນອກຈາກນີ້ ທີ່ເຮົາມາຕໍ່ສູ້ແຜ່ນດິນນີ້ເພື່ອທຳລາຍເສັຽ ກໍຂຶ້ນມາໂດຍປາສຈາກພຣະຜູ້ເປັນເຈົ້າຫລື ພຣະຜູ້ເປັນ
ເຈົ້າກ່າວແກ່ຂ້າວ່າ ຈົ່ງຂຶ້ນໄປຕໍ່ສູ້ແຜ່ນດິນນີ້ແລະທຳລາຍເສັຽ”
11 ແລ້ວເອລີອາກິມ ເຊບນາ ແລະໂຢອາ ຮຽນຣັບຊາເກວ່າ “ຂໍເຖີດ ຂໍເວົ້າກັບຜູ້ຮັບໃຊ້ຂອງທ່ານເປັນພາສາອາ
ຣາມເຖີດ ເພາະເຮົາເຂົ້າໃຈພາສານັ້ນ ຂໍຢ່າເວົ້າກັບເຮົາເປັນພາສາຢູດາໃຫ້ປະຊາຊົນຜູ້ຢູ່ເທິງກຳແພງໄດ້ຍິນ
ເລີຍ”
12 ແຕ່ຣັບຊາເກວ່າ “ນາຍຂອງເຮົາໃຊ້ໃຫ້ເຮົາມາເວົ້າຖ້ອຍຄຳເຫລົ່ານີ້ແກ່ນາຍຂອງເຈົ້າແລະແກ່ເຈົ້າ ແລະບໍ່ໃຫ້
ເວົ້າກັບຄົນທີ່ນັ່ງຢູ່ເທິງກຳແພງ ຜູ້ທີ່ຈະຕ້ອງກິນຂີ້ແລະກິນຍ່ຽວຂອງເຂົາພ້ອມກັບເຈົ້າຢ່າງນັ້ນຫລື”
13 ແລ້ວຣັບຊາເກໄດ້ຢືນຮ້ອງສຽງດັງເປັນພາສາຢູດາວ່າ, “ຈົ່ງຟັງພຣະຄຳຂອງພຣະມະຫາຣາຊາ ຄືພຣະຣາຊາ
ແຫ່ງອັສຊີເຣັຽ
14 ພຣະຣາຊາກ່າວດັ່ງນີ້ວ່າ “ຢ່າໃຫ້ເຮເຊກີຢາຫລອກລວງເຈົ້າ ເພາະເຂົາບໍ່ສາມາດທີ່ຈະຊ່ອຍກູ້ເຈົ້າ
15 ຢ່າໃຫ້ເຮເຊກີຢາກະທຳໃຫ້ເຈົ້າເພິ່ງໃນພຣະຜູ້ເປັນເຈົ້າໂດຍກ່າວວ່າ “ພຣະຜູ້ເປັນເຈົ້າຈະຊົງຊ່ອຍກູ້ເຮົາ ຈະບໍ່
ຊົງມອບເມືອງນີ້ໄວ້ໃນມືຂອງພຣະຣາຊາອັສຊີເຣັຽ”
16 ຢ່າຟັງເຮົາເຊກີຢາເພາະພຣະຣາຊາແຫ່ງອັສຊີເຣັຽກ່າວດັ່ງນີ້ວ່າ ດີກັນເຖີດ ແລະອອກມາຫາເຮົາແລ້ວທຸກຄົນ
ຈະໄດ້ກິນຈາກເຄືອອະງຸ່ນຂອງຕົນແລະກິນຈາກຕົ້ນຫມາກເດື່ອຂອງຕົນ ແລະທຸກຄົນຈະດື່ມນ້ຳຈາກບ່ອນຂັງ
ນ້ຳຂອງຕົນ
17 ຈົນເຮົາຈະນຳເຈົ້າໄປຍັງແຜ່ນດິນທີ່ເຫມືອນແຜ່ນດິນຂອງເຈົ້າເອງ ເປັນແຜ່ນດິນທີ່ມີເຂົ້າແລະເຫລົ້າອະງຸ່ນ
ແຜ່ນດິນທີ່ມີເຂົ້າຈີ່ແລະສວນອະງຸ່ນ
18 ຈົ່ງລະວັງຢ້ານວ່າເຮເຊກີຢາຈະນຳເຈົ້າຜິດໄປໂດຍກ່າວວ່າ “ພຣະຜູ້ເປັນເຈົ້າຈະຊົງຊ່ອຍກູ້ເຮົາ” ມີພຣະແຫ່ງ
ບັນດາປະຊາຊາດອົງໃດເຄີຍກູ້ແຜ່ນດິນຂອງຕົນໃຫ້ພົ້ນຈາກພຣະຫັດແຫ່ງພຣະຣາຊາຂອງອັສຊີເຣັຽໄດ້ຫລື
19 ພຣະຂອງເມືອງຮາມັທ ແລະເມືອງອາຣ໌ປັດ ພຣະຂອງເມືອງເຊຟາຣ໌ວາອິມຢູ່ທີ່ໃດ ເຂົາໄດ້ຊ່ອຍກູ້ຊາມາເຣັຽ
ຈາກມືຂອງເຮົາຫລື

20 ພຣະອົງໃດໃນບັນດາພຣະທັງຫລາຍຂອງປະເທດເຫລົ່ານີ້ໄດ້ຊ່ອຍກູ້ປະເທດຂອງຕົນຈາກມືຂອງເຮົາ ແລ້ວພ
ຣະຜູ້ເປັນເຈົ້າຈະຊົງຊ່ອຍກູ້ເຢຣູຊາເລັມຈາກມືຂອງເຮົາຫລື"
21 ແຕ່ເຂົາທັງຫລາຍມິດງຽບບໍ່ຕອບເຂົາຈັກຄຳດຽວ ເພາະພຣະບັນຊາຂອງພຣະຣາຊາມີວ່າ "ຢ່າຕອບເຂົາເລີຍ"
22 ແລ້ວເອລີອາກິມບຸດຮິນກີຢາ ຜູ້ບັນຊາຣາຊສຳນັກ ແລະເຊບນາຣາຊເລຂາແລະໂຢອາບຸດອາສາຟ ເຈົ້າກົມສາ
ຣະບັນໄດ້ເຂົ້າເຝົ້າເຮເຊກີຢາດ້ວຍເສື້ອຜ້າຈີກຂາດ ແລະກາບທູນຖ້ອຍຄຳຂອງຣັບຊາເກ

## 37 ເຮເຊກີຢາຂໍຄຳແນະນຳຈາກເອຊາຢາ

Hezekiah Consults Isaiah

(2 ກສດ 19:1-13)

1 ເມື່ອກະສັດເຮເຊກີຢາຊົງໄດ້ຍິນ ພຣະອົງກໍຈີກສລອງພຣະອົງເສັຽ ແລະຊົງເອົາຜ້າກະສອບຄຸມພຣະອົງ ແລະ
ສະເດັດເຂົ້າໃນພຣະວິຫານຂອງພຣະຜູ້ເປັນເຈົ້າ
2 ພຣະອົງຊົງໃຊ້ເອລີອາກິມ ຜູ້ບັນຊາການຣາຊສຳນັກ ແລະເຊບນາຣາຊເລຂາ ແລະປະໂຣຫິດຜູ້ອະວຸໂສຄຸມຕົວ
ດ້ວຍຜ້າກະສອບ ໄປຫາເອຊາຢາຜູ້ປະກາດພຣະທັມ ບຸດຊາຍຂອງອາໂມສ
3 ເຂົາທັງຫລາຍຮຽນທ່ານວ່າ, "ເຮເຊກີຢາກ່າວດັ່ງນີ້ວ່າ ວັນນີ້ເປັນວັນທຸກໃຈ ວັນຖືກບີບຄັ້ນແລະອ່ອນໃຈ ເດັກທີ່
ເຖິງກຳນົດຈະເກີດກໍບໍ່ມີກຳລັງເບັ່ງໃຫ້ອອກ
4 ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຄົງໄດ້ຍິນຖ້ອຍຄຳຂອງຣັບຊາເກ ຜູ້ຊຶ່ງພຣະຣາຊາແຫ່ງອັສຊີເຣັຽນາຍຂອງ
ເຂົາໄດ້ສັ່ງມາໃຫ້ເຍີ້ຍພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່ ແລະຈະຊົງບີບຄັ້ນຖ້ອຍຄຳຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງທ່ານຊົງສະດັບ ເພາະສະນັ້ນກໍຂໍທ່ານຖວາຍຄຳອ້ອນວອນເພື່ອສ່ວນຄົນທີ່ເຫລືອຢູ່ນີ້"
5 ເມື່ອຂ້າຣາຊການຂອງກະສັດເຮເຊກີຢາມາເຖິງເອຊາຢາ
6 ເອເຊຢາກໍບອກເຂົາທັງຫລາຍວ່າ, "ຈົ່ງທູນນາຍຂອງທ່ານວ່າ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ວ່າ "ຢ່າຢ້ານເພາະ
ຖ້ອຍຄຳທີ່ເຈົ້າໄດ້ຍິນນັ້ນ ຊຶ່ງຂ້າຣາຊການຂອງພຣະຣາຊາແຫ່ງອັສຊີເຣັຽໄດ້ກ່າວຄຳຫມິ່ນປມາດຕໍ່ເຮົາ
7 ເບິ່ງແມ, ເຮົາຈະບັນຈຸຈິດໃຈຢ່າງນຶ່ງໃນເຂົາ ເພື່ອເຂົາຈະໄດ້ຍິນຂ່າວລື ແລະກັບໄປຍັງແຜ່ນດິນຂອງເຂົາ ແລະ
ເຮົາຈະໃຫ້ເຂົາລົ້ມລົງດ້ວຍດາບໃນແຜ່ນດິນຂອງເຂົາເອງ"
8 ຣັບຊາເກໄດ້ກັບໄປ ແລະໄດ້ພົບກັບເຈົ້າຊີວິດແຫ່ງອັສຊີເຣັຽສູ້ຮົບເມືອງລິບນາ ເພາະເຂົາໄດ້ຍິນວ່າພຣະຣາຊາ
ອອກຈາກລາຄິສແລ້ວ
9 ພຣະອົງຊົງໄດ້ຍິນກ່ຽວກັບຕີຣ໌ຮາກາເຈົ້າຊີວິດແຫ່ງເອທິໂອເປັຽວ່າ "ເຂົາໄດ້ອອກມາສູ້ຮົບກັບພຣະອົງແລ້ວ"
ແລະເມື່ອ ພຣະອົງຊົງສະດັບແລ້ວຈຶ່ງສົ່ງຜູ້ສົ່ງຂ່າວໄປເຝົ້າເຮເຊກີຢາທູນວ່າ
10 "ເຈົ້າຈົ່ງເວົ້າກັບເຮເຊກີຢາເຈົ້າຊີວິດຢູດາດັ່ງນີ້ວ່າ ຢ່າໃຫ້ພຣະຜູ້ເປັນເຈົ້າຂອງທ່ານຊຶ່ງທ່ານເພິ່ງນັ້ນຫລອກລວງ
ທ່ານ ວ່າເຢຣູຊາເລັມຈະບໍ່ໄດ້ຖືກມອບໄວ້ໃນມືຂອງເຈົ້າຊີວິດອັສຊີເຣັຽ
11 ເບິ່ງແມ, ທ່ານໄດ້ຍິນແລ້ວວ່າບັນດາເຈົ້າຊີວິດແຫ່ງອັສຊີເຣັຽໄດ້ກະທຳສິ່ງໃດກັບປະເທດທັງສິ້ນ ຫ□ລາຍເສັຽ
ຫມົດຢ່າງສິ້ນເຊີງ ສ່ວນທ່ານເອງຈະຮັບການຊ່ອຍກູ້ໃຫ້ພົ້ນຫລື
12 ບັນດາພຣະຂອງບັນດາປະຊາຊາດໄດ້ຊ່ອຍກູ້ເຂົາໃຫ້ພົ້ນຫລື ຄືປະຊາຊາດຊຶ່ງບັນພະບຸຣຸດຂອງເຮົາໄດ້ທຳ
ລາຍ ຄື ໂກເຊນ ຮາຣານ ເຣເຊຟ ແລະປະຊາຊົນຂອງເອເດນຊຶ່ງຢູ່ໃນເຕລັສຊາຣ໌
13 ເຈົ້າຊີວິດຂອງຮາມັທ ເຈົ້າຊີວິດຂອງອາຣ໌ປັດ ເຈົ້າຊີວິດຂອງເມືອງເຊຟາຣ໌ວາອິມ ເຮນາ ແລະອີວວາຢູ່ໃສ

**ຄຳອ້ອນວອນຂອງເຮເຊກີຢາ**

Hezekiah's Prayer

(2 ກສດ 19:14-34)

14 ເຮເຊກີຢາຊົງຮັບຈົດຫມາຍຈາກມືຜູ້ສົ່ງຂ່າວ ແລະຊົງອ່ານ
15 ແລະເຮເຊກີຢາໄດ້ຂຶ້ນໄປຍັງພຣະວິຫານຂອງພຣະຜູ້ເປັນເຈົ້າ ແລະຊົງເປີດຈົດຫມາຍນັ້ນອອກຕໍ່ພຣະພັກພຣະ
ຜູ້ເປັນເຈົ້າ ແລະເຮເຊກີຢາຊົງອ້ອນວອນຕໍ່ພຣະຜູ້ເປັນເຈົ້າວ່າ,
16 “ຂ້າແຕ່ພຣະຜູ້ເປັນເຈົ້າຈອມໂຍທາ ພຣະເຈົ້າແຫ່ງອິສຣາເອນ ຜູ້ຊົງປະທັບເຫນືອເຊຣູບິມ ພຣະອົງຊົງເປັນພ
ຣະຜູ້ເປັນເຈົ້າແຫ່ງບັນດາຣາຊອານາຈັກຂອງແຜ່ນດິນໂລກ ພຣະອົງແຕ່ອົງດຽວ ພຣະອົງໄດ້ຊົງສ້າງຟ້າສວັນ
ແລະແຜ່ນດິນໂລກ
17 ຂ້າແຕ່ພຣະຜູ້ເປັນເຈົ້າ ຂໍຊົງງ່ຽງພຣະກັນສະດັບ ຂ້າແຕ່ພຣະຜູ້ເປັນເຈົ້າຂໍຊົງເບີກພຣະເນດທອດພຣະເນດ
ແລະຂໍຊົງຟັງບັນດາຖ້ອຍຄໍາຂອງເຊນນາເຄຣິບ ຊຶ່ງເຂົາໄດ້ໃຊ້ມາເຍີ້ຍພຣະເຈົ້າຜູ້ຊົງພຣະຊົນຢູ່
18 ຂ້າແດ່ພຣະຜູ້ເປັນເຈົ້າ ເປັນຄວາມຈິງທີ່ບັນດາເຈົ້າຊີວິດແຫ່ງອັສຊີເຣັຽໄດ້ກະທໍາໃຫ້ປະເທດທັງສິ້ນແລະແຜ່ນ
ດິນຂອງເຂົານັ້ນຮ້າງເປົ່າ
19 ແລະໄດ້ແກວ່ງພຣະຂອງເຂົາເຂົ້າໄຟ ເພາະເຂົາບໍ່ມີພຣະ ເປັນແຕ່ຜົນງານຂອງມືມະນຸດເປັນໄມ້ແລະຫີນ
ເພາະສະນັ້ນເຂົາຈຶ່ງຖືກທໍາລາຍເສັຽ
20 ສະນັ້ນບັດນີ້ ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພຣະອົງທັງຫລາຍ ຂໍຊົງຊ່ອຍຂ້າພຣະອົງໃຫ້ພົ້ນມືຂອງ
ເຂົາ ເພື່ອຣາຊອານາຈັກທັງສິ້ນແຫ່ງແຜ່ນດິນໂລກຈະຊາບວ່າ ພຣະອົງແຕ່ພຣະອົງດຽວຊົງເປັນພຣະເຈົ້າ”
21 ແລ້ວເອຊາຢາບຸດອາໂມສໄດ້ໃຊ້ໃຫ້ໄປເຝົ້າເຮເຊກີຢາທູນວ່າ, “ພຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນ
ກ່າວດັ່ງນີ້ວ່າ ເພາະເຈົ້າໄດ້ອ້ອນວອນຕໍ່ເຮົາກ່ຽວກັບເຊນນາເຄຣິບພຣະຣາຊາແຫ່ງອັສຊີເຣັຽ
22 ຕໍ່ໄປນີ້ເປັນພຣະຄໍາຊຶ່ງພຣະຜູ້ເປັນເຈົ້າກ່າວກ່ຽວກັບທ່ານວ່າ “ທິດາພົມມະຈາຣີແຫ່ງຊີໂອນ ດູຫມິ່ນເຈົ້າ ແລະ
ເຍີ້ຍເຈົ້າ ທິດາແຫ່ງເຢຣູຊາເລັມສັ່ນຫົວຕາມຫລັງໃສ່ເຈົ້າ
23 “ເຈົ້າເຍີ້ຍແລະຫມິ່ນປມາດຕໍ່ຜູ້ໃດ ເຈົ້າຂຶ້ນສຽງຂອງເຈົ້າຕໍ່ຜູ້ໃດ ແລະເບິ່ງຕາຂອງເຈົ້າຢ່າງເຍີ້ຍິ່ງຕໍ່ຜູ້ໃດ ເຈົ້າບໍ່
ເຄີຍໂຄຣົບຢໍາເກງເຮົາ ຕໍ່ອົງບໍຣິສຸດແຫ່ງອິສຣາເອນ
24 ເຈົ້າໄດ້ເຍີ້ຍພຣະຜູ້ເປັນເຈົ້າດ້ວຍຜູ້ຮັບໃຊ້ຂອງເຈົ້າ ແລະເຈົ້າໄດ້ວ່າ ດ້ວຍຣົດຣົບເປັນອັນມາກຂອງຂ້າ ຂ້າໄດ້
ຂຶ້ນທີ່ສູງຂອງພູເຖິງທີ່ໄກສຸດຂອງເລບານອນ ຂ້າໂຄ່ນຕົ້ນສົນທີ່ສູງທີ່ສຸດຂອງມັນລົງ ທັງຕົ້ນແປກທີ່ດີທີ່ສຸດຂອງ
ມັນ ຂ້າເຂົ້າໄປຍັງທີ່ຍອດລຶບທີ່ສຸດຂອງມັນ ປ່າໄມ້ທີ່ຕຶບຫນາທີ່ສຸດຂອງມັນ
25 ຂ້າຂຸດບໍ່ ແລະດື່ມນໍ້າ ຂ້າຈະເອົາຝ່າຕີນຂອງຂ້າກວາດທານນໍ້າທັງສິ້ນຂອງເອຢິບໃຫ້ແຫ້ງໄປ
26 “ເຈົ້າບໍ່ໄດ້ຍິນຫລືວ່າ ເຮົາໄດ້ຈັດໄວ້ນານແລ້ວ ເຮົາໄດ້ກະແຜນການໄວ້ແຕ່ດຶກດໍາບັນ ຊຶ່ງໃນບັດນີ້ເຮົາໃຫ້ເປັນ
ໄປແລ້ວ ຄືເຈົ້າຈະທໍາເມືອງທີ່ມີປ້ອມໃຫ້ພັງລົງ ໃຫ້ເປັນກອງສິ່ງສລັກຫັກພັງ
27 ສ່ວນປະຊາຊົນທີ່ໄດ້ອາສັຍຢູ່ໃນທີ່ນັ້ນບໍ່ມີກໍາລັງແລະອັບອາຍ ແລະກາຍເປັນເຫມືອນຕົ້ນໄມ້ທີ່ທົ່ງນາ ແລະ
ເຫມືອນຫຍ້າອ່ອນ ເຫມືອນຫຍ້າທີ່ເທິງຍອດຫລັງຄາເຮືອນ ເຫມືອນຜັກກ່ອນມັນຈະໄດ້ງອກງາມຢ່າງນັ້ນຫລື
28 “ແຕ່ເຮົາໄດ້ຮູ້ຈັກການທີ່ເຈົ້ານັ່ງລົງກັບການອອກໄປແລະເຂົ້າມາຂອງເຈົ້າ ແລະການກ້ຽວກາດຂອງເຈົ້າຕໍ່ເຮົາ
29 ເພາະເຈົ້າໄດ້ກ້ຽວກາດຕໍ່ເຮົາ ແລະຄວາມຈອງຫອງຂອງເຈົ້າໄດ້ມາເຂົ້າຫູຂອງເຮົາ ສະນັ້ນເຮົາຈະເອົາຂໍຂອງ
ເຮົາກ່ຽວດັງເຈົ້າ ແລະບັງຫຽນຂອງເຮົາໃສ່ປາກເຈົ້າ ແລະເຮົາຈະຫັນເຈົ້າກັບໄປຕາມທາງຊຶ່ງເຈົ້າມານັ້ນ”
30 “ແລະນີ້ຈະເປັນຫມາຍສໍາຄັນແກ່ເຈົ້າ ຄື ປີນີ້ເຈົ້າຈະກິນສິ່ງທີ່ງອກຂຶ້ນເອງ ແລະໃນປີທີສອງສິ່ງທີ່ປົ່ງຈາກເດີມ
ແລ້ວປີທີ ສາມ ຈົ່ງຫວ່ານແລະກ່ຽວ ແລະທໍາສວນອະງຸ່ນແລະກິນຜົນຂອງມັນ
31 ສ່ວນທີ່ລອດແລະຄົນທີ່ເຫລືອຢູ່ແຫ່ງເຊື້ອວົງຂອງຢູດາຈະຢັ່ງຮາກລົງໄປ ແລະເກີດຜົນຂຶ້ນເທິງ
32 ເພາະວ່າສ່ວນຄົນທີ່ເຫລືອຢູ່ຈະອອກໄປຈາກເຢຣູຊາເລັມ ແລະສ່ວນທີ່ລອດມາຈະອອກມາຈາກພູຊີໂອນ
ຄວາມກະຕືຣືລົ້ນຂອງພຣະຜູ້ເປັນເຈົ້າຈອມໂຍທາຈະກະທໍາການນີ້

33 ເຫດສັນນັ້ນ ພຣະຜູ້ເປັນເຈົ້າກ່າວກ່ຽວກັບເຈົ້າຊີວິດແຫ່ງອັສຊີເຣັຽດັ່ງນີ້ວ່າ ທ່ານຈະບໍ່ເຂົ້າໃນນະຄອນນີ້ຫລືຍິງ
ທະນູໄປທີ່ນັ້ນ ຫລືຖືໂລ້ເຂົ້າມາຂ້າງຫນ້ານະຄອນຫລືສ້າງກອງດິນຂຶ້ນຕໍ່ສູ້ມັນ
34 ທ່ານມາທາງໃດ ທ່ານຈະຕ້ອງກັບໄປທາງນັ້ນ ທ່ານຈະບໍ່ເຂົ້າມາໃນນະຄອນນີ້ ພຣະຜູ້ເປັນເຈົ້າກ່າວດັ່ງນີ້
ແຫລະ
35 ແລະເຮົາຈະປ້ອງກັນນະຄອນນີ້ໄວ້ເພື່ອໃຫ້ລອດ ເພື່ອເຫັນແກ່ເຮົາເອງ ແລະເຫັນແກ່ດາວິດຜູ້ຮັບໃຊ້ຂອງເຮົາ”

Sennacherib’s Defeat and Death

(2 ກສດ 19:35-37)

36 ທູດຂອງພຣະຜູ້ເປັນເຈົ້າອອກໄປ ແລະໄດ້ປະຫານຄົນໃນຄ້າຍແຫ່ງຄົນອັສຊີເຣັຽເສັຽນຶ່ງແສນແປດຫມື່ນຫ້າພັນ
ຄົນ ແລະ ເມື່ອລຸກຂຶ້ນໃນເວລາເຊົ້າມືດ ເບິ່ງແມ່, ພວກເຫລົ່ານັ້ນເປັນສົບທັງນັ້ນ
37 ແລ້ວເຊນນາເຄຣິບເຈົ້າຊີວິດແຫ່ງອັສຊີເຣັຽກໍໄດ້ຍົກໄປແລະກັບບ້ານ ແລະຢູ່ໃນນີເນເວ
38 ຂນະເມື່ອທ່ານນະມັສການໃນໂບດຂອງພຣະນິສໂຣກພຣະເຈົ້າຂອງທ່ານ ອັດຣັມເມເລກ ແລະຊາເຣເຊີ ໂອ
ຣົດຂອງທ່ານກໍປະຫານທ່ານເສັຽດ້ວຍດາບ ແລະຫນີໄປຍັງແຜ່ນດິນອາຣາຣັດ ແລະເອຊາຮ໌ັດໂດນໂອຣົດ
ຂອງທ່ານຂຶ້ນປົກຄອງແທນທ່ານ

## 38 ເຮເຊກີຢາຊົງປະຊວນ

Hezskiah’s Illness

(2 ກສດ 20:1-11; 2 ຂຄວ 32:24-26)

1 ຄັ້ງນັ້ນເຮເຊກີຢາຊົງປະຊວນໃກ້ຈະສິ້ນພຣະຊົນ ແລະຜູ້ປະກາດພຣະທັມເອຊາຢາບຸດອາໂມສເຂົ້າມາເຝົ້າພ
ຣະອົງ ແລະທູນພຣະອົງວ່າ, “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຈົ່ງຈັດຕຽມການບ້ານການເມືອງໃຫ້ຮຽບຮ້ອຍ ເຈົ້າ
ຈະຕ້ອງຕາຍ ເຈົ້າຈະບໍ່ຟື້ນ
2 ແລ້ວເຮເຊກີຢາຊົງຫັນພຣະພັກເຂົ້າຂ້າງຝາ ແລະອ້ອນວອນຕໍ່ພຣະຜູ້ເປັນເຈົ້າວ່າ,
3 “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຣະນຶກເຖິງວ່າ ຂ້າພຣະອົງໄດ້ດຳເນີນຢູ່ຕໍ່ພຣະພັກພຣະອົງດ້ວຍຄວາມຊື່ສັດແລະ
ສິ້ນສຸດໃຈ ແລະໄດ້ກະທຳສິ່ງທີ່ດີໃນສາຍພຣະເນດຂອງພຣະອົງ” ແລະເຮເຊກີຢາຊົງກັນແສງຫລາຍຂຶ້ນ
4 ແລ້ວພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງເອຊາຢາວ່າ,
5 “ຈົ່ງໄປບອກເຮເຊກີຢາວ່າພຣະຜູ້ເປັນເຈົ້າ ພຣະເຈົ້າຂອງດາວິດບັນພະບຸຣຸດຂອງເຈົ້າກ່າວດັ່ງນີ້ວ່າ ເຮົາໄດ້ຍິນ
ຄຳອ້ອນ ວອນຂອງເຈົ້າແລ້ວ ເຮົາໄດ້ເຫັນນ້ຳຕາຂອງເຈົ້າແລ້ວ ເບິ່ງແມ, ເຮົາຈະເພີ້ມຊີວິດໃຫ້ເຈົ້າສິບຫ້າປີ
6 ເຮົາຈະຊ່ອຍກູ້ເຈົ້າແລະເມືອງນີ້ຈາກມືຂອງເຈົ້າຊີວິດອັສຊີເຣັຽ ແລະປ້ອງກັນເມືອງນີ້ໄວ້
7 ນີ້ເປັນຫມາຍສຳຄັນສຳລັບພຣະອົງຈາກພຣະຜູ້ເປັນເຈົ້າ ທີ່ພຣະເຈົ້າຊົງກະທຳສິ່ງນີ້ຕາມທີ່ພຣະອົງໄດ້ຊົງສັນ
ຍາໄວ້
8 ເບິ່ງແມ, ເຮົາຈະກະທຳໃຫ້ເງົາທີ່ດວງຕາເວັນສ່ອງມາເທິງນາລິກາແດດຂອງອາຮັສຍ້ອນກັບມາສິບຂັ້ນ
ດວງຕາເວັນກໍໄດ້ຍ້ອນກັບເທິງນາລິກາແດດສິບຂັ້ນ ຕາມຂັ້ນທີ່ໄດ້ຕົກໄປ
9 ບົດປະພັນຂອງເຮເຊກີຢາເຈົ້າຊີວິດຢູດາ ຫລັງຈາກທີ່ພຣະອົງໄດ້ຊົງປະຊວນແລະຊົງຟື້ນຈາກການປະຊວນ
ຂອງພຣະອົງນັ້ນມີວ່າ
10 ຂ້າພະເຈົ້າວ່າ ເມື່ອຊີວິດຂອງຂ້າພະເຈົ້າມາເຖິງກາງຄົນ ຂ້າພະເຈົ້າຈະຕ້ອງພາກໄປ ຂ້າພະເຈົ້າຖືກມອບໄວ້ທີ່
ປະຕູແດນຄົນຕາຍ ຕລອດຊີວິດບັ້ນປາຍຂອງຂ້າພະເຈົ້າ
11 ຂ້າພະເຈົ້າວ່າ ຂ້າພະເຈົ້າຈະບໍ່ເຫັນພຣະຜູ້ເປັນເຈົ້າ ໃນແຜ່ນດິນຂອງຜູ້ມີຊີວິດ ຂ້າພະເຈົ້າຈະເບິ່ງບໍ່ເຫັນມະນຸດ
ອີກທີ່ໃນຫມູ່ຊາວແຜ່ນດິນໂລກ

12 ບ່ອນຢູ່ຂອງຂ້າພະເຈົ້າຖືກຮື້ຖອນອອກໄປຈາກຂ້າພະເຈົ້າ ເຫມືອນກັບເຕັນຂອງຜູ້ລ້ຽງແກະ ຂ້າພະເຈົ້າໄດ້
ມ້ວນຊີວິດຂອງຂ້າພະເຈົ້າເຫມືອນຢ່າງຄົນຕ່ຳຜ້າ ພຣະອົງຊົງຕັດຂ້າພະເຈົ້າອອກຈາກຫູກ ພຣະອົງຊົງນຳຂ້າ
ພະເຈົ້າມາເຖິງອາວະສານທັງວັນແລະຄືນ
13 ຂ້າພະເຈົ້າໄດ້ຖ່ອມຕົວລົງຈົນຮຸ່ງເຊົ້າ ພຣະອົງຊົງຫັກກະດູກທັງສິ້ນຂອງຂ້າພະເຈົ້າເຫມືອນຢ່າງສິງ ພຣະອົງຊົງ
ນຳຂ້າພະເຈົ້າມາເຖິງອາວະສານທັງວັນແລະຄືນ
14 ຂ້າພະເຈົ້າຮ້ອງຢ່າງນົກນາງແອ່ນຫລື ນົກເຂົາ ຂ້າພະເຈົ້າໄດ້ຮ້ອງຄາງເຫມືອນນົກກາງແກ ຕາຂອງຂ້າພະເຈົ້າ
ເມື່ອຍອ່ອນດ້ວຍເບິ່ງຂຶ້ນຂ້າງເທິງ ຂ້າແດ່ອົງພຣະຜູ້ເປັນເຈົ້າ ຂ້າພຣະອົງຖືກບີບບັງຄັບ ຂໍພຣະອົງຊົງເປັນຜູ້ປະ
ກັນຂອງຂ້າພຣະອົງ
15 ແຕ່ຂ້າພະເຈົ້າຈະເວົ້າຫຍັງໄດ້ ເພາະພຣະອົງກ່າວກັບຂ້າພະເຈົ້າແລ້ວ ແລະພຣະອົງເອງໄດ້ຊົງກະທຳເຊັ່ນນັ້ນ
ຂ້າພະເຈົ້າກໍດຳເນີນໄປດ້ວຍຄວາມສົງບສະຫງ່ຽມຕລອດຊີວິດຂອງຂ້າພະເຈົ້າ ເພາະຄວາມຂົມຂື່ນແຫ່ງຈິດໃຈ
ຂອງຂ້າພະເຈົ້າ
16 ຂ້າແດ່ອົງພຣະຜູ້ເປັນເຈົ້າ ມະນຸດດຳຣົງຊີວິດຢູ່ໄດ້ດ້ວຍສິ່ງເຫລົ່ານີ້ ແລະຊີວິດແຫ່ງວິນຍານຂອງຂ້າພຣະອົງກໍ
ຢູ່ໃນສິ່ງເຫລົ່ານີ້ ຂໍຊົງໃຫ້ຂ້າພຣະອົງຫາຍດີ ແລະຂໍຊົງທຳໃຫ້ຂ້າພຣະອົງມີຊີວິດ
17 ເພາະເຫັນແກ່ສະວັດດີພາບຂອງຂ້າພຣະອົງ ຂ້າພຣະອົງຈຶ່ງມີຄວາມຂົມຂື່ນຫລາຍ ແຕ່ພຣະອົງຊົງຮັກຊີວິດ
ຂອງຂ້າພຣະອົງ ບໍ່ໃຫ້ຕົກຫລຸມແຫ່ງຄວາມພິນາດ ເພາະການບາບຂອງຂ້າພຣະອົງກໍໄດ້ຮັບອະພັຍ
18 ເພາະແດນຄົນຕາຍໂມທະນາພຣະຄຸນພຣະອົງບໍ່ໄດ້ ຄວາມມໍຣະນາສັຣເສີນພຣະອົງບໍ່ໄດ້ ບັນດາຄົນທີ່ລົງໄປ
ຍັງປາກແດນຄົນຕາຍນັ້ນຈະຫວັງໃນສັຈທັມຂອງພຣະອົງບໍ່ໄດ້
19 ຄົນເປັນ ຄົນເປັນ ເຂົາໂມທະນາພຣະຄຸນພຣະອົງ ເຫມືອນທີ່ຂ້າພຣະອົງກະທຳໃນວັນນີ້ ບິດາໄດ້ສຳແດງເຖິງສັ
ຈທັມຂອງ  ພຣະອົງແກ່ລູກຂອງເຂົາ
20 ພຣະເຈົ້າຈະຊົງຊ່ອຍຂ້າພະເຈົ້າໃຫ້ລອດ ແລະຂ້າພະເຈົ້າທັງຫລາຍຈະຫລິ້ນເຄື່ອງດົນຕຣີຂອງຂ້າພະເຈົ້າຕລອ
ດວັນເວລາແຫ່ງຊີວິດຂອງຂ້າພະເຈົ້າທັງຫລາຍທີ່ພຣະວິຫານຂອງພຣະຜູ້ເປັນເຈົ້າ
21 ຝ່າຍເອຊາຢາໄດ້ກ່າວວ່າ, “ໃຫ້ເຂົາເອົາເຂົ້າຫນົມຫມາກເດື່ອມາແຜ່ນນຶ່ງ ແລະແປະໄວ້ທີ່ຍອດ ເພື່ອພຣະອົງ
ຈະຟື້ນ”
22 ເຮເຊກີຢາໄດ້ກ່າວດ້ວຍວ່າ, “ແມ່ນຫຍັງຈະເປັນຫມາຍສຳຄັນວ່າຂ້າພະເຈົ້າຈະໄດ້ຂຶ້ນໄປຍັງພຣະວິຫານຂອງ
ພຣະຜູ້ເປັນເຈົ້າ”

## 39 ເຮເຊກີຢາຊົງຮັບຄນະທູດຈາກກຸງບາບີໂລນ

Envoys from Babylon Welcomed

(2 ກສດ 20:12-19)

1 ຄັ້ງນັ້ນ ເມໂຣດດັກບາລາດັນໂອຣົດຂອງບາລາດັນ ພຣະຣາຊາແຫ່ງບາບີໂລນ ຊົງສົ່ງຣາຊສານແລະເຄື່ອງບັນ
ນາການມາຍັງເຮເຊກີຢາ ເພາະພຣະອົງຊົງໄດ້ຍິນວ່າເຮເຊກີຢາຊົງປະຊວນແລະຊົງຫາຍປະຊວນແລ້ວ
2 ເຮເຊກີຢາຊົງຍິນດີເພາະເຂົາເຫລົ່ານັ້ນ ແລະຊົງພາເຂົາຊົມຄັງຊັບຂອງພຣະອົງ ຊົມເງິນ ທອງຄຳ ແລະເຄື່ອງ
ເທດ ແລະນ້ຳມັນປະເສີດ ແລະສາງອາວຸດຂອງພຣະອົງ ທຸກຢ່າງຊຶ່ງມີໃນຫ້ອງພຣະຄັງ ບໍ່ມີສິ່ງໃດທີ່ໃນພຣະຣາ
ຊວັງຫລືໃນຣາຊອານາຈັກຂອງພຣະອົງຊຶ່ງເຮເຊກີຢາບໍ່ໄດ້ຊົງສຳແດງແກ່ເຂົາ
3 ແລ້ວຜູ້ປະກາດພຣະທັມເອຊາຢາກໍເຂົ້າເຝົ້າກະສັດເຮເຊກີຢາແລະທູນພຣະອົງວ່າ, “ຄົນເຫລົ່ານີ້ທູນສິ່ງໃດແດ່
ແລະເຂົາມາແຕ່ໃສເຂົ້າເຝົ້າພຣະອົງ” ເຮເຊກີຢາກ່າວວ່າ, “ເຂົາໄດ້ມາຫາເຮົາຈາກເມືອງໄກ ຈາກບາບີໂລນ”

4 ທ່ານທູນວ່າ, "ເຂົາເຫັນສິ່ງໃດແດ່ໃນພຣະຣາຊວັງຂອງພຣະອົງ" ແລະເຮເຊກີຢາກ່າວຕອບວ່າ, "ເຂົາເຫັນທຸກ
ຢ່າງໃນວັງຂອງເຮົາ ບໍ່ມີສິ່ງໃດໃນພຣະຄັງຂອງເຮົາຊຶ່ງເຮົາບໍ່ໄດ້ສຳແດງແກ່ເຂົາ"
5 ແລ້ວເອຊາຢາທູນເຮເຊກີຢາວ່າ, "ຂໍຊົງຟັງພຣະທັມຂອງພຣະຜູ້ເປັນເຈົ້າຈອມໂຍທາ
6 ເບິ່ງແມ, ວັນເວລາກຳລັງຍ່າງເຂົ້າມາ ເມື່ອສັພສິ່ງທັງສິ້ນໃນວັງຂອງເຈົ້າ ແລະສິ່ງຊຶ່ງບັນພະບຸຣຸດຂອງເຈົ້າໄດ້
ສະສົມຈົນເຖິງທຸກວັນນີ້ຈະຕ້ອງຖືກເອົາໄປຍັງບາບີໂລນ ຈະບໍ່ມີສິ່ງເຫລືອເລີຍ ພຣະຜູ້ເປັນເຈົ້າກ່າວດັ່ງນີ້
ແຫລະ,
7 ແລະລູກບາງຄົນຊຶ່ງຖືກຳເນີດຈາກເຈົ້າ ຜູ້ຊຶ່ງເກີດມາແກ່ເຈົ້າຈະຖືກນຳເອົາໄປ ແລະເຂົາຈະເປັນຂັນທີໃນວັງ
ຂອງຣາຊາແຫ່ງບາບີໂລນ"
8 ແລ້ວເຮເຊກີຢາກ່າວກັບເອຊາຢາວ່າ, "ພຣະຄຳຂອງພຣະຜູ້ເປັນເຈົ້າຊຶ່ງທ່ານກ່າວນັ້ນກໍດີຢູ່" ເພາະພຣະອົງດຳ
ຣິວ່າ, "ຈະມີຄວາມຢູ່ເຢັນເປັນສຸກແລະຄວາມປອດພັຍໃນວັນເວລາຂອງເຮົານີ້"

## 40 ພຣະທັມທີ່ກ່ຽວກັບຄວາມຫວັງ

God's People Are comforted

(ລກ 3:4-6)

1 ພຣະເຈົ້າຂອງພວກເຮົາຊົງກ່າວວ່າ, "ຈົ່ງເລົ້າໂລມ ຈົ່ງເລົ້າໂລມໄພ່ພົນຂອງເຮົາ"
2 ຈົ່ງສນັບສະຫນຸນອູ້ມຊູຊາວເຢຣູຊາເລັມ ໃຫ້ບອກວ່າຄວາມທຸກຍາກທໍລະມານຂອງພວກເຂົານັ້ນບໍ່ມີອີກແລ້ວ
ແລະທີ່ທຳບາບນັ້ນກໍໄດ້ຮັບອະພັຍຫມົດ ການທີ່ເຮົາໄດ້ລົງໂທດຢ່າງຫນັກ ຍ້ອນການກະທຳບາບຂອງພວກ
ເຂົາເອງນັ້ນໄດ້ຄົບຖ້ວນຫມົດແລ້ວ
3 ສຽງນຶ່ງຮ້ອງຂຶ້ນວ່າ, "ຈົ່ງຈັດຕຽມຫົນທາງໄວ້ໃນທະເລຊາຍ ເພື່ອຕ້ອນຮັບພຣະຜູ້ເປັນເຈົ້າ ຈົ່ງປັດກວາດຫົນ
ທາງໃນຖິ່ນກັນດານໃຫ້ສະອາດ ເພື່ອຕ້ອນຮັບພຣະເຈົ້າຂອງພວກເຮົາ
4 ຮ່ອມພູທຸກໆແຫ່ງຈະຕ້ອງຖົມໃຫ້ເຕັມ ພູທຸກໆຫນ່ວຍຈະຕ້ອງເປັນດິນພຽງ ເນີນສູງທັງຫລາຍຈະຮາບພຽງຫມົດ
ບ່ອນສູງບ່ອນຕ່ຳຈະພຽງສເມີກັນ
5 ແລ້ວພຣະຣັສມີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າຈະມາປາກົດ ມະນຸດໃນໂລກຈະເຫັນກັນທຸກຄົນ ພຣະຜູ້
ເປັນເຈົ້າເອງຊົງສັນຍາດັ່ງນີ້"
6 ສຽງນຶ່ງຮ້ອງຂຶ້ນວ່າ, "ຈົ່ງປ່າວປະກາດເທີນ" ຂ້າພະເຈົ້າຈຶ່ງຖາມວ່າ, "ຂ້ອຍຈະປ່າວປະກາດຫຍັງ?" "ຈົ່ງປ່າວ
ປະກາດວ່າ ມະນຸດທັງປວງເປັນເຫມືອນກົກຫຍ້າ ອາຍຸຂອງເຂົາກໍບໍ່ຫມັ້ນຍືນກວ່າດອກໄມ້ປ່າ
7 ເມື່ອພຣະຜູ້ເປັນເຈົ້າຊົງໃຫ້ລົມພັດມາ ຫຍ້າກໍຫ່ຽວແຫ້ງແລະດອກໄມ້ກໍຮ່ວງໂຮຍ ແລະມະນຸດກໍບໍ່ແຂງແຮງໄປ
ກວ່າຫຍ້າ"
8 ແມ່ນແລ້ວ ຫຍ້າກໍຫ່ຽວແຫ້ງແລະດອກໄມ້ກໍຮ່ວງໂຮຍ ແຕ່ພຣະທັມແຫ່ງພຣະເຈົ້າຂອງເຮົາຈະມີຢູ່ຕລອດໄປ"
9 ຊາວເຢຣູຊາເລັມເອີຍ, ຈົ່ງຂຶ້ນໄປເທິງພູສູງ ປ່າວປະກາດຂ່າວດີນັ້ນ ຊາວຊີໂອນເອີຍ ຈົ່ງຮ້ອງສຽງດັງໆ ຈົ່ງປ່າວ
ປະກາດຂ່າວດີນັ້ນ ແລະເວົ້າເຖີດວ່າ ຢ່າຢ້ານເລີຍ ຈົ່ງບອກທົ່ວເມືອງຂອງຢູດາວ່າ ພຣະເຈົ້າຂອງເຂົາຈະສະ
ເດັດມາ
10 ພຣະຜູ້ເປັນເຈົ້າຈະສະເດັດມາປົກຄອງໄພ່ພົນດ້ວຍຣິດທານຸພາບ ພ້ອມທັງນຳປະຊາຊົນທີ່ພຣະອົງຊົງຊ່ອຍຊີ
ວິດໃຫ້ລອດພົ້ນນັ້ນມາພ້ອມ
11 ພຣະອົງຈະຊົງລ້ຽງຝູງສັດຂອງພຣະອົງເຫມືອນຄົນລ້ຽງແກະ ຈະຊົງຮວບຮວມເອົາລູກແກະແລະອຸ້ມມັນໄວ້ ຈະ
ຊົງນຳແມ່ມັນໄປຄ່ອຍໆຢ່າງທະນຸຖນອມ

**ຄວາມຍິ່ງໃຫຍ່ຂອງອົງພຣະຜູ້ເປັນເຈົ້າ**

12 ໃຜສາມາດກອບເອົານໍ້າມະຫາສະຫມຸດທັງຫມົດມາຊັ່ງເບິ່ງໄດ້ ຫລືແທກທ້ອງຟ້າໄດ້ດ້ວຍມືຄືບດຽວ ຄົນໃດ
ແດ່ສາມາດເອົາດິນທັງຫມົດໃນໂລກນີ້ໃສ່ກະລຸມດຽວໄດ້? ຫລືເອົາພູແລະໂນນຂຶ້ນຊັ່ງເທິງຊິງໄດ້
13 ຄົນໃດແດ່ສາມາດບອກໃຫ້ພຣະຜູ້ເປັນເຈົ້າເຮັດຢ່າງໃດຢ່າງນຶ່ງໄດ້ ໃຜສາມາດສອນ ຫລືແນະນຳພຣະອົງໄດ້
14 ພຣະເຈົ້າຊົງປຶກສາຜູ້ໃດແດ່ ພຣະອົງຈຶ່ງຮູ້ຈັກແລະເຂົ້າໃຈ ໃຜສອນພຣະອົງໃຫ້ມີຄວາມສລຽວສລາດ ມີສະຕິ
ປັນຍາແລະຄວາມຍຸດຕິທັມແດ່ຈຶ່ງກະທຳສິ່ງທັງຫລາຍນີ້ໄດ້
15 ພຣະຜູ້ເປັນເຈົ້າຊົງຖືວ່າຊົນຊາດທັງຫລາຍບໍ່ສຳຄັນຫຍັງ ພວກເຂົາບໍ່ສຳຄັນເທົ່ານໍ້າເມັດນຶ່ງຊໍ້າ ປະເທດຫ່າງໄກ
ທັງຫລາຍກໍເບົາເທົ່າກັບຝຸ່ນເມັດນຶ່ງ
16 ແມ່ນແຕ່ສັດທັງຫມົດໃນປ່າເລບານອນ ກໍບໍ່ພໍສຳລັບເຜົາບູຊາພຣະເຈົ້າຂອງເຮົາ ແລະໄມ້ໃນປ່ານັ້ນກໍ
ຫນ້ອຍໂພດສຳລັບ ດັງໄຟ
17 ຊົນຊາດທັງຫລາຍນັ້ນກໍບໍ່ສຳຄັນເລີຍສຳລັບພຣະອົງ
18 ທ່ານຈະປຽບພຣະເຈົ້າໃສ່ຫຍັງ ພຣະອົງມີລັກສະນະຢ່າງໃດ?
19 ພຣະອົງບໍ່ເຫມືອນຮູບໂຄຣົບທີ່ຄົນເຮັດຂຶ້ນ ຮູບນັ້ນນາຍຊ່າງເອົາຄຳໂອບແລະຕົກແຕ່ງດ້ວຍເງິນ
20 ຄົນຜູ້ທີ່ບໍ່ມີເງິນແລະຄຳ ກໍຫາເລືອກເອົາໄມ້ແນວດີ ແລ້ວຫາເອົານາຍຊ່າງຜູ້ຊຳນານມາປະດິດແຕ່ງໃຫ້ເປັນຮູບ
ທີ່ບໍ່ເຫນັງຕີງ
21 ພວກທ່ານບໍ່ຮູ້ບໍ ບໍ່ເຄີຍໄດ້ຍິນບໍ ແຕ່ກ່ອນໆມາບໍ່ມີຜູ້ໃດບອກບໍ ທ່ານເຄີຍໄດ້ຍິນການເລີ້ມຕົ້ນສ້າງໂລກບໍ
22 ໂລກນັ້ນກໍສ້າງໂດຍພຣະອົງຜູ້ຊົງປະທັບເທິງບັນລັງ ຊຶ່ງຢູ່ເຫນືອໂລກແລະເທິງທ້ອງຟ້າ ມະນຸສໂລກເບື້ອງລຸ່ມກໍ
ນ້ອຍເທົ່າມົດ ພຣະອົງຊົງກາງທ້ອງຟ້າອອກເຫມືອນກາງຜ້າກັ້ງ ເຫມືອນກາງຜ້າເຕັນໃຫ້ຄົນຢູ່ອາສັຍ
23 ຊົງເຮັດໃຫ້ຜູ້ປົກຄອງຫມົດອຳນາດ ແລະບໍ່ໃຫ້ມີຄວາມຫມາຍຫຍັງຫມົດ
24 ພວກເຂົາເປັນເຫມືອນຫຍ້າອ່ອນ ພໍແຕ່ຫວ່ານລົງແລະປົ່ງຮາກ ພຣະຜູ້ເປັນເຈົ້າກໍໃຫ້ລົມພັດມາ ພວກເຂົາຈຶ່ງ
ຫ່ຽວແຫ້ງແລະປິວໄປເຫມືອນເຟືອງ
25 ພຣະຜູ້ເປັນເຈົ້າອົງບໍຣິສຸດຊົງຖາມວ່າ, "ຈະປຽບທຽບຜູ້ໃດໃສ່ເຮົາ ມີຜູ້ໃດແດ່ເຫມືອນເຮົາ
26 ຈົ່ງແຫງນຫນ້າຂຶ້ນເບິ່ງຟ້າດູ ຜູ້ໃດສ້າງດາວທັງຫລາຍທີ່ທ່ານເຫັນນີ້ ພຣະອົງຜູ້ຊົງນຳມັນອອກມາເຫມືອນຂະ
ບວນກອງທັບ ຊົງຮູ້ຈັກວ່າມັນມີຫລາຍປານໃດ ແລະຊົງຕັ້ງຊື່ໃຫ້ມັນທຸກໆດວງ ດ້ວຍຣິດທານຸພາບອັນຍິ່ງໃຫຍ່
ຂອງພຣະອົງນັ້ນ ຈຶ່ງບໍ່ມີຈັກດວງສູນເສັຽໄປ
27 ອິສຣາເອນເອີຍ, ເປັນຫຍັງເຈົ້າຈຶ່ງຈົ່ມວ່າ ພຣະຜູ້ເປັນເຈົ້າບໍ່ຮູ້ເຫັນຄວາມທຸກຂອງພວກເຈົ້າ ຫລືຊົງກີດກັ້ນສິດ
ທິຂອງເຈົ້າໄວ້
28 ເຈົ້າບໍ່ຮູ້ບໍ ບໍ່ເຄີຍໄດ້ຍິນບໍ ວ່າພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າຕລອດໄປເປັນນິດ ພຣະອົງຊົງສ້າງໂລກທັງ
ຫມົດ ພຣະອົງບໍ່ເຄີຍເມື່ອຍ ຫລືອ່ອນແອ ບໍ່ມີໃຜຢັ່ງຮູ້ນໍ້າພຣະທັຍຂອງພຣະອົງ
29 ພຣະອົງຊົງທຳໃຫ້ຜູ້ອ່ອນແຮງແລະອິດເມື່ອຍມີກຳລັງວັງຊາ
30 ແມ່ນແຕ່ພວກຄົນຫນຸ່ມກໍຈະອ່ອນແຮງ ແລະຊາຍສະກັນກໍຈະລົ້ມລົງ
31 ແຕ່ຄົນທັງຫລາຍທີ່ລໍຄອຍພຣະຜູ້ເປັນເຈົ້າ ຈະໄດ້ຮັບການເສີມສ້າງເຫື່ອແຮງຂຶ້ນໃຫມ່ ພວກເຂົາຈະມີປີກບິນ
ໄປເຫມືອນນົກອິນຊີ ເມື່ອເຂົາແລ່ນຫລືຍ່າງໄປຈະບໍ່ເມື່ອຍແລະອ່ອນແຮງ

## 41 ພຣະເຈົ້າຊົງຮັບປະກັນອິສຣາເອນ

Israel Assured of God's Help

1 ພຣະເຈົ້າຊົງກ່າວວ່າ, "ປະເທດຫ່າງໄກເອີຍ, ຈົ່ງມິດຽບແລະຟັງເຮົາເທີນ ໃຫ້ຕຽມຕົວສູ້ຄະດີໃນສານ ພວກ
ເຈົ້າຈະມີໂອກາດເວົ້າ ໃຫ້ພວກເຮົາພ້ອມໃຈກັນຕັດສິນວ່າໃຜເປັນຜູ້ຖືກຕ້ອງ

2 ແມ່ນໃຜນຳເອົາຜູ້ມີຊັຍມາຈາກຕາເວັນອອກ ແລະເຮັດໃຫ້ທ່ານມີຊັຍໃນທຸກທີ່ນທຸກແຫ່ງ ແມ່ນໃຜໃຫ້ທ່ານມີຊັຍຊະນະກະສັດແລະຊົນຊາດທັງຫລາຍ ດາບຂອງທ່ານໄດ້ຟັນເຂົາລົ້ມລົງ ພວກເຂົາເປັນເຫມືອນຝຸ່ນຕໍ່ຫນ້າທ່ານ ຫນ້າທະນູຂອງທ່ານໄດ້ທຳໃຫ້ເຂົາແຕກກະຈາຍໄປເຫມືອນລົມພັດຕໍເຟືອງ

3 ທ່ານໄລ່ຕິດຕາມໄປໄວຫລາຍຈົນແທບຕີນບໍ່ຊຸນດິນແລະຜ່ານໄປໄດ້ຢ່າງປອດພັຍ

4 ໃຜເປັນຜູ້ທຳໃຫ້ການເຫລົ່ານີ້ບັງເກີດຂຶ້ນ ໃຜເປັນຜູ້ກຳນົດລະຍະເວລາແຫ່ງປະຫວັດສາດ ເຮົາເປັນຜູ້ເລີ້ມຕົ້ນແລະຜູ້ປາຍ ເຮົາພຣະຜູ້ເປັນເຈົ້ານີ້ແຫລະແມ່ນຜູ້ນັ້ນ

5 ເມື່ອຊົນຊາດຫ່າງໄກໄດ້ເຫັນການກະທຳຂອງເຮົາແລ້ວ ພວກເຂົາກໍຢ້ານກົວຕົວສັ່ນ ດັ່ງນັ້ນພວກເຂົາທັງຫມົດຈຶ່ງມາໂຮມກັນ

6 ພວກນາຍຊ່າງໄດ້ຊ່ອຍເຫລືອແລະໃຫ້ກຳລັງໃຈແກ່ກັນແລະກັນ

7 ຊ່າງໄມ້ກໍເວົ້າກັບຊ່າງຄຳວ່າ ດີແລ້ວ ຜູ້ທີ່ເຮັດໃຫ້ຮູບກົ້ງງາມ ກໍຫນຸນໃຈຜູ້ທີ່ຕີໃຫ້ແຈບ ບາງຄົນເວົ້າວ່າ ການຈອດນີ້ດີແລ້ວ ພວກເຂົາໄດ້ເອົາຕະປູຕີຮູບໃຫ້ແຫນ້ນ

8 ແຕ່ເຈົ້າ ອິສຣາເອນຄົນໃຊ້ຂອງເຮົາເອີຍ, ພວກເຈົ້າເປັນໄພ່ພົນທີ່ເຮົາເລືອກໄວ້ ເປັນເຊື້ອສາຍອັບຣາຮາມເພື່ອນຂອງເຮົາ

9 ເຮົາໄດ້ເອົາພວກເຈົ້ານາຍມາຈາກສິ້ນສຸດໂລກ ເອີ້ນມາຈາກບ່ອນໄກສຸດຂອງໂລກ ແລະເວົ້າວ່າພວກເຈົ້າເປັນຜູ້ຮັບໃຊ້ຂອງເຮົາ ເຮົາບໍ່ໄດ້ປະຖິ້ມ ແຕ່ໄດ້ເລືອກເອົາພວກເຈົ້າ

10 ຢ່າສູ່ຢ້ານເພາະວ່າເຮົາຈະຢູ່ນຳພວກເຈົ້າ ເຮົາເປັນພຣະເຈົ້າຂອງພວກເຈົ້າ ເຮົາຈະບໍ່ໃຫ້ພວກເຈົ້າຢ້ານຫຍັງຈະຊ່ອຍເຫລືອແລະຫນຸນກຳລັງພວກເຈົ້າ ຈະຄຸ້ມຄອງແລະຊ່ອຍໃຫ້ພົ້ນພັຍ

11 ໄພ່ພົນຂອງເຮົາເອີຍ, ຜູ້ໃດຄຽດຮ້າຍພວກເຈົ້າ ຈະໄດ້ຮັບຄວາມເຊື່ອມເສັຽ ແລະຮູ້ສຶກລະອາຍຜູ້ໃດຕໍ່ສູ້ເຈົ້າ ຜູ້ນັ້ນຈະຕາຍ

12 ຜູ້ໃດຮົບເລວກັບເຈົ້າ ຜູ້ນັ້ນຈະສູນຫາຍໄປຈາກໂລກ

13 ເຮົາເປັນພຣະຜູ້ເປັນເຈົ້າຂອງເຈົ້າ ເຮົາຈະຫນຸນກຳລັງແລະບອກພວກເຈົ້າວ່າ ຢ່າສູ່ຢ້ານ ເພາະເຮົາຈະຊ່ອຍເຈົ້າ

14 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ອິສຣາເອນເອີຍ, ເຈົ້າຍັງເປັນຜູ້ນ້ອຍແລະອ່ອນແອ ແຕ່ຢ່າສູ່ຢ້ານ ເພາະເຮົາຈະຊ່ອຍເຈົ້າ ເຮົາຄືພຣະເຈົ້າອົງບໍຣິສຸດຂອງອິສຣາເອນ ເຮົາເປັນຜູ້ຊ່ອຍໄຖ່ເອົາພວກເຈົ້າໃຫ້ພົ້ນພັຍ

15 ເຮົາຈະທຳໃຫ້ເຈົ້າເປັນເຫມືອນເຄື່ອງໄຖຄາດທີ່ຍັງໃຫມ່ແລະແຫລມຄົມ ເຈົ້າຈະທັບແລະທຳລາຍພູທັງຫລາຍພູນ້ອຍທັງຫລາຍຈະຖືກບົດປົ້ໃຫ້ເປັນຝຸ່ນ

16 ເຈົ້າຈະຈັບໂຍນພວກມັນຂຶ້ນເທິງອາກາດ ເຫມືອນເຂົ້າລີບທີ່ພັດຈາກກະດົ້ງຝັດ ລົມແລະລົມພະຍຸຈະພັດມັນໄປກະຈັດກະຈາຍ ແຕ່ເຈົ້າຈະມີຄວາມສຸກ ຍ້ອນວ່າເຮົາເປັນພຣະເຈົ້າຂອງເຈົ້າ ແລ້ວເຈົ້າຈະກ່າວສັຣເສີນເຮົາພຣະເຈົ້າອົງບໍຣິສຸດຂອງອິສຣາເອນ

17 ເມື່ອໄພ່ພົນຜູ້ຍາກຈົນຂອງເຮົາຕ້ອງການນໍ້າ ເມື່ອຄໍຂອງເຂົາແຫ້ງຍ້ອນວ່າຫິວນໍ້າ ເຮົາຄືພຣະຜູ້ເປັນເຈົ້າຈະຕອບຄຳອ້ອນວອນຂອງພວກເຂົາ ເຮົາຄືພຣະເຈົ້າຂອງອິສຣາເອນຈະບໍ່ປະຖິ້ມເຂົາ

18 ເຮົາຈະທຳໃຫ້ແມ່ນໍ້າໄຫລຜ່ານຫົວພູໂລ້ນ ແລະໃຫ້ນໍ້າພຸໄຫລອອກໃນຮ່ອມພູ ຈະທຳໃຫ້ຖິ່ນກັນດານມີຫນອງນໍ້າ ແລະໃຫ້ດິນແຫ້ງມີນໍ້າອອກບໍ່

19 ຈະໃຫ້ກົກສົນ ກົກກະຖິນເທດ ກົກນໍ້າມັນຂຽວ ແລະກົກຫມາກກອກເທດເກີດຂຶ້ນໃນຖິ່ນກັນດານ ໃນບ່ອນກົ້ງງແປນຈະກາຍເປັນປ່າກົກສົນ

20 ຄົນທັງຫລາຍຈະເຫັນແລະຮູ້ວ່າ ແມ່ນເຮົາຄືພຣະຜູ້ເປັນເຈົ້າຊົງກະທຳການນີ້ ພວກເຂົາຈະພ້ອມກັນເຂົ້າໃຈວ່າແມ່ນພຣະເຈົ້າອົງບໍຣິສຸດຂອງອິສຣາເອນຊົງໃຫ້ບັງເກີດຂຶ້ນ”

**ພຣະຜູ້ເປັນເຈົ້າຊົງທ້າທາຍພຣະທຽມ**

21 ພຣະຜູ້ເປັນເຈົ້າຄືເຈົ້າຊີວິດຂອງອິສຣາເອນຊົງກ່າວດັ່ງນີ້,

22 "ພຣະຂອງຊົນຊາດທັງຫລາຍເອີຍ, ຈົ່ງນຳຫລັກຖານແລະຂໍ້ໂຕ້ຖຽງທີ່ດີຂອງເຈົ້າມາທີ່ນີ້ ໃຫ້ທຳນວາຍວ່າແມ່ນຫຍັງຈະ ເກີດຂຶ້ນ ຈົ່ງອະທິບາຍເຫດການໃນອະດີດໃຫ້ເຮົາຮູ້ ແລະຈົ່ງບອກວ່າມັນເປັນຂຶ້ນມາໄດ້ຢ່າງໃດ ເພື່ອເຮົາຈະໄດ້ຮູ້ເມື່ອມັນເກີດຂຶ້ນ

23 ຈົ່ງບອກເຮົາວ່າຕໍ່ໄປນີ້ແມ່ນຫຍັງຈະເກີດຂຶ້ນ ເພື່ອເຮົາຈະໄດ້ຮູ້ວ່າເຈົ້າເປັນພຣະ ຈົ່ງທຳດີ ຫລືທຳຮ້າຍ ເພື່ອເຮົາຈະໄດ້ຢ້ານແລະຕື່ນຕົກໃຈ

24 ການກະທຳຂອງພວກເຈົ້າກໍບໍ່ມີຫຍັງ ແລະພວກເຈົ້າບໍ່ມີຫຍັງເລີຍ ຄົນທັງຫລາຍທີ່ຂາບໄຫວ້ເຈົ້າກໍຫນ້າກຽດຊັງ

25 ເຮົາໄດ້ເລືອກເອົາຄົນນຶ່ງຈາກທິດຕາເວັນອອກເຂົ້າມາທາງເຫນືອ ເຂົາຈະຢຽບຢ່ຳພວກຜູ້ປົກຄອງເຫມືອນຢຽບຂີ້ຕົມ ເຫມືອນຊ່າງປັ້ນຫມໍ້ຢຽບດິນຫນຽວ

26 ໃຜຈະບອກເຮົາລ່ວງຫນ້າ ຫລືທຳນວາຍວ່າສິ່ງນີ້ຈະເກີດຂຶ້ນ ເພື່ອເຮົາຈະໄດ້ກ່າວວ່າຖືກຕ້ອງແລ້ວ ບໍ່ມີໃຜເວົ້າເຖິງເຣື່ອງນີ້ ບໍ່ມີໃຜໄດ້ຍິນເຈົ້າເວົ້າເຣື່ອງນີ້ເລີຍ

27 ເຮົາພຣະຜູ້ເປັນເຈົ້າເປັນຜູ້ທຳອິດທີ່ບອກຂ່າວແກ່ຊາວຊີໂອນ ຄືເຢຣູຊາເລັມ ເພື່ອວ່າປະຊາຊົນຂອງເຈົ້າຈະມາ ພວກເຂົາຈະກັບມາບ້ານ

28 ເມື່ອເຮົາຫລຽວເບິ່ງພຣະທັງຫລາຍ ກໍບໍ່ມີຜູ້ໃດປາກເວົ້າ ບໍ່ມີໃຜຕອບຄຳຖາມຂອງເຮົາ

29 ພຣະທັງຫລາຍເຫລົ່ານີ້ບໍ່ມີປໂຍດ ມັນເຮັດຫຍັງບໍ່ໄດ້ເລີຍ ຮູບໂຄຣົບຂອງພວກເຂົາໃຊ້ການບໍ່ໄດ້ແລະບໍ່ມີຣິດເດດ"

## 42 ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ

The Servant, A Light to The Nation

1 ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ນີ້ແມ່ນຜູ້ຮັບໃຊ້ຂອງເຮົາ ຜູ້ທີ່ເຮົາອູ້ມຊູ ຜູ້ທີ່ເຮົາເລືອກເອົາໄວ້ດ້ວຍຄວາມພໍພຣະທັຍ ເຮົາໃຫ້ເຂົາມີອຳນາດອັນບໍຣິສຸດ ເຂົາຈະນຳຄວາມຍຸດຕິທັມໄປຍັງຊົນຊາດທັງຫລາຍ

2 ເຂົາຈະບໍ່ຮ້ອງ ຫລືເປັ່ງສຽງອອກໄປ ຫລືຈະບໍ່ປ່າວປະກາດຕາມຖນົນຫົນທາງ

3 ຕົ້ນອໍ້ທີ່ບອມແລ້ວທ່ານຍັງບໍ່ທຳໃຫ້ຂາດ ຕະກຽງໃກ້ຈະມອດແລ້ວ ທ່ານຍັງບໍ່ທຳໃຫ້ມອດ ຈະນຳເອົາຄວາມຍຸດຕິທັມອັນທ່ຽງແທ້ຖາວອນໄປໃຫ້ຄົນທັງປວງ

4 ເຂົາຈະບໍ່ສູນເສັຽຄວາມຫວັງ ຫລືຄວາມກ້າຫານ ຈະຕັ້ງຄວາມຍຸດຕິທັມໄວ້ໃນໂລກ ແຜ່ນດິນທີ່ຫ່າງໄກຈະລໍຄອຍຄຳສອນຂອງເຂົາດ້ວຍຄວາມຮ້ອນຮົນ"

5 ພຣະເຈົ້າຊົງສ້າງທ້ອງຟ້າແລະກາງມັນອອກໄປ ຊົງຕົກແຕ່ງໂລກແລະທຸກໆສິ່ງທີ່ມີຊີວິດ ຊົງໃຫ້ຊີວິດແລະລົມຫາຍໃຈແກ່ຄົນທັງປວງ ແລະບັດນີ້ອົງພຣະຜູ້ເປັນເຈົ້າຊົງກ່າວຕໍ່ຜູ້ຮັບໃຊ້ຂອງພຣະອົງວ່າ,

6 "ເຮົາພຣະຜູ້ເປັນເຈົ້າໄດ້ເອີ້ນເຈົ້າມາ ແລະໃຫ້ອຳນາດແກ່ເຈົ້າ ເພື່ອຈະໃຫ້ມີສຳພັນທະໄມຕຣີກັບຊົນຊາດທັງປວງ ແລະເຈົ້າຈະນຳເອົາຄວາມສະວ່າງຣາສີມາຍັງປະຊາຊາດ

7 ເຈົ້າຈະທຳໃຫ້ຄົນຕາບອດເຫັນຮຸ່ງ ແລະຈະປ່ອຍຜູ້ທີ່ຢູ່ໃນຄຸກມືດເປັນອິສຣະ

8 ນີ້ຄືພຣະນາມຂອງເຮົາ ແມ່ນເຮົາຜູ້ດຽວເທົ່ານັ້ນທີ່ເປັນພຣະຜູ້ເປັນເຈົ້າ ເຮົາຈະບໍ່ແບ່ງປັນພຣະຣັສມີຂອງເຮົາໃຫ້ພຣະອື່ນ ແລະຈະບໍ່ແບ່ງປັນຄວາມສັຣເສີນໃຫ້ຮູບໂຄຣົບ

9 ສິ່ງທີ່ເຮົາໄດ້ກ່າວທຳນວາຍໄວ້ໄດ້ກາຍເປັນຈິງແລ້ວ ບັດນີ້ເຮົາຈະບອກສິ່ງໃຫມ່ໆແກ່ເຈົ້າກ່ອນທີ່ສິ່ງເຫລົ່ານັ້ນຈະໄດ້ເກີດຂຶ້ນ"

**ເພງສັຣເສີນ**

A Hymn of Praise

10 ຈົ່ງຮ້ອງເພງບົດໃຫມ່ຖວາຍພຣະຜູ້ເປັນເຈົ້າ ທົ່ວໂລກຈົ່ງຮ້ອງເພງສັຣເສີນພຣະອົງ ພວກເຈົ້າທີ່ແລ່ນເຮືອໄປໃນ
ທະເລ ຈົ່ງສັຣເສີນພຣະອົງ ທຸກໆສິ່ງທີ່ຊົງສ້າງໄວ້ໃນທະເລ ຈົ່ງສັຣເສີນພຣະອົງ ແຜ່ນດິນທີ່ຢູ່ຫ່າງໄກແລະທຸກໆ
ຄົນໃນທີ່ນັ້ນ ຈົ່ງ

ສັຣເສີນພຣະອົງ

11 ຖິ່ນກັນດານແລະຫົວເມືອງທັງຫລາຍ ຈົ່ງສັຣເສີນພຣະເຈົ້າ ປະຊາຊົນເກດາ ຈົ່ງສັຣເສີນພຣະອົງ ຜູ້ທີ່ຢູ່ໃນ
ເມືອງເຊລາ ຈົ່ງຮ້ອງໂຮ່ມ່ວນຊື່ນຈາກເທິງຈອມພູ

12 ຜູ້ທີ່ຢູ່ໃນປະເທດຫ່າງໄກ ຈົ່ງຖວາຍຄຳສັຣເສີນແລະຄວາມສະງ່າຣາສີແດ່ພຣະອົງ

13 ພຣະຜູ້ເປັນເຈົ້າສະເດັດອອກໄປຕໍ່ສູ້ເຫມືອນວິຣະບຸຣຸດ ພຣະອົງຊົງຕຽມພ້ອມແລະຮ້ອນຮົນໃນການຕໍ່ສູ້ ຊົງ
ເປັ່ງສຽງສັ່ງຮົບ ຊົງສະແດງຣິດທານຸພາບຕໍ່ຫນ້າພວກສັດຕຣູ

**ພຣະເຈົ້າຊົງສັນຍາຈະຊ່ອຍໄພ່ພົນຂອງພຣະອົງ**

14 ພຣະເຈົ້າຊົງກ່າວວ່າ, “ເຮົາໄດ້ມິດງຽບຢູ່ເຫິງນານແລ້ວ ເຮົາບໍ່ໄດ້ຕອບໄພ່ພົນຂອງເຮົາ ແຕ່ບັດນີ້ໄດ້ມາເຖິງ
ແລ້ວ ເຮົາຈະຮ້ອງອອກມາເຫມືອນຍິງກຳລັງອອກລູກ

15 ເຮົາຈະທຳລາຍພູນ້ອຍພູໃຫຍ່ທັງຫລາຍ ຈະໃຫ້ກົກໄມ້ແລະຫຍ້າຫ່ຽວແຫ້ງຕາຍໄປ ຈະໃຫ້ແມ່ນ້ຳກາຍເປັນ
ເກາະດອນ ແລະໃຫ້ສະທັງຫລາຍແຫ້ງໄປ

16 ເຮົາຈະຈູງຄົນຕາບອດຂອງເຮົາໄປຕາມທາງທີ່ເຂົາບໍ່ເຄີຍໄປ ຈະໃຫ້ຄວາມມືດຂອງເຂົາກາຍເປັນແສງສວ່າງ
ແລະຈະໃຫ້ບ່ອນສູງຕ່ຳເປັນບ່ອນຮາບພຽງ ສິ່ງເຫລົ່ານີ້ເຮົາຈະຕ້ອງກະທຳ

17 ຄົນທັງຫລາຍທີ່ເຊື່ອຖືໃນຮູບໂຄຣົບ ຜູ້ທີ່ຖືພຣະນັ້ນເປັນພຣະຂອງເຂົາຈະອັບອາຍຂາຍຫນ້າແລະເສັຽສັກສີ”

18 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຄົນຫູຫນວກເອີຍ, ຈົ່ງຟັງເດີ ພວກເຈົ້າຜູ້ຕາບອດເອີຍ, ຈົ່ງຟັງຄັກໆ

19 ໃຜເປັນຄົນຕາບອດກວ່າຜູ້ຮັບໃຊ້ຂອງເຮົາ ແລະໃຜຫູຫນວກຫນັກກວ່າຄົນສົ່ງຂ່າວທີ່ເຮົາໃຊ້ໄປ

20 ອິສຣາເອນເອີຍ, ເຈົ້າໄດ້ເຫັນຫລາຍຢ່າງ ແຕ່ບໍ່ຮູ້ທີ່ບຫຍັງເລີຍ ເຈົ້າມີຫູສຳລັບຟັງ ແຕ່ເຈົ້າໄດ້ຍິນຫຍັງແດ່

Israel’s Disobedience

21 ພຣະຜູ້ເປັນເຈົ້າຊົງມີພຣະປະສົງຢ່າງແຮງກ້າຢາກຊ່ອຍເຂົາໃຫ້ພົ້ນພັຍ ຈຶ່ງໄດ້ແຕ່ງຕັ້ງຄຳສັ່ງສອນຂອງພຣະອົງ
ຢ່າງມີກຽດ

22 ແຕ່ໄພ່ພົນຂອງພຣະອົງໄດ້ຖືກເຂົາປຸ້ນ ຖືກເຂົາຈັບຂັງໄວ້ໃນຫ້ອງມືດ ແລະເອົາເຊື່ອງໄວ້ໃນຄຸກ ພວກເຂົາຖືກລັ
ກ ແລະປຸ້ນເອົາໄປໂດຍບໍ່ມີໃຜມາຊ່ອຍເຫລືອເລີຍ

23 ມີໃຜໃນພວກເຈົ້າຈະຟັງເຣື່ອງນີ້ແດ່ ຕໍ່ແຕ່ນີ້ໄປພວກເຈົ້າຈະຕັ້ງໃຈຟັງບໍ

24 ໃຜມອບອິສຣາເອນໃຫ້ແກ່ພວກປຸ້ນ ແມ່ນພຣະຜູ້ເປັນເຈົ້າເອງເປັນຜູ້ມອບ ຍ້ອນເຮົາທຳບາບຕໍ່ສູ້ພຣະອົງ
ພວກເຮົາບໍ່ໄດ້ດຳເນີນຊີວິດຕາມຄວາມປະສົງຂອງພຣະອົງ ຫລືບໍ່ເຊື່ອຟັງຄຳສັ່ງສອນທີ່ພຣະອົງຊົງບອກ

25 ສະນັ້ນພຣະອົງຈຶ່ງຊົງພຣະພິໂຣດພວກເຮົາ ແລະຊົງໃຫ້ປະສົບກັບພັຍສົງຄາມຢ່າງຮ້າຍແຮງ ຄວາມໂກດຂອງ
ພຣະອົງຮ້ອນໄປທົ່ວທັງອິສຣາເອນເຫມືອນໄຟເຜົາ ແຕ່ພວກເຮົາບໍ່ໄດ້ຮູ້ວ່າມີຫຍັງເກີດຂຶ້ນ ແລະບໍ່ສົນໃຈໃນ
ເຣື່ອງນີ້ເລີຍ

## 43 ພຣະເຈົ້າຊົງຊ່ອຍໄພ່ພົນຂອງພຣະອົງ

Restoration and Protection Promised

1 ອິສຣາເອນເອີຍ, ພຣະຜູ້ເປັນເຈົ້າອົງຊົງສ້າງເຈົ້າໄດ້ກ່າວວ່າ, “ຢ່າສູ່ຢ້ານ ເຮົາຈະຄຸ້ມຄອງເຈົ້າ ເຮົາໄດ້ເອີ້ນ
ເຈົ້າຕາມຊື່ ເຮົາໄດ້ໄຖ່ພວກເຈົ້າມາເປັນຄົນຂອງເຮົາ

2 ເມື່ອເຈົ້າຜ່ານໄຟ ຫລືລອຍນໍ້າເລິກ ເຮົາກໍຈະຢູ່ນຳເຈົ້າ ເຈົ້າຈຶ່ງຈະຜ່ານພົ້ນຄວາມຍາກລຳບາກໄປໄດ້ ເມື່ອເຈົ້າ
ຍ່າງຜ່ານໄຟໄປ ມັນຈະບໍ່ໄຫມ້ເຈົ້າ ເຈົ້າຈະຜ່ານຜ່າຄວາມຫຍຸ້ງຍາກເຫລົ່ານີ້ໄປໄດ້

3 ເພາະວ່າເຮົາເປັນພຣະຜູ້ເປັນເຈົ້າຂອງເຈົ້າ ຄືພຣະເຈົ້າອົງບໍຣິສຸດຂອງອິສຣາເອນ ອົງຊົງຊ່ອຍເຈົ້າໃຫ້ລອດພົ້ນ
ເຮົາຈະໃຫ້ເອຢິບເປັນຄ່າໄຖ່ຂອງເຈົ້າ ຈະໃຫ້ເອທິໂອເປັຍແລະເຊບາເປັນຄ່າແລກປ່ຽນເອົາເຈົ້າ

4 ແລະເອົາຊົນຊາດທັງປວງແລກກັບຊີວິດຂອງເຈົ້າ ເພາະວ່າເຈົ້າມີຄຸນຄ່າສຳລັບເຮົາ ເຮົາເປັນຜູ້ໃຫ້ກຽດແລະ
ຮັກເຈົ້າ

5 ຢ່າສູ່ຢ້ານ ເພາະວ່າເຮົາຈະຢູ່ນຳເຈົ້າ ເຮົາຈະໂຮມເອົາຍາດຕິເຊື້ອສາຍຂອງເຈົ້າມາຈາກທິດຕາເວັນອອກແລະ
ຕາເວັນຕົກ

6 ເຮົາຈະບອກໃຫ້ທິດເຫນືອປ່ອຍເຂົາໄປ ແລະບອກບໍ່ໃຫ້ທິດໃຕ້ຫນ່ວງຫນ່ຽວເຂົາໄວ້ ຈົ່ງປ່ອຍໃຫ້ໄພ່ພົນຂອງ
ເຮົາມາແຕ່ທີ່ໄກເສັ້ງ ຄືມາຈາກທຸກພາກສ່ວນຂອງໂລກ

7 ພວກເຂົາເປັນຄົນພິເສດຂອງເຮົາເອງ ເຮົາໄດ້ສ້າງເຂົາເພື່ອນຳກຽດມາສູ່ເຮົາ”

**ອິສຣາເອນເປັນພຍານຂອງພຣະຜູ້ເປັນເຈົ້າ**

8 ພຣະເຈົ້າຊົງກ່າວວ່າ, “ຈົ່ງເອີ້ນເອົາໄພ່ພົນຂອງເຮົາມາຍັງສານ ພວກເຂົາມີຕາແຕ່ບໍ່ເຫັນຮຸ່ງ ມີຫູແຕ່ບໍ່ໄດ້ຍິນ

9 ຈົ່ງເອີ້ນເອົາຊົນຊາດທັງຫລາຍມາສັນນະສູດເບິ່ງວ່າພຣະອັນໃດຂອງພວກເຂົາໄດ້ບອກເຫດການລ່ວງຫນ້າ
ແລະໄດ້ທຳນວາຍໃນສິ່ງທີ່ກຳລັງຈະເກີດຂຶ້ນດຽວນີ້ ໃຫ້ພຣະເຫລົ່ານີ້ນຳເອົາພຍານມາເບິ່ງ ເພື່ອຢັ້ງຢືນວ່າເຂົາ
ຖືກຕ້ອງ ແລະຄຳເວົ້າຂອງເຂົາເປັນຈິງ ຫລືບໍ່

10 ຊາວອິສຣາເອນເອີຍ, ເຈົ້າເປັນພຍານຂອງເຮົາ ເຮົາເລືອກເອົາເຈົ້າເປັນຊົນຊາດຮັບໃຊ້ເຮົາ ເພື່ອເຈົ້າຈະເຊື່ອ
ໃນຕົວເຮົາແລະຮູ້ຈັກວ່າເຮົາເທົ່ານັ້ນທີ່ເປັນພຣະເຈົ້າ

11 ເຮົາຜູ້ດຽວເປັນພຣະຜູ້ເປັນເຈົ້າ ຜູ້ດຽວເທົ່ານັ້ນທີ່ຊ່ອຍເຈົ້າໃຫ້ພົ້ນໄພໄດ້

12 ເຮົາໄດ້ບອກໄວ້ກ່ອນແລ້ວວ່າສິ່ງນີ້ຈະເກີດຂຶ້ນ ແລະເຮົາກໍຈະຊ່ອຍເຈົ້າ ພຣະຕ່າງປະເທດເຮັດດັ່ງນີ້ບໍ່ໄດ້ ພວກ
ເຈົ້າເປັນພຍານຂອງເຮົາ

13 ເຮົາເປັນພຣະເຈົ້າ ແລະຈະເປັນຢູ່ຢ່າງນີ້ຕລອດໄປ ບໍ່ມີໃຜຫນີພົ້ນອຳນາດຂອງເຮົາໄປໄດ້ ແລະທັງປ່ຽນແປງ
ການກະທຳຂອງເຮົາບໍ່ໄດ້”

**ຫນີຈາກນະຄອນບາບີໂລນ**

14 ພຣະຜູ້ເປັນເຈົ້າອົງບໍຣິສຸດຂອງອິສຣາເອນ ຜູ້ຊົງໄຖ່ເຈົ້າໃຫ້ພົ້ນພັຍຊົງກ່າວວ່າ, “ເພື່ອຊ່ອຍເຈົ້າ ເຮົາຈະສົ່ງກອງ
ທັບໄປໂຈມຕີບາບີໂລນ ຈະທຳລາຍປະຕູເມືອງ ແລະສຽງໂຮ່ຮ້ອງຂອງປະຊາຊົນຈະກາຍເປັນສຽງຮ້ອງໄຫ້
ໂອ່ຍຄາງ

15 ເຮົາເປັນພຣະຜູ້ເປັນເຈົ້າອົງບໍຣິສຸດຂອງເຈົ້າ ອິສຣາເອນເອີຍ, ເຮົາໄດ້ສ້າງເຈົ້າ ແລະເຮົາເປັນເຈົ້າຊີວິດຂອງ
ເຈົ້າ”

16 ຕັ້ງແຕ່ດົນນານມາແລ້ວ ພຣະຜູ້ເປັນເຈົ້າໄດ້ຊົງສ້າງທາງໃນທະເລ ຄືສ້າງທາງໃນແປວນໍ້າບຸ້ນ

17 ພຣະອົງຊົງນຳກອງທັບອັນເຂັ້ມແຂງ ມີຣົດຮົບແລະມ້າໄປທຳລາຍພວກເຂົາ ພວກເຂົາຈຶ່ງລົ້ມລົງ ແລະລຸກຂຶ້ນ
ບໍ່ໄດ້ ເປັນເຫມືອນໄຟທຽນທີ່ມອດແລ້ວ

18 ແຕ່ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຢ່າຈົດຈຳເຣື່ອງທີ່ລ່ວງມາແລ້ວ ຫລືວິພາກວິຈານໃນສິ່ງທີ່ເກີດຂຶ້ນແລ້ວ

19 ຈົ່ງເຝົ້າເບິ່ງສິ່ງໃຫມ່ໆທີ່ເຮົາຈະກະທຳນີ້ ມັນກຳລັງຈະເກີດຂຶ້ນແລ້ວ ເຈົ້າຈະເຫັນດຽວນີ້ລະ ເຮົາຈະສ້າງທາງ
ຜ່ານຖິ່ນກັນດານ ແລະຈະໃຫ້ມີແມ່ນ້ຳຢູ່ໃນທີ່ນັ້ນ
20 ແມ່ນແຕ່ສັດປ່າກໍຈະໃຫ້ກຽດເຮົາ ພວກຫມາປ່າແລະນົກກະຈອກເທດກໍຈະສັຣເສີນເຮົາ ເພາະວ່າເຮົາໄດ້ໃຫ້
ນ້ຳໄຫລຜ່ານຖິ່ນກັນດານ ເພື່ອໃຫ້ນ້ຳແກ່ໄພ່ພົນທີ່ເຮົາໄດ້ເລືອກໄວ້
21 ພວກເຂົາເປັນໄພ່ພົນທີ່ເຮົາສ້າງເພື່ອເຮົາເອງ ພວກເຂົາຈະຮ້ອງເພງສັຣເສີນເຮົາ”

**ບາບຂອງອິສຣາເອນ**

22 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ອິສຣາເອນເອີຍ, ເຈົ້າບໍ່ໄດ້ຂາບໄຫວ້ເຮົາ ເຈົ້າບໍ່ໄດ້ເມື່ອຍຍ້ອນເຮົາ
23 ເຈົ້າບໍ່ໄດ້ນຳເອົາແບ້ມາເຜົາບູຊາເຮົາ ບໍ່ໄດ້ເຜົາບູຊາເພື່ອເປັນກຽດແກ່ເຮົາ ເຮົາບໍ່ໄດ້ໃຫ້ເຈົ້າບົວລະບັດເຮົາ
ດ້ວຍເຄື່ອງຖວາຍບູຊາ ຫລືໃຫ້ເຈົ້າອິດເມື່ອຍດ້ວຍເຄື່ອງຫອມບູຊາ
24 ພວກເຈົ້າບໍ່ໄດ້ຊື້ເຄື່ອງຫອມສຳລັບເຮົາ ຫລືບໍ່ໄດ້ທຳໃຫ້ເຮົາພໍໃຈດ້ວຍໄຂມັນສັດ ແຕ່ໄດ້ໃຫ້ເຮົາຮັບພາຣະດ້ວຍ
ເຣື່ອງບາບຂອງເຈົ້າ ເຮົາອິດເມື່ອຍຍ້ອນຄວາມຜິດຂອງເຈົ້າ
25 ເຮົາເປັນພຣະຜູ້ເປັນເຈົ້າຜູ້ລຶບລ້າງບາບຂອງເຈົ້າ ເຮົາທຳດັ່ງນີ້ຍ້ອນເຫັນແກ່ເຮົາເອງ ເຮົາຈະບໍ່ຈົດຈຳບາບຂອງ
ພວກເຈົ້າໄວ້
26 ພວກເຮົາພາກັນໄປຍັງສານຕັດສິນເທາະ ເພື່ອພິສູດເບິ່ງວ່າ ເຈົ້າຖືກ ຫລືຜິດ
27 ບັນພະບຸຣຸດແຕ່ເກົ່າກ່ອນຂອງເຈົ້າໄດ້ທຳບາບ ພວກຜູ້ນຳກໍໄດ້ທຳບາບຕໍ່ສູ້ເຮົາ
28 ພວກຜູ້ປົກຄອງກໍຫມິ່ນປມາດສະຖານທີ່ສັກສິດຂອງເຮົາ ດັ່ງນັ້ນເຮົາຈຶ່ງທຳລາຍອິສຣາເອນ ແລະປ່ອຍໃຫ້ເຂົາ
ດູຫມິ່ນໄພ່ພົນຂອງເຮົາເອງ”

## 44 ພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າແຕ່ອົງດຽວ

God’s Blessing on Israel

1 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ບັດນີ້ ອິສຣາເອນຜູ້ຮັບໃຊ້ຂອງເຮົາ ແລະເຊື້ອສາຍຢາໂຄບໄພ່ພົນທີ່ເຮົາເລືອກ
ໄວ້ ຈົ່ງຟັງເດີ
2 ເຮົາເປັນພຣະຜູ້ເປັນເຈົ້າອົງຊົງສ້າງເຈົ້າ ເຮົາຊ່ອຍເຫລືອເຈົ້າຕັ້ງແຕ່ຢູ່ໃນທ້ອງ ຢ່າສູ່ຢ້ານ ເພາະວ່າເຈົ້າເປັນຜູ້
ຮັບໃຊ້ເຮົາ ເປັນໄພ່ພົນທີ່ເຮົາໄດ້ມອບຄວາມສັດຊື່ແລະເລືອກເອົາໄວ້
3 ເຮົາຈະເທນ້ຳລົງເທິງແຜ່ນດິນທີ່ແຫ້ງແລ້ງ ແລະທຳໃຫ້ນ້ຳໄຫລໄປໃນຖິ່ນກັນດານ ຈະເທອຳນາດອັນບໍຣິສຸດ
ຂອງເຮົາລົງເທິງລູກຫລານເຈົ້າ ແລະອວຍຊັຍໃຫ້ພອນເຊື້ອສາຍຂອງເຈົ້າ
4 ພວກເຂົາຈະງອກງາມຂຶ້ນເຫມືອນຫຍ້າແຄມນ້ຳ ເຫມືອນກົກໄມ້ໃກ້ສາຍນ້ຳໄຫລລິ່ນ
5 ຄົນຜູ້ນຶ່ງອາດຈະເວົ້າວ່າ ຂ້ອຍເປັນຂອງອົງພຣະຜູ້ເປັນເຈົ້າ ພວກເຂົາຈະຮ່ວມວົງສາຄະນາຍາດກັບອິສຣາເອນ
ອີກຜູ້ນຶ່ງຈະຂຽນພຣະນາມຂອງພຣະຜູ້ເປັນເຈົ້າໃສ່ແຂນຂອງຕົນ ແລະເອີ້ນຕົນເອງວ່າເປັນໄພ່ພົນຂອງພຣະ
ເຈົ້າ”
6 ພຣະຜູ້ເປັນເຈົ້າອົງມີອຳນາດຍິ່ງໃຫຍ່ ອົງຊົງໄຖ່ແລະຄຸ້ມຄອງອິສຣາເອນກ່າວດັ່ງນີ້, “ເຮົາເປັນຜູ້ຕົ້ນ ເປັນຜູ້
ປາຍ ເປັນ ພຣະຜູ້ເປັນເຈົ້າແຕ່ຜູ້ດຽວ ບໍ່ມີພຣະເຈົ້າອົງອື່ນນອກຈາກເຮົາ
7 ມີໃຜແດ່ເຮັດໄດ້ຄືເຮົາ ແລະບອກເຫດການຕັ້ງແຕ່ເລີ້ມຕົ້ນທີ່ເຮົາໄດ້ສ້າງໂລກ ຈົນເຖິງເວລາສຸດທ້າຍໄດ້ຢ່າງ
ຖືກຕ້ອງ
8 ໄພ່ພົນຂອງເຮົາເອີຍ, ຢ່າສູ່ຢ້ານເດີ ເຮົາໄດ້ບອກເຣື່ອງທີ່ຈະເກີດຂຶ້ນແກ່ເຈົ້າ ຕັ້ງແຕ່ເຫິງນານມາແລ້ວແມ່ນບໍ
ພວກເຈົ້າເປັນພຍານຂອງເຮົາ ມີພຣະເຈົ້າອົງອື່ນນອກຈາກເຮົາບໍ ພຣະເຈົ້າອົງມີອຳນາດອັນຍິ່ງໃຫຍ່ທີ່ເຮົາບໍ່ຮູ້
ມີບໍ”

### **ການໄຫວ້ຮູບໂຄຣົບ**

The Absurdity of Idol Worship

9 ຄົນທັງປວງທີ່ສ້າງຮູບໂຄຣົບກໍບໍ່ມີຄຸນຄ່າຫຍັງ ພວກເຂົາພາກພູມໃຈໃນຮູບທີ່ບໍ່ມີປໂຍດນັ້ນທີ່ສຸດ ຜູ້ທີ່ໄຫວ້ຮູບ
ໂຄຣົບກໍເປັນຄືຄົນຫູຫນວກ ຕາບອດ ແລະຈະໄດ້ຮັບຄວາມອັບອາຍຂາຍຫນ້າ
10 ການຫລໍ່ຮູບພຣະສໍາລັບຂາບໄຫວ້ນີ້ກໍບໍ່ເປັນປໂຍດເລີຍ
11 ທຸກໆຄົນທີ່ຂາບໄຫວ້ຮູບຈະເສັຽປຽບລຽບຫນ້າ ພວກຜູ້ເຮັດຮູບໂຄຣົບກໍເປັນພຽງມະນຸດ ຊຶ່ງບໍ່ມີຫຍັງດີວິເສດ
ໃຫ້ເອົາພວກເຂົາມາໂຮມກັນເບິ່ງດູ ແລ້ວພວກເຂົາຈະຢ້ານສັ່ນ ແລະອັບອາຍຂາຍຫນ້າ
12 ຊ່າງເຫລັກກໍຈັບບາຍເຫລັກ ແລະຕີເຫລັກນັ້ນຢູ່ໃນເຕົາໄຟ ແຂນອັນແຂງແຮງຂອງເຂົາໄດ້ຕີເຫລັກເປັນຮູບ
ຮ່າງຕາມຄວາມຕ້ອງການ ເຂົາຫິວເຂົ້າຫິວນໍ້າ ແລະອິດເມື່ອຍຫລາຍ
13 ຊ່າງໄມ້ກໍຂີດແທກໄມ້ແລະເຊາະກົບໃຫ້ກ້ຽງດີ ເຂົາເອົາໄມ້ນັ້ນເຮັດເປັນຮູບຄົນທີ່ມີຮູບຮ່າງງາມ ແລ້ວເອົາໄປ
ຕັ້ງໄວ້ໃນວິຫານ
14 ເຂົາເລືອກເອົາໄມ້ສົນໄມ້ກໍ່ຈາກປ່າມາໃຊ້ພ້ອມທັງປູກກົກແປກໄວ້ຖ້າຟ້າຝົນຕົກລົງມາຫົດມັນຈຶ່ງໃຫຍ່ຂຶ້ນ
15 ມະນຸດໄດ້ໃຊ້ກົກໄມ້ນັ້ນເຮັດຟືນແດ່ ເຮັດຮູບໂຄຣົບແດ່ ເອົາດັງໄຟຜີງແລະອົບເຂົ້າຫນົມແດ່ ອີກສ່ວນນຶ່ງເອົາ
ເຮັດຮູບພຣະສໍາລັບຂາບໄຫວ້
16 ເຄິ່ງນຶ່ງຂອງໄມ້ແຕ່ລະລໍາເຂົາເອົາດັງໄຟ ແລະປີ້ງຊີ້ນກິນຢ່າງອີ່ມຫນໍາສໍາຣານ ເວລາຜີງໄຟອົບອຸ່ນນັ້ນເຂົາເວົ້າ
ວ່າ “ໄຟນີ້ດີກາຫລາຍ ອຸ່ນເຫລືອທີ່ສຸດ”
17 ໄມ້ທີ່ເຫລືອເຂົາເອົາເຮັດຮູບໂຄຣົບ ແລ້ວກໍຂາບໄຫວ້ແລະອ້ອນວອນວ່າ, “ພຣະອົງຊົງເປັນພຣະເຈົ້າຂອງຂ້າ
ນ້ອຍ ໂຜດຊ່ອຍຮັກສາຂ້ານ້ອຍທ້ອນ”
18 ຄົນໂງ່ງ່າວເຫມືອນຄົນເຊັ່ນນີ້ ເຂົາບໍ່ຮູ້ວ່າຕົນກໍາລັງເຮັດຫຍັງ ເພາະວ່າຕາຂອງເຂົາຖືກປິດແລະບໍ່ຮູ້ຄວາມຈິງ
19 ຜູ້ເຮັດຮູບໂຄຣົບກໍບໍ່ມີປັນຍາພໍທີ່ຈະສໍານຶກວ່າ “ຂ້ອຍໄດ້ເອົາໄມ້ສ່ວນນຶ່ງດັງໄຟເພື່ອອົບເຂົ້າຫນົມ ແລະປີ້ງຊີ້ນ
ກິນ ທີ່ເຫລືອນັ້ນຂ້ອຍເອົາເຮັດຮູບໂຄຣົບ ແລ້ວຂ້ອຍກໍກົ້ມລົງຂາບໄຫວ້ທ່ອນໄມ້ນັ້ນ
20 ຄວາມຈິງແລ້ວແມ່ນເຂົາກິນຂີ້ເຖົ່າ ຄວາມຄິດແບບໂງ່ໆໄດ້ນໍາເຂົາໃຫ້ຫລົງຜິດ ແລະເຂົາບໍ່ຮູ້ເມື່ອວ່າຮູບໂຄ
ຣົບຢູ່ໃນມືນັ້ນບໍ່ແມ່ນສິ່ງວິເສດເລີຍ ແຕ່ແມ່ນຂອງຫລອກລວງ

### **ພຣະຜູ້ເປັນເຈົ້າຄືພຣະຜູ້ສ້າງແລະຊ່ອຍໃຫ້ພົ້ນ**

Israel Is Not Forgotten

21 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ອິສຣາເອນເອີຍ, ຈົ່ງຈົດຈໍາສິ່ງເຫລົ່ານີ້ ຈົ່ງລະນຶກວ່າເຈົ້າເປັນຜູ້ຮັບໃຊ້ຂອງເຮົາ
ເຮົາໄດ້ເປັນຜູ້ສ້າງເຈົ້າ ແລະເຮົາກໍຈະບໍ່ລືມເຈົ້າຈັກເທື່ອ
22 ເຮົາໄດ້ລຶບລ້າງບາບຂອງເຈົ້າຖິ້ມເຫມືອນກວາດເມກຫນີ ຈົ່ງກັບຄືນມາຫາເຮົາ ເພາະວ່າເຮົາເປັນຜູ້ຊ່ອຍໄຖ່
ໃຫ້ເຈົ້າພົ້ນ”
23 ໂອ ຟ້າສວັນເອີຍ ໃຕ້ພື້ນພິພົບເອີຍ, ພູແລະກົກໄມ້ທັງຫລາຍເອີຍ ຈົ່ງຮ້ອງໂຮ່ດ້ວຍຄວາມຍິນດີເທີນ ພຣະຜູ້
ເປັນເຈົ້າຊົງຊ່ອຍໄຖ່ໃຫ້ອິສຣາເອນໄພ່ພົນຂອງພຣະອົງໃຫ້ພົ້ນພັຍ ແລະຊົງສະແດງໃຫ້ເຫັນຄວາມຍິ່ງໃຫຍ່
ຂອງພຣະອົງໃນອິສຣາເອນ
24 ເຮົາເປັນພຣະຜູ້ເປັນເຈົ້າ ເປັນພຣະຜູ້ສ້າງ ແລະຜູ້ຊ່ອຍໄຖ່ໃຫ້ລອດພົ້ນຂອງເຈົ້າ ເຮົາເປັນພຣະຜູ້ເປັນເຈົ້າ ຄືພ
ຣະຜູ້ສ້າງສັພສິ່ງທັງປວງ ເຮົາຜູ້ດຽວທີ່ກາງທ້ອງຟ້າອອກ ເມື່ອເຮົາສ້າງໂລກບໍ່ມີໃຜຊ່ອຍເຮົາເອີຍ
25 ເຮົາໄດ້ທໍາໃຫ້ພວກຫມໍດູເສັຽຄວາມສັກສິດ ແລະລຶບລ້າງຄໍາທໍານວາຍຂອງຫມໍໂຫນ ເຮົາບໍ່ຍອມຟັງຖ້ອຍຄໍາ
ຂອງພວກນັກປາດ ແລະຊີ້ໃຫ້ເຫັນວ່າເຂົາບໍ່ມີປັນຫາເລີຍ

26 ແຕ່ເມື່ອໃດຄົນໃຊ້ຂອງເຮົາກ່າວທຳນວາຍ ເມື່ອໃດເຮົາໃຊ້ຜູ້ສົ່ງຂ່າວໄປເຜີຍແຜ່ແຜນການຂອງເຮົາ ເຮົາກໍເຮັດ
ໃຫ້ແຜນການເຫລົ່ານັ້ນກັບຄຳທຳນວາຍກາຍເກີດເປັນຈິງ ເຮົາບອກເຢຣູຊາເລັມວ່າປະຊາຊົນຈະໄດ້ຢູ່ທີ່ນັ້ນ
ອີກ ແລະບອກທົ່ວເມືອງຢູດາວ່າພວກມັນຈະຖືກສ້າງຂຶ້ນໃຫມ່ອີກ ທົ່ວເມືອງທີ່ສລັກຫັກພັງເຫລົ່ານີ້ຈະຖືກຍົກຍໍ
ຂຶ້ນອີກ
27 ເຮົາຈະສັ່ງບັນຊາໃຫ້ນ້ຳມະຫາສມຸດແຫ້ງ
28 ເຮົາບອກກະສັດໄຊຣັສວ່າ ເຈົ້າເປັນຜູ້ນຶ່ງທີ່ເຮົາຈະໃຫ້ປົກຄອງ ເຈົ້າຈະເຮັດແຕ່ສິ່ງທີ່ເຮົາຢາກໃຫ້ເຮັດ ເຈົ້າຈະ
ສັ່ງໃຫ້ເຂົາສ້າງເຢຣູຊາເລັມຂຶ້ນໃຫມ່ ແລະສັ່ງໃຫ້ວາງຮາກຖານພຣະວິຫານຂຶ້ນໃຫມ່”

## 45 ພຣະຜູ້ເປັນເຈົ້າຊົງແຕ່ງຕັ້ງກະສັດໄຊຣັສ

Cyrus, God’s Instrument

1 ໄຊຣັສເປັນກະສັດທີ່ພຣະຜູ້ເປັນເຈົ້າໄດ້ເອົານ້ຳມັນຊະໂລມຫົດສົງ ໃຫ້ເປັນກະສັດພິເສດຂອງພຣະອົງ ພຣະອົງ
ຊົງແຕ່ງຕັ້ງໄຊຣັສເພື່ອຕີຊະນະປະຊາຊາດທັງຫລາຍ ເພື່ອປົດອຳນາດຂອງກະສັດທັງຫລາຍ ພຣະຜູ້ເປັນເຈົ້າ
ຈະຊົງໄຂປະຕູເມືອງຕ້ອນຮັບໄຊຣັສ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໄຊຣັສວ່າ,
2 “ເຮົາເອງຈະຈັດຕຽມຫົນທາງ ແລະພູນ້ອຍໃຫຍ່ໃຫ້ຮາບພຽງຮຽງງາມ ຈະທຸບຕີປະຕູທອງສຳຣິດໃຫ້ແຕກຫັກ
ແລະຕັດໄລປະຕູເຫລັກອອກ
3 ເຮົາຈະມອບຊັບສົມບັດຈາກບ່ອນມືດແລະບ່ອນລັບລີ້ໃຫ້ເຈົ້າ ແລ້ວເຈົ້າຈະຮູ້ວ່າເຮົາ ແມ່ນພຣະຜູ້ເປັນເຈົ້າ ແລ
ະວ່າພຣະເຈົ້າຂອງອິສຣາເອນຊົງເລືອກເອົາເຈົ້າ
4 ເຮົາໄດ້ແຕ່ງຕັ້ງເຈົ້າ ກໍຍ້ອນເຮົາເຫັນແກ່ຄົນໃຊ້ຂອງເຮົາ ຄືຢາໂຄບ ແລະອິສຣາເອນທີ່ເຮົາໄດ້ເລືອກໄວ້ ເຖິງ
ແມ່ນເຈົ້າບໍ່ຮູ້ຈັກເຮົາ ເຮົາກໍໃຫ້ກຽດຢ່າງໃຫຍ່ຫລວງແກ່ເຈົ້າ
5 ເຮົາເປັນພຣະຜູ້ເປັນເຈົ້າ ບໍ່ມີພຣະເຈົ້າອົງອື່ນອີກ ເຖິງແມ່ນເຈົ້າບໍ່ຮູ້ຈັກເຮົາ ເຮົາກໍຈະໃຫ້ອຳນາດແກ່ເຈົ້າ
6 ເຮົາໄດ້ກະທຳການນີ້ເພື່ອທຸກໆຄົນ ຂໍໃຫ້ທົ່ວໂລກຮູ້ວ່າເຮົາເປັນພຣະຜູ້ເປັນເຈົ້າ ແລະຮູ້ວ່າບໍ່ມີພຣະເຈົ້າອົງ
ອື່ນນອກຈາກເຮົາ
7 ເຮົາໄດ້ສ້າງຕັ້ງທັງຄວາມສວ່າງແລະຄວາມມືດ ເຮົາໃຫ້ໂຊກແລະພັຍວິບັດ ເຮົາຄືພຣະຜູ້ເປັນເຈົ້າໄດ້ກະທຳ
ການນີ້ທັງຫມົດ
8 ເຮົາຈະສົ່ງອິສຣະພາບກັບຄວາມຍຸດຕິທັມ ລົງມາຈາກຟ້າເຫມືອນຫ່າຝົນ ແຜ່ນດິນໂລກຈະໄດ້ອ້າຮັບເອົາ ອິ
ສຣະພາບກັບຄວາມຍຸດຕິທັມນັ້ນຈຶ່ງຈະຈຳເຣີນເຕີບໂຕ ເຮົາຄືພຣະຜູ້ເປັນເຈົ້າຈະທຳໃຫ້ສິ່ງເຫລົ່ານີ້ເກີດຂຶ້ນ”

**ພຣະຜູ້ສ້າງແລະເຣື່ອງເກົ່າແກ່**

9 ຫມໍ້ດິນ ຫລືຫມໍ້ອື່ນໆຢ່າງດຽວກັນນີ້ ຈະກ້າຖົກຖຽງຜູ້ປັ້ນມັນບໍ ດິນຫນຽວຈະຖາມຊ່າງປັ້ນຫມໍ້ບໍວ່າ “ເຈົ້າກຳລັງ
ເຮັດຫຍັງ” ຫມໍ້ດິນຈະເວົ້າເຖິງຄວາມຊຳນິຊຳນານຂອງຜູ້ປັ້ນມັນບໍ
10 ມີໃຜແດ່ກ້າເວົ້າກັບພໍ່ແມ່ຕົນວ່າ “ເປັນຫຍັງເຈົ້າຈຶ່ງບໍ່ຫລໍ່ຫລອມໃຫ້ຂ້ອຍຄືຜູ້ນີ້”
11 ພຣະຜູ້ເປັນເຈົ້າ ພຣະເຈົ້າອົງບໍຣິສຸດຂອງອິສຣາເອນ ຜູ້ຊົງສ້າງປັ້ນພວກເຮົາຊົງກ່າວວ່າ, “ເຈົ້າບໍ່ມີສິດຖາມກ່ຽວ
ກັບລູກຂອງເຮົາດອກ ຫລືບໍ່ມີສິດບອກໃຫ້ເຮົາກະທຳຫຍັງໃຫ້ດອກ
12 ເຮົາເປັນຜູ້ສ້າງໂລກ ແລະສ້າງມະນຸດໃຫ້ອາສັຍຢູ່ທີ່ນັ້ນ ເຮົາກາງທ້ອງຟ້າອອກດ້ວຍຣິດເດດຂອງເຮົາ ເຮົາບັງ
ຄັບບັນຊາຕາເວັນແລະເດືອນດາວ
13 ເຮົາເອງໄດ້ຊັກຊວນໃຫ້ກະສັດໄຊຣັສທຳດີ ເພື່ອໃຫ້ຄວາມມຸ່ງຫມາຍແລະຈຸດປະສົງຂອງເຮົາສຳເຣັດຜົນຖືກ
ຕ້ອງ ເຮົາຈະທຳໃຫ້ທາງທຸກສາຍທີ່ໄຊຣັສເດີນໄປຊື່ຕົງ ເຂົາຈະສ້າງເຢຣູຊາເລັມນະຄອນຂອງເຮົາໃຫມ່ ແລະ

ປ່ອຍພວກຊະເລີຍຂອງເຮົາເປັນອິສຣະ ບໍ່ມີຜູ້ໃດຈ້າງຫລືໃຊ້ສິນບົນເຂົາທຳການນີ້” ພຣະຜູ້ເປັນເຈົ້າອົງມີອຳ
ນາດຍິ່ງໃຫຍ່ຊົງກ່າວດັ່ງນີ້ແຫລະ
14 ພຣະຜູ້ເປັນເຈົ້າຊົງບອກອິສຣາເອນວ່າ, “ຊັບພະຍາກອນຂອງເອຢິບແລະຂອງເອທິໂອເປັຽຈະເປັນຂອງເຈົ້າ
ຄົນເຊບາທີ່ສູງໃຫຍ່ຈະຮັບໃຊ້ເຈົ້າ ແລະຜູກໂສ້ຕິດຕາມເຈົ້າໄປ ພວກເຂົາຈະກົ້ມລົງຮັບສາລະພາບວ່າ ພຣະ
ເຈົ້າຊົງຢູ່ນຳທ່ານ ຊົງເປັນ
ພຣະຜູ້ເປັນເຈົ້າແຕ່ພຣະອົງດຽວ
15 ພຣະເຈົ້າຂອງອິສຣາເອນ ອົງຊົງຊ່ອຍໄພ່ພົນຂອງພຣະອົງໃຫ້ພົ້ນພັຍ ຊົງເປັນພຣະເຈົ້າອົງຊົງລັບລີ້”
16 ຄົນທັງຫລາຍທີ່ສ້າງຮູບໂຄຣົບຈະອັບອາຍຂາຍຫນ້າ ທຸກໆຄົນຈະເຊື່ອມເສັຽສັກສີ
17 ແຕ່ອິສຣາເອນນັ້ນ ພຣະຜູ້ເປັນເຈົ້າຊົງຊ່ອຍໃຫ້ພົ້ນ ພວກເຂົາຈະມີຊັຍຊະນະຕລອດໄປ ແລະຈະບໍ່ເສື່ອມເສັຽ
ສັກສີຈັກເທື່ອ
18 ພຣະຜູ້ເປັນເຈົ້າຊົງສ້າງຟ້າສວັນ ພຣະອົງອົງດຽວຊົງເປັນພຣະເຈົ້າ ຊົງປັ້ນແຕ່ງໂລກໃຫ້ຫມັ້ນຄົງ ພຣະອົງບໍ່ໄດ້
ຊົງສ້າງມັນໃຫ້ວ່າງເປົ່າ ແຕ່ຊົງສ້າງຄົນໃຫ້ອາສັຍຢູ່ ແມ່ນພຣະອົງທີ່ຊົງກ່າວວ່າ, “ ເຮົາເປັນພຣະຜູ້ເປັນເຈົ້າບໍ່ມີ
ພຣະເຈົ້າອື່ນນອກ
ຈາກເຮົາ
19 ເຮົາບໍ່ໄດ້ເວົ້າໃນທີ່ລັບລີ້ ຫລືບໍ່ໄດ້ປິດອຳຄວາມມຸ່ງຫມາຍໄວ້ ເຮົາບໍ່ໄດ້ຂໍຮ້ອງໃຫ້ຄົນອິສຣາເອນສແວງຫາເຮົາ
ໃນບ່ອນມືດ ເຮົາເປັນພຣະຜູ້ເປັນເຈົ້າ ແລະເວົ້າແຕ່ຄວາມຈິງ ເຮົາຈຶ່ງຮູ້ຈັກເວົ້າປະກາດໃນສິ່ງທີ່ຖືກຕ້ອງ
Idols Cannot Save Babylon
20 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ໄພ່ພົນທີ່ລອດພົ້ນຈາກອຳນາດກະສັດທັງຫລາຍ ຈົ່ງມາໂຮມກັນ ເພື່ອແຈ້ງໂທດ
ຂອງພວກເຈົ້າເອງ ຄົນທັງຫລາຍທີ່ແຫ່ຮູບໂຄຣົບທີ່ທຳດ້ວຍໄມ້ ແລະອ້ອນວອນຕໍ່ພຣະທີ່ຊ່ອຍຫຍັງບໍ່ໄດ້ ຄົນ
ເຫລົ່ານີ້ບໍ່ຮູ້ຫົບຫຍັງເລີຍ
21 ພວກເຈົ້າຈົ່ງມາ ແລະແຈ້ງຄວາມຕໍ່ສານ ໃຫ້ພວກຈຳເລີຍປຶກສາຫາລືຊຶ່ງກັນແລະກັນ ໃຜບອກລ່ວງຫນ້າເຖິງ
ສິ່ງທີ່ຈະເກີດຂຶ້ນນັ້ນໄດ້ ແລະໃຜທຳນວາຍເຣື່ອງນີ້ໄວ້ຕັ້ງແຕ່ເທິງມາແລ້ວ ບໍ່ແມ່ນເຮົາ ຄືພຣະຜູ້ເປັນເຈົ້າອົງຊົງ
ຊ່ອຍໄພ່ພົນໃຫ້ພົ້ນບໍ ບໍ່ມີພຣະເຈົ້າອື່ນນອກຈາກເຮົາ
22 ມະນຸດທຸກມຸມໂລກເອີຍ ຈົ່ງຄືນມາຫາເຮົາ ແລະຮັບເອົາການຊ່ອຍໃຫ້ພົ້ນເຖີດ ເຮົາເປັນພຣະເຈົ້າແຕ່ອົງດຽວ
ບໍ່ມີພຣະເຈົ້າອົງອື່ນ
23 ສິ່ງທີ່ເຮົາເວົ້ານີ້ເປັນຄວາມຈິງ ຈະບໍ່ມີການປ່ຽນແປງ ເຮົາໄດ້ປະຕິຍານໄວ້ຢ່າງເດັດຂາດວ່າ ທຸກໆຄົນຈະຄຸເຂົ່າ
ລົງຕໍ່ຫນ້າເຮົາ ແລະສາບານວ່າຈະຊື່ສັດຕໍ່ເຮົາ
24 ພວກເຂົາຈະເວົ້າເຖິງເຮົາວ່າ ມີຊັຍຊະນະ ແລະມີອານຸພາບ ແຕ່ຄົນທັງຫລາຍທີ່ກຽດຊັງເຮົາຈະໄດ້ຄວາມອັບ
ອາຍຂາຍຫນ້າ
25 ເຮົາຄືພຣະຜູ້ເປັນເຈົ້າຈະຊ່ອຍເຊື້ອສາຍທັງຫມົດຂອງອິສຣາເອນ ແລະພວກເຂົາຈະມີຄວາມພາກພູມໃຈໃນ
ເຮົາ

## 46

Chapter 46

1 ພຣະເບນກໍເລື່ອນລົງ ພຣະເນໂບກໍໂນ້ມລົງ ພຣະເຫລົ່ານີ້ຢູ່ເທິງຫລັງສັດແລະງົວ ສິ່ງເຫລົ່ານີ້ທີ່ເຈົ້າຫາມຢູ່ ກໍ
ມາບັນທຸກເປັນພາຣະເທິງຫລັງສັດທີ່ອິດເມື່ອຍ
2 ມັນໂນ້ມລົງແລະເລື່ອນລົງດ້ວຍກັນ ມັນຊ່ອຍປ້ອງກັນພາຣະນັ້ນບໍ່ໄດ້ ມັນເອງຕົກໄປເປັນຊະເລີຍ

3 ໂອ ເຊື້ອສາຍຂອງຢາໂຄບເອີຍ ຈົ່ງຟັງເຮົາ ຄືຄົນທີ່ເຫລືອຢູ່ໃນເຊື້ອສາຍຂອງອິສຣາເອນ ຜູ້ຊຶ່ງເຮົາອຸ້ມມາຕັ້ງ
ແຕ່ກຳເນີດ ຊວ້ານຊູມາຕັ້ງແຕ່ຢູ່ໃນທ້ອງ
4 ຈົນເຖິງເຈົ້າເຖົ້າແກ່ ເຮົາກໍຄື ພຣະອົງນັ້ນ ເຮົາຈະອຸ້ມເຈົ້າຈົນເຖິງຜົມຫງອກ ເຮົາໄດ້ສ້າງ ເຮົາຈະຊວ້ານຊູໄວ້
ເຮົາຈະອຸ້ມແລະເຮົາຈະຊ່ອຍໃຫ້ລອດ
5 “ເຈົ້າຈະປຽບທຽບເຮົາ ແລະທຳໃຫ້ເທົ່າທຽມກັບຜູ້ໃດ ແລະປຽບເຮົາວ່າເຮົາເຫມືອນກັນກັບພວກເຂົາ
6 ບັນດາຜູ້ທີ່ໂກຍໄຂກະເປົາແລະຖອກທອງຄຳອອກມາ ແລະຊັ່ງເງິນໃນຕາຊິງ ຈ້າງຊ່າງທອງຄົນນຶ່ງ ແລະເຂົາກໍ
ທຳໃຫ້ເປັນພຣະ ແລ້ວເຂົາທັງຫລາຍກໍຂາບລົງນະມັສການໃນທັນທີ
7 ເຂົາທັງຫລາຍເອົາຮູບນັ້ນໃສ່ບ່າ ເຂົາຫາມໄປ ເຂົາຕັ້ງໄວ້ປະຈຳທີ່ ຮູບນັ້ນກໍຢູ່ທີ່ນັ້ນ ຮູບນັ້ນໄປຈາກທີ່ບໍ່ໄດ້
ແມ່ນຜູ້ໃດຈະມາຮ້ອງຂໍ ຮູບນັ້ນກໍບໍ່ຕອບ ຫລືຊ່ອຍເຂົາໃຫ້ລອດຈາກຄວາມຍາກລຳບາກຂອງເຂົາໄດ້
8 “ຈຳຂໍ້ນີ້ໄວ້ແລະຕຶກຕອງ ເຈົ້າຜູ້ທໍຣະຍົດທັງຫລາຍ ຈົ່ງນຶກໄວ້ໃນໃຈ
9 ຈົ່ງຈຳສິ່ງລ່ວງແລ້ວໃນສມັຍກ່ອນໄວ້ ເພາະເຮົາເປັນພຣະຜູ້ເປັນເຈົ້າ ແລະບໍ່ມີອື່ນໃດອີກ ເຮົາເປັນພຣະເຈົ້າ
ແລະບໍ່ມີອື່ນໃດເຫມືອນເຮົາ
10 ຜູ້ແຈ້ງຕອນຈົບໃຫ້ຊາບຕັ້ງແຕ່ເລີ້ມຕົ້ນ ແລະແຈ້ງເຖິງສິ່ງທີ່ຍັງບໍ່ໄດ້ທຳເລີຍ ໃຫ້ຊາບຕັ້ງແຕ່ການບູຮານກ່າວວ່າ
“ແຜນການຂອງເຮົາຈະຍັ້ງຍືນ ແລະເຮົາຈະກະທຳໃຫ້ຄວາມປະສົງຂອງເຮົາສຳເຣັດທັງສິ້ນ
11 ແຕ່ຕາເວັນອອກເຮົາພວມເອີ້ນເອົາຄົນນຶ່ງມາ ລາວຈະຊັດຫົວລົງດັ່ງໂຕແຫລວບິນເຈີດ ລາວຈະເຮັດຫລ້ອນ
ໜ້າທີ່ຕາມທີ່ ເຮົາວາງແຜນ ເຮົາກ່າວໄວ້ຢ່າງໃດກໍຈະເກີດຂຶ້ນຢ່າງນັ້ນ.
12 “ເຈົ້າຜູ້ຈິດໃຈດື້ດຶງ ເຈົ້າຜູ້ຫ່າງໄກຈາກການຊ່ອຍກູ້ ຈົ່ງຟັງເຮົາ
13 ເຮົາຈະນຳການຊ່ອຍກູ້ຂອງເຮົາມາໃກ້ ມັນບໍ່ໄກເລີຍ ແລະຄວາມລອດຂອງເຮົາຈະບໍ່ລໍຊ້າ ເຮົາຈະໃສ່ຄວາມ
ລອດທີ່ຊີໂອນ ພຣະກຽດຂອງເຮົາແກ່ອິສຣາເອນ

## 47 ການຊົງພິພາກສາລົງໂທດບາບີໂລນ

The Humiliation of Babylon

1 ໂອ ທິດາພົມມະຈາຣີແຫ່ງບາບີໂລນເອີຍ ຈົ່ງລົງມານັ່ງໃນຝຸ່ນຂີ້ດິນ ໂອ ທິດາແຫ່ງຊາວຄັນເດອານເອີຍ ຈົ່ງນັ່ງ
ລົງເທິງພື້ນດິນບໍ່ມີບັນລັງ ເພາະເຂົາຈະບໍ່ເອີ້ນເຈົ້າອີກວ່າ ແມ່ເນື້ອອ່ອນແມ່ເນື້ອລະອຽດ
2 ຈົ່ງຈັບໂມ້ ຈົ່ງໂມ້ແປ້ງສາ ເອົາຜ້າຄຸມຫນ້າຂອງເຈົ້າອອກເສັຽ ຖອດເສື້ອຄຸມຂອງເຈົ້າເສັຽ ບໍ່ຕ້ອງຄຸມຂາຂອງ
ເຈົ້າ ລຸຍນ້ຳໄປ
3 ເຈົ້າຈະຕ້ອງຖືກເປືອຍ ແລະເຂົາຈະເຫັນຄວາມອາຍຂອງເຈົ້າ ເຮົາຈະທຳການແກ້ແຄ້ນ ແລະເຮົາຈະບໍ່ສງວນ
ຄົນໃດໄວ້
4 ພຣະຜູ້ໄຖ່ຂອງເຮົາ ພຣະນາມຂອງພຣະອົງຄືພຣະຜູ້ເປັນເຈົ້າຈອມໂຍທາ ຊົງເປັນອົງບໍຣິສຸດຂອງອິສຣາເອນ
5 ໂອ ທິດາແຫ່ງຊາວຄັນເດອານເອີຍ ນັ່ງມິດງຽບຢູ່ແລະຈົ່ງເຂົ້າໄປໃນຄວາມມືດ ເພາະເຂົາຈະບໍ່ເອີ້ນເຈົ້າອີກວ່າ
ນາງພຍາແຫ່ງຣາຊອານາຈັກທັງຫລາຍ
6 ເຮົາພິໂຣດຕໍ່ຊົນຊາດຂອງເຮົາ ເຮົາຖອດມໍຣະດົກຂອງເຮົາເສັຽ ເຮົາມອບເຂົາໄວ້ໃນມືຂອງເຈົ້າ ເຈົ້າບໍ່ໄດ້ສະ
ແດງຄວາມກະຣຸນາຕໍ່ເຂົາ ເຈົ້າວາງແອກຢ່າງຫນັກໄວ້ເທິງບ່າຂອງຄົນເຖົ້າ
7 ເຈົ້າວ່າ, ຂ້າຈະເປັນນາງພຍາຕລອດໄປ ເຈົ້າຈຶ່ງບໍ່ໄດ້ເອົາເຣື່ອງເຫລົ່ານີ້ເປັນທີ່ສອນໃຈ ຫລືຈົດຈຳບັ້ນປາຍຂອງ
ເຣື່ອງເຫລົ່ານີ້ໄວ້
8 ສະນັ້ນເຈົ້າຜູ້ຮັກຄວາມເພີດເພີນ ຈົ່ງຟັງເຣື່ອງນີ້ ຄືຜູ້ນັ່ງຢູ່ຢ່າງປອດພັຍ ຜູ້ຄຶດໃນໃຈຂອງຕົນວ່າ “ຂ້ອຍນີ້ແຫລະ
ແລະບໍ່ມີຜູ້ໃດອື່ນອີກ ຂ້ອຍຈະບໍ່ນັ່ງຢູ່ເປັນແມ່ຫມ້າຍ ຫລືຮູ້ຈັກທີ່ຈະພາກຈາກລູກ”

9 ທັງສອງເຣື່ອງນີ້ຈະມາເຖິງເຈົ້າ ໃນຂນະດຽວກັນ ໃນວັນດຽວ ຄືຄວາມທີ່ຕ້ອງພາກຈາກລູກ ຄວາມທີ່ເປັນແມ່ໜ້າຍຈະມາເຖິງເຈົ້າຢ່າງເຕັມຂນາດ ທັງທີ່ມີວິຊາອາຄົມເປັນອັນມາກ ແລະອານຸພາບໃຫຍ່ຍິ່ງໃນເວດມົນຂອງເຈົ້າ

10 ເຈົ້າຮູ້ສຶກໝັ້ນຢູ່ໃນຄວາມອະທັມຂອງເຈົ້າ ເຈົ້າວ່າ "ບໍ່ມີຜູ້ໃດເຫັນຂ້ອຍ" ສະຕິປັນຍາຂອງເຈົ້າແລະ ຄວາມຮູ້ຂອງເຈົ້າທຳໃຫ້ເຈົ້າໜີໄປ ແລະເຈົ້າຈຶ່ງເວົ້າໃນໃຈຂອງເຈົ້າວ່າ "ຂ້ອຍນີ້ແຫລະ ແລະບໍ່ມີຜູ້ໃດອື່ນອີກ"

11 ແຕ່ຄວາມຊົ່ວຮ້າຍຈະມາເໜືອເຈົ້າ ຊຶ່ງເຈົ້າຈະປັດເປົ່າບໍ່ໄດ້ ພັຍວິບັດຈະຕົກເໜືອເຈົ້າ ຊຶ່ງເຈົ້າຈະບໍ່ສາມາດຄາດແຄ້ວ ແລະຄວາມພິນາດຈະມາເຖິງເຈົ້າທັນທີທັນໃດຊຶ່ງເຈົ້າບໍ່ຮູ້ເຣື່ອງເລີຍ

12 ຈົ່ງຕັ້ງໝັ້ນຢູ່ໃນເວດມົນຂອງເຈົ້າ ແລະວິຊາອາຄົມເປັນອັນມາກຂອງເຈົ້າ ຊຶ່ງເຈົ້າໄດ້ທຳມາຢ່າງຫລວງຫລາຍຕັ້ງແຕ່ເປັນສາວ ບາງທີ່ເຈົ້າຈະສຳເຣັດໄດ້ ບາງທີ່ເຈົ້າຈະດົນໃຈໃຫ້ສຍົດສຍອງໄດ້

13 ເຈົ້າອິດເມື່ອຍກັບທີ່ປຶກສາເປັນອັນມາກຂອງເຈົ້າ ໃຫ້ເຂົາລຸກຂຶ້ນອອກມາແລະຊ່ອຍເຈົ້າໃຫ້ລອດ ຄືບັນດາຜູ້ທີ່ແບ່ງຟ້າສວັນແລະເພ່ງເບິ່ງດວງດາວ ຜູ້ຊຶ່ງທຳນວາຍໃຫ້ເຈົ້າໃນວັນເດືອນອອກໃໝ່ວ່າຈະເກີດຫຍັງຂຶ້ນແກ່ເຈົ້າ

14 ເບິ່ງແມ, ເຂົາຈະເປັນເໝືອນຕໍເຂົ້າ ໄຟຈະເຜົາຜານເຂົາ ເຂົາຈະຊ່ອຍກູ້ຕົວເຂົາເອງຈາກກຳລັງຂອງແປວໄຟບໍ່ໄດ້ ນີ້ບໍ່ແມ່ນຖ່ານທີ່ຈະໃຫ້ຜູ້ໃດອຸ່ນ ບໍ່ແມ່ນໄຟທີ່ຈະໃຫ້ຜູ້ໃດຜີງ

15 ບັນດາທີ່ເຈົ້າທຳງານດ້ວຍກັນນັ້ນຈະເປັນເຊັ່ນນີ້ແກ່ເຈົ້າ ຜູ້ຊຶ່ງຄ້າມາກັບເຈົ້າຕັ້ງແຕ່ເປັນສາວ ເຂົາຈະພະເນຈອນໄປມາໃນທາງຂອງເຂົາເອງ ບໍ່ມີຜູ້ໃດຈະຊ່ອຍເຈົ້າໃຫ້ລອດໄດ້

## 48 ພຣະເຈົ້າແມ່ນພຣະຜູ້ເປັນເຈົ້າແຫ່ງອະນາຄົດ

God the Creator and Redeemer

1 ຟັງຂໍ້ນີ້ເດີ ໂອ ເຊື້ອສາຍຂອງຢາໂຄບເອີຍ ຜູ້ຊຶ່ງເຂົາເອີ້ນດ້ວຍນາມຂອງອິສຣາເອນ ແລະຜູ້ຊຶ່ງອອກມາຈາກຊ່ວງແອວຂອງຢູດາ ຜູ້ຊຶ່ງປະຕິຍານໃນພຣະນາມຂອງພຣະຜູ້ເປັນເຈົ້າ ແລະເຊີດຊູພຣະເຈົ້າຂອງອິສຣາເອນແຕ່ບໍ່ແມ່ນດ້ວຍສັດຈະແລະຄວາມຊອບທັມ

2 ເພາະເຂົາຂນານນາມຂອງເຂົາເອງຕາມນະຄອນບໍຣິສຸດ ແລະເພິ່ງອາສັຍພຣະເຈົ້າຂອງອິສຣາເອນ ພຣະນາມຂອງພຣະອົງວ່າພຣະຜູ້ເປັນເຈົ້າຈອມໂຍທາ

3 "ສິ່ງລ່ວງແລ້ວເຮົາໄດ້ແຈ້ງໃຫ້ຊາບແຕ່ເກົ່າກ່ອນ ມັນໄປຈາກປາກຂອງເຮົາ ແລະເຮົາໄດ້ເລົ່າໃຫ້ຟັງທົ່ວ ແລ້ວໃນທັນໃດນັ້ນເຮົາກໍໄດ້ກະທຳແລະກໍເປັນໄປຕາມນັ້ນ

4 ເພາະເຮົາຮູ້ຢູ່ວ່າເຈົ້າດື້ດ້ານ ແລະຄໍຂອງເຈົ້າກໍຄືເອັນເຫລັກ ແລະໜ້າຜາກຂອງເຈົ້າເປັນທອງເຫລືອງ

5 ເຮົາກໍແຈ້ງເຣື່ອງເຫລົ່ານັ້ນແກ່ເຈົ້າໃຫ້ຊາບຕັ້ງແຕ່ເກົ່າກ່ອນ ກ່ອນທີ່ມັນຈະເກີດຂຶ້ນເຮົາກໍໄດ້ບອກໃຫ້ເຈົ້າຟັງແລ້ວ ຢ້ານເຈົ້າຈະວ່າ "ຮູບໂຄຣົບຂອງຂ້ອຍກະທຳເອງ ຮູບໂຄຣົບແກະສລັກແລະຮູບໂຄຣົບຫລໍ່ຂອງຂ້ອຍບັນຊາມັນມາ"

6 "ເຈົ້າໄດ້ຍິນແລ້ວ ຈົ່ງຄອຍເບິ່ງສິ່ງທັງປວງນີ້ ແລະເຈົ້າຈະບໍ່ແຈ້ງໃຫ້ຊາບຫລື ຕັ້ງແຕ່ເວລານີ້ໄປເຮົາເລົ່າສິ່ງໃໝ່ໃຫ້ເຈົ້າຟັງ ເປັນສິ່ງທີ່ປິດເຊື່ອງໄວ້ຊຶ່ງເຈົ້າບໍ່ຮູ້

7 ເປັນສິ່ງທີ່ສ້າງຂຶ້ນໃໝ່ບໍ່ແມ່ນນານແລ້ວ ກ່ອນວັນນີ້ເຈົ້າບໍ່ເຄີຍໄດ້ຍິນເຖິງ ຢ້ານເຈົ້າຈະເວົ້າວ່າ "ເບິ່ງແມ, ເຮົາຮູ້ແລ້ວ"

8 ເຈົ້າບໍ່ເຄີຍໄດ້ຍິນ ເຈົ້າບໍ່ເຄີຍຮູ້ ຕັ້ງແຕ່ກ່ອນມາ ຫູຂອງເຈົ້າຍັງບໍ່ເປີດ ເພາະເຮົາຮູ້ວ່າເຈົ້າຈະປະພຶດຢ່າງທໍຣະຍົດ ແລະຮູ້ວ່າຕັ້ງແຕ່ກຳເນີດເຂົາເອີ້ນເຈົ້າວ່າ ຜູ້ກະບົດ

9 "ເພາະເຫັນແກ່ນາມຂອງເຮົາ ເຮົາໜ່ວງໜ່ຽວຄວາມພິໂຣດຂອງເຮົາໄວ້ ເພາະເຫັນແກ່ຄວາມສັຣເສີນຂອງເຮົາ ເຮົາຈຶ່ງລະງັບໄວ້ເພື່ອເຈົ້າ ເພື່ອເຮົາຈະບໍ່ໄດ້ຕັດເຈົ້າອອກໄປເສັຽ

10 ເບິ່ງແມ, ເຮົາໄດ້ຊຸບເຈົ້າແລ້ວ ແຕ່ບໍ່ເຫມືອນເງິນ ເຮົາໄດ້ທົດລອງເບິ່ງເຈົ້າໃນເຕົາຂອງຄວາມທຸກໃຈ
11 ເຮົາກະທຳເຊັ່ນນັ້ນເພາະເຫັນແກ່ເຮົາເອງ ເພາະເຫັນແກ່ເຮົາເອງ ເພາະວ່ານາມຂອງເຮົາຈະຖືກຢຽບຫຍາມໄດ້
ຢ່າງໃດ ພຣະກຽດຂອງເຮົາ ເຮົາຈະບໍ່ໃຫ້ຜູ້ອື່ນ
12 ຟັງເຮົາເດີ ໂອ ຢາໂຄບເອີຍ ແລະອິສຣາເອນ ຜູ້ຊຶ່ງເຮົາເອີ້ນ ເຮົາຄືພຣະເຈົ້າແຕ່ອົງດຽວເທົ່ານັ້ນ ເຮົາເປັນຕົ້ນ
ແລະເຮົາເປັນປາຍ
13 ມືຂອງເຮົາໄດ້ວາງຮາກຖານແຜ່ນດິນໂລກ ແລະມືຂອງເຮົາໄດ້ກາງຟ້າສວັນອອກ ເມື່ອເຮົາເອີ້ນມັນ ມັນກໍ
ອອກມາຢູ່ນຳກັນ
14 "ເຈົ້າທັງປວງ ຈົ່ງຊຸມນຸມກັນແລະຄອຍຟັງ ຜູ້ໃດໃນຖ້າມກາງພວກນັ້ນໄດ້ປະກາດສິ່ງເຫລົ່ານີ້ ພຣະຜູ້ເປັນເຈົ້າ
ຊົງຮັກທ່ານ ທ່ານຈະກະທຳຕາມພຣະທັຍຂອງພຣະອົງຕໍ່ບາບີໂລນ ແລະພຣະກອນຂອງພຣະອົງຈະຕໍ່ສູ້ກັບ
ຊາວຄັນເດອານ
15 ເຮົາ ນີ້ເຮົາເອງໄດ້ເວົ້າ ເຮົາໄດ້ເອີ້ນທ່ານ ເຮົາໄດ້ນຳທ່ານມາ ແລະທ່ານຈະຈະເຣີນຂຶ້ນໃນທາງຂອງທ່ານ
16 ຈົ່ງເຂົ້າມາໃກ້ເຮົາ ຟັງເຣື່ອງນີ້ ຕັ້ງແຕ່ເລີ້ມຕົ້ນເຮົາບໍ່ໄດ້ເວົ້າໃນທີ່ລີ້ລັບ ຕັ້ງແຕ່ມັນເກີດມາເຮົາກໍໄດ້ຢູ່ທີ່ນັ້ນ
ແລ້ວ" ແລະບັດນີ້ພຣະຜູ້ເປັນເຈົ້າໄດ້ຊົງໃຊ້ຂ້າພະເຈົ້າ ແລະພຣະວິນຍານຂອງພຣະອົງ
17 ພຣະຜູ້ເປັນເຈົ້າຜູ້ໄຖ່ຂອງເຈົ້າ ອົງບໍຣິສຸດຂອງອິສຣາເອນກ່າວດັ່ງນີ້ວ່າ "ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງ
ເຈົ້າ ຜູ້ສັ່ງສອນເຈົ້າເພື່ອປໂຍດຂອງເຈົ້າ ຜູ້ນຳເຈົ້າໃນທາງທີ່ເຈົ້າຄວນຈະໄປ
18 ໂອ ຖ້າເຈົ້າໄດ້ເຊື່ອຟັງບັນຍັດຂອງເຮົາ ແລ້ວຄວາມສຸກສົມບູນຂອງເຈົ້າຈະເປັນເຫມືອນແມ່ນໍ້າ ແລະຄວາມ
ຊອບທັມຂອງເຈົ້າຈະເປັນເຫມືອນຄື່ນທະເລ
19 ລູກຫລານຂອງເຈົ້າຈະເປັນເຫມືອນທະເລຊາຍ ແລະເຊື້ອສາຍຂອງເຈົ້າເຫມືອນເມັດຊາຍ ຊື່ຂອງເຂົາຈະບໍ່ຖືກ
ຕັດອອກເລີຍ ຫລືຖືກທຳລາຍເສັຽຈາກຫນ້າເຮົາ"
20 ຈົ່ງໄປເສັຽຈາກບາບີໂລນ ຈົ່ງຫນີອອກຈາກຄັນເດອານ ຈົ່ງປະກາດຂໍ້ນີ້ດ້ວຍໂຮ່ຮ້ອງຊື່ນບານ ຈົ່ງເລົ່າໃຫ້ຟັງ ຈົ່ງ
ສົ່ງອອກໄປເຖິງສຸດປາຍແຜ່ນດິນໂລກວ່າ "ພຣະຜູ້ເປັນເຈົ້າຊົງໄຖ່ຢາໂຄບຜູ້ຮັບໃຊ້ຂອງພຣະອົງແລ້ວ"
21 ເມື່ອພຣະອົງຊົງນຳເຂົາທັງຫລາຍໄປທາງທະເລຊາຍ ເຂົາກໍບໍ່ໄດ້ຫິວ ພຣະອົງຊົງກະທຳໃຫ້ນໍ້າໄຫລຈາກສີລາ
ເພື່ອເຂົາ ພຣະອົງຊົງທຳໃຫ້ຫີນຍະອອກແລະນໍ້າກໍໄດ້ໄຫລອອກມາ
22 ພຣະຜູ້ເປັນເຈົ້າກ່າວວ່າ, "ບໍ່ມີສັນຕິສຸກ ແກ່ຄົນອະທັມ"

## 49 ຊົນຊາດທັງຫລາຍໄດ້ຮັບແສງສວ່າງ

The Servant's Mission

1 ຊົນຊາດທາງໄກເອີຍ ຈົ່ງຟັງຂ້າພະເຈົ້າ ຄືພຣະຜູ້ເປັນເຈົ້າຊົງເລືອກເອົາຂ້າພະເຈົ້າຕັ້ງແຕ່ຢູ່ໃນທ້ອງແມ່ ແລະ
ຊົງແຕ່ງຕັ້ງໃຫ້ເປັນຜູ້ຮັບໃຊ້ຂອງພຣະອົງ
2 ພຣະອົງຊົງທຳໃຫ້ຄຳເວົ້າຂອງຂ້າພະເຈົ້າແຫລມຄົມເຫມືອນຄົມດາບ ຊົງຄຸ້ມຄອງຂ້າພະເຈົ້າດ້ວຍພຣະຫັດ
ຂອງພຣະອົງ ຊົງທຳໃຫ້ຂ້າພະເຈົ້າແຫລມຄົມເຫມືອນລູກທະນູ ແລະພ້ອມແລ້ວທີ່ຈະເກັບມ້ຽນໄວ້ໃນບັ້ງແຫລ້ງ
ຂອງພຣະອົງ
3 ພຣະອົງຊົງບອກຂ້າພະເຈົ້າວ່າ "ເຈົ້າເປັນຜູ້ຮັບໃຊ້ຂອງເຮົາ ອິສຣາເອນຈະສັຣເສີນເຮົາຍ້ອນເຈົ້າ"
4 ຂ້າພະເຈົ້າເວົ້າວ່າ, "ຂ້າພະເຈົ້າໄດ້ເຮັດວຽກ ແຕ່ວຽກນັ້ນບໍ່ມີປໂຍດ ຂ້າພະເຈົ້າໄດ້ເສັຽແຮງໄປລ້າໆ ແຕ່ບໍ່ມີ
ຫຍັງສຳເຣັດຜົນ" ຂ້າພະເຈົ້າໄວ້ວາງໃຈແລະມອບທຸກສິ່ງໄວ້ກັບພຣະຜູ້ເປັນເຈົ້າ ພຣະອົງຊົງຈະມອບຄ່າຕອບ
ແທນວຽກງານໃຫ້ຂ້າພະເຈົ້າ

5 ພຣະຜູ້ເປັນເຈົ້າຊົງແຕ່ງຕັ້ງຂ້າພະເຈົ້າຕັ້ງແຕ່ຢູ່ໃນທ້ອງແມ່ ຊົງໃຫ້ຂ້າພະເຈົ້າເປັນຜູ້ຮັບໃຊ້ຂອງພຣະອົງ ເພື່ອ
ນຳພາອິສຣາເອນໄພ່ພົນຂອງພຣະອົງ ທີ່ກະຈັດກະຈາຍກັນຢູ່ນັ້ນກັບຄືນມາຫາພຣະອົງ ພຣະຜູ້ເປັນເຈົ້າຊົງໃຫ້
ກຽດແກ່ຂ້າພະເຈົ້າ ແລະຊົງເປັນເຫື່ອແຮງຂອງຂ້າພະເຈົ້າ
6 ພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າວ່າ "ເຮົາມີວຽກສຳຄັນສຳລັບເຈົ້າຜູ້ຮັບໃຊ້ຂອງເຮົາດັ່ງນີ້ ເຈົ້າບໍ່ພຽງແຕ່ທຳ
ໃຫ້ອິສຣາເອນທີ່ເຫລືອຢູ່ນັ້ນຍິ່ງໃຫຍ່ຄືເກົ່າເທົ່ານັ້ນ ແຕ່ເຮົາຈະທຳໃຫ້ເຈົ້າເປັນແສງສວ່າງແກ່ຊົນຊາດທັງ
ຫລາຍ ເພື່ອຄົນໃນທົ່ວໂລກນີ້ຈະໄດ້ລອດພົ້ນ"
7 ພຣະເຈົ້າອົງບໍຣິສຸດ ແລະຊ່ອຍໄຖ່ໃຫ້ພົ້ນຂອງອິສຣາເອນ ຊົງກ່າວຕໍ່ຄົນທີ່ຖືກກຽດຊັງ ແລະຫມິ່ນປມາດຢ່າງ
ຫນັກຈາກຊົນຊາດ ແລະຂ້ອຍຂ້າເຈົ້ານາຍວ່າ "ພຣະຣາຊາທັງຫລາຍຈະເຫັນເຈົ້າເປັນອິສຣະ ແລະຈະຊົງລຸກ
ຂຶ້ນສະແດງຄວາມໂຄຣົບ ເຈົ້າຊາຍທັງຫລາຍກໍຈະເຫັນເຫມືອນກັນ ເຂົາຈະກົ້ມຂາບລົງຄຳນັບເຈົ້າ ເຫດການ
ນີ້ຈະເກີດຂຶ້ນກໍຍ້ອນວ່າພຣະຜູ້ເປັນເຈົ້າ ຄືພຣະເຈົ້າອົງສັດຊື່ ແລະບໍຣິສຸດຂອງອິສຣາເອນຊົງເລືອກເອົາຜູ້ຮັບ
ໃຊ້ ແລະທຳຕາມຄຳຫມັ້ນສັນຍາຂອງພຣະອົງ

**ການສ້າງເຢຣູຊາເລັມໃຫມ່**

Zion's Children to Be Brought Home

8 ພຣະຜູ້ເປັນເຈົ້າຊົງບອກໄພ່ພົນຂອງພຣະອົງວ່າ, "ເມື່ອເຖິງເວລາຊ່ອຍໃຫ້ເຈົ້າພົ້ນ ເຮົາຈະສະແດງຄວາມຮັກ
ໄຄ່ໄມຕຣີຕໍ່ເຈົ້າ ແລະຈະຕອບຄຳຮ້ອງໄຫ້ຂໍຄວາມຊ່ອຍເຫລືອຂອງເຈົ້າ ເຮົາຈະຄຸ້ມຄອງຮັກສາເຈົ້າ ແລະຈະ
ໃຫ້ເຈົ້າຜູກສຳພັນທະໄມ ຕຣີກັບຄົນທັງປວງ ເຮົາຈະໃຫ້ເຈົ້າຕັ້ງຖິ່ນຖານບ້ານເຮືອນອີກເທື່ອນຶ່ງຢູ່ໃນທີ່ດິນຮົກ
ຮ້າງວ່າງເປົ່າ
9 ເຮົາຈະເວົ້າກັບນັກໂທດວ່າ, "ອອກມາເສັ່ງ" ແລະເວົ້າກັບຜູ້ຢູ່ໃນຄວາມມືດວ່າ "ອອກມາສູ່ແສງສວ່າງເທີນ"
ພວກເຂົາຈະເປັນເຫມືອນແກະທີ່ກິນຫຍ້າຢູ່ຕາມພູ
10 ພວກເຂົາຈະບໍ່ອຶດນ້ຳຈັກເທື່ອ ແສງຕາເວັນແລະລົມຮ້ອນຈະບໍ່ຖືກຕ້ອງເຂົາ ເພາະວ່າພຣະອົງຜູ້ຊົງເມດຕາສົງ
ສານຮັກແພງພວກເຂົາຈະນຳພາໄປຍັງບໍ່ນ້ຳ
11 ເຮົາຈະສ້າງທາງຫລວງຂ້າມພູທັງຫລາຍ ແລະຈັດຕຽມທາງໃຫ້ໄພ່ພົນຂອງເຮົາໄປ
12 ໄພ່ພົນຂອງເຮົາຈະມາແຕ່ໄກ ຄືມາຈາກທາງເຫນືອ ທາງຕາເວັນອອກ ແລະຈາກເມືອງຊີເອເນທາງໃຕ້"
13 ໂອ ຟ້າສວັນເອີຍ ຈົ່ງຮ້ອງເພງເຖີດ ໂອ ແຜ່ນດິນເອີຍ ຈົ່ງມ່ວນຊື່ນເບີກບານເຖີດ ຂໍໃຫ້ພູທັງຫລາຍຮ້ອງເພງ
ອອກມາ ພຣະຜູ້ເປັນເຈົ້າຊົງເລົ້າໂລມໄພ່ພົນຂອງພຣະອົງ ແລະຈະຊົງສົງສານໄພ່ພົນທີ່ຕົກທຸກໄດ້ຍາກ
14 ແຕ່ຊາວຊີໂອນເວົ້າວ່າ, "ພຣະຜູ້ເປັນເຈົ້າຊົງປະຖິ້ມພວກເຮົາແລ້ວ ພຣະອົງຊົງຫລົງລືມພວກເຮົາແລ້ວ
15 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງຕອບວ່າ, "ຜູ້ຍິງທີ່ລືມລູກ ແລະບໍ່ຮັກລູກຂອງຕົນເອງມີບໍ ເຖິງແມ່ນວ່າມີຜູ້ລືມລູກ
ຂອງຕົນກໍຕາມ ແຕ່ເຮົາຈະບໍ່ລືມພວກເຈົ້າຈັກເທື່ອ
16 ເບິ່ງແມ, ເຮົາບໍ່ເຄີຍລືມເຈົ້າ ເຮົາໄດ້ຂຽນຊື່ຂອງເຈົ້າໄວ້ໃນອຸ້ງຝ່າມືຂອງເຮົາແລ້ວ
17 ຜູ້ທີ່ຈະສ້າງເຈົ້າຂຶ້ນໃຫມ່ກຳລັງຈະມາແລ້ວ ແລະຜູ້ທີ່ທຳລາຍເຈົ້າກໍຈະຫນີໄປ
18 ຈົ່ງເບິ່ງໃຫ້ທົ່ວວ່າມີຫຍັງຈະເກີດຂຶ້ນ ປະຊາຊົນຂອງເຈົ້າຈະມາໂຮມກັນ ພວກເຂົາຈະມາທີ່ບ້ານ ເຮົາເປັນພຣະ
ຜູ້ເປັນເຈົ້າທີ່ມີຊີວິດແນ່ນອນ ເຈົ້າຈະດີໃຈນຳປະຊາຊົນຂອງເຈົ້າເຫມືອນເຈົ້າສາວດີໃຈນຳແຫວນຫມັ້ນຂອງ
ຕົນ
19 ແຜ່ນດິນຂອງເຈົ້າໄດ້ຖືກທຳລາຍຮ້າງເປົ່າ ແຕ່ບັດນີ້ມັນຈະແຄບເກີນໄປສຳລັບຜູ້ຈະມາຢູ່ທີ່ນັ້ນ ຄົນທັງຫລາຍທີ່
ເຄີຍກືນກິນພວກເຈົ້າຈະຖືກຂັບໄລ່ໃຫ້ຫນີໄປໄກ
20 ລູກທີ່ເກີດໃນຍາມທີ່ເຈົ້າຖືກເນລະເທດຈະເວົ້າຕໍ່ເຈົ້າໃນວັນນຶ່ງວ່າ, "ດິນທີ່ເຮົາຢູ່ນີ້ແຄບເກີນໄປແລ້ວ ພວກເຮົາ
ຢາກໄດ້ບ່ອນຢູ່ທີ່ກວ້າງກວ່ານີ້"

21 ແລ້ວເຈົ້າກໍຈະຖາມຕົວເອງວ່າ, “ໃຜຫນໍອອກລູກເຫລົ່ານີ້ໃຫ້ຂ້າພະເຈົ້າ ຂ້າພະເຈົ້າໄດ້ສູນເສັຽລູກໄປ ແລະຈະ
ບໍ່ມີຄືເກົ່າອີກ ຂ້າພະເຈົ້າຖືກເນລະເທດໄປໄກ ແມ່ນໃຜຫນໍເອົາລູກເຫລົ່ານີ້ຄືນມາ ຂ້າພະເຈົ້າຖືກປະປ່ອຍໃຫ້
ຢູ່ຜູ້ດຽວແລ້ວລູກເຫລົ່ານີ້ມາແຕ່ໃສຫນໍ
22 ພຣະຜູ້ເປັນເຈົ້າຊົງບອກໄພ່ພົນຂອງພຣະອົງວ່າ, “ເຮົາຈະກວັກມືເອົາຊົນຊາດທັງຫລາຍ ພວກເຂົາຈະນຳເອົາ
ລູກຂອງເຈົ້າມາ
23 ກະສັດທັງຫລາຍຈະເປັນເຫມືອນພໍ່ຂອງເຈົ້າ ແລະພຣະຣາຊີນີທັງຫລາຍຈະເປັນເຫມືອນແມ່ຂອງເຈົ້າ ພວກ
ທ່ານຈະກົ້ມລົງໃຫ້ກຽດເຈົ້າ ແລະຈະສະແດງຄວາມໂຄຣົບຢຳເກງເຈົ້າ ແລ້ວເຈົ້າຈະຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າ
ຜູ້ທີ່ລໍຄອຍໃຫ້ຊ່ອຍເຫລືອຈະບໍ່ຜິດຫວັງ”
24 ຜູ້ໃດຈະເອົາຂອງທີ່ທະຫານຍາດຊິງມາໄດ້ ຫລືຈະຊ່ອຍເອົານັກໂທດໃຫ້ພົ້ນຈາກຜູ້ກົດຂີ່ໄດ້ບໍ
25 ພຣະຜູ້ເປັນເຈົ້າຊົງຕອບວ່າ, “ການນີ້ຈະເກີດຂຶ້ນແນ່ນອນ ຄືພວກຊະເລີຍທີ່ທະຫານຈັບມາກໍຈະຖືກເອົາໄປ
ແລະສິ່ງຂອງທີ່ຜູ້ກົດຂີ່ຍາດຊິງມາກໍຈະຖືກຍຶດໄປ ເຮົາຈະຕໍ່ສູ້ຜູ້ທີ່ຕໍ່ສູ້ເຈົ້າ ແລະຈະຊ່ອຍລູກຂອງເຈົ້າໃຫ້ພົ້ນ
26 ເຮົາຈະໃຫ້ຜູ້ບີບບັງຄັບເຈົ້າຂ້າຟັນຊຶ່ງກັນແລະກັນ ພວກເຂົາຈະເມົາເລືອດຂອງຕົນເອງເຫມືອນເມົາເຫລົ້າ
ແລ້ວມະນຸດທັງປວງຈະຮູ້ວ່າເຮົາຄືພຣະຜູ້ເປັນເຈົ້າ ຜູ້ທີ່ຊ່ອຍໄຖ່ເຈົ້າໃຫ້ເປັນອິສຣະແລະພົ້ນພັຍ ພວກເຂົາຈະຮູ້
ວ່າເຮົາເປັນພຣະເຈົ້າອົງຍິ່ງໃຫຍ່ຂອງຢາໂຄບ”

## 50

Chapter 50

1 ພຣະເຈົ້າຊົງກ່າວດັ່ງນີ້ວ່າ, “ຫນັງສືຢ່າຮ້າງຂອງແມ່ເຈົ້າ ຊຶ່ງເຮົາໄດ້ໃຊ້ໄລ່ນາງໄປເສັຽນັ້ນຢູ່ທີ່ໃດ ຫລືເຈົ້າຫນີ້
ຂອງເຮົາຄົນໃດທີ່ເຮົາໄດ້ຂາຍຕົວເຈົ້າໄປ ເບິ່ງແມ, ເພາະຄວາມບາບຊົ່ວຂອງເຈົ້າ ເຈົ້າຈຶ່ງຖືກຂາຍ ແລະເພາະ
ຄວາມທໍຣະຍົດຂອງເຈົ້າແມ່ຂອງເຈົ້າຈຶ່ງຖືກໄລ່ໄປ
2 ເປັນຫຍັງຫນໍ ເມື່ອເຮົາມາຈຶ່ງບໍ່ມີໃຜເລີຍ ເມື່ອເຮົາຮ້ອງເອີ້ນຈຶ່ງບໍ່ມີໃຜຕອບ ມືຂອງເຮົາສັ້ນ ໄຖ່ບໍ່ໄດ້ຫລື ແລະ
ເຮົາບໍ່ມີກຳລັງທີ່ຈະຊ່ອຍກູ້ຫລື ເບິ່ງແມ, ເຮົາໃຫ້ນ້ຳທະເລແຫ້ງດ້ວຍຄຳສັ່ງຂອງເຮົາ ເຮົາກະທຳໃຫ້ແມ່ນ້ຳເປັນ
ຖິ່ນກັນດານ ປາຂອງແມ່ນ້ຳນັ້ນກໍເຫມັນເພາະຂາດນ້ຳ ແລະຕາຍເພາະຫິວ
3 ເຮົາຫົ່ມຟ້າສວັນໄວ້ດ້ວຍຄວາມດຳມືດ ແລະເອົາຜ້າກະສອບມາຄຸມ”

### ການເຊື່ອຟັງຜູ້ຮັບໃຊ້ຂອງພຣະເຈົ້າ

The Servant’s Humiliation and Vindication

4 ພຣະເຈົ້າໄດ້ປະທານໃຫ້ຂ້າພະເຈົ້າມີລີ້ນຂອງບັນດາຜູ້ທີ່ພຣະອົງຊົງສອນ ເພື່ອຂ້າພະເຈົ້າຈະໄດ້ຮູ້ທີ່ຈະຄ້ຳຊູຜູ້
ທີ່ອິດເມື່ອຍໄວ້ດ້ວຍຖ້ອຍຄຳ ທຸກໆເຊົ້າພຣະອົງຊົງປຸກ ຊົງປຸກຫູຂອງຂ້າພະເຈົ້າເພື່ອໃຫ້ຟັງຢ່າງຜູ້ທີ່ພຣະອົງຊົງ
ສອນ
5 ພຣະເຈົ້າໄດ້ຊົງເບີກຫູຂ້າພະເຈົ້າ ແລະຂ້າພະເຈົ້າກໍຈະບໍ່ດື້ດັນ ຂ້າພະເຈົ້າບໍ່ຫັນກັບ
6 ຂ້າພະເຈົ້າຫັນຫລັງໃຫ້ແກ່ຜູ້ທີ່ໂບຍຕີຂ້າພະເຈົ້າ ແລະຫັນແກ້ມໃຫ້ແກ່ຄົນທີ່ດຶງຫນວດຂ້າພະເຈົ້າອອກ ຂ້າພະ
ເຈົ້າບໍ່ຫນີຫນ້າຈາກຄວາມອາຍແກ່ການຖົ່ມນ້ຳລາຍໃສ່
7 ເພາະວ່າພຣະຜູ້ເປັນເຈົ້າຊົງຊ່ອຍຂ້າພະເຈົ້າ ເພາະສັນນັ້ນ ຂ້າພະເຈົ້າຈຶ່ງຕັ້ງຫນ້າຂອງຂ້າພະເຈົ້າຢ່າງຫີນ
ເຫລັກໄຟ ແລະຂ້າພະເຈົ້າຊາບວ່າຂ້າພະເຈົ້າຈະບໍ່ໄດ້ອາຍ
8 ພຣະອົງຜູ້ຊົງແກ້ແທນຂ້າພະເຈົ້າກໍຢູ່ໃກ້ ໃຜຈະສູ້ຄະດີກັບຂ້າພະເຈົ້າກໍໃຫ້ເຮົາຢືນຢູ່ດ້ວຍກັນ ໃຜເປັນປໍຣະປັກ
ຂອງຂ້າພະເຈົ້າກໍໃຫ້ເຂົາມາໃກ້ຂ້າພະເຈົ້າ

9 ເບິ່ງແມ, ພຣະຜູ້ເປັນເຈົ້າຊົງຊ່ອຍຂ້າພະເຈົ້າ ໃຜຈະກ່າວໂທດຂ້າພະເຈົ້າວ່າມີຄວາມຜິດ ເບິ່ງແມ, ບັນດາເຂົາ
ທຸກຄົນຈະສູນຫາຍໄປເຫມືອນຢ່າງເສື້ອຜ້າ ແມງຈະກິນເຂົາເຫລົ່ານັ້ນເສັຽ
10 ໃຜແດ່ໃນພວກເຈົ້າຢຳເກງພຣະຜູ້ເປັນເຈົ້າ ແລະເຊື່ອຟັງສຽງຂອງຜູ້ຮັບໃຊ້ຂອງພຣະອົງ ຜູ້ດຳເນີນໃນຄວາມ
ມືດແລະບໍ່ມີຄວາມສວ່າງ ແຕ່ຍັງວາງໃຈໃນພຣະນາມພຣະເຈົ້າ ແລະເພິ່ງອາສັຍພຣະຜູ້ເປັນເຈົ້າຂອງເຂົາ
11 ເບິ່ງແມ, ເຈົ້າທັງສິ້ນຜູ້ກໍ່ໄຟ ຜູ້ເອົາດົ້ນໄຟຄາດຕົວເຈົ້າໄວ້ ຈົ່ງເດີນດ້ວຍແສງໄຟຂອງເຈົ້າ ແລະດ້ວຍແສງດົ້ນ
ໄຟຊຶ່ງເຈົ້າໄດ້ກໍ່ ເຈົ້າຈະໄດ້ຮັບຢ່າງນີ້ຈາກມືຂອງເຮົາ ຄື ເຈົ້າຈະຕ້ອງນອນລົງໃນທີ່ທໍຣະມານ

## 51 ຄຳເລົ້າໂລມມາເຖິງຊີໂອນ

Blessings in Store for God’s People

(ປຖກ 12:1-3)

1 “ຈົ່ງຟັງເຮົາ ເຈົ້າທັງຫລາຍຜູ້ຂົນຂວາຍຫາການຊ່ອຍກູ້ ເຈົ້າຜູ້ສແວງພຣະຜູ້ເປັນເຈົ້າ ຈົ່ງມອງເບິ່ງຫີນຊຶ່ງໄດ້ສະ
ກັດຕົວເຈົ້າມາ ແລະຈົ່ງມອງເບິ່ງບໍ່ຫີນຊຶ່ງຊົງຂຸດເອົາຕົວເຈົ້າທັງຫລາຍມາ
2 ຈົ່ງເບິ່ງອັບຣາຮາມບັນພະບຸຣຸດຂອງເຈົ້າທັງຫລາຍ ແລະເບິ່ງນາງຊາຣາຜູ້ຄອດເຈົ້າ ເພາະເມື່ອມີເຂົາຢູ່ແຕ່ຜູ້
ດຽວ ເຮົາໄດ້ຮ້ອງເອີ້ນເຂົາ ແລະເຮົາອວຍພອນເຂົາແລະກະທຳໃຫ້ເປັນຄົນຫລວງຫລາຍ
3 ເພາະວ່າພຣະຜູ້ເປັນເຈົ້າຊົງເລົ້າໂລມຊີໂອນ ພຣະອົງຈະຊົງເລົ້າໂລມບ່ອນທີ່ຮົກຮ້າງທັງສິ້ນຂອງນາງ ແລະຈະ
ທຳຖິ່ນກັນດານຂອງນາງເຫມືອນສວນເອເດນ ແລະທະເລຊາຍຂອງນາງເຫມືອນອຸທຍານຂອງພຣະຜູ້ເປັນເຈົ້າ
ຈະພົບຄວາມຊື່ນບານແລະຄວາມຍິນດີໃນນາງ ທັງການໂມທະນາແລະສຽງເພງ
4 ຊົນຊາດຂອງເຮົາເອີຍ ຈົ່ງຟັງສຽງຂອງເຮົາ ຊາດຂອງເຮົາເອີຍ ຈົ່ງງ່ຽງຫູຟັງເຮົາ ເພາະພຣະທັມຈະອອກໄປ
ຈາກເຮົາ ແລະຄວາມຍຸດຕິທັມຈະອອກໄປເປັນຄວາມສວ່າງຂອງຊົນຊາດທັງຫລາຍ
5 ການຊ່ອຍກູ້ຂອງເຮົາໃກ້ເຂົ້າມາໂດຍໄວ ແລະຄວາມລອດຂອງເຮົາໄດ້ອອກໄປແລ້ວ ແຂນຂອງເຮົາຈະປົກ
ຄອງຊົນຊາດທັງຫລາຍ ແຜ່ນດິນຊາຍທະເລລໍຄອຍເຮົາ ແລະເຂົາຫວັງຄອຍກຳລັງແຂນຂອງເຮົາ
6 ຈົ່ງແຫງນຫນ້າເບິ່ງຟ້າສວັນ ແລະຫລຽວເບິ່ງໂລກເບື້ອງລຸ່ມ ເພາະວ່າຟ້າສວັນຈະສູນສິ້ນໄປເຫມືອນຄວັນ
ແລະແຜ່ນດິນໂລກຈະສລາຍໄປເຫມືອນຢ່າງເສື້ອຜ້າ ແລະເຂົາທັງຫລາຍຜູ້ອາສັຍຢູ່ໃນນັ້ນຈະຕາຍໄປ
ເຫມືອນຮິ້ນ ແຕ່ຄວາມລອດຂອງເຮົາຈະຢູ່ເປັນນິດ ແລະການຊ່ອຍກູ້ຂອງເຮົາຈະບໍ່ສິ້ນສຸດເລີຍ
7 “ຈົ່ງຟັງເຮົາ ເຈົ້າທັງຫລາຍຜູ້ຮູ້ເຖິງຄວາມຊອບທັມ ຊົນຊາດຊຶ່ງພຣະທັມຂອງເຮົາຢູ່ໃນໃຈ ຢ່າຢ້ານການຕຳຫນິ
ຂອງມະນຸດ ແລະຢ່າວິຕົກຕໍ່ການກ່າວຫຍາບຊ້າຂອງເຂົາ
8 ເພາະວ່າແມງຈະກິນເຂົາເຫມືອນກິນເສື້ອຜ້າ ແລະໂຕຫນອນຈະກິນເຂົາເຫມືອນກິນຂົນແກະ ແຕ່ການຊ່ອຍກູ້
ຂອງເຮົາຈະຢູ່ເປັນນິດ ແລະຄວາມລອດຂອງເຮົາຈະຢູ່ຕລອດທຸກຊົ່ວຊາດເຊື້ອສາຍ
9 ຂ້າແດ່ພຣະກອນຂອງພຣະຜູ້ເປັນເຈົ້າ ຈົ່ງຕື່ນເຖີດ ຕື່ນເຖີດ ຈົ່ງສວມກຳລັງ ຈົ່ງຕື່ນຢ່າງສມັຍເກົ່າກ່ອນ ໃນຊົ່ວ
ຊາດເຊື້ອສາຍທີ່ນານມາແລ້ວ ທ່ານບໍ່ແມ່ນຫລືທີ່ຕັດຣາຮັບໃນທະເລຂາດເປັນຕ່ອນໆ ແລະແທງມັງກອນຈົນ
ຊອດ
10 ທ່ານບໍ່ແມ່ນຫລືທີ່ທຳໃຫ້ທະເລແຫ້ງໄປ ຄືນ້ຳຂອງມະຫາສະຫມຸດໃຫຍ່ດ້ວຍ ຊຶ່ງບ່ອນເລິກຂອງທະເລໃຫ້ເປັນ
ຫົນທາງ ເພື່ອໃຫ້ຜູ້ທີ່ໄດ້ໄຖ່ໄວ້ແລ້ວເດີນຜ່ານໄປ
11 ແລະຜູ້ທີ່ໄຖ່ໄວ້ແລ້ວຂອງພຣະຜູ້ເປັນເຈົ້າຈະກັບ ແລະຮ້ອງເພງມາຊີໂອນ ຄວາມຊື່ນບານເປັນນິດຈະຢູ່ເທິງຫົວ
ຂອງເຂົາ ເຂົາຈະໄດ້ຮັບຄວາມຊື່ນບານແລະຄວາມຍິນດີ ຄວາມໂສກເສົ້າແລະການຫາຍໃຈໃຫຍ່ຈະຫນີໄປ
ເສັຽ

12 ເຮົາ ຄືເຮົາເອງຜູ້ເລົ້າໂລມເຈົ້າ ເຈົ້າເປັນຜູ້ໃດທີ່ຢ້ານມະນຸດຜູ້ຊຶ່ງຕ້ອງຕາຍ ຄືຢ້ານບຸດຂອງມະນຸດຊຶ່ງຖືກທຳໃຫ້ເຫມືອນຫຍ້າ

13 ແລະທີ່ໄດ້ລືມພຣະຜູ້ເປັນເຈົ້າຜູ້ສ້າງຂອງຕົນເສັຽ ຜູ້ຊົງຄຶງຟ້າສວັນ ແລະວາງຮາກຖານຂອງແຜ່ນດິນໂລກ ແລະທີ່ຢ້ານຢູ່ເລື້ອຍໄປຕລອດວັນ ເພາະຄວາມກ້ຽວກາດຂອງຜູ້ບີບບັງຄັບ ເມື່ອເຂົາຕັ້ງຕົວເຂົາທີ່ຈະທຳລາຍ ແລະຄວາມກ້ຽວກາດຂອງຜູ້ທີ່ບີບບັງຄັບຢູ່ທີ່ໃດ

14 ຜູ້ໃດທີ່ຖືກກົດຂີ່ຈະໄດ້ຮັບການປົດປ່ອຍໂດຍໄວ ເຂົາຈະບໍ່ຕາຍແລະລົງໄປສູ່ປາກແດນມໍຣະນາ ທັງອາຫານຂອງເຂົາຈະບໍ່ຂາດ

15 ເພາະເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ຜູ້ກວນທະເລແລະຄື້ນກໍຕີຟາດຟົ້ງ ພຣະນາມຂອງພຣະອົງຄືພຣະຜູ້ເປັນເຈົ້າຈອມໂຍທາ

16 ແລະເຮົາໄດ້ໃສ່ຖ້ອຍຄຳຂອງເຮົາໃນປາກຂອງເຈົ້າ ແລະເຊື່ອງເຈົ້າໄວ້ໃນຮົ່ມມືຂອງເຮົາ ຊຶ່ງຄຶງຟ້າສວັນແລະວາງຮາກຖານຂອງແຜ່ນດິນໂລກ ແລະກ່າວແກ່ຊີໂອນວ່າ “ເຈົ້າເປັນຊົນຊາດຂອງເຮົາ”

17 ໂອ ເຢຣູຊາເລັມເອີຍ, ຈົ່ງປຸກຕົວເອງ ຈົ່ງປຸກຕົວເອງ ຈົ່ງຢືນຂຶ້ນເຖີດ ເຈົ້າຜູ້ໄດ້ດື່ມຈາກພຣະຫັດຂອງພຣະຜູ້ເປັນເຈົ້າ ຊຶ່ງຈອກແຫ່ງພຣະພິໂຣດຂອງພຣະອົງ ຜູ້ໄດ້ດື່ມເຖິງຄວາມພິໂຣດຂອງພຣະອົງ ຈຶ່ງເຮັດໃຫ້ເຈົ້າໂຊເຊຢ່າງໄປບໍ່ທຸນທ່ຽງ

18 ໃນບັນດາບຸດຊາຍທີ່ນາງຄອດມາ ກໍບໍ່ມີຜູ້ໃດນຳນາງ ໃນບັນດາບຸດຊາຍທີ່ນາງລ້ຽງດູມາ ກໍບໍ່ມີໃຜຈູງນາງ

19 ສອງສິ່ງນີ້ໄດ້ເກີດຂຶ້ນແກ່ເຈົ້າ ຜູ້ໃດຈະເລົ້າໂລມເຈົ້າ ຄືການລ້າງຜານແລະການທຳລາຍ ການອຶດອາຫານແລະເປືອຍກາຍ ຜູ້ໃດຈະເລົ້າໂລມເຈົ້າ

20 ບຸດຊາຍຂອງເຈົ້າສລົບໄປແລ້ວ ເຂົານອນຢູ່ທີ່ທຸກຫົວຖນົນເຫມືອນກວາງຕິດຕາຫນ່າງ ເຂົາທັງຫລາຍໂຊກໂຊນດ້ວຍພຣະພິໂຣດຂອງພຣະຜູ້ເປັນເຈົ້າ ແລະຄຳສັ່ງຂອງພຣະເຈົ້າຂອງເຈົ້າ

21 ສັນນັ້ນເຈົ້າຜູ້ຖືກຂົ່ມໃຈ ຜູ້ຊຶ່ງມຶນເມົາ ແຕ່ບໍ່ແມ່ນດ້ວຍເຫລົ້າອະງຸ່ນ ຈົ່ງຟັງຂໍ້ນີ້ເຖີດ

22 ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ ພຣະເຈົ້າຂອງເຈົ້າຜູ້ຊົງສູ້ຄະດີແຫ່ງຊົນຊາດຂອງພຣະອົງ ພຣະເຈົ້າຂອງເຈົ້າຊົງ ຕັສສັ່ງດັ່ງນີ້ວ່າ, “ເບິ່ງແມ, ເຮົາໄດ້ເອົາຈອກແຫ່ງຄວາມໂຊເຊ ມາຈາກມືຂອງເຈົ້າແລ້ວ ຂັນແຫ່ງຄວາມພິໂຣດຂອງເຮົາ ເຈົ້າຈະບໍ່ຕ້ອງດື່ມອີກ

23 ແລະເຮົາຈະໃສ່ມັນໄວ້ໃນມືຂອງຜູ້ທໍຣະມານເຈົ້າ ຜູ້ໄດ້ເວົ້າກັບເຈົ້າວ່າ “ກົ້ມລົງ ເຮົາຈະໄດ້ຂ້າມໄປ” ແລະເຈົ້າໄດ້ກະທຳໃຫ້ຫລັງຂອງເຈົ້າເຫມືອນພື້ນດິນ ແລະເຫມືອນຖນົນເພື່ອໃຫ້ເຂົາຂ້າມໄປ”

## 52 ພຣະເຈົ້າຊົງປົດປ່ອຍເຢຣູຊາເລັມ

Let Zion Rejoice

1 ໂອ ຊີໂອນເອີຍ ຈົ່ງເຂັ້ມແຂງແລະຕື່ນຂຶ້ນ ນະຄອນສັກສິດຂອງພຣະເຈົ້າເອີຍ ຈົ່ງນຸ່ງຫົ່ມຜ້າແພງາມໆເທີນ ຄົນນອກສາສນາຈະບໍ່ເຂົ້າມາຫາເຈົ້າອີກ

2 ໂອ ເຢຣູຊາເລັມເອີຍ ຈົ່ງຕໍ່ສູ້ເພື່ອອິສຣະພາບ ຈົ່ງລຸກຂຶ້ນຈາກດິນແລະນັ່ງເທິງບັນລັງເທີນ ພວກຊະເລີຍຊາວຊີໂອນເອີຍ ຈົ່ງແກ້ໂສ້ທີ່ເຂົາຜູກເຈົ້າອອກ

3 ພຣະຜູ້ເປັນເຈົ້າຊົງບອກໄພ່ພົນຂອງພຣະອົງວ່າ, “ເຈົ້າໄດ້ຕົກເປັນທາດໂດຍບໍ່ມີຣາຄາ ເຈົ້າຈະບໍ່ຖືກໄຖ່ດ້ວຍເງິນຫລືມູນຄ່າແຕ່ຢ່າງໃດ ແຕ່ເຈົ້າຈະໄດ້ເປັນອິສຣະ

4 ເພາະພຣະເຈົ້າກ່າວດັ່ງນີ້ວ່າ ເຈົ້າເຄີຍເປັນຄົນຕ່າງຊາດຢູ່ໃນປະເທດເອຢິບເທື່ອນຶ່ງແລ້ວ ພາຍລຸນມາອັສຊີເຣັຽໄດ້ກົດຂີ່ເຈົ້າຢ່າງຫນັກ

5 ພຣະເຈົ້າກ່າວວ່າ ແລ້ວສິ່ງດຽວກັນນີ້ກໍເກີດຂຶ້ນອີກໃນບາບີໂລນ ເຈົ້າຖືກຈັບເປັນຊະເລີຍຢູ່ທີ່ນັ້ນຢ່າງບໍ່ມີຄຸນຄ່າ ພຣະເຈົ້າກ່າວວ່າ ຄົນທັງຫລາຍທີ່ປົກຄອງເຈົ້າກໍຂີ້ຄຸຍອວດດີ ແລະສະແດງຄວາມດູຫມິ່ນຢຽບຫຍາມເຮົາຢູ່ສເມີ

6 ແຕ່ເມື່ອເຖິງວັນນັ້ນ ເຈົ້າຈະຍອມຮັບວ່າ ເຮົາຜູ້ເວົ້າຕໍ່ເຈົ້ານີ້ແຫລະ ຄືພຣະຜູ້ເປັນເຈົ້າ"

7 ຜູ້ສົ່ງຂ່າວທີ່ກໍາລັງຂ້າມພູມານັ້ນງາມວິເສດຫລາຍ ທ່ານນໍາເອົາຂ່າວດີ ຂ່າວສັນຕິສຸກມາ ທ່ານຮ້ອງປະກາດໄຊຊະນະແລະເວົ້າຕໍ່ພູຊີໂອນວ່າ, "ພຣະເຈົ້າຂອງເຈົ້າຊົງເປັນກະສັດ"

8 ພວກທີ່ຍາມເມືອງກໍ່ຮ້ອງສຽງດັງ ຮ້ອງເພງພ້ອມກັນດ້ວຍຄວາມມ່ວນຊື່ນ ເພາະວ່າພວກເຂົາເຫັນພຣະຜູ້ເປັນເຈົ້າກັບມາທີ່ພູຊີໂອນດ້ວຍຕາຕົນເອງ

9 ເຢຣູຊາເລັມທີ່ຮ້າງເປົ່າເອີຍ ຈົ່ງຮ້ອງເພງດ້ວຍຄວາມມ່ວນຊື່ນເທີນ ເພາະພຣະຜູ້ເປັນເຈົ້າຊົງເລົ້າໂລມຊົນຊາດຂອງພຣະອົງ ແລະຊົງຊ່ອຍໄຖ່ໃຫ້ນະຄອນຂອງພຣະອົງພົ້ນພັຍ

10 ພຣະຜູ້ເປັນເຈົ້າຊົງໃຊ້ອໍານາດອັນສັກສິດຂອງພຣະອົງ ຊົງຊ່ອຍໃຫ້ໄພ່ພົນຂອງພຣະອົງພົ້ນພັຍ ຄົນທັງໂລກກໍໄດ້ເຫັນການຊ່ອຍນັ້ນ

11 ພວກເຈົ້າທີ່ຖືເຄື່ອງສັກສິດ ຈົ່ງອອກມາຈາກບາບີໂລນດຽວນີ້ ຢ່າແຕະຕ້ອງສິ່ງທີ່ຫວງຫ້າມ ຈົ່ງຮັກສາຕົວໃຫ້ບໍຣິສຸດ ແລະອອກໄປຈາກເມືອງເສັຽ

12 ເວລານີ້ເຈົ້າບໍ່ຕ້ອງຟ້າວອອກໄປ ບໍ່ຕ້ອງຫລົບຫລີຫນີໄປ ເພາະພຣະຜູ້ເປັນເຈົ້າຂອງເຈົ້າຈະນໍາຫນ້າເຈົ້າໄປ ແລະຈະຊົງຮັກສາທາງຫລັງຕື່ມອີກ

**ຄວາມທຸກລໍາບາກຂອງຜູ້ຮັບໃຊ້ພຣະຜູ້ເປັນເຈົ້າ**

The Suffering Servant

13 ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ຄົນໃຊ້ຂອງເຮົາຈະທໍາພາຣະກິຈຂອງຕົນສໍາເຣັດ ເຂົາຈະເປັນຜູ້ຍິ່ງໃຫຍ່ ແລະມີກຽດສູງ

14 ເມື່ອຄົນທັງຫລາຍເຫັນເຂົາຈະສະທ້ານຢ້ານກົວ ເຂົາເສັຽຮູບໂສມຫລາຍແທບຈະບໍ່ເປັນມະນຸດ

15 ແຕ່ຊາດທັງຫລາຍຈະອັສຈັນພວກເຂົາ ພວກກະສັດກໍຈະເວົ້າຫຍັງບໍ່ໄດ້ຍ້ອນວ່າ ເຂົາທັງຫລາຍຈະເຫັນສິ່ງທີ່ບໍ່ເຄີຍຮູ້ເຄີຍເຫັນກໍຈະເຫັນແລະເຂົ້າໃຈ"

## 53

Chapter 53

1 ຄົນທັງຫລາຍໄດ້ຕອບວ່າ, "ແມ່ນໃຜຈະເຊື່ອສິ່ງທີ່ເຮົາໄດ້ຍິນເຂົາແລ້ວ ພຣະຫັດຂອງພຣະຜູ້ເປັນເຈົ້າຊົງສໍາແດງຕໍ່ຜູ້ໃດ

2 ມັນເປັນຄວາມມຸ້ງມາດປາຖນາຂອງພຣະຜູ້ເປັນເຈົ້າ ທີ່ຄົນໃຊ້ຂອງພຣະອົງໄດ້ຈະເຣີນເຕີບໂຕເຫມືອນກົກໄມ້ປົ່ງຮາກໃນດິນແຫ້ງ ຄົນໃຊ້ນັ້ນບໍ່ໄດ້ສະງ່າຜ່າເຜີຍ ຫລືຈົບງາມເລີຍ ເຂົາບໍ່ມີຫຍັງພໍໃຫ້ເຮົາສັງເກດ ບໍ່ມີຫຍັງພໍທີ່ຈະຮັກໃຄ່ປາຖນາເຂົາ ບໍ່ມີຫຍັງພໍທີ່ຈະດຶງດູດເຮົາ

3 ເຮົາໄດ້ຫມິ່ນປມາດແລະປະຖິ້ມເຂົາ ເຂົາໄດ້ຮັບຄວາມລໍາບາກແລະທົນຕໍ່ຄວາມເຈັບປວດ ບໍ່ມີໃຜຈະຫລຽວແລເຂົາ ເຮົາໄດ້ປະຖິ້ມເຂົາເຫມືອນເຂົາບໍ່ມີຫຍັງ

4 ແຕ່ເຂົາໄດ້ທົນແບກເອົາຄວາມລໍາບາກຂອງເຮົາ ຄືຄວາມເຈັບປວດທີ່ເຮົາແບກຢູ່ນັ້ນ ເຮົາຄຶດສເມີວ່າຄວາມລໍາບາກຂອງເຂົານັ້ນ ແມ່ນການລົງໂທດຂອງພຣະເຈົ້າ

5 ແຕ່ເຂົາຖືກບາດເຈັບຍ້ອນບາບຂອງພວກເຮົາທັງຫລາຍ ເຂົາຖືກຕີຍ້ອນພວກເຮົາທໍາຊົ່ວ ການລົງໂທດທີ່ເຂົາໄດ້ຮັບນັ້ນທໍາໃຫ້ພວກເຮົາເປັນອິສຣະສົມບູນ ທີ່ເຂົາຖືກຕີນັ້ນກໍເພື່ອໃຫ້ເຮົາຫາຍດີ

6 ເຮົາທັງຫມົດເປັນເຫມືອນແກະທີ່ສູນເສັຽແລ້ວ ເຮົາທຸກຄົນຕ່າງເດີນໄປຕາມທາງຂອງຕົນ ພຣະຜູ້ເປັນເຈົ້າໄດ້ຊົງລົງໂທດເຂົາ ຄືໂທດທີ່ເຮົາທັງຫມົດສົມຄວນໄດ້ຮັບ

7 ເຂົາຖືກຫມິ່ນປມາດຢ່າງເຈັບແສບ ແຕ່ກໍມີຄວາມສຸພາບອ່ອນຫວານ ເຂົາບໍ່ເວົ້າຈາຫຍັງເລີຍເຫມືອນລູກແກະທີ່ຖືກນໍາໄປຂ້າ ແລະເຫມືອນແກະທີ່ຖືກເຂົາຕັດຂົນ ເຂົາບໍ່ເວົ້າຈາຫຍັງເລີຍ

8 ເຂົາຖືກພິພາກສາລົງໂທດແລະນໍາອອກໄປປະຫານ ບໍ່ມີໃຜກັງວົນສົນໃຈໃນເຄາະກໍາຂອງເຂົາເລີຍ ເຂົາຖືກຂ້າຍ້ອນບາບຂອງຊົນຊາດເຮົາ

9 ເຖິງແມ່ນວ່າເຂົາບໍ່ເຄີຍຂ້າຄົນຫລືເວົ້າຕົວະກໍຕາມ ເຂົາກໍຈະຖືກຝັງໄວ້ໃນອຸບໂມງດຽວກັນກັບອາດຊະຍາກອນແລະພວກເສດຖີ"

10 ພຣະຜູ້ເປັນເຈົ້າກ່າວວ່າ, "ມັນເປັນຄວາມຕັ້ງໃຈຂອງເຮົາທີ່ເຂົາຕ້ອງຮັບທຸກນັ້ນ ຄວາມຕາຍເປັນເຄື່ອງໄຖ່ບາບເພື່ອນໍາມາຊຶ່ງຄວາມລອດພົ້ນ ດັ່ງນັ້ນເຂົາຈະເຫັນເຊື້ອສາຍຂອງເຂົາ ຈະມີຊີວິດຍືນຍາວ ແລະແຜນການຂອງເຮົາຈະສໍາເຣັດຍ້ອນເຂົາ

11 ຫລັງຈາກມີຊີວິດຢູ່ດ້ວຍຄວາມທຸກແລ້ວ ເຂົາຈະມີຄວາມສຸກອີກ ເຂົາຈະຮູ້ວ່າຄວາມທຸກທີ່ໄດ້ຮັບນັ້ນມີປໂຍດຫລາຍ ເຂົາເປັນຄົນໃຊ້ທີ່ຊອບທັມຂອງເຮົາ ເຂົາຈະແບກເອົາໂທດຂອງຄົນທັງຫລາຍ ແລະຈະທໍາໃຫ້ເຂົາເປັນໄພ່ພົນຜູ້ສັດຊື່ຂອງເຮົາ

12 ດັ່ງນັ້ນແຫລະ ເຮົາຈະໃຫ້ເຂົາໄດ້ຮັບກຽດ ໄດ້ເປັນໃຫຍ່ ແລະມີອໍານາດໃນຖ້າມກາງຄົນທັງຫລາຍ ເຂົາຍິນດີສຣະຊີວິດ ແລະມີສ່ວນຮ່ວມຢູ່ນໍາພວກອາດຊະຍາກອນ ເຂົາໄດ້ຮັບແບກເອົາບາບຂອງຄົນຈໍານວນຫລາຍແລະທົນຮັບເອົາໂທດທີ່ພວກເຂົາໄດ້ຮັບ"

## 54 ພຣະຜູ້ເປັນເຈົ້າຊົງຮັກອິສຣາເອນ

The Eternal Covenant of Peace

1 ຈົ່ງຮ້ອງເພງເຖີດ ໂອ ຍິງຫມັນເອີຍຜູ້ບໍ່ຄອດບຸດ ຈົ່ງເປັ່ງສຽງຮ້ອງເພງ ແລະຮ້ອງໃຫ້ດັງ ເຈົ້າຜູ້ບໍ່ໄດ້ເຈັບທ້ອງດ້ວຍວ່າບຸດຂອງແມ່ຮ້າງກໍຍັງຈະມີຫລາຍກວ່າບຸດຂອງຍິງທີ່ແຕ່ງງານ ພຣະເຈົ້າຊົງກ່າວດັ່ງນີ້

2 ຈົ່ງທໍາໃຫ້ເຕັນທີ່ເຈົ້າອາສັຍຢູ່ກວ້າງອອກ ຈົ່ງຕໍ່ເຊືອກເຕັນໃຫ້ຍາວ ແລະຝັງຫລັກມັນໃຫ້ແຫນ້ນ

3 ເຈົ້າຈະຂຍາຍເຂດແດນອອກໄປທຸກດ້ານ ປະຊາຊົນຂອງເຈົ້າຈະກັບຄືນປະເທດ ຈະໄດ້ຊົນຊາດທັງຫລາຍມາຢູ່ພາຍໃຕ້ການປົກຄອງ ເມືອງຮ້າງທັງຫລາຍຈະມີຄົນເຕັມຢູ່

4 ຢ່າສູ່ຢ້ານ ເຈົ້າຈະບໍ່ເຊື່ອມເສັຽກຽດອີກ ເຈົ້າຈະບໍ່ເສັຽປຽບລຽບຫນ້າ ເຈົ້າຈະລືມຄວາມງຽບເຫງົາເປົ່າປ່ຽວທີ່ສຸດຄາວເຈົ້າເປັນຫມ້າຍ

5 ພຣະຜູ້ເປັນເຈົ້າຈະເປັນເຫມືອນຜົວຂອງເຈົ້າ ພຣະນາມຂອງພຣະອົງຄືພຣະຜູ້ເປັນເຈົ້າອົງຍິ່ງໃຫຍ່ພຣະເຈົ້າບໍຣິສຸດຂອງອິສຣາເອນຈະຊ່ອຍໄຖ່ເຈົ້າໃຫ້ພົ້ນພັຍ ພຣະອົງຊົງເປັນຜູ້ປົກຄອງໂລກ

6 ເຈົ້າເປັນເຫມືອນເມັຽສາວທີ່ຖືກຜົວປະຖິ້ມ ແລະອຸກອັ່ງທີ່ສຸດ ແຕ່ພຣະຜູ້ເປັນເຈົ້າຊົງເອີ້ນເຈົ້າມາຫາແລະກ່າວວ່າ,

7 "ເຮົາໄດ້ປະຮ້າງເຈົ້າຊົ່ວເວລາຫນ້ອຍດຽວ ເຮົາຈະເອົາເຈົ້າຄືນມາດ້ວຍຄວາມຮັກທີ່ສຸດ

8 ເຮົາໄດ້ໂກດຮ້າຍເຈົ້າໃນຊົ່ວລະຍະນຶ່ງ ເຮົາຈຶ່ງໄດ້ເຊົາເບິ່ງແຍງເຈົ້າ ແຕ່ເຮົາຈະສໍາແດງຄວາມຮັກຕໍ່ເຈົ້າຕລອດໄປ" ພຣະຜູ້ເປັນເຈົ້າອົງຊົງຊ່ອຍໄຖ່ເຈົ້າໄດ້ກ່າວດັ່ງນີ້ແຫລະ

9 "ເຮົາໄດ້ສັນຍາໄວ້ໃນສມັຍຂອງໂນອາ ວ່ານໍ້າຈະບໍ່ຖ້ວມໂລກອີກ ບັດນີ້ເຮົາສັນຍາວ່າຈະບໍ່ໂກດເຈົ້າອີກ ເຮົາຈະບໍ່ຕິຕຽນ ຫລືລົງໂທດເຈົ້າ

10 ພູໃຫຍ່ແລະນ້ອຍທັງຫລາຍອາດພັງທະລາຍລົງ ແຕ່ຄວາມຮັກຂອງເຮົາທີ່ມີຕໍ່ເຈົ້າຈະບໍ່ສິ້ນສຸດຈັກເທື່ອ ເຮົາຈະ
ຮັກສາສັນຍາສັນຕິພາບຂອງເຮົາໄວ້ຕລອດໄປ” ພຣະຜູ້ເປັນເຈົ້າອົງຊົງເມດຕາສົງສານເຈົ້າຊົງກ່າວດັ່ງນີ້ແຫລະ

**ເຢຣູຊາເລັມໃໝ່**

11 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ໂອ ນະຄອນທີ່ລຳບາກ ແລະຂາດການຊ່ອຍເຫລືອເອີຍ ບໍ່ມີໃຜເລົ້າໂລມໃຈເຈົ້າ
ເຮົາຈະວາງຮາກຖານຂອງເຈົ້າໄວ້ດ້ວຍເພັດ

12 ເຮົາຈະສ້າງຫໍຄອຍຂອງເຈົ້າດ້ວຍທັບທິມ ສ້າງປະຕູດ້ວຍຫີນທີ່ມີສີແດງເຫມືອນໄຟ ແລະສ້າງກຳແພງອ້ອມ
ເຈົ້າໄວ້ດ້ວຍເພັດນິນຈິນດາ

13 ເຮົາເອງຈະສອນປະຊາຊົນຂອງເຈົ້າ ຈະໃຫ້ເຂົາຈະເຣີນຮຸ່ງເຮືອງແລະມີສັນຕິສຸກ

14 ຄວາມຍຸດຕິທັມ ແລະຄວາມຖືກຕ້ອງຈະທຳໃຫ້ເຈົ້າໝັ້ນຄົງຖາວອນ ຈະພົ້ນຈາກການກົດຂີ່ ແລະຄວາມຢ້ານ

15 ຖ້າຜູ້ໃດໂຈມຕີເຈົ້າ ເຂົາກໍທຳໄປໂດຍຂາດຄວາມເຫັນຊອບຈາກເຮົາ ຜູ້ໃດຕໍ່ສູ້ຂັດຂວາງເຈົ້າຈະເຖິງຄວາມຈິບ
ຫາຍ

16 ເຮົາໄດ້ສ້າງຊ່າງເຫລັກ ຄືຜູ້ເປົ່າໄຟແລະສ້າງອາວຸດ ເຮົາໄດ້ສ້າງທະຫານຄືຜູ້ໃຊ້ອາວຸດທຳລາຍດ້ວຍ

17 ແຕ່ອາວຸດທີ່ສ້າງຂຶ້ນຈະບໍ່ສາມາດທຳລາຍເຈົ້າ ເຈົ້າຈະຕອບໂຕ້ທຸກຄົນທີ່ຟ້ອງຮ້ອງເຈົ້າ ເຮົາຈະຄຸ້ມຄອງຂ້າໃຊ້
ຂອງເຮົາ ແລະຈະໃຫ້ເຂົາມີຄວາມອຸດົມສົມບູນ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ແຫລະ

## 55 ພຣະເຈົ້າຊົງປະທານພຣະກະຣຸນາທິຄຸນ

An Invitation to Abundant Life

1 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ທຸກຄົນທີ່ຢາກນ້ຳ ເຊີນມາເຖີດ ນ້ຳມີຢູ່ທີ່ນີ້ ຜູ້ທີ່ບໍ່ມີເງິນໃຊ້ ເຊີນມາເທີນ ມາຊື້ເຂົ້າ
ກິນສາ ເຊີນມາຊື້ເຫລົ້າອະງຸ່ນແລະນ້ຳນົມກິນ ເຈົ້າບໍ່ຕ້ອງເສັຽຄ່າຫຍັງດອກ

2 ເປັນຫຍັງເຈົ້າຈຶ່ງຈ່າຍເງິນຊື້ສິ່ງທີ່ບໍ່ແມ່ນອາຫານ ເປັນຫຍັງເຈົ້າຈຶ່ງຈ່າຍໄປ ແຕ່ຍັງຫິວຢາກຢູ່ ຈົ່ງຟັງເຮົາ ແລະ
ທຳຕາມເຮົາບອກເທີນ ແລ້ວເຈົ້າຈະມ່ວນຊື່ນແລະມີອາຫານກິນດີທີ່ສຸດ

3 ໄພ່ພົນຂອງເຮົາເອີຍ ຈົ່ງຟັງແລະມາຫາເຮົາເທີນ ຈົ່ງມາຫາເຮົາ ແລ້ວເຈົ້າຈະມີຊີວິດ ເຮົາຈະໃຫ້ຄຳໝັ້ນສັນຍາ
ອັນຕລອດໄປແກ່ເຈົ້າ ຈະອວຍພອນເຈົ້າດັ່ງທີ່ເຮົາສັນຍາແກ່ດາວິດ

4 ເຮົາຈະທຳໃຫ້ເຂົາໄດ້ເປັນຜູ້ນຳ ແລະຜູ້ບັນຊາການທະຫານຂອງຊົນຊາດທັງຫລາຍ ຈະໃຫ້ເຂົາເປັນຜູ້ສະແດງ
ຄວາມຍິ່ງໃຫຍ່ຂອງເຮົາແກ່ຊົນຊາດທັງຫລາຍ

5 ເຈົ້າຈະຮຽກຮ້ອງຊາວຕ່າງປະເທດ ຊຶ່ງໃນເວລານຶ່ງພວກເຂົາບໍ່ຮູ້ຈັກເຈົ້າ ແຕ່ບັດນີ້ພວກເຂົາຈະແລ່ນມາຮ່ວມ
ກັບເຈົ້າ ເຮົາ ພຣະຜູ້ເປັນເຈົ້າຂອງເຈົ້າ ຄືພຣະເຈົ້າບໍຣິສຸດຂອງອິສຣາເອນ ຈະທຳໃຫ້ສິ່ງທັງໝົດນີ້ເກີດຂຶ້ນ
ເຮົາຈະໃຫ້ກຽດແລະຄວາມສະງ່າຣາສີແກ່ເຈົ້າ”

6 ຈົ່ງຄືນມາຫາພຣະຜູ້ເປັນເຈົ້າແລະອ້ອນວອນຕໍ່ພຣະອົງ ເພາະວ່າພຣະອົງຊົງຢູ່ໃກ້ໆ

7 ຊົງໃຫ້ຄົນອະທັມຫນີຈາກທາງດຳເນີນຊີວິດຂອງເຂົາ ແລະຊົງປ່ຽນແນວທາງຄິດຂອງເຂົາ ຊົງໃຫ້ເຂົາກັບຄືນ
ມາຫາພຣະຜູ້ເປັນເຈົ້າຂອງເຮົາ ພຣະອົງຊົງເຕັມໄປດ້ວຍຄວາມເມດຕາແລະຊົງໃຫ້ອະພັຍໄວ

8 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຄວາມຄິດຂອງເຮົາບໍ່ເຫມືອນຂອງພວກເຈົ້າ ທາງຂອງເຮົາແຕກຕ່າງທາງຂອງ
ເຈົ້າ

9 ຟ້າສວັນຢູ່ສູງກວ່າໂລກສັນໃດ ທາງແລະແນວຄິດຂອງເຮົາກໍສູງກວ່າຂອງເຈົ້າສັນນັ້ນ

10 ຖ້ອຍຄຳຂອງເຮົາເປັນເຫມືອນຫິມມະແລະນ້ຳຝົນ ຊຶ່ງລົງມາຈາກຟ້າແລະທົດໂລກໃຫ້ຊຸ່ມຊື່ນ ແລ້ວກັບຄືນຂຶ້ນ
ສູ່ຟ້າສວັນ ມັນສາມາດທຳໃຫ້ເຄື່ອງປູກຈະເຣີນງອກງາມຂຶ້ນ ມັນສາມາດໃຫ້ເມັດສຳລັບຫວ່ານ ແລໃຫ້ອາ
ຫານສຳລັບກິນ

11 ຖ້ອຍຄຳທີ່ເຮົາເວົ້າໄປນັ້ນ ຈະທຳໃຫ້ສຳເຣັດຜົນຕາມທີ່ເຮົາວາງໄວ້ ຈະທຳໃຫ້ທຸກໆສິ່ງຕາມທີ່ເຮົາໃຊ້ໄປທຳ
ແລະກັບຄືນມາຫາເຮົາ
12 ເຈົ້າຈະອອກໄປດ້ວຍຄວາມມ່ວນຊື່ນ ຈະຖືກນຳອອກຈາກເມືອງໄປດ້ວຍສວັດດີພາບ ພູໃຫຍ່ແລະນ້ອຍທັງ
ຫລາຍຈະເປັ່ງສຽງຮ້ອງເພງ ກົກໄມ້ທັງຫລາຍກໍຈະຮ້ອງດ້ວຍຄວາມມ່ວນຊື່ນ
13 ກົກໄມ້ສົນຈະງອກງາມຂຶ້ນມາແທນກົກມີໜາມ ກົກໄມ້ຫອມກໍຈະເກີດຂຶ້ນໃນບ່ອນທີ່ມີໜາມ ການນີ້ຈະເປັນ
ໝາຍສຳຄັນຕລອດໄປເປັນນິດ ເປັນອະນຸສອນເຕືອນວ່າເຮົາພຣະຜູ້ເປັນເຈົ້າໄດ້ກະທຳດັ່ງນີ້ແຫລະ

## 56 ຣາງວັນໃນການຮັກສາຄຳໝັ້ນສັນຍາຂອງພຣະເຈົ້າ

The Covenant Extended to All Who Obey

1 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, "ຈົ່ງຮັກສາຄວາມຍຸດຕິທັມໄວ້ ແລະກະທຳຄວາມຊອບທັມ ເພາະຄວາມລອດ
ຂອງເຮົາໃກ້ຈະມາ ແລະການຊ່ອຍກູ້ຂອງເຮົາຈະເຜີຍອອກ
2 ຄວາມຍ່ອມມີແກ່ຜູ້ກະທຳເຊັ່ນນີ້ ແລະແກ່ບຸດຂອງມະນຸດຜູ້ຍຶດໄວ້ໝັ້ນ ຜູ້ຮັກສາວັນສະບາໂຕ ບໍ່ຢຽບຫຍາມ
ວັນນັ້ນ ແລະລະວັງມືຂອງເຂົາຈາກການກະທຳຊົ່ວຮ້າຍໃດໆ"
3 ຢ່າໃຫ້ຄົນຕ່າງຊາດຜູ້ເຂົ້າຮ່ວມຖືພຣະຜູ້ເປັນເຈົ້າກ່າວວ່າ, "ພຣະຜູ້ເປັນເຈົ້າຈະຊົງແຍກຂ້ອຍອອກຈາກຊົນ
ຊາດຂອງພຣະອົງ" ແລະຢ່າໃຫ້ຊາຍຕອນຄົນນຶ່ງເວົ້າວ່າ "ເບິ່ງແມ, ຂ້ອຍເປັນຕົ້ນໄມ້ແຫ້ງ"
4 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ເຣື່ອງຂັນທີ(ຜູ້ຊາຍທີ່ຕອນ) ທັງຫລາຍຜູ້ຮັກສາວັນສະບາໂຕຂອງເຮົາ ຜູ້
ເລືອກບັນດາສິ່ງທີ່ພໍໃຈເຮົາ ແລະຮັກສາຄຳໝັ້ນສັນຍາຂອງເຮົາໄວ້ໝັ້ນ
5 ພາຍໃນວິຫານຂອງເຮົາແລະພາຍໃນກຳແພງຂອງເຮົາ ເຮົາຈະໃຫ້ອະນຸສາວະຣີແລະຊື່ແກ່ເຂົາເຫລົ່ານັ້ນ ທີ່
ດີກວ່າບຸດຊາຍແລະບຸດຍິງ ເຮົາຈະໃຫ້ຊື່ນິຣັນແກ່ເຂົາທັງຫລາຍຊຶ່ງຈະບໍ່ຕັດອອກເລີຍ
6 "ແລະບັນດາຊົນຕ່າງຊາດຜູ້ເຂົ້າຮ່ວມຖືພຣະຜູ້ເປັນເຈົ້າ ປົນນິບັດພຣະອົງ ແລະຮັກພຣະນາມຂອງພຣະຜູ້ເປັນ
ເຈົ້າ ແລະເປັນຜູ້ຮັບໃຊ້ຂອງພຣະອົງ ທຸກຄົນຜູ້ຮັກສາວັນສະບາໂຕ ແລະບໍ່ໄດ້ຢຽບຫຍາມ ແລະຮັກສາຄຳ
ໝັ້ນສັນຍາຂອງເຮົາໄວ້ໝັ້ນ
7 ຄົນເຫລົ່ານີ້ເຮົາຈະນຳມາຍັງພູບໍຣິສຸດຂອງເຮົາ ແລະກະທຳໃຫ້ເຂົາຊື່ນບານຢູ່ໃນວິຫານຂອງເຮົາສຳລັບ
ອ້ອນວອນ ເຄື່ອງເຜົາບູຊາຂອງເຂົາແລະເຄື່ອງສັກກາຣະບູຊາຂອງເຂົາຈະເປັນທີ່ໂປດປານເທິງແທ່ນບູຊາຂອງ
ເຮົາ ເພາະວິຫານຂອງເຮົາເຂົາຈະເອີ້ນວ່າເປັນວິຫານແຫ່ງການໄຫວ້ວອນສຳລັບບັນດາຊົນຊາດທັງຫລາຍ
8 ພຣະຜູ້ເປັນເຈົ້າ ຜູ້ຊົງຮວບຮວມອິສຣາເອນທີ່ກະຈັດກະຈາຍກ່າວວ່າ ເຮົາຈະຮວບຮວມຄົນອື່ນມາໄວ້ກັບເຂົາ
ນອກຈາກຄົນເຫລົ່ານັ້ນທີ່ໄດ້ຮວບຮວມໄວ້ແລ້ວ"

The Corruption of Israel's Rulers

9 ເຈົ້າ ບັນດາສັດປ່າທີ່ງ ມາກິນເດີ ທັງເຈົ້າບັນດາສັດໃນປ່າ
10 ຍາມຂອງເຂົາຕາບອດ ເຂົາທັງປວງໄຮ້ຄວາມຮູ້ ເຂົາທັງປວງເປັນໝາກືກ ເຂົາເຫົ່າບໍ່ໄດ້ ໄດ້ແຕ່ຝັນ ໄດ້
ແຕ່ນອນ ຮັກແຕ່ຫລັບ
11 ໝາເຫລົ່ານັ້ນຫິວກະຫາຍ ກິນບໍ່ຮູ້ຈັກອີ່ມ ຜູ້ລ້ຽງແກະກໍບໍ່ມີຄວາມເຂົ້າໃຈເສັຽດ້ວຍ ເຂົາທຸກຄົນກັບໄປຕາມ
ທາງເຂົາເອງ ຕ່າງກໍຫາກຳໄລໃສ່ຕົນເອງ ບໍ່ເວັ້ນຈັກຄົນ
12 ເຂົາທັງຫລາຍວ່າ "ມາເຖີດ ໃຫ້ເຮົາເອົາເຫລົ້າອະງຸ່ນ ໃຫ້ເຮົາເຕີມເຫລົ້າໃຫ້ເຕັມຕົວເຮົາ ແລະມື້ອື່ນກໍຈະ
ເໝືອນວັນນີ້ໃຫຍ່ໂຕເກີນຂນາດ"

### Israel’s Futile Idolatry

1 ຄົນຊອບທັມພິນາດ ແລະບໍ່ມີໃຜເອົາໃຈໃສ່ ຄົນທີ່ມີໃຈເມດຕາຖືກເອົາໄປເສັຽ ບໍ່ມີໃຜເຂົ້າໃຈ ເພາະຄົນຊອບ
ທັມຖືກເອົາໄປເສັຽຈາກຄວາມທຸກຍາກລຳບາກ
2 ເຂົາເຂົ້າໄປໃນສັນຕິພາບ ຜູ້ດຳເນີນໃນຄວາມທ່ຽງທັມຂອງເຂົາ ກໍພັກຢູ່ເທິງບ່ອນນອນຂອງເຂົາ
3 ແຕ່ເຈົ້າທັງຫລາຍ ບັນດາລູກຊາຍຂອງແມ່ມົດ ລູກຫລານຂອງຄົນລ່ວງປະເວນີ ແລະຍິງໂສເພນີ ຈົ່ງເຂົ້າມາໃກ້
ທີ່ນີ້
4 ເຈົ້າທັງຫລາຍເວົ້າເຍີ້ຍຫຍັນໃຜ ເຈົ້າອ້າປາກເຍີ້ຍ ແລບລີ້ນຫລອກຜູ້ໃດ ເຈົ້າເປັນລູກທີ່ທໍຣະຍົດ ເປັນລູກທີ່
ຫລອກລວງບໍ່ແມ່ນຫລື
5 ຄືເຈົ້າຜູ້ຮ້ອນຮົນດ້ວຍຣາຄະຖ້າມກາງຕົ້ນກໍ່ ພາຍໃຕ້ກົກໄມ້ຂຽວທຸກກົກ ຜູ້ຂ້າລູກຂອງເຈົ້າໃນຮ່ອມພູໃຕ້ຫລືບ
ຫີນ
6 ສວນຂອງເຈົ້າຢູ່ຖ້າມກາງຫີນກ້ຽງແຫ່ງຮ່ອມພູ ມັນເປັນສ່ວນຂອງເຈົ້າ ເຈົ້າໄດ້ເທເຄື່ອງດື່ມບູຊາ ແລະຖວາຍ
ທັນຍາບູຊາໃຫ້ແກ່ມັນ ເຮົາຈະລະງັບໂທສະຂອງເຮົາໃນເຣື່ອງນີ້ຫລື
7 ເທິງພູສູງ ເຈົ້າໄດ້ຕັ້ງບ່ອນນອນຂອງເຈົ້າໄວ້ ແລະທີ່ນັ້ນເຈົ້າໄປຖວາຍເຄື່ອງສັກກາຣະບູຊາ
8 ເຈົ້າໄດ້ຕັ້ງສັນຍາລັກຂອງເຈົ້າໄວ້ຫລັງປະຕູແລະເສົາປະຕູ ເພາະປະຮ້າງແລ້ວ ເຈົ້າຈຶ່ງເປີດຜ້າຄຸມບ່ອນນອນ
ຂອງເຈົ້າ ເຈົ້າຂຶ້ນໄປເທິງນັ້ນ ເຈົາທຳໃຫ້ມັນກວ້າງ ແລະເຈົ້າຕົກລົງກັບມັນເພື່ອເຈົ້າເອງ ເຈົ້າຮັກບ່ອນນອນ
ຂອງມັນ ແລະເຈົ້າໄດ້ມອງເບິ່ງການເປືອຍ
9 ເຈົ້າເດີນທາງໄປຫາພຣະໂມເລກພ້ອມກັບນ້ຳມັນ ແລະທະວີນ້ຳຫອມຂອງເຈົ້າ ເຈົ້າໄດ້ສົ່ງທູດຂອງເຈົ້າໄປໄກ
ໃຫ້ລົງໄປຈົນເຖິງແດນຄົນຕາຍ
10 ເຈົ້າອິດເມື່ອຍເພາະລະຍະທາງໄກຂອງເຈົ້າ ແຕ່ເຈົ້າບໍ່ໄດ້ເວົ້າວ່າ “ຫມົດຫວັງ” ເຈົ້າປະສົບການຟື້ນຟູກຳລັງ
ຂອງເຈົ້າ ແລະເຈົ້າຈຶ່ງບໍ່ໄດ້ອ່ອນເພຼັຽໄປ
11 ເຈົ້າຫວາດກົວແລະຢ້ານໃຜ ເຈົ້າຈຶ່ງໄດ້ມຸສາຢູ່ນັ້ນເອງ ແລະບໍ່ນຶກເຖິງເຮົາ ແລະບໍ່ເອົາໃຈໃສ່ເຮົາຢ່າງຫມົດສິ້ນ
ເຮົາບໍ່ໄດ້ລະງັບປາກຢູ່ເປັນເວລານານແລ້ວດອກຫລື ຢ່າງນັ້ນເຈົ້າຈຶ່ງບໍ່ຢຳເກງເຮົາ
12 ເຮົາຈະບອກເຖິງຄວາມຊອບທັມແລະການກະທຳຂອງເຈົ້າ ແຕ່ມັນຈະບໍ່ຊ່ອຍເຈົ້າ
13 ເມື່ອເຈົ້າຮ້ອງອອກມາກໍໃຫ້ສິ່ງທີ່ເຈົ້າສະສົມໄວ້ຊ່ອຍກູ້ເຈົ້າ ລົມຈະພັດມັນໄປເສັຽ ພຽງລົມຫາຍໃຈຈະຫອບມັນ
ອອກໄປ ແຕ່ຜູ້ລີ້ພັຍຢູ່ໃນເຮົາຈະໄດ້ແຜ່ນດິນນັ້ນເປັນກຳມະສິດ ແລະຈະໄດ້ພູບໍຣິສຸດຂອງເຮົາເປັນມໍຣະດົກ

### A Promise of Help and Healing

14 ແລະຈະມີສຽງວ່າ “ໂຍງດິນ ໂຍງດິນຂຶ້ນ ແລະຈົ່ງຕຽມທາງ ຮື້ຖອນສິ່ງທີ່ຂັດຂວາງເສັຽຈາກທາງຂອງຊົນຊາດ
ຂອງເຮົາ”
15 ອົງຜູ້ສູງເດັ່ນ ຄືຜູ້ຢູ່ໃນນິຣັນການ ຜູ້ຊົງພຣະນາມວ່າບໍຣິສຸດ ກ່າວດັ່ງນີ້ວ່າ “ເຮົາຢູ່ໃນບ່ອນທີ່ສູງແລະບໍຣິສຸດ
ແລະຢູ່ກັບຜູ້ທີ່ມີຈິດໃຈສຳນຶກຜິດແລະຖ່ອມ ເພື່ອຈະຮື້ຟື້ນຈິດໃຈຂອງຜູ້ໃຈຖ່ອມ ແລະຮື້ຟື້ນໃຈຂອງຜູ້ສຳນຶກ
ຜິດ
16 ເພາະເຮົາຈະບໍ່ຕໍ່ສູ້ແຍ້ງຢູ່ເປັນນິດ ຫລືໂກດຢູ່ສເມີ ເພາະຈິດວິນຍານອອກມາຈາກເຮົາ ແລະເຮົາໄດ້ສ້າງລົມ
ຫາຍໃຈ
17 ເຮົາໂກດເພາະຄວາມບາບຜິດແຫ່ງຄວາມໂລບຂອງເຂົາ ເຮົາຕີເຂົາ ເຮົາລີ້ຊ່ອນຕົວແລະໂກດ ແຕ່ເຂົາຍັງຫັນ
ກັບເດີນຕາມຊອບໃຈຂອງເຂົາຢູ່
18 ເຮົາໄດ້ເຫັນວິທີການຂອງເຂົາແລ້ວ ແຕ່ເຮົາຈະປິ່ນປົວເຂົາໃຫ້ຫາຍ ເຮົາຈະນຳເຂົາ ແລະສນອງເຂົາກັບຜູ້ໄວ້
ທຸກໃຫ້ເຂົາດ້ວຍການເລົ້າໂລມ

19 ພຣະຜູ້ເປັນເຈົ້າກ່າວວ່າ ສັນຕິພາບ ສັນຕິພາບແກ່ຄົນໄກແລະຄົນໃກ້ ແລະເຮົາຈະປິ່ນປົວເຂົາໃຫ້ຫາຍ
20 ແຕ່ຄົນອະທັມນັ້ນເຫມືອນທະເລທີ່ປັ່ນປ່ວນ ເພາະມັນບໍ່ເຊົາພັດຕີຕາຝັ່ງຈັກເທື່ອ ແລະນ້ຳຂອງມັນກໍກວນຕົມ
ແລະນຳເອົາຂອງເປື້ອນເປິມາດ້ວຍ
21 ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າກ່າວວ່າ "ບໍ່ມີສັນຕິສຸກ ແກ່ຄົນອະທັມ"

## 58 ການຖືສິນອົດອາຫານທີ່ຖືກຕ້ອງ

False and True Worship

1 ຈົ່ງຮ້ອງດັງໆ ຢ່າອອມໄວ້ ຈົ່ງເປັ່ງສຽງຂອງເຈົ້າເຫມືອນເປົ່າເຂົາສັດ ຈົ່ງແຈ້ງແກ່ຊົນຊາດຂອງເຮົາໃຫ້ຊາບ ເຖິງ
ເຣື່ອງການທໍຣະຍົດຂອງເຂົາ ແກ່ເຊື້ອສາຍຂອງຢາໂຄບ ເຣື່ອງບາບຂອງເຂົາ
2 ແຕ່ຍັງສແວງຫາເຮົາທຸກໆວັນ ແລະປິຕິຍິນດີທີ່ຈະຮູ້ຈັກທາງຂອງເຮົາ ເຫມືອນກັບວ່າເຂົາເປັນປະຊາຊາດທີ່ໄດ້
ທຳຄວາມຊອບທັມ ແລະບໍ່ໄດ້ປະຖິ້ມກົດຫມາຍແຫ່ງພຣະເຈົ້າຂອງເຂົາ ເຂົາກໍຂໍຂໍ້ກົດຫມາຍອັນຊອບທັມຈາກ
ເຮົາ ເຂົາທັງຫລາຍກໍປິຕິຍິນດີທີ່ຈະເຂົ້າມາໃກ້ພຣະເຈົ້າ
3 "ເປັນຫຍັງຂ້າພຣະອົງທັງຫລາຍໄດ້ອົດອາຫານ ແລະພຣະອົງບໍ່ໄດ້ທອດພຣະເນດ ເປັນຫຍັງຂ້າພຣະອົງທັງ
ຫລາຍຖ່ອມຕົວລົງ ແລະພຣະອົງບໍ່ໄດ້ຊົງສົນພຣະທັຍ" ເບິ່ງແມ, ໃນວັນທີ່ເຈົ້າອົດອາຫານ ເຈົ້າທຳຕາມໃຈ
ຂອງເຈົ້າ ແລະບີບບັງຄັບຄົນງານຂອງເຈົ້າທັງຫມົດ
4 ເບິ່ງແມ, ເຈົ້າອົດອາຫານພຽງເພື່ອວິວາດແລະຕໍ່ສູ້ ແລະເພື່ອຕ່ອຍຕີດ້ວຍຫມັດອະທັມ ການອົດອາຫານຢ່າງ
ຂອງເຈົ້າໃນວັນນີ້ ຈະບໍ່ກະທຳໃຫ້ສຽງຂອງເຈົ້າໄດ້ຍິນໄປເຖິງທີ່ສູງ
5 ຢ່າງນີ້ຫລືເປັນການອົດອາຫານທີ່ເຮົາເລືອກ ຄືວັນທີ່ຄົນຂົ່ມຕົວ ການກົ້ມຫົວຂອງເຂົາລົງເຫມືອນອໍ້ນ້ອຍແລະ
ປູຜ້າກະສອບແລະຂີ້ເຖົ່າຮອງໃຕ້ຢ່າງນີ້ຫລື ເຈົ້າຈະຮ້ອງການຢ່າງນີ້ວ່າການອົດອາຫານ ແລະປັນວັນທີ່ພຣະ
ເຈົ້າໂປດປານຢ່າງນັ້ນຫລື
6 "ການອົດອາຫານຢ່າງນີ້ບໍ່ແມ່ນຫລືທີ່ເຮົາຕ້ອງການ ຄືການແກ້ພັນທະຂອງຄວາມອະທັມ ການແກ້ສາຍຮັດ
ແອກ ແລະ ການປ່ອຍໃຫ້ຜູ້ຖືກບີບບັງຄັບເປັນອິສຣະ ແລະການຫັກແອກເສັຽທຸກອັນ
7 ບໍ່ແມ່ນການທີ່ຈະປັນອາຫານຂອງເຈົ້າໃຫ້ກັບຜູ້ຫິວ ແລະນຳຄົນຍາກຈົນບໍ່ມີບ້ານເຂົ້າໃນບ້ານຂອງເຈົ້າ ເມື່ອ
ເຈົ້າເຫັນຄົນເປືອຍກາຍກໍຄຸມກາຍເຂົາໄວ້ ແລະບໍ່ເຊື່ອງຕົວຂອງເຈົ້າຈາກຍາດຂອງເຈົ້າເອງດອກຫລື
8 ແລ້ວຄວາມສວ່າງຈະພຸ່ງອອກມາແກ່ເຈົ້າຢ່າງອະຣຸນ ແລະແຜຂອງເຈົ້າຈະເອັນເນື້ອຂຶ້ນມາຢ່າງໄວໆ ຄວາມ
ຊອບທັມຂອງເຈົ້າຈະເດີນນຳຫນ້າເຈົ້າ ແລະພຣະສງ່າຣາສີຂອງພຣະເຈົ້າຈະລະວັງຫລັງເຈົ້າ
9 ແລ້ວເຈົ້າຈະທູນ ແລະພຣະຜູ້ເປັນເຈົ້າຈະຊົງຕອບ ເຈົ້າຈະຮ້ອງທູນ ແລະພຣະອົງຈະກ່າວວ່າ ເຮົາຢູ່ນີ້ "ຖ້າເຈົ້າ
ຈະເອົາອອກໄປຈາກທ່າມກາງເຈົ້າເສັຽ ຊຶ່ງແອກ ຊຶ່ງການຊີ້ຫນ້າ ແລະຊຶ່ງການເວົ້າອະທັມ
10 ຖ້າເຈົ້າທຸ່ມເທຊີວິດຂອງເຈົ້າແກ່ຄົນຫິວ ແລະໃຫ້ຜູ້ຖືກຂົ່ມໃຈໄດ້ອີ່ມໃຈ ແລ້ວຄວາມສວ່າງຈະໂຜ່ຂຶ້ນແກ່ເຈົ້າ
ໃນຄວາມມືດ ແລະຄວາມມືດທີ່ອ້ອມຮອບເຈົ້ານັ້ນກໍຈະປ່ຽນເປັນແຈ້ງໃນຕອນກາງເວັນ
11 ພຣະຜູ້ເປັນເຈົ້າຈະນຳເຈົ້າຢູ່ເປັນນິດ ແລະໃຫ້ເຈົ້າອີ່ມດ້ວຍຂອງດີ ແລະກະທຳໃຫ້ກະດູກຂອງເຈົ້າແຂງ ແລະ
ເຈົ້າຈະເປັນເຫມືອນສວນທີ່ມີນ້ຳທົດ ເຫມືອນນ້ຳພຸທີ່ນ້ຳຂອງມັນບໍ່ຂາດ
12 ແລະສິ່ງສລັກຫັກພັງໂບຮານຂອງເຈົ້າ ຈະໄດ້ຮັບການສ້າງຂຶ້ນໃຫມ່ ເຈົ້າຈະໄດ້ສ້ອມຮາກຖານຂອງຄົນຫລາຍ
ຊົ່ວອາຍຸມາແລ້ວຂຶ້ນ ເຈົ້າຈະໄດ້ຊື່ວ່າເປັນຜູ້ສ້ອມກຳແພງທີ່ພັງ ຜູ້ສ້ອມແຊມຖນົນໃຫ້ຄືນດີເພື່ອຈະໄດ້ອາສັຍຢູ່
13 "ຖ້າເຈົ້າຢຸດຢຽບຢ່ຳວັນສະບາໂຕ ຄືຈາກການທຳຕາມໃຈຂອງເຈົ້າໃນວັນບໍຣິສຸດຂອງເຮົາ ແລະເອີ້ນສະບາ
ໂຕວ່າ ວັນປິຕິຍິນດີ ແລະເອີ້ນວັນບໍຣິສຸດຂອງພຣະຜູ້ເປັນເຈົ້າວ່າ ວັນມີກຽດ ຖ້າເຈົ້າໃຫ້ກຽດມັນ ບໍ່ໄປຕາມ
ທາງຂອງເຈົ້າເອງ ຫລືທຳຕາມໃຈຂອງເຈົ້າ ຫລືເວົ້າແຕ່ເຣື່ອງໄຮ້ສາຣະ

14 ແລ້ວເຈົ້າຈະໄດ້ຄວາມປິຕິຍິນດີໃນພຣະຜູ້ເປັນເຈົ້າ ແລະເຮົາຈະໄດ້ເຈົ້າຂຶ້ນຂີ່ຢູ່ເທິງບ່ອນສູງຂອງແຜ່ນດິນໂລກ ແລະເຮົາຈະລ້ຽງເຈົ້າດ້ວຍມໍຣະດົກຂອງຢາໂຄບບິດາຂອງເຈົ້າ ເພາະພຣະໂອດຂອງພຣະຜູ້ເປັນເຈົ້າໄດ້ກ່າວແລ້ວ"

## 59 ການສາຣະພາບຄວາມໂຫດຮ້າຍຂອງຊາດ

Injustice and Oppression to Be Punished

1 ເບິ່ງແມ, ພຣະຫັດຂອງພຣະຜູ້ເປັນເຈົ້າບໍ່ໄດ້ສັ້ນລົງ ທີ່ຈະຊ່ອຍໃຫ້ລອດບໍ່ໄດ້ ຫລືພຣະກັນຫນວກ ຊຶ່ງຈະບໍ່ຊົງໄດ້ຍິນ

2 ແຕ່ວ່າຄວາມບາບຊົ່ວຂອງເຈົ້າທັງຫລາຍໄດ້ກະທຳໃຫ້ເກີດການແຍກລະຫວ່າງເຈົ້າກັບພຣະເຈົ້າຂອງເຈົ້າ ແລະບາບຂອງເຈົ້າທັງຫລາຍໄດ້ບັງພຣະພັກຂອງພຣະອົງເສັຽຈາກເຈົ້າ ພຣະອົງຈຶ່ງບໍ່ໄດ້ຍິນ

3 ເພາະມືຂອງເຈົ້າມົນທິນດ້ວຍໂລຫິດ ແລະນິ້ວມືຂອງເຈົ້າດ້ວຍຄວາມບາບຊົ່ວ ຮິມຝີປາກຂອງເຈົ້າໄດ້ເວົ້າຄຳເທັດ ລີ້ນຂອງເຈົ້າຈົ່ມວ່າຄວາມອະທັມ

4 ບໍ່ມີຜູ້ໃດຟ້ອງຢ່າງຍຸດຕິທັມ ບໍ່ມີຜູ້ໃດຂຶ້ນສານຢ່າງຊື່ສັດ ເຂົາທັງຫລາຍວາງໃຈຢູ່ກັບສິ່ງທີ່ບໍ່ເປັນສາຣະ ເຂົາເວົ້າເທັດ ເຂົາຕັ້ງທ້ອງຄວາມຊົ່ວ ແລະກຳເນີດຄວາມຜິດບາບ

5 ເຂົາຟັກໄຂ່ງູພິດ ເຂົາທໍໃຍແມງມຸມ ເຂົາຜູ້ກິນໄຂ່ນັ້ນກໍຕາຍ ເຖິງວ່າໄຂ່ຫນ່ວຍໃດຖືກທຸບ ງູນັ້ນກໍເປັນໂຕຂຶ້ນມາ

6 ໃຍຂອງມັນຈະໃຊ້ເປັນເສື້ອຜ້າບໍ່ໄດ້ ຄົນຈະເອົາສິ່ງທີ່ມັນທຳມາຄຸມຕົວບໍ່ໄດ້ ກິຈການຂອງມັນເປັນການຊົ່ວ ແລະການກະທຳອັນທາຣຸນກໍຢູ່ໃນມືຂອງເຂົາ

7 ຕີນຂອງເຂົາແລ່ນໄປຫາຄວາມຊົ່ວ ແລະເຂົາຟ້າວໄປຫລັ່ງໂລຫິດທີ່ບໍ່ມີຄວາມຜິດໃຫ້ເຖິງຕາຍ ຄວາມຄິດຂອງເຂົາເປັນຄວາມຄິດຊົ່ວ ການລ້າງຜານແລະການທຳລາຍຢູ່ໃນທົນທາງຂອງເຂົາ

8 ເຂົາບໍ່ຮູ້ຈັກທາງແຫ່ງສັນຕິພາບ ບໍ່ມີຄວາມຍຸດຕິທັມໃນວິຖີຂອງເຂົາ ເຂົາໄດ້ທຳໃຫ້ຖນົນຂອງເຂົາຄົດໂຄ້ງ ຜູ້ໃດທີ່ເດີນໃນນັ້ນບໍ່ຮູ້ຈັກສັນຕິພາບ

9 ເຫດສັນນັ້ນຄວາມຍຸດຕິທັມຈຶ່ງຢູ່ຫ່າງຈາກເຮົາທັງຫລາຍ ແລະຄວາມຊອບທັມຕາມເຮົາບໍ່ທັນ ເຮົາທັງຫລາຍມອງຫາຄວາມສວ່າງ ແລະເບິ່ງເຖີດຄວາມມືດຫາຄວາມຄວາມສຸກໃສ ແຕ່ເຮົາດຳເນີນໃນຄວາມມືດ

10 ເຮົາທັງຫລາຍຄຳຫາກຳແພງເຫມືອນຄົນຕາບອດ ເຮົາຄຳຫາເຫມືອນຄົນບໍ່ມີຫນ່ວຍຕາ ເຮົາສະດຸດໃນເວລາທ່ຽງເຫມືອນກັບວ່າເດີນໄປໃນຕອນກາງຄືນ ຖ້າມກາງຄົນທີ່ມີກຳລັງເຕັມທີ່ ເຮົາເຫມືອນຄົນຕາຍ

11 ເຮົາທຸກຄົນຄາງເຫມືອນຫມີ ເຮົາຄ່ຳຄວນດ້ວຍຄວາມໂສກເສົ້າເຫມືອນນົກເຂົາ ແລະຫລຽວຫາຄວາມຍຸດຕິທັມແຕ່ບໍ່ມີເລີຍ ຫາຄວາມລອດແຕ່ກໍຢູ່ໄກຈາກເຮົາ

12 ເພາະການທໍຣະຍົດຂອງຂ້າພຣະອົງທັງຫລາຍທະວີຂຶ້ນຕໍ່ພຣະອົງ ແລະບາບຂອງຂ້າພຣະອົງກໍປັກປຳຂ້າພຣະອົງ ເພາະການທໍຣະຍົດຂອງຂ້າພຣະອົງຢູ່ກັບຂ້າພຣະອົງ ສ່ວນຄວາມບາບຊົ່ວຂອງຂ້າພຣະອົງ ຂ້າພຣະອົງກໍຮູ້ຈັກ

13 ຄືການທໍຣະຍົດ ການປະຕິເສດພຣະຜູ້ເປັນເຈົ້າ ການຫັນໄປຈາກການຕິດຕາມພຣະຜູ້ເປັນເຈົ້າຂອງເຮົາ ການເວົ້າທີ່ເປັນການບີບບັງຄັບ ແລະການກະບົດ ການກໍ່ແລະການກ່າວຄຳເທັດຈາກໃຈ

14 ຄວາມຍຸດຕິທັມກໍຫັນກັບ ແລະຄວາມຊອບທັມກໍຢືນຢູ່ແຕ່ໄກ ເພາະຄວາມຈິງລົ້ມເສັຽແລ້ວທີ່ສີ່ແຍກກາງເມືອງ

15 ສັດຈະ ຂາດຢູ່ ແລະຜູ້ໃດທີ່ພາກຈາກຄວາມຊົ່ວກໍທຳຕົວໃຫ້ເປັນເຫຍື່ອ ພຣະຜູ້ເປັນເຈົ້າຊົງເຫັນ ແລ້ວບໍ່ເປັນທີ່ພໍພຣະທັຍ ພຣະອົງ ທີ່ບໍ່ມີຄວາມຍຸດຕິທັມ

16 ພຣະອົງຊົງເຫັນວ່າບໍ່ມີຄົນໃດເລີຍ ຊົງປລາດພຣະທັຍວ່າບໍ່ມີໃຜອ້ອນວອນເພື່ອ ແລ້ວພຣະກອນຂອງພຣະອົງເອງກໍນຳຄວາມລອດມາ ແລະຄວາມຊອບທັມຂອງພຣະອົງຊູພຣະອົງໄວ້

17 ພຣະອົງຊົງສວມຄວາມຊອບທັມດັ່ງສວມເສື້ອຫຸ້ມເກາະ ແລະພຣະມາລາແຫ່ງຄວາມລອດຢູ່ເຫນືອພຣະສຽນຂອງພຣະອົງ ພຣະອົງຊົງສວມສລອງພຣະອົງແຫ່ງການແກ້ແຄ້ນເປັນຂອງຄຸມພຣະກາຍ ແລະເອົາຄວາມກະຕືຣືລົ້ນຫົ່ມພຣະອົງ

18 ພຣະອົງຈະຊົງຊໍາຣະໃຫ້ຕາມການກະທໍາຂອງເຂົາ ຄືພຣະພິໂຣດແກ່ປໍຣະປັກຂອງພຣະອົງ ແລະສິ່ງສນອງແກ່ສັດຕຣູຂອງພຣະອົງ ພຣະອົງຈະຊົງມອບການສເນີແກ່ແຜ່ນດິນຊາຍທະເລ

19 ເຂົາຈຶ່ງຢໍາເກງພຣະນາມພຣະຜູ້ເປັນເຈົ້າຈາກຕາເວັນຕົກ ແລະພຣະກຽດຂອງພຣະອົງຈາກທີ່ຕາເວັນຂຶ້ນເພາະພຣະອົງຈະສະເດັດມາຢ່າງແມ່ນໍ້າໄຫລເຊາະ

20 ພຣະຜູ້ເປັນເຈົ້າກ່າວວ່າ "ແລະພຣະອົງຈະສະເດັດມາຍັງຊີໂອນເປັນພຣະຜູ້ໄຖ່ ມາຍັງບັນດາຜູ້ຢູ່ໃນຢາໂຄບຜູ້ຫັນຈາກການທໍຣະຍົດ"

21 ພຣະຜູ້ເປັນເຈົ້າກ່າວວ່າ, "ຝ່າຍເຮົາ ນີ້ເປັນຄໍາຫມັ້ນສັນຍາຂອງເຮົາກັບເຂົາທັງຫລາຍ ຄືວິນຍານຂອງເຮົາຊຶ່ງຢູ່ເຫນືອເຈົ້າແລະຄໍາຂອງເຮົາຊຶ່ງເຮົາໃສ່ໄວ້ໃນປາກຂອງເຈົ້າຈະບໍ່ພາກໄປຈາກປາກຂອງເຈົ້າ ຫລືຈາກປາກລູກຂອງເຈົ້າ ຫລືຈາກປາກຂອງລູກຂອງລູກຂອງເຈົ້າ ຕັ້ງແຕ່ເວລານີ້ໄປຈົນກາລະນິຣັນ" ພຣະຜູ້ເປັນເຈົ້າກ່າວດັ່ງນີ້

## 60 ຄວາມສະງ່າຣາສີຂອງເຢຣູຊາເລັມໃນອະນາຄົດ

The Ingathering of the Dispersed

1 ຈົ່ງລຸກຂຶ້ນສ່ອງແສງເຫມືອນຕາເວັນ ຄວາມສະງ່າຣາສີຂອງພຣະຜູ້ເປັນເຈົ້າຈະສ່ອງແສງໃນເຈົ້າ

2 ຄວາມມືດຈະປົກຄຸມຊົນຊາດອື່ນ ແຕ່ແສງສວ່າງຂອງພຣະຜູ້ເປັນເຈົ້າຈະສ່ອງແສງໃນເຈົ້າ ຄວາມສະງ່າຣາສີຂອງພຣະຜູ້ເປັນເຈົ້າຈະຢູ່ນໍາເຈົ້າ

3 ຊົນຊາດທັງຫລາຍຈະຖືກນໍາມາຍັງແສງສວ່າງຂອງເຈົ້າ ແລະກະສັດທັງຫລາຍຈະຖືກນໍາມາຍັງຄວາມແຈ້ງໃນວັນໃຫມ່ຂອງເຈົ້າ

4 ຈົ່ງເບິ່ງຮອບຕົວເຈົ້າ ແລະເບິ່ງສິ່ງທີ່ຈະເກີດຂຶ້ນ ປະຊາຊົນຂອງເຈົ້າຈະໂຮມກັນມາຍັງບ້ານ ບຸດຊາຍທັງຫລາຍຂອງເຈົ້າຈະມາຈາກທາງໄກ ບຸດສາວທັງຫລາຍຂອງເຈົ້າຈະຖືກອຸ້ມມາເຫມືອນເດັກນ້ອຍ

5 ເຈົ້າຈະເຫັນສິ່ງນີ້ແລະມີຄວາມສຸກໃຈ ໃຈຂອງເຈົ້າຈະສັ່ນດ້ວຍຄວາມຕື່ນເຕັ້ນ ຊັບສົມບັດຂອງຊາດທັງຫລາຍຈະຖືກນໍາມາໃຫ້ເຈົ້າ ຊັບທັງຫລາຍຈາກທະເລຟາກນັ້ນຈະມາຍັງເຈົ້າ

6 ບັນດາຂະບວນອູດຈະມາຈາກມາດີອານແລະເອຟາ ມັນຈະບັນທຸກຄໍາແລະເຄື່ອງຫອມມາຈາກເຊບາ ປະຊາຊາດທັງຫລາຍຈະບອກຂ່າວດີກ່ຽວກັບກິຈການຂອງພຣະເຈົ້າ

7 ຝູງແກະທັງຫມົດຈາກເກດາແລະຈາກເນບາໂຍດຈະມາຫາເຈົ້າເພື່ອເປັນເຄື່ອງບູຊາ ແລະຈະຖືກຖວາຍໄວ້ເທິງແທ່ນ ເພື່ອໃຫ້ພຣະຜູ້ເປັນເຈົ້າຊົງພໍພຣະທັຍ ພຣະຜູ້ເປັນເຈົ້າຈະທໍາໃຫ້ພຣະວິຫານຂອງພຣະອົງຈະເຣີນຮຸ່ງເຮືອງກວ່າແຕ່ກ່ອນ

8 ສິ່ງເຫລົ່ານີ້ແມ່ນຫຍັງຈຶ່ງບິນມາເຫມືອນເມກ ຫມືອນນົກກາງແກກັບຄືນຮັງຂອງມັນ

9 ພວກມັນເປັນເຮືອທີ່ມາຈາກແດນໄກ ມັນຂົນເອົາໄພ່ພົນຂອງພຣະເຈົ້າໄປຍັງບ້ານ ພ້ອມດ້ວຍເງິນຄໍາເພື່ອເປັນພຣະກຽດແດ່ພຣະນາມຂອງພຣະຜູ້ເປັນເຈົ້າ ຫລືພຣະເຈົ້າບໍຣິສຸດຂອງອິສຣາເອນ ຜູ້ຊົງທໍາໃຫ້ໄພ່ພົນຂອງພຣະອົງຈະເຣີນຮຸ່ງເຮືອ

10 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຊາວເຢຣູຊາເລັມວ່າ, "ຄົນຕ່າງດ້າວຈະສ້າງກໍາແພງຂອງເຈົ້າຂຶ້ນ ກະສັດຂອງພວກເຂົາຈະຮັບໃຊ້ເຈົ້າ ເຮົາໄດ້ລົງໂທດເຈົ້າດ້ວຍຄວາມໂກດຂອງເຮົາ ແຕ່ເຮົາຈະສໍາແດງຄວາມເມດຕາປານີຕໍ່ເຈົ້າ

11 ປະຕູເມືອງຂອງເຈົ້າຈະໄຂໄວ້ທັງກາງເວັນແລະກາງຄືນ ເພື່ອກະສັດຂອງຊົນຊາດທັງຫລາຍຈະນໍາຊັບສົມບັດມາໃຫ້ເຈົ້າ

12 ແຕ່ບັນດາຊົນຊາດທີ່ບໍ່ຮັບໃຊ້ເຈົ້າຈະພິນາດຈິບຫາຍຫມົດ

13 ເຈົ້າຈະຖືກສ້າງຂຶ້ນດ້ວຍໄມ້ສັກຢ່າງດີທີ່ສຸດ ຈາກປ່າເລບານອນ ເພື່ອສ້າງພຣະວິຫານຂອງເຮົາຂຶ້ນໃຫມ່ໃຫ້ມີຄວາມງົດງາມ ແລະເພື່ອໃຫ້ນະຄອນຂອງເຮົາມີສະງ່າຣາສີ

14 ພວກບຸດຊາຍຂອງຜູ້ທີ່ກົດຂີ່ເຈົ້າຈະມາ ພວກເຂົາຈະກົ້ມລົງສະແດງຄວາມໂຄຣົບເຈົ້າ ຄົນທັງຫລາຍທີ່ຄັ້ງນຶ່ງເຄີຍຫມິ່ນປມາດເຈົ້າຈະຂາບລົງທີ່ຕີນຂອງເຈົ້າ ພວກເຂົາຈະເອີ້ນເຈົ້າວ່າ “ພຣະນະຄອນຂອງພຣະຜູ້ເປັນເຈົ້າ” ວ່າ “ຊີໂອນນະຄອນແຫ່ງພຣະເຈົ້າບໍຣິສຸດຂອງອິສຣາເອນ”

15 ເຈົ້າຈະບໍ່ຖືກປະຖິ້ມແລະເປັນທີ່ກຽດຊັງອີກຕໍ່ໄປ ບໍ່ເປັນນະຄອນຮ້າງເປົ່າແລະເສົ້າຫມອງ ເຮົາຈະທຳໃຫ້ເຈົ້າຍິ່ງໃຫຍ່ແລະສວຍງາມ ເປັນສະຖານທີ່ມ່ວນຊື່ນຕລອດໄປ

16 ບັນດາຊົນຊາດແລະກະສັດທັງຫລາຍຈະລ້ຽງດູເຈົ້າ ຈະເປັນເຫມືອນແມ່ລ້ຽງລູກ ເຈົ້າຈະຮູ້ວ່າເຮົາພຣະຜູ້ເປັນເຈົ້າໄດ້ຊ່ອຍໄຖ່ເຈົ້າໃຫ້ພົ້ນພັຍ ແລະຮູ້ວ່າພຣະເຈົ້າອົງຍິ່ງໃຫຍ່ຂອງອິສຣາເອນໄດ້ຊ່ອຍເຈົ້າເປັນອິສຣະ

17 ເຮົາຈະນຳຄຳມາແທນທອງສຳຣິດມາໃຫ້ເຈົ້າ ນຳເງິນມາແທນເຫລັກ ເຫລັກມາແທນຫີນ ແລະນຳທອງສຳຣິດມາແທນໄມ້ ພວກປົກຄອງຂອງເຈົ້າຈະບໍ່ກົດຂີ່ອີກຕໍ່ໄປ ເຮົາຈະທຳໃຫ້ເຂົາປົກຄອງຢ່າງຍຸດຕິທັມ ແລມີສັນຕິສຸກ

18 ສຽງຂອງຄວາມໂຫດຮ້າຍຈະບໍ່ໄດ້ຍິນອີກຕໍ່ໄປ ປະເທດຂອງເຈົ້າຈະບໍ່ຖືກທຳລາຍອີກຕໍ່ໄປ ເຮົາຈະເປັນເຫມືອນກຳແພງຄຸ້ມຄອງປ້ອງກັນເຈົ້າ ເຈົ້າຈະສັຣເສີນເຮົາຍ້ອນວ່າເຮົາໄດ້ຊ່ອຍເຈົ້າໃຫ້ພົ້ນພັຍ

19 ດວງຕາເວັນຈະບໍ່ເປັນຄວາມສວ່າງຂອງເຈົ້າໃນກາງເວັນອີກ ຫລືດວງເດືອນຈະບໍ່ເປັນຄວາມສວ່າງຂອງເຈົ້າໃນກາງຄືນອີກ ແຕ່ເຮົາພຣະຜູ້ເປັນເຈົ້າຈະເປັນຄວາມສວ່າງຂອງເຈົ້າຕລອດໄປເປັນນິດ ຄວາມສະງ່າຣາສີຂອງເຮົາຈະເປັນຄວາມສວ່າງສ່ອງແສງເທິງເຈົ້າ

20 ວັນໂສກເສົ້າທັງຫລາຍຂອງເຈົ້າຈະສິ້ນສຸດລົງ ເຮົາຄືພຣະຜູ້ເປັນເຈົ້າຈະເປັນຄວາມສວ່າງຂອງເຈົ້າຕລອດໄປເປັນນິດ ເປັນຄວາມສວ່າງທີ່ຖາວອນກວ່າຕາເວັນແລະດວງເດືອນ

21 ປະຊາຊົນຂອງເຈົ້າຈະທຳແຕ່ສິ່ງຖືກຕ້ອງ ແລະຈະໄດ້ເປັນເຈົ້າຂອງແຜ່ນດິນຕລອດໄປເປັນນິດ ເຮົາໄດ້ປູກແລະສ້າງມັນ ເພື່ອສະແດງຄວາມຍິ່ງໃຫຍ່ຂອງເຮົາໃຫ້ຄົນທັງປວງຮູ້

22 ເຖິງແມ່ນຄອບຄົວຂອງເຈົ້ານ້ອຍແລະຕໍ່າຕ້ອຍທີ່ສຸດກໍຈະກາຍເປັນຊາດໃຫຍ່ເຫມືອນຊາດມະຫາອຳນາດ ເມື່ອເຖິງວັນເວລາອັນເຫມາະສົມ ເຮົາຈະທຳໃຫ້ການນີ້ເກີດຂຶ້ນໂດຍໄວ ເຮົາຄືພຣະຜູ້ເປັນເຈົ້າ”

## 61 ຂ່າວດີແຫ່ງຄວາມລອດມາເຖິງຊີໂອນ

The Good News of Deliverance

1 ພຣະວິນຍານຂອງພຣະຜູ້ເປັນເຈົ້າຊົງຢູ່ເຫນືອຂ້າພະເຈົ້າ ເພາະວ່າພຣະຜູ້ເປັນເຈົ້າໄດ້ຊົງເຈີມຂ້າພະເຈົ້າໄວ້ເພື່ອນຳຂ່າວດີມາຍັງຜູ້ທີ່ທຸກໃຈ ພຣະອົງຊົງໃຊ້ຂ້າພະເຈົ້າມາໃຫ້ເລົ້າໂລມຄົນທີ່ຊອກຊ້ຳຣະກຳໃຈ

2 ເພື່ອປະກາດປີແຫ່ງຄວາມໂປດປານຂອງພຣະຜູ້ເປັນເຈົ້າ ແລະວັນແຫ່ງການແກ້ແຄ້ນຂອງພຣະຜູ້ເປັນເຈົ້າຂອງເຮົາ ເພື່ອເລົ້າໂລມບັນດາຜູ້ທີ່ໄວ້ທຸກ

3 ເພື່ອຈັດໃຫ້ບັນດາຜູ້ທີ່ໄວ້ທຸກໃນຊີໂອນ ເພື່ອປະທານພວງມາລັຍແທນຂີ້ເຖົ່າໃຫ້ເຂົາ ນ້ຳມັນແຫ່ງຄວາມຍິນດີແທນການໄວ້ທຸກ ຜ້າຫົ່ມແຫ່ງການສັຣເສີນແທນຈິດໃຈທີ່ທໍ້ຖອຍ ເພື່ອຄົນຈະເອີ້ນເຂົາວ່າຕົ້ນກໍ່ຫລວງແຫ່ງຄວາມຊອບທັມ ບ່ອນຊຶ່ງພຣະຜູ້ເປັນເຈົ້າຊົງປູກໄວ້ເພື່ອພຣະອົງຈະຊົງສຳແດງພຣະກຽດຂອງພຣະອົງ

4 ເຂົາທັງຫລາຍຈະສ້າງສິ່ງສລັກຫັກພັງໂບຮານຂຶ້ນໃຫມ່ ເຂົາຈະສ້ອມແຊມບ່ອນຮົກຮ້າງແຕ່ເກົ່າກ່ອນຂຶ້ນ ເຂົາຈະກໍ່ສ້າງຫົວເມືອງທີ່ສລັກຫັກພັງ ຄືບ່ອນທີ່ປະຮ້າງມາຫລາຍຊົ່ວອາຍຸຄົນແລ້ວນັ້ນ

5 ຄົນຕ່າງຖິ່ນຈະຢືນລ້ຽງຝູງແກະຂອງເຈົ້າທັງຫລາຍ ຄົນຕ່າງດ້າວຈະເປັນຄົນໄຖນາ ແລະຄົນແຕ່ງເຄືອອະງຸ່ນ
ຂອງເຈົ້າ
6 ແຕ່ເຂົາຈະເອີ້ນເຈົ້າທັງຫລາຍວ່າປະໂຣຫິດຂອງພຣະຜູ້ເປັນເຈົ້າ ຄົນຈະເວົ້າເຖິງເຈົ້າວ່າເປັນຜູ້ປົວຣະບັດຂອງ
ພຣະຜູ້ເປັນ ເຈົ້າຂອງເຮົາ ເຈົ້າທັງຫລາຍຈະໄດ້ຮັບປະທານຄວາມມັ່ງຄັ່ງຂອງບັນດາປະຊາຊາດ ແລະເຈົ້າຈະ
ອວດຄວາມມັ່ງມີຂອງເຂົາທັງຫລາຍ
7 ແທນຄວາມອາຍຂອງເຈົ້າທັງຫລາຍ ເຈົ້າຈະໄດ້ສ່ວນສອງສ່ວນແທນຄວາມອັດສູ ເຂົາທັງຫລາຍຈະຊົມຊື່ນຍິນ
ດີໃນສ່ວນຂອງເຂົາ ເພາະສະນັ້ນ ໃນແຜ່ນດິນຂອງເຂົາທັງຫລາຍ ເຂົາຈະໄດ້ສອງສ່ວນເປັນກຳມະສິດ ຄວາມ
ຊື່ນບານເປັນນິດຈະເປັນຂອງເຂົາ
8 ເພາະເຮົາຄືພຣະຜູ້ເປັນເຈົ້າຮັກຄວາມຍຸດຕິທັມ ເຮົາກຽດການໂຈຣະກັມແລະຄວາມຜິດ ເຮົາຈະໃຫ້ການຕອບ
ແທນແກ່ເຂົາທັງຫລາຍຢ່າງແນ່ນອນ ແລະເຮົາຈະກະທຳຄຳຫມັ້ນສັນຍານິຣັນກັບເຂົາ
9 ເຊື້ອສາຍຂອງເຂົາທັງຫລາຍຈະເປັນທີ່ຮູ້ຈັກກັນຖ້າມກາງບັນດາປະຊາຊາດ ແລະລູກຫລານຂອງເຂົາໃນຖ້າມ
ກາງຊົນຊາດທັງຫລາຍ ທຸກຄົນທີ່ໄດ້ເຫັນເຂົາຈະຈຳເຂົາໄດ້ວ່າເຂົາເປັນປະຊາຊົນຊຶ່ງພຣະຜູ້ເປັນເຈົ້າຊົງອວຍພ
ຣະພອນ
10 ຂ້າພະເຈົ້າຈະຍິນດີຢ່າງຍິ່ງໃນພຣະຜູ້ເປັນເຈົ້າ ຈິດໃຈຂອງຂ້າພະເຈົ້າຈະລິງໂລດໃນພຣະຜູ້ເປັນເຈົ້າຂອງຂ້າ
ພະເຈົ້າ ເພາະພຣະອົງໄດ້ຊົງສວມຂ້າພະເຈົ້າດ້ວຍເສື້ອຜ້າແຫ່ງຄວາມລອດ ພຣະອົງຊົງຄຸມຂ້າພະເຈົ້າດ້ວຍ
ເສື້ອແຫ່ງຄວາມຊອບທັມເຫມືອນເຈົ້າບ່າວປະດັບຕົວດ້ວຍພວງມາລັຍ ແລະເຫມືອນເຈົ້າສາວຕົກແຕ່ງຕົວ
ດ້ວຍເພັດນິນຈິນດາ
11 ເພາະແຜ່ນດິນໂລກໄດ້ເກີດຫນໍ່ຂອງມັນ ແລະສວນທຳໃຫ້ສິ່ງທີ່ຫວ່ານໃນນັ້ນງອກຂຶ້ນມາສັນໃດ ພຣະຜູ້ເປັນ
ເຈົ້າຈະຊົງທຳໃຫ້ຄວາມຊອບທັມແລະຄວາມສັຣເສີນງອກຂຶ້ນມາຕໍ່ຫນ້າບັນດາປະຊາຊາດສັນນັ້ນ

## 62

The Vindication and Salvation of Zion

1 ເພື່ອເຫັນແກ່ຊີໂອນ ຂ້າພະເຈົ້າຈະບໍ່ລະງັບສຽງ ແລະເພື່ອເຫັນແກ່ເຢຣູຊາເລັມ ຂ້າພະເຈົ້າຈະບໍ່ມິດງຽບຢູ່ ຈົນ
ກວ່າການຊ່ອຍກູ້ກຸງນີ້ຈະອອກໄປຢ່າງຄວາມສຸກໃສ ແລະຄວາມລອດຂອງກຸງນີ້ເຫມືອນທອນໄຟທີ່ລຸກຢູ່
2 ບັນດາປະຊາຊາດຈະເຫັນການຊ່ອຍກູ້ເຈົ້າ ແລະພຣະຣາຊາທັງຫລາຍເຫັນສັກສີຂອງເຈົ້າ ແລະເຂົາຈະເອີ້ນ
ເຈົ້າດ້ວຍຊື່ໃຫມ່ ຊຶ່ງພຣະໂອດຂອງພຣະຜູ້ເປັນເຈົ້າຈະປະທານ
3 ເຈົ້າຈະເປັນມົງກຸດງາມໃນພຣະຫັດຂອງພຣະຜູ້ເປັນເຈົ້າ ແລະເປັນຣາຊມົງກຸດໃນພຣະຫັດແຫ່ງພຣະເຈົ້າຂອງ
ເຈົ້າ
4 ເຂົາຈະບໍ່ຂນານນາມເຈົ້າອີກວ່າ ຖືກປະຖິ້ມ ແລະເຂົາຈະບໍ່ເອີ້ນແຜ່ນດິນຂອງເຈົ້າວ່າ ຄວາມປິຕິຍິນດີຂອງເຮົາ
ຢູ່ໃນນາງ ແລະເອີ້ນແຜ່ນດິນຂອງເຈົ້າວ່າ ສົມຣົດແລ້ວ ເພາະພຣະຜູ້ເປັນເຈົ້າຊົງປິຕິຍິນດີໃນເຈົ້າແລະແຜ່ນດິນ
ຂອງເຈົ້າຈະແຕ່ງງານ
5 ເພາະຊາຍຫນຸ່ມແຕ່ງງານກັບຍິງພົມມະຈາຣີສັນໃດ ບຸດຊາຍທັງຫລາຍຂອງເຈົ້າຈະແຕ່ງງານກັບເຈົ້າສັນນັ້ນ
ແລະເຈົ້າບ່າວຍິນດີເພາະເຈົ້າສາວສັນໃດ ພຣະຜູ້ເປັນເຈົ້າຂອງເຈົ້າຈະຍິນດີເພາະເຈົ້າສັນນັ້ນ
6 ໂອ ເຢຣູຊາເລັມເອີຍ ເທິງກຳແພງຂອງເຈົ້າ ເຮົາໄດ້ວາງຍາມໄວ້ ຕລອດກາງເວັນແລະຕລອດກາງຄືນ ເຂົາທັງ
ຫລາຍຈະບໍ່ລະງັບສຽງເລີຍ ເຈົ້າທັງຫລາຍຜູ້ທີ່ຄອຍຟື້ນຄວາມຊົງຈຳຂອງພຣະເຈົ້າບໍ່ຕ້ອງຢຸດພັກ
7 ແລະຢ່າໃຫ້ພຣະອົງຢຸດພັກ ຈົນກວ່າພຣະອົງຈະສະຖາປະນາ ແລະກະທຳກຸງເຢຣູຊາເລັມໃຫ້ເປັນທີ່ສັຣເສີນ
ໃນແຜ່ນດິນໂລກ

8 ພຣະຜູ້ເປັນເຈົ້າຊົງປະຕິຍານດ້ວຍພຣະຫັດຂວາຂອງພຣະອົງ ແລະດ້ວຍພຣະກອນອານຸພາບຂອງພຣະອົງວ່າ
“ເຮົາຈະບໍ່ໃຫ້ເຂົ້າຂອງເຈົ້າເປັນອາຫານຂອງສັດຕຣູຂອງເຈົ້າອີກ ແລະຄົນຕ່າງດ້າວຈະບໍ່ດື່ມເຫລົ້າອະງຸ່ນຂອງ
ເຈົ້າ ຊຶ່ງເຈົ້າບາກບັ່ນໄດ້ມາ
9 ແຕ່ຜູ້ໃດທີ່ເກັບກ່ຽວໄວ້ຈະໄດ້ກິນ ແລະສັຣເສີນພຣະຜູ້ເປັນເຈົ້າ ແລະບັນດາຜູ້ທີ່ເກັບຮວບຮວມຈະໄດ້ດື່ມ ໃນ
ເດີ່ນສະຖານສັກສິດຂອງເຮົາ”
10 ຈົ່ງໄປ ຈົ່ງໄປທາງປະຕູເມືອງ ຈັດຕຽມທາງໄວ້ໃຫ້ຊົນຊາດນີ້ ຈົ່ງສ້າງ ຈົ່ງສ້າງທາງຫລວງຂຶ້ນເກັບກວາດຫີນເສັງ
ໃຫ້ຫມົດ ຈົ່ງຍົກສັນຍານໄວ້ເຫນືອຊົນຊາດທັງຫລາຍ
11 ເບິ່ງແມ, ພຣະຜູ້ເປັນເຈົ້າໄດ້ຊົງຮ້ອງປະກາດໃຫ້ໄດ້ຍິນ ເຖິງປາຍແຜ່ນດິນໂລກວ່າ ຈົ່ງກ່າວແກ່ທິດາຂອງຊີ
ໂອນວ່າ “ເບິ່ງແມ, ຄວາມລອດຂອງເຈົ້າມາ ເບິ່ງແມ, ຣາງວັນຂອງພຣະອົງກໍຢູ່ກັບພຣະອົງ ແລະຄ່າຕອບແທນ
ຂອງພຣະອົງກໍຢູ່ຕໍ່ຫນ້າ ພຣະພັກຂອງພຣະອົງ”
12 ແລະຄົນຈະເອີ້ນເຂົາທັງຫລາຍວ່າ “ປະຊາຊົນບໍຣິສຸດ ຜູ້ຮັບໄຖ່ໄວ້ແລ້ວຂອງພຣະຜູ້ເປັນເຈົ້າ ແລະເຂົາຈະເອີ້ນ
ເຈົ້າວ່າ ຫາມາໄດ້ເມືອງທີ່ບໍ່ໄດ້ຖືກປະຖິ້ມ”

## 63 ວັນແຫ່ງການແກ້ແຄ້ນຂອງພຣະຜູ້ເປັນເຈົ້າ

Vengeance on Edom

1 ແມ່ນໃຜຫນໍທີ່ມາຈາກເມືອງເອໂດມ ສວມເສື້ອຜ້າຍ້ອມສີແດງຈາກເມືອງໂບສຣາ ພຣະອົງຜູ້ຊຶ່ງໂອ່ອ່າໃນ
ເຄື່ອງຊົງຂອງ ພຣະອົງ ສະເດັດມາດ້ວຍກຳລັງຍິ່ງໃຫຍ່ຂອງພຣະອົງ “ນີ້ເຮົາເອງຮ້ອງປະກາດຊ່ອຍກູ້ແລະມີ
ອານຸພາບທີ່ຈະຊ່ອຍໃຫ້ລອດ”
2 ເປັນຫຍັງເຄື່ອງຊົງຂອງພຣະອົງຈຶ່ງສີແດງ ແລະເສື້ອຜ້າຂອງພຣະອົງເຫມືອນກັບຂອງຄົນທີ່ຍ່ຳໃນບໍ່ຍ່ຳອະງຸ່ນ
3 “ເຮົາໄດ້ຍ່ຳບໍ່ອະງຸ່ນແຕ່ຄົນດຽວ ແລະບໍ່ມີໃຜຈາກຊົນຊາດທັງຫລາຍຢູ່ກັບເຮົາເລີຍ ເຮົາຍ່ຳມັນດ້ວຍຄວາມ
ໂກດຂອງເຮົາ ເຮົາຢຽບມັນດ້ວຍຄວາມພິໂຣດຂອງເຮົາ ໂລຫິດຂອງເຂົາພົມຢູ່ເທິງເສື້ອຜ້າຂອງເຮົາ ແລະເຮົາ
ໄດ້ທຳໃຫ້ເສື້ອຜ້າຂອງເຮົາເປື້ອນຫມົດ
4 ເພາະວັນແກ້ແຄ້ນຢູ່ໃນໃຈຂອງເຮົາ ແລະປີແຫ່ງການໄຖ່ຂອງເຮົາໄດ້ມາເຖິງ
5 ເຮົາແນມເບິ່ງ ແຕ່ບໍ່ມີຜູ້ໃດຊ່ອຍເຫລືອເຮົາ ເຮົາປລາດໃຈ ແຕ່ບໍ່ມີຜູ້ໃດຊູໄວ້ ມືຂອງເຮົາເອງຈຶ່ງນຳຊັຍມາໃຫ້
ເຮົາ ແລະຄວາມພິໂຣດຂອງເຮົາຊູເຮົາໄວ້
6 ເຮົາຍ່ຳຊົນຊາດທັງຫລາຍລົງດ້ວຍຄວາມໂກດຂອງເຮົາ ເຮົາໄດ້ທຳໃຫ້ເຂົາເມົາດ້ວຍຄວາມພິໂຣດຂອງເຮົາ
ແລະເຮົາໄດ້ເທໂລຫິດຂອງເຂົາເທິງແຜ່ນດິນໂລກ”

God’s Mercy Remembered

7 ຂ້າພະເຈົ້າຈະກ່າວໃຫ້ຄິດເຖິງຄວາມຮັກຫມັ້ນຄົງແຫ່ງພຣະຜູ້ເປັນເຈົ້າ ບັນດາກິຈການອັນຫນ້າສັຣເສີນຂອງພ
ຣະຜູ້ເປັນ ເຈົ້າ ຕາມບັນດາຊຶ່ງພຣະຜູ້ເປັນເຈົ້າປະທານແກ່ພວກເຮົາ ແລະຄວາມດີຍິ່ງໃຫຍ່ຕໍ່ວົງຂອງອິສຣາ
ເອນ ຊຶ່ງພຣະອົງຊົງອະນຸມັດໃຫ້ຕາມພຣະກະຣຸນາຂອງພຣະອົງ ຕາມຄວາມຮັກຫມັ້ນຄົງອັນອຸດົມສົມບູນຂອງ
ພຣະອົງ
8 ເພາະພຣະອົງກ່າວວ່າ ແນ່ນອນເຂົາເປັນຊົນຊາດຂອງເຮົາ ບຸດຜູ້ຈະບໍ່ປະພຶດຄົດໂກງເຮົາ ແລະພຣະອົງໄດ້
ເປັນພຣະຜູ້ຊ່ອຍໃຫ້ລອດຂອງເຂົາ
9 ພຣະອົງຊົງທຸກພຣະທັຍໃນຄວາມທຸກໃຈທັງສິ້ນຂອງເຂົາ ແລະທູດສວັນທີ່ຢູ່ຕໍ່ພຣະພັກພຣະອົງຊ່ອຍເຂົາທັງ
ຫລາຍໃຫ້ລອດ ພຣະອົງຊົງໄຖ່ເຂົາດ້ວຍຄວາມຮັກຂອງພຣະອົງ ແລະດ້ວຍຄວາມສົງສານຂອງພຣະອົງ ພຣະ
ອົງຊົງຍົກເຂົາຂຶ້ນແລະຫອບເຂົາໄປຕລອດກາລກ່ອນ

10 ແຕ່ເຂົາທັງຫລາຍໄດ້ກະບົດ ແລະທຳໃຫ້ວິນຍານບໍຣິສຸດຂອງພຣະອົງເສັຽພຣະທັຍ ສັນນັ້ນພຣະອົງຈຶ່ງຊົງຫັນ
ເປັນສັດຕຣູຂອງເຂົາທັງຫລາຍ ແລະພຣະອົງຊົງຕໍ່ສູ້ກັບເຂົາທັງຫລາຍເອງ
11 ແລ້ວພຣະອົງຊົງຣະນຶກເຖິງສມັຍເກົ່າກ່ອນ ເຖິງໂມເຊ ເຖິງຊົນຊາດຂອງພຣະອົງ ພຣະອົງຊົງນຳເຂົາທັງຫລາຍ
ຂຶ້ນມາຈາກທະເລ ພ້ອມກັບຜູ້ລ້ຽງແກະຂອງພຣະອົງຢູ່ທີ່ໃດ ພຣະອົງຊົງຢູ່ທີ່ໃດ ຜູ້ຊຶ່ງບັນຈຸວິນຍານບໍຣິສຸດຂອງ
ພຣະອົງຖ້າມກາງເຂົາທັງຫລາຍ
12 ຜູ້ໃຫ້ພຣະກອນອັນຮຸ່ງໂຣດຂອງພຣະອົງໄປກັບມືຂວາຂອງໂມເຊ ຜູ້ແຍກນໍ້າອອກຕໍ່ຫນ້າເຂົາທັງຫລາຍ ເພື່ອ
ສ້າງພຣະນາມນິຣັນໃຫ້ພຣະອົງເອງ
13 ຜູ້ໄດ້ນຳເຂົາຂ້າມທະເລນັ້ນເຫມືອນມ້າໃນຖິ່ນກັນດານ ເຂົາທັງຫລາຍບໍ່ໄດ້ສະດຸດ
14 ເຫມືອນສັດລ້ຽງໄປຍັງຮ່ອມພູສັນໃດ ພຣະວິນຍານຂອງພຣະຜູ້ເປັນເຈົ້າປະທານໃຫ້ເຂົາຢຸດພັກສັນນັ້ນ ສະນັ້ນ
ພຣະອົງຈຶ່ງຊົງນຳຊົນຊາດຂອງພຣະອົງເພື່ອຈະສ້າງພຣະນາມອັນຮຸ່ງເຮືອງແດ່ພຣະອົງເອງ

A Prayer of Penitence

15 ຂໍທອດພຣະເນດລົງມາຈາກຟ້າສວັນແລະຊົງເພ່ງເບິ່ງຈາກສະຖານບໍຣິສຸດແລະຮຸ່ງເຮືອງຂອງພຣະອົງ ຄວາມ
ກະຕືລືລົ້ນແລະອານຸພາບຂອງພຣະອົງຢູ່ທີ່ໃດ ພຣະທັຍກະຣຸນາຂອງພຣະອົງແລະຄວາມສົມເພດຂອງພຣະ
ອົງໄດ້ຖືກຍຶດໄວ້ຈາກຂ້າ ພຣະອົງ
16 ເພາະພຣະອົງຊົງເປັນພຣະບິດາຂອງຂ້າພຣະອົງທັງຫລາຍ ແມ້ອັບຣາຮາມບໍ່ໄດ້ຮູ້ຈັກຂ້າພຣະອົງ ແລະອິສຣາ
ເອນຈື່ຂ້າ  ພຣະອົງບໍ່ໄດ້ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງເປັນພຣະບິດາຂອງຂ້າພຣະອົງທັງຫລາຍ ພຣະ
ນາມຂອງພຣະອົງຄືພຣະຜູ້ໄຖ່ຂອງຂ້າພຣະອົງແຕ່ເກົ່າກ່ອນ
17 ຂ້າແດ່ພຣະຜູ້ເປັນເຈົ້າ ເຫດໃດພຣະອົງຊົງກະທຳໃຫ້ຂ້າພຣະອົງທັງຫລາຍຜິດໄປຈາກພຣະມັນຄາຂອງພຣະ
ອົງ ແລະກະທຳໃຈຂອງຂ້າພຣະອົງໃຫ້ແຂງກະດ້າງຈົນຂ້າພຣະອົງບໍ່ຢຳເກງພຣະອົງ ຂໍພຣະອົງຊົງກັບມາເພື່ອ
ເຫັນແກ່ບັນດາຜູ້ຮັບໃຊ້ຂອງພຣະອົງ ຄືເຜົ່າທັງຫລາຍອັນເປັນມໍຣະດົກຂອງພຣະອົງ
18 ເຂົາຂັບໄລ່ຊົນຊາດບໍຣິສຸດຂອງພຣະອົງອອກໄປບຶດນຶ່ງ ປໍຣະປັກຂອງຂ້າພຣະອົງທັງຫລາຍໄດ້ຢຽບຢໍ່າສະ
ຖານສັກສິດຂອງພຣະອົງມາ
19 ຂ້າພຣະອົງທັງຫລາຍເປັນເຫມືອນກັບຜູ້ທີ່ພຣະອົງບໍ່ເຄີຍປົກຄອງເລີຍ ເຫມືອນກັບຜູ້ຊຶ່ງເຂົາບໍ່ໄດ້ເອີ້ນໂດຍພ
ຣະນາມຂອງ ພຣະອົງ

# 64

Chapter 64

1 ໂອ ຖ້າຫາກວ່າພຣະອົງຊົງແຍກຟ້າສວັນລົງມາໄດ້ຫນໍ ເພື່ອພູຈະສັ່ນສະເທືອນຕໍ່ພຣະພັກພຣະອົງ
2 ດັ່ງເມື່ອໄຟຕິດກອງກິ່ງໄມ້ ແລະໄຟກະທຳໃຫ້ນໍ້າຟົດເດືອດ ເພື່ອໃຫ້ພຣະນາມຂອງພຣະອົງເປັນທີ່ຮູ້ຈັກແກ່ປໍ
ຣະປັກຂອງ  ພຣະອົງ ເພື່ອບັນດາປະຊາຊາດຈະສະເທືອນຕໍ່ພຣະພັກພຣະອົງ
3 ເມື່ອພຣະອົງຊົງກະທຳສິ່ງທີ່ຫນ້າຢ້ານກົວທີ່ພວກຂ້າພຣະອົງຄາດບໍ່ເຖິງ ພຣະອົງສະເດັດລົງມາ ພູກໍຫວັ່ນໄຫວ
ຕໍ່ພຣະພັກ ພຣະອົງ
4 ຕັ້ງແຕ່ເກົ່າກ່ອນບໍ່ມີຜູ້ໃດໄດ້ຍິນ ຫລືຊາບດ້ວຍຫູ ຫລືຕາໄດ້ເຫັນພຣະຜູ້ເປັນເຈົ້າຈັກອົງນອກເຫນືອພຣະອົງ ຜູ້
ຊົງກະທຳເພື່ອບັນດາຜູ້ທີ່ລໍຄອຍພຣະອົງ
5 ພຣະອົງຊົງພົບເຂົາ ທີ່ກະທຳຄວາມຊອບທັມຢ່າງຊື່ນບານ ບັນດາຜູ້ທີ່ຈຳພຣະອົງໄດ້ໃນວິທີການຂອງພຣະອົງ
ເບິ່ງແມ,  ພຣະອົງຊົງກິ້ວ ແລະຂ້າພຣະອົງທັງຫລາຍບາບ ຂ້າພຣະອົງທັງຫລາຍຢູ່ໃນບາບເປັນເວລາດົນນານ
ແລະຂ້າພຣະອົງທັງຫລາຍຈະລອດຫລື

6 ຂ້າພຣະອົງທຸກຄົນໄດ້ກາຍເປັນເຫມືອນຄົນທີ່ບໍ່ສະອາດ ແລະການກະທຳອັນຊອບທັມຂອງຂ້າພຣະອົງທັງສິ້ນ
ເຫມືອນເສື້ອຜ້າທີ່ເປື້ອນເປິ ຂ້າພຣະອົງທຸກຄົນຫ່ຽວລົງຢ່າງໃບໄມ້ ແລະຄວາມບາບຜິດຂອງຂ້າພຣະອົງທັງ
ຫລາຍໄດ້ພັດພາຂ້າພຣະອົງໄປເຫມືອນລົມ
7 ບໍ່ມີຜູ້ໃດຮ້ອງທູນຕໍ່ພຣະນາມຂອງພຣະອົງ ທີ່ເລົ້າຕົນເອງໃຫ້ຍຶດພຣະອົງໄວ້ ເພາະພຣະອົງຊົງລີ້ພຣະພັກຂອງ
ພຣະອົງຈາກຂ້າພຣະອົງທັງຫລາຍ ແລະໄດ້ມອບຂ້າພຣະອົງທັງຫລາຍໄວ້ໃນມືຂອງຄວາມບາບຜິດຂອງຂ້າພ
ຣະອົງ
8 ຂ້າແດ່ພຣະຜູ້ເປັນເຈົ້າ ແຕ່ພຣະອົງຍັງຊົງເປັນພຣະບິດາຂອງຂ້າພຣະອົງ ຂ້າພຣະອົງທັງຫລາຍ ເປັນດິນຫນຽວ
ແລະພຣະອົງຊົງເປັນຊ່າງປັ້ນ ຂ້າພຣະອົງທຸກຄົນເປັນຜົນສີພຣະຫັດຂອງພຣະອົງ
9 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຢ່າຊົງກິ້ວນັກ ແລະຂໍຢ່າຊົງຈົດຈຳຄວາມບາບຜິດໄວ້ເປັນນິດ ເບິ່ງແມ, ຂໍຊົງພິເຄາະ
ຂ້າພຣະອົງທັງສິ້ນເປັນຊົນຊາດຂອງພຣະອົງ
10 ຫົວເມືອງບໍຣິສຸດຂອງພຣະອົງກາຍເປັນຖິ່ນກັນດານ ຊີໂອນໄດ້ກາຍເປັນຖິ່ນກັນດານ ເຢຣູຊາເລັມເປັນທີ່ຮ້າງ
ເປົ່າ
11 ວິຫານອັນບໍຣິສຸດແລະງາມຂອງຂ້າພຣະອົງທັງຫລາຍ ບ່ອນຊຶ່ງບັນພະບຸຣຸດຂອງຂ້າພຣະອົງສັຣເສີນພຣະອົງ
ຖືກໄຟເຜົາເສັຽແລ້ວ ແລະສິ່ງອັນມີຄ່າຂອງຂ້າພຣະອົງທັງສິ້ນໄດ້ຖືກປະຮ້າງ
12 ຂ້າແດ່ພຣະຜູ້ເປັນເຈົ້າ ເປັນຢ່າງນີ້ແລ້ວ ພຣະອົງຍັງຈະຊົງຢັບຢັ້ງພຣະອົງໄວ້ຫລື ພຣະອົງຈະຊົງມິດງຽບຢູ່ແລະ
ຂົ່ມໃຈພວກຂ້າພຣະອົງຢ່າງເຖິງຂນາດຫລື

## 65 ການລົງໂທດຜູ້ມັກກະບົດ

The Righteousness of God's Judgment

1 ເຮົາພ້ອມທີ່ຈະໃຫ້ຜູ້ທີ່ບໍ່ໄດ້ຂໍພົບເຮົາ ຫາເຮົາໄດ້ ເຮົາພ້ອມທີ່ຈະໃຫ້ຜູ້ທີ່ບໍ່ສແວງເຮົາ ພົບເຮົາໄດ້ ເຮົາວ່າ "ເຮົາ
ຢູ່ທີ່ນີ້ ເຮົາຢູ່ທີ່ນີ້" "ຕໍ່ປະຊາຊາດທີ່ບໍ່ອອກນາມຂອງເຮົາ"
2 ເຮົາຍື່ນມືຂອງເຮົາອອກຕລອດວັນຕໍ່ຊົນຊາດທີ່ມັກກະບົດ ຜູ້ດຳເນີນໃນທາງທີ່ບໍ່ດີ ຕິດຕາມອຸບາຍຂອງຕົນເອງ
3 ຊົນຊາດທີ່ຍົວະເຍົ້າເຮົາແບບຊຶ່ງຫນ້າຢູ່ສເມີ ທຳການສັກກາຣະບູຊາຕາມສວນ ແລະເຜົາເຄື່ອງຫອມຢູ່ເທິງ
ດິນຈີ່
4 ຜູ້ນັ່ງຢູ່ໃນອຸບໂມງສົບ ແລະຄ້າງຄືນໃນທີ່ເລິກລັບຜູ້ກິນເນື້ອຫມູ ແລະໃນພາຊນະຂອງເຂົາມີແກງ ຊຶ່ງທຳດ້ວຍ
ເນື້ອທີ່ຫນ້າກຽດຊັງ
5 ຜູ້ກ່າວວ່າ "ອອກໄປຫ່າງໆ ຢ່າເຂົ້າມາໃກ້ ເພາະຂ້າບໍຣິສຸດກວ່າເຈົ້າ" ເຫລົ່ານີ້ເປັນຄວັນຢູ່ໃນດັງຂອງເຮົາ ເປັນ
ໄຟຊຶ່ງໄຫມ້ຢູ່ຕລອດວັນ
6 ເບິ່ງແມ, ມີຂຽນໄວ້ຕໍ່ຫນ້າເຮົາວ່າ "ເຮົາຈະບໍ່ມິດງຽບ ແຕ່ເຮົາຈະຕອບສນອງ ເຮົາຈະຕອບສນອງໄວ້ໃນເອິກ
ຂອງເຂົາ
7 ທັງຄວາມບາບຊົ່ວຂອງເຂົາ ແລະຄວາມບາບຊົ່ວຂອງບັນພະບຸຣຸດຂອງເຂົາທັງຫລາຍຮວມກັນດ້ວຍ ພຣະຜູ້
ເປັນເຈົ້າກ່າວດັ່ງນີ້ ເພາະເຂົາໄດ້ເຜົາເຄື່ອງຫອມເທິງພູ ແລະກ່າວຄຳຫມິ່ນປມາດຕໍ່ເຮົາເທິງເນີນ ເຮົາຈະຕວງ
ກັມເກົ່າເຂົ້າໄປໃນເອິກຂອງເຂົາ"
8 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, "ເຫລົ້າອະງຸ່ນຫາໄດ້ຈາກພວງອະງຸ່ນ ແລະເຂົາກ່າວວ່າ "ຢ່າທຳລາຍມັນເສັຽ
ເພາະມີພຣະພອນຢູ່ໃນນັ້ນ" ສັນໃດ ເຮົາກໍຈະກະທຳດ້ວຍເຫັນແກ່ຜູ້ຮັບໃຊ້ຂອງເຮົາ ແລະບໍ່ທຳລາຍເຂົາຫມົດ
ທີ່ດຽວສັນນັ້ນ

9 ເຮົາຈະນຳເຊື້ອສາຍອອກມາຈາກຢາໂຄບແລະຜູ້ຮັບມໍຣະດົກພູທັງຫລາຍຂອງເຮົາຈາກຢູດາ ແລະຜູ້ເລືອກສັນ
ຂອງເຮົາຈະໄດ້ຮັບມັນເປັນມໍຣະດົກ ແລະບັນດາຜູ້ຮັບໃຊ້ຂອງເຮົາຈະອາສັຍຢູ່ທີ່ນັ້ນ
10 ຊາໂຣນຈະເປັນເດີ່ນຫຍ້າສຳລັບຝູງແບ້ແກະ ແລະທີ່ຮ່ອມພູອາໂຄຣ໌ເປັນທີ່ໃຫ້ຝູງງົວນອນ ເພື່ອຊົນຊາດຂອງ
ເຮົາທີ່ໄດ້ ສແວງເຮົາ
11 ແຕ່ເຈົ້າທັງຫລາຍຈະປະຖິ້ມພຣະຜູ້ເປັນເຈົ້າ ຜູ້ລືມພູບໍຣິສຸດຂອງເຮົາ ຜູ້ຈັດອາຫານໄວ້ໃຫ້ແກ່ ພຣະໂຊກແລະ
ເຕີມເຫລົ້າອະ ງຸ່ນປະສົມໃຫ້ແກ່ພຣະເຄາະ
12 ເຮົາຈະເອົາເຈົ້າທັງຫລາຍຟາດເຄາະໃຫ້ດາບໄປ ແລະເຈົ້າທຸກຄົນຈະຕ້ອງຫມອບລົງຕໍ່ການສັງຫານ ເພາະ
ເມື່ອເຮົາເອີ້ນ ເຈົ້າບໍ່ຕອບ ເມື່ອເຮົາເວົ້າ ເຈົ້າບໍ່ຟັງ ແຕ່ເຈົ້າໄດ້ກະທຳສິ່ງທີ່ຊົ່ວຮ້າຍໃນສາຍຕາຂອງເຮົາ ແລະເລ
ືອກສິ່ງທີ່ເຮົາບໍ່ປິຕິຍິນດີດ້ວຍ”
13 ເຫດສັນນັ້ນ ພຣະຜູ້ເປັນເຈົ້າຈຶ່ງກ່າວດັ່ງນີ້ວ່າ “ເບິ່ງແມ, ຜູ້ຮັບໃຊ້ທັງຫລາຍຂອງເຮົາຈະໄດ້ຮັບປະທານ ແຕ່ເຈົ້າ
ທັງຫລາຍຈະຫິວ ເບິ່ງແມ, ຜູ້ຮັບໃຊ້ຂອງເຮົາຈະໄດ້ດື່ມ ແຕ່ເຈົ້າຈະກະຫາຍ ເບິ່ງແມ, ຜູ້ຮັບໃຊ້ຂອງເຮົາຈະຊົມ
ຊື່ນຍິນດີ ແຕ່ເຈົ້າຈະອັບອາຍ
14 ເບິ່ງແມ, ຜູ້ຮັບໃຊ້ຂອງເຮົາຈະຮ້ອງເພງດ້ວຍຄວາມຍິນດີ ແຕ່ເຈົ້າທັງຫລາຍຈະຮ້ອງອອກມາເພາະເສັຽໃຈ
ແລະຈະຄວນຄາງເພາະຈິດຣະທົມ
15 ເຈົ້າທັງຫລາຍຈະຖິ້ມຊື່ຂອງເຈົ້າໄວ້ແກ່ຜູ້ເລືອກສັນຂອງເຮົາເພື່ອໃຊ້ສາບແຊ່ງ ແລະພຣະຜູ້ເປັນເຈົ້າຈະຊົງສັງ
ຫານເຈົ້າ ແຕ່ຈະຊົງເອີ້ນຊື່ຜູ້ຮັບໃຊ້ຂອງພຣະອົງດ້ວຍຊື່ອື່ນ
16 ດັ່ງນັ້ນ ຜູ້ໃດທີ່ຂໍພອນໃຫ້ຕົນເອງໃນແຜ່ນດິນ ຈະຂໍພອນໃຫ້ຕົນເອງໃນພຣະນາມພຣະຜູ້ເປັນເຈົ້າແຫ່ງສັຈຈະ
ແລະຜູ້ໃດທີ່ສາບານໃນແຜ່ນດິນ ຈະສາບານໃນພຣະນາມພຣະຜູ້ເປັນເຈົ້າແຫ່ງສັຈຈະ ເພາະຄວາມທຸກລຳ
ບາກເກົ່າແກ່ນັ້ນກໍລືມເສັຽແລ້ວ ແລະລີ້ຊ່ອນເສັຽຈາກຕາຂອງເຮົາ

### The Glorious New Creation

17 “ເພາະ ເບິ່ງແມ, ເຮົາຈະສ້າງຟ້າສວັນໃຫມ່ ແລະແຜ່ນດິນໂລກໃຫມ່ ເພາະສິ່ງເກົ່າກ່ອນນັ້ນຈະບໍ່ຈຳກັນຫລືນຶກ
ໄດ້ອີກ
18 ແຕ່ຈົ່ງຊື່ນບານແລະຊົມຊື່ນຍິນດີເປັນນິດ ໃນສິ່ງຊຶ່ງເຮົາສ້າງຂຶ້ນ ເພາະ ເບິ່ງແມ, ເຮົາສ້າງເຢຣູຊາເລັມໃຫ້ເປັນ
ທີ່ຍິນດີ ແລະຊົນຊາດຂອງເມືອງນັ້ນໃຫ້ເປັນຄວາມຊື່ນບານ
19 ເຮົາຈະຊົມຊື່ນຍິນດີດ້ວຍເຢຣູຊາເລັມ ແລະຊື່ນບານດ້ວຍຊົນຊາດຂອງເຮົາ ຈະບໍ່ໄດ້ຍິນສຽງຮ້ອງໄຫ້ໃນເມືອງ
ນັ້ນອີກ ແລະສຽງຄວນຄາງ
20 ໃນນັ້ນຈະບໍ່ມີເດັກອ່ອນທີ່ມີຊີວິດພຽງສອງສາມວັນ ຫລືຄົນເຖົ້າແກ່ທີ່ມີອາຍຸບໍ່ຄົບກຳນົດ ເພາະຄົນຈະມີອາຍຸ
ນຶ່ງຮ້ອຍປີຈຶ່ງຕາຍ ແລະຄວາມບາບທີ່ມີອາຍຸພຽງນຶ່ງຮ້ອຍປີຈະເປັນທີ່ສາບແຊ່ງ
21 ເຂົາຈະສ້າງບ້ານແລະເຂົ້າອາສັຍຢູ່ໃນນັ້ນ ເຂົາຈະປູກສວນອະງຸ່ນແລະກິນຫມາກຂອງມັນ
22 ເຂົາຈະບໍ່ສ້າງແລະຄົນອື່ນເຂົ້າອາສັຍຢູ່ ເຂົາຈະບໍ່ປູກແລະຄົນອື່ນກິນ ເພາະອາຍຸຊົນຊາດຂອງເຮົາຈະເປັນ
ເຫມືອນອາຍຸຂອງຕົ້ນໄມ້ ແລະຜູ້ເລືອກສັນຂອງເຮົາຈະໃຊ້ຜົນງານນ້ຳມືຂອງເຂົາດົນນານ
23 ເຂົາທັງຫລາຍຈະບໍ່ທຳງານໂດຍເປົ່າປໂຍດ ຫລືເກີດລູກເພື່ອຄວາມສຍົດສຍອງ ເພາະເຂົາເປັນລູກຫລານ
ຂອງຜູ້ທີ່ໄດ້ຮັບພອນຂອງພຣະຜູ້ເປັນເຈົ້າ ກັບລູກໆຂອງເຂົາເຫມືອນກັນ
24 ກ່ອນທີ່ເຂົາຮ້ອງເອີ້ນ ເຮົາຈະຕອບ ຂນະທີ່ເຂົາຍັງເວົ້າຢູ່ ເຮົາຈະຟັງ
25 ຫມາປ່າແລະລູກແກະຈະຫາກິນຢູ່ນຳກັນ ສິງຈະກິນເຟືອງເຫມືອນງົວ ແລະຝຸ່ນຂີ້ດິນຈະເປັນອາຫານຂອງງູ
ມັນທັງຫລາຍຈະບໍ່ທຳອັນຕະລາຍຫລືທຳລາຍ ທົ່ວພູບໍຣິສຸດຂອງເຮົາ” ພຣະຜູ້ເປັນເຈົ້າກ່າວດັ່ງນີ້

# 66 ການພິພາກສາຂອງພຣະເປັນເຈົ້າແລະຄວາມຮັກຫມັ້ນຄົງໃນອະນາຄົດຂອງຊີໂອນ

### The Worship God Demands

1 ພຣະເຈົ້າຊົງກ່າວດັ່ງນີ້ວ່າ, “ສວັນເປັນບັນລັງຂອງເຮົາ ແລະແຜ່ນດິນໂລກເປັນແທ່ນວາງພຣະບາດຂອງເຮົາ ວິ
ຫານຊຶ່ງເຈົ້າຈະສ້າງໃຫ້ເຮົານັ້ນຈະຢູ່ທີ່ໃດ ແລະທີ່ປະທັບຂອງເຮົາຈະຢູ່ທີ່ໃດ
2 ສິ່ງເຫລົ່ານີ້ມືຂອງເຮົາໄດ້ກະທຳທັງສິ້ນ ສິ່ງເຫລົ່ານັ້ນຈຶ່ງເປັນຂຶ້ນມາ ພຣະເຈົ້າຊົງກ່າວດັ່ງນີ້ ແຕ່ນີ້ຕ່າງຫາກທີ່
ເຮົາຈະຫລຽວເບິ່ງ ຄືເຂົາຜູ້ທີ່ຖ່ອມແລະສຳນຶກຜິດໃນໃຈ ແລະຕົວສັ່ນເພາະຄຳຂອງເຮົາ
3 ເຂົາຜູ້ຂ້າງົວເໝືອນກັບເຂົາຜູ້ຂ້າຄົນ ເຂົາຜູ້ຂ້າລູກແກະຖວາຍເໝືອນກັບເຂົາຜູ້ຫັກຄໍຫມາ ເຂົາຜູ້ນຳທັນຍາບູ
ຊາມາເໝືອນກັບເຂົາຖວາຍເລືອດຫມູ ເຂົາຜູ້ທຳອະນຸສອນບູຊາດ້ວຍກຳຍານເໝືອນກັບເຂົາຜູ້ນັ້ນສາທຸການ
ຮູບໂຄຣົບ ຄົນເຫລົ່ານີ້ຕ່າງກໍເລືອກທາງຂອງເຂົາເອງ ແລະຈິດໃຈຂອງເຂົາປິຕິຍິນດີຢູ່ໃນສິ່ງຫນ້າຂີ້ດຽດຂອງ
ເຂົາ
4 ເຮົາກໍຈະເລືອກຄວາມທຸກໃຈໃຫ້ເຂົາດ້ວຍ ແນະນຳສິ່ງທີ່ເຂົາຢ້ານກົວມາໃຫ້ເຂົາ ເພາະເມື່ອເຮົາໄດ້ເອີ້ນບໍ່ມີຈັກ
ຄົນນຶ່ງຕອບ ເມື່ອເຮົາເວົ້າ ເຂົາບໍ່ຟັງ ແຕ່ເຂົາໄດ້ກະທຳຄວາມຊົ່ວຮ້າຍໃນສາຍຕາຂອງເຮົາ ແລະເລືອກສິ່ງຊຶ່ງ
ເຮົາບໍ່ປິຕິຍິນດີດ້ວຍ”

### The Lord Vindicates Zion

5 ເຈົ້າຜູ້ຕົວສັ່ນເພາະພຣະຄຳຂອງພຣະອົງ ຈົ່ງຟັງພຣະຄຳຂອງພຣະເຈົ້າ “ພີ່ນ້ອງຂອງເຈົ້າຜູ້ຊຶ່ງກຽດຊັງເຈົ້າ ແລະ
ແກວ່ງ ເຈົ້າອອກໄປເພາະເຫັນແກ່ນາມຂອງເຮົາ ໄດ້ເວົ້າວ່າ “ຂໍພຣະເຈົ້າຊົງຮັບກຽດ ເພື່ອເຮົາຈະໄດ້ເຫັນ
ຄວາມເບີກບານຂອງ ເຈົ້າ ແຕ່ເຂົາເຫລົ່ານັ້ນແຫລະຈະຕ້ອງໄດ້ຮັບຄວາມອາຍ
6 “ຟັງເດີ ສຽງອຶກກະທຶກຈາກໃນເມືອງ ສຽງຈາກພຣະວິຫານ ພຣະສຸຣະສຽງຂອງພຣະເຈົ້າກຳລັງໃຫ້ການຕອບ
ແທນຕໍ່ສັດຕຣູຂອງພຣະອົງ
7 ກ່ອນທີ່ນາງຈະເຈັບທ້ອງຄອດ ນາງກໍຄອດບຸດ ກ່ອນທີ່ຄວາມເຈັບປວດຈະມາເຖິງນາງ ນາງກໍໃຫ້ກຳເນີດບຸດ
ຊາຍຄົນນຶ່ງ
8 ໃຜແດ່ເຄີຍໄດ້ຍິນສິ່ງຢ່າງນີ້ ໃຜແດ່ເຄີຍໄດ້ເຫັນສິ່ງຢ່າງນີ້ ແຜ່ນດິນຈະເກີດຂຶ້ນໃນວັນດຽວຫລື ປະຊາຊາດ
ຈະເກີດມາໃນຊົ່ວພິບຕາດຽວຫລື ເພາະພໍຊີໂອນເຈັບທ້ອງຄອດ ນາງກໍຄອດບຸດທັງຫລາຍຂອງນາງ
9 ເຮົາຈະນຳມາເຖິງກຳນົດເກີດ ແລ້ວຈະໃຫ້ເກີດຫລື ພຣະຜູ້ເປັນເຈົ້າກ່າວດັ່ງນີ້ ເຮົາເປັນເຫດໃຫ້ຄອດ ຈະປິດ
ການຖືພາຫລື ພຣະຜູ້ເປັນເຈົ້າຂອງທ່ານກ່າວດັ່ງນີ້
10 ຈົ່ງຊົມຊື່ນຍິນດີກັບເຢຣູຊາເລັມ ແລະຍິນດີກັບນາງເຖີດບັນດາເຈົ້າທີ່ຮັກນາງ ຈົ່ງຊົມຊື່ນຍິນດີກັບນາງດ້ວຍ
ຄວາມຊື່ນບານເຖີດບັນດາເຈົ້າທີ່ໄວ້ທຸກເພື່ອນາງ
11 ເພື່ອເຈົ້າຈະໄດ້ດູດແລະອີ່ມໃຈ ດ້ວຍເອິກອັນປະເລົ້າປະໂລມຂອງນາງ ເພື່ອເຈົ້າຈະໄດ້ດື່ມໃຫ້ກ້ຽງ ດ້ວຍ
ຄວາມປິຕິຍິນດີ ຈາກສັກສີອັນອຸດົມຂອງນາງ
12 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ເບິ່ງແມ, ເຮົາຈະນຳສວັດດີພາບມາເຖິງນາງຢ່າງກັບແມ່ນ້ຳ ແລະຊັບສົມ
ບັດຂອງບັນດາປະຊາຊາດເຫມືອນລຳນ້ຳທີ່ກຳລັງລົ້ນ ແລະເຈົ້າທັງຫລາຍຈະໄດ້ດູດ ນາງຈະອຸ້ມເຈົ້າໄວ້ທີ່ບັ້ນ
ແອວຂອງນາງ ແລະຈັບ ສັ່ນຂຶ້ນລົງທີ່ຫົວເຂົ່າຂອງນາງ
13 ດັ່ງຜູ້ທີ່ມານດາຂອງຕົນເລົ້າໂລມ ເຮົາຈະເລົ້າໂລມເຈົ້າເຊັ່ນນັ້ນ ແລະເຈົ້າຈະຮັບການເລົ້າໂລມໃນເຢຣູຊາເລັມ

### The Reign and Indignation of God

14 ເຈົ້າຈະເຫັນ ແລະໃຈຂອງເຈົ້າຈະເບີກບານ ກະດູກຂອງເຈົ້າຈະເຂັ້ມແຂງຂຶ້ນແລະສຸຂພາບດີເຫມືອນຢ່າງຫຍ້າ
ອ່ອນ ແລະເຂົາຈະຮູ້ກັນວ່າພຣະຫັດຂອງພຣະເຈົ້າຢູ່ກັບຜູ້ຮັບໃຊ້ຂອງພຣະອົງ ແລະຄວາມພິໂຣດຕໍ່ສູ້ສັດຕຣູ
ຂອງພຣະອົງ

15 ເພາະ ເບິ່ງແມ, ພຣະຜູ້ເປັນເຈົ້າສະເດັດມາດ້ວຍໄຟ ແລະຣົດຮົບຂອງພຣະອົງເຫມືອນລົມພະຍຸ ເພື່ອສນອງເຂົາດ້ວຍຄວາມກ້ຽວກາດ ແລະດ້ວຍການສັ່ງສອນຂອງພຣະອົງພ້ອມດ້ວຍແປວໄຟ

16 ເພາະພຣະຜູ້ເປັນເຈົ້າຈະຊົງກະທຳການພິພາກສາດ້ວຍໄຟ ແລະດ້ວຍພຣະແສງຂອງພຣະອົງເຫນືອເນື້ອຫນັງທັງສິ້ນ ແລະຜູ້ທີ່ພຣະອົງຊົງສັງຫານເສັຽຈະມີຫລວງຫລາຍ

17 "ບັນດາຜູ້ທີ່ລ້າງຕົວແລະຊຳຮະຕົວໃຫ້ບໍຣິສຸດເພື່ອເຂົ້າໄປໃນສວນ ຕິດຕາມຜູ້ນຶ່ງທີ່ຢູ່ຖ້າມກາງກິນເນື້ອຫມູແລະສິ່ງທີ່ຫນ້າກຽດຊັງ ແລະຫນູ ຈະເຖິງສິ້ນສຸດດ້ວຍກັນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້

18 "ເພາະເຮົາຊາບການງານຂອງເຂົາແລະຄວາມຄິດຂອງເຂົາ ແລະເຮົາຈະມາຮວບຮວມບັນດາປະຊາຊາດແລະພາສາທັງສິ້ນ ແລະເຂົາຈະມາເຫັນພຣະກຽດຂອງເຮົາ

19 ແລະເຮົາຈະຕັ້ງຫມາຍສຳຄັນໄວ້ຖ້າມກາງເຂົາ ແລະເຮົາຈະສົ່ງຜູ້ລອດຕາຍຈາກພວກເຂົານັ້ນໄປຍັງບັນດາປະຊາຊາດ ຍັງຕາຣ໌ຊິດ ປູດ ແລະລູດ ຜູ້ໂກ່ງທະນູ ຍັງຕູບານແລະຢາວານ ຍັງແຜ່ນດິນຊາຍທະເລທີ່ໄກອອກໄປທີ່ເຂົາຍັງບໍ່ໄດ້ຍິນຊື່ສຽງຂອງເຮົາແລະເຫັນພຣະກຽດຂອງເຮົາ ແລະເຂົາຈະປະກາດພຣະກຽດຂອງເຮົາຖ້າມກາງບັນດາປະຊາຊາດ

20 ແລະເຂົາຈະນຳພີ່ນ້ອງທັງສິ້ນຂອງເຈົ້າທັງຫລາຍຈາກບັນດາປະຊາຊາດທັງສິ້ນເປັນເຄື່ອງບູຊາພຣະຜູ້ເປັນເຈົ້າມາດ້ວຍມ້າ ດ້ວຍຣົດຮົບ ດ້ວຍກວຽນ ດ້ວຍລໍແລະດ້ວຍອູດ ຍັງເຢຣູຊາເລັມພູບໍຣິສຸດຂອງເຮົາ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ ເຊັ່ນດຽວກັບຄົນອິສຣາເອນນຳທັນຍາບູຊາໃສ່ພາຊະນະສະອາດມາຍັງພຣະວິຫານຂອງພຣະຜູ້ເປັນເຈົ້າ

21 ແລະເຮົາຈະເອົາເຂົາບາງຄົນເປັນປະໂຣຫິດ ແລະເປັນພວກເລວີ ພຣະຜູ້ເປັນເຈົ້າກ່າວດັ່ງນີ້

22 "ເພາະສວັນໃຫມ່ ແລະແຜ່ນດິນໂລກໃຫມ່ ຊຶ່ງເຮົາຈະສ້າງ ຈະຍັງຢູ່ຕໍ່ຫນ້າເຮົາສັນໃດ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ ເຊື້ອສາຍຂອງເຈົ້າແລະຊື່ຂອງເຈົ້າຈະຍັງຢູ່ສັນນັ້ນ

23 ພຣະຜູ້ເປັນເຈົ້າກ່າວວ່າ ທຸກວັນຂຶ້ນຄ່ຳ ແລະທຸກວັນສະບາໂຕ ມະນຸດທັງສິ້ນຈະມານະມັສການຕໍ່ເຮົາ

24 "ເຂົາຈະອອກໄປມອງເບິ່ງຊາກສົບຂອງຄົນທີ່ໄດ້ກະບົດຕໍ່ເຮົາ ເພາະວ່າຫນອນຂອງຄົນເຫລົ່ານີ້ຈະບໍ່ຕາຍໄປໄຟຂອງເຂົາຈະບໍ່ດັບ ແລະເຂົາຈະເປັນທີ່ຫນ້າລັງກຽດຕໍ່ມະນຸດທັງສິ້ນ"